

INNO4 Tourism

# ຫຼັກສູດເສີມສ້າງຂີດຄວາມສາມາດ ແລະ ຄູ່ມືພັດທະນາຫຼັກສູດ ແລະ ການທ່ອງທ່ຽວແບບຍືນຍົງ

ຜົນໄດ້ຮັບ D3.4

ມະຫາວິທະຍາໄລປາເລີໂມ

Co-funded by
the European Union

# ຂໍ້ມູນຜົນຮັບໂຄງການ

| | |
|---|---|
| ເລກທີສັນຍາການໃຫ້ທຶນ | 101129247 |
| ຊື່ຫຍໍ້ໂຄງການ | INNO4Tourism |
| ຊື່ໂຄງການ | ໂຄງການພັດທະນາຫຼັກສູດນະວັດຕະກຳສຳລັບການຮຽນຮູ້ຕະຫຼອດຊີວິດຂອງແຮງງານໃນຂະແໜງການທ່ອງທ່ຽວແບບຍືນຍົງ |
| ຂອບເວລາ ແລະ ໄລຍະເວລາຂອງໂຄງການ | 36 ເດືອນ months – 01/12/2023-30/11/2026 |
| ເລກລະຫັດໂຄງການ | 101129247 |
| ກຸ່ມວຽກ | ກຸ່ມວຽກທີ 3: ລະບຸຄວາມຕ້ອງການດ້ານທັກສະໃນຂະແໜງການທ່ອງທ່ຽວແບບຍືນຍົງ |
| ໜ້າວຽກ | ໜ້າວຽກ 3.2. ວິຊາການພັດທະນາຫຼັກສູດ (ຫຼັກສູດສຳລັບຝຶກອົບຮົມຄູຝຶກ) |
| ຜົນຮັບໂຄງການ | ຜົນໄດ້ຮັບ 3.4. ຫຼັກສູດເສີມສ້າງຂີດຄວາມສາມາດໃນການພັດທະນາຫຼັກສູດການທ່ອງທ່ຽວແບບຍືນຍົງ |
| ສະຖານະ | ສະບັບສົມບູນ |
| ຈຳນວນຄັ້ງທີ່ປັບປຸງ | 1 |
| ຜູ້ຮັບຜິດຊອບວຽກ | ມະຫາວິທະຍາໄລປາເລີໂມ |
| ລະດັບການເຜີຍແຜ່ | ສາທາລະນະ |
| ວັນທີກຳນົດສົ່ງ | 30/11/2024 |
| ວັນທີ່ສົ່ງຜົນໄດ້ຮັບ | XXXXXXX |

# ຜູ້ປະສານງານໂຄງການ

| | |
|---|---|
| ຊື່ | Mauro Ferrante |
| ສະຖາບັນ | UNIPA - University of Palermo - Dipartimento Culture e Società |
| ອີເມວ | mauro.ferrante@unipa.it |
| ທີ່ຢູ່ | Viale delle Scienze, Ed. 15, 90128, Palermo, Italy |

# ປະຫວັດການປັບປຸງ

| ສະບັບ | ວັນທີ | ຜູ້ຂຽນ | ຄຳອະທິບາຍ |
|---|---|---|---|
| 1.0 | 24/10/2024 | UNIPA – University of Palermo | |
| 2.0 | 27/11/2024 | UNIPA – University of Palermo | |

# ລາຍຊື່ຜູ້ຂຽນ

| ຊື່ | ອົງກອນ/ສະຖາບັນ |
|---|---|
| Mauro Ferrante | ມະຫາວິທະຍາໄລປາເລີໂມ, ປະເທດອີຕາລີ |
| Dora Soulantika | SYMPLEXIS, ປະເທດເກຣັກ |
| Chris Vassiliadis | ມະຫາວິທະຍາໄລມາເຊໂດເນຍ, ປະເທດເກຣັກ |
| Sofia Garane | ມະຫາວິທະຍາໄລມາເຊໂດເນຍ, ປະເທດເກຣັກ |

# ສາລະບານ


ລາຍການຕົວຫຍໍ້ 8

ໂຄງຮ່າງລາຍວິຊາສອນ 8

ບົດທີ 1: ຫຼັກສູດເສີມສ້າງຂີດຄວາມສາມາດຂອງໂຄງການ 9

**ພາກສະເໜີ** 9

**ເປົ້າໝາຍ** 9

**ຄູ່ມືນີ້ສ້າງເພື່ອໃຜ** 9

**ຄູ່ມືນີ້ໃຊ້ແນວໃດ** 10

**ຂໍ້ມູນໂຄງການ INNO4Tourism** 11

ບົດທີ 2: ຄວາມຮູ້ ແລະ ທັກສະສຳລັບແຮງງານການທ່ອງທ່ຽວ ແລະ ການບໍລິການ 14

**ພາກສະເໜີ** 14

**ຜົນການຮຽນທີ່ສຳຄັນ** 15

**ຄຳແນະນຳສຳລັບຄູຝຶກ** 15

**ແນວຄວາມຄິດຫຼັກ** 16

**ບົດທີ 2.1: ຫຼັກການທີ່ສຳຄັນ, ນິຍາມ ແລະ ປະເພດ** 17

**ບົດທີ 2.2: ຂອບຄວາມສາມາດດ້ານການທ່ອງທ່ຽວແບບຍືນຍົງ: ຈາກທິດສະດີສູ່ການປະຕິບັດຕົວຈິງ** 21

**ບົດທີ 2.3.: ການທ່ອງທ່ຽວແບບຍືນຍົງ ແລະ ທັກສະສີຂຽວ** 24

**ບົດທີ 2.4: ທັກສະດິຈິຕອນ** 28

2.4.1. ການຮູ້ຂໍ້ມູນຂ່າວສານ ແລະ ຂໍ້ມູນດິບ 28

2.4.2. ການສື່ສານ ແລະ ການຮ່ວມມື 29

2.4.3. ການສ້າງເນື້ອຫາດິຈິຕອລ 29

2.4.4. ຄວາມປອດໄພ 30

2.4.5. ການແກ້ໄຂບັນຫາ 30

**ບົດທີ 2.5.:ການເປັນຜູ້ປະກອບການ, ການບໍລິຫານຈັດການ ແລະ ທັກສະທາງສັງຄົມ** 33

2.5.1. ທັກສະການເປັນຜູ້ປະກອບການ 33

2.5.2. ທັກສະທາງສັງຄົມ 34

2.5.3. ທັກສະການບໍລິຫານຈັດການ 35

**ສະຫຼຸບ** 37

**ກິດຈະກໍາແບບມີສ່ວນຮ່ວມ** 37

ກິດຈະກໍາ 1 37

ກິດຈະກໍາທີ 2 38

ກິດຈະກໍາທີ 3 38

**ແບບປະເມີນນ້ອຍ** 38

**ແຫຼ່ງຂໍ້ມູນເພີ່ມເຕີມ** 39

**ເອກະສານອ້າງອີງ** 39

ບົດທີ 3: ຄໍາແນະນໍາ ແລະ ຂັ້ນຕອນສໍາຄັນໃນການພັດທະນາຫຼັກສູດ 44

**ພາກສະເໜີ** 44

**ຜົນການຮຽນທີ່ສໍາຄັນ** 44

**ຄໍາແນະນໍາສໍາລັບຄູຝຶກ** 44

**ແນວຄິດຫຼັກ** 45

**ບົດທີ 3.1: ນິຍາມຂອງ "ຫຼັກສູດ"** 46

**ບົດທີ 3.2: ວົງຈອນການພັດທະນາຫຼັກສູດ** 47

**ບົດທີ 3.3: ວິໄສທັດຂອງຫຼັກສູດ** 49

**ບົດທີ3.4: ການປະເມີນຄວາມຕ້ອງການ** 49

**ບົດທີ3.5.: ຂໍ້ມູນລາຍລະອຽດຂອງຄຸນວຸດທິ** 51

**ບົດທີ 3.6.: ເງື່ອນໄຂໃນການເຂົ້າຮຽນ** 52

**ບົດທີ 3.7.: ຈຸດປະສົງຫຼັກສູດ ແລະ ຜົນການຮຽນ** 53

**ບົດທີ 3.8.: ເນື້ອໃນ ແລະ ໂມດູນການຮຽນຮູ້** 54

**ບົດທີ 3.9: ວິທີການສຶກສາ** 56

**ບົດທີ 3.10: ທີມງານວິຊາການດ້ານການສຶກສາ ແລະ ເຕັກນິກ** 57

ບົດທີ 3.11.: ແຫຼ່ງສື່ການຮຽນຮູ້ 58
ບົດທີ 3.12.: ການຕິດຕາມກວດກາ ແລະ ການປະເມີນ 58
ບົດທີ 3.13: ໄລຍະເວລາ 59
ບົດທີ 3.14.: ກອບ (ແຜນງານ) ແລະ ເຄື່ອງມືຂອງສະຫະພາບເອີຣົບ ສໍາລັບການປຽບທຽບ ແລະ ຄວາມໂປ່ງໃສ 59
ສະຫຼຸບ 61
ກິດຈະກໍາແບບມີສ່ວນຮ່ວມ 61
ກິດຈະກໍາ 1 61
ກິດຈະກໍາ 2 63
ກິດຈະກໍາ 3 64
ກິດຈະກໍາ 4 64
ແບບປະເມີນນ້ອຍ 65
ແຫຼ່ງຂໍ້ມູນເພີ່ມເຕີມ 66
ເອກະສານອ້າງອີງ 66
ບົດທີ 4: ວິທີການສຶກສາທີ່ມີປະສິດຕິພາບ 68
ພາກສະເໜີ 68
ຜົນການຮຽນທີ່ສໍາຄັນ 68
ຄໍາແນະນໍາສໍາລັບຄູຝຶກ 69
ແນວຄວາມຄິດຫຼັກ 69
ບົດທີ 4.1.: ສະພາບແວດລ້ອມການຮຽນຮູ້ 69
ບົດທີ 4.2.: ວິທີການສອນແບບເອົານັກຮຽນເປັນໃຈກາງ 70
ບົດທີ 4.3.: ການຮຽນຜ່ານປະສົບການປະຕິບັດຕົວຈິງ 71
ບົດທີ 4.4.: ການຮຽນຮູ້ແບບເຮັດວຽກເປັນທີມ 71
ບົດຮຽນ 4.5.: ຮຽນຮູ້ໂດຍການປຽບທຽບ: ຜົນປະໂຫຍດຂອງການສອນຮ່ວມກັນ 72
ບົດທີ 4.6.: ການຮຽນຮູ້ຜ່ານການແກ້ໄຂບັນຫາ 73
ບົດທີ 4.7.: COIL ໝາຍເຖິງ ການຮຽນຮ່ວມກັບຕ່າງປະເທດຜ່ານທາງອອນລາຍ 73
ບົດທີ 4.8.: ການຮ່ວມມືລະຫວ່າງມະຫາວິທະຍາໄລ ແລະ ພາກທຸລະກິດ 74

**ບົດຮຽນ 4.9.: ຜູ້ຮຽນເປັນຕົວແທນການປ່ຽນແປງ** 75

**ບົດທີ 4.10.: ກໍລະນີສຶກສາ: ໂຄງການ "ຄູຝຶກສອນ" ທີ່ ມະຫາວິທະຍາໄລປາເລີໂມ** 75

**ສະຫຼຸບ** 76

**ກິດຈະກໍາແບບມີສ່ວນຮ່ວມ** 76

ກິດຈະກໍາ 1 76

ກິດຈະກໍາ 2 77

ກິດຈະກໍາທີ 3 78

**ແບບປະເມີນນ້ອຍ** 78

**ແຫຼ່ງຂໍ້ມູນເພີ່ມເຕີມ** 79

**ເອກະສານອ້າງອີງ** 79

ບົດທີ 5: ຫຼັກສູດພັດທະນາວິຊາຊີບກ່ຽວກັບການພັດທະນາການທ່ອງທ່ຽວແບບຍືນຍົງ 82

**ພາກສະເໜີ** 82

**ຜົນການຮຽນຮູ້** 82

**ຄໍາແນະນໍາສໍາລັບຄູຝຶກ** 82

**ແນວຄວາມຄິດຫຼັກ** 83

**ບົດທີ 5.1.: ຫຼັກສູດນະວັດຕະກໍາເພື່ອການຮຽນຮູ້ຕະຫຼອດຊີວິດກ່ຽວກັບການທ່ອງທ່ຽວແບບຍືນຍົງ** 85

**ບົດທີ 5.2.: ຫຼັກສູດ INNO4Tourism ສໍາລັບພັດທະນາວິຊາຊີບກ່ຽວກັບການທ່ອງທ່ຽວແບບຍືນຍົງ** 92

**ສະຫຼຸບ** 94

**ກິດຈະກໍາແບບມີສ່ວນຮ່ວມ** 94

ກິດຈະກໍາ 1 94

**ແຫຼ່ງຂໍ້ມູນເພີ່ມເຕີມ** 95

**ເອກະສານອ້າງອີງ** 95

ສະຫຼຸບ 97

ຄໍາຈາລຶກບຸນຄຸນ 98

ເອກະສານຊ້ອນທ້າຍ 99

**ພາກທີ I** 99

ແມ່ແບບທີ 1 – "ຂອບການພັດທະນາຫຼັກສູດ - ແຜນການສອນລາຍວິຊາ" 99

ເອກະສານຊ້ອນທ້າຍ II 102

ແມ່ແບບທີ 2 – "ອອກແບບໂມດູນການຮຽນ - ແຜນການສອນລາຍວິຊາ" 102

# ລາຍການຕົວຫຍໍ້

| ຕົວຫຍໍ້ | ຄຳອະທິບາຍ |
| --- | --- |
| **HEI** | ສະຖາບັນການສຶກສາຊັ້ນສູງ |
| **Lao PDR** | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| **NGO** | ອົງການທີ່ບໍ່ຂຶ້ນກັບລັດຖະບານ |
| **SDGs** | ເປົ້າໝາຍການພັດທະນາແບບຍືນຍົງ |

# ໂຄງຮ່າງລາຍວິຊາສອນ

| | |
| --- | --- |
| **ຫຼັກສູດຝຶກອົບຮົມ** | ຄູ່ມືຝຶກອົບຮົມສະບັບນີ້ເຮັດໜ້າທີ່ເປັນສື່ການຮຽນຮູ້ວິທີປະຕິບັດທີ່ໃຫ້ຄຳແນະນຳ ແລະ ເປັນເຄື່ອງມືໃຫ້ແກ່ຜູ້ຈະຊົມໃຊ້ ໃນການພັດທະນາຫຼັກສູດການທ່ອງທ່ຽວແບບຍືນຍົງ ທີ່ສາມາດນຳໃຊ້ໄດ້ໂດຍກົງ ແລະ ປັບໃຊ້ໃຫ້ເຂົ້າກັບບໍລິບົດການສຶກສາສະເພາະໃດໜຶ່ງ. ພ້ອມກັນນີ້, ຍັງໄດ້ກຳນົດ ແລະ ສະຫຼຸບບັນດາຫຼັກການທີ່ສະໜັບສະໜູນຫຼັກສູດທີ່ມີປະສິດຕິພາບກ່ຽວກັບການທ່ອງທ່ຽວແບບຍືນຍົງ ໂດຍອີງໃສ່ກໍລະນີສຶກສາ ແລະ ຕົວຢ່າງຕ່າງໆ. |
| **ກຸ່ມເປົ້າໝາຍ** | - ພະນັກງານ-ອາຈານ ແລະ ຜູ້ຊ່ຽວຊານວິຊາຊີບ ຂອງສະຖາບັນການສຶກສາຊັ້ນສູງ ທີ່ຮັບຜິດຊອບພັດທະນາຫຼັກສູດເຊັ່ນ: ພະນັກງານວິຊາການ, ອາຈານສອນ, ນັກຄົ້ນຄວ້າ ແລະ ຜູ້ບໍລິຫານສະຖາບັນການສຶກສາ.<br>- ນັກວິຊາການດ້ານການສຶກສາ ແລະ ຜູ້ຊ່ຽວຊານວິຊາຊີບ ໃນສະຖາບັນການສຶກສາອື່ນໆເຊັ່ນ: ໂຮງຮຽນ, ວິທະຍາໄລ ແລະ ສູນຝຶກອົບຮົມວິຊາຊີບຕ່າງໆ |
| **ເປົ້າໝາຍການຮຽນ** | ຄູ່ມືສະບັບນີ້ມີເປົ້າໝາຍໃຫ້ຄຳແນະວິທີປະຕິບັດ ແລະ ຄຳແນະນຳແກ່ຜູ້ຊົມໃຊ້ສະໜັບສະໜູນພະນັກງານຂອງສະຖາບັນການສຶກສາຊັ້ນສູງເພື່ອເພີ່ມທັກສະ ແລະ ຄວາມຮູ້ຂອງເຂົາເຈົ້າໃນການພັດທະນາຫຼັກສູດການທ່ອງທ່ຽວແບບຍືນຍົງທີ່ມີນະວັດຕະກຳ ແລະ ປະສິດຕິພາບ ເພື່ອໃຫ້ຕອບສະໜອງຄວາມຕ້ອງການສະເພາະບໍລິບົດໃດໜຶ່ງ. |
| **ຂໍ້ມູນອື່ນໆ** | - ບົດຮຽນ ແລະ ແມ່ແບບຕ່າງໆ ຂອງຄູ່ມືສະບັບນີ້ຍັງສາມາດຊອກໄດ້ໃນລະບົບອອນລາຍທີ່ພັດທະນາໂດຍມະຫາວິທະຍາໄລປາເລີໂມ.<br>- ຄູ່ມືສະບັບນີ້ເຮັດຂຶ້ນເປັນພາສາອັງກິດ ແລະ ພາສາປະຈຳຊາດຂອງຄູ່ຮ່ວມມືໃນໂຄງການໃນປະເທດໄທ ແລະ ສປປ ລາວ. |

# ບົດທີ 1: ຫຼັກສູດເສີມສ້າງຂີດຄວາມສາມາດຂອງໂຄງການ

## ພາກສະເໜີ

ຄູ່ມືສະບັບນີ້ແມ່ນຜົນຮັບມາຈາກຄວາມພະຍາຍາມເຮັດວຽກຮ່ວມກັນພາຍໃຕ້ຂອບຂອງໂຄງການ Erasmus+ “INNO4Tourism” - ໂຄງການພັດທະນາຫຼັກສູດນະວັດຕະກຳສຳລັບການຮຽນຮູ້ຕະຫຼອດຊີວິດຂອງແຮງງານໃນຂະແໜງການທ່ອງທ່ຽວແບບຍືນຍົງ.” ໂດຍອີງຕາມຜົນຈາກການສຶກສາເພື່ອລະບຸດ້ານຊ່ອງຫວ່າງ ແລະ ຄວາມຕ້ອງການທັກສະ ແລະ ຂໍ້ສະເໜີແນະຕໍ່ສະຖາບັນການສຶກສາຊັ້ນສູງ ເພື່ອພັດທະນາຫຼັກສູດການທ່ອງທ່ຽວແບບຍືນຍົງໃນ ສປປ ລາວ ແລະ ປະເທດໄທ, ດັ່ງທີ່ໄດ້ລະບຸໄວ້ຢ່າງຊັດເຈນໃນບົດລາຍງານສະບັບລວມຂໍ້ມູນຂອງທັງສອງປະເທດທີ່ໄດ້ຂຽນຂື້ນໃນໄລຍະທຳອິດຂອງໂຄງການ (ຜົນໄດ້ຮັບ D2.3). ດ້ວຍການອອກແບບໂຄງສ້າງຂອງແຕ່ລະບົດ, ແມ່ແບບ ແລະ ຕົວຢ່າງທີ່ເປັນຮູບປະທຳ ທີ່ໄດ້ຈາກປະສົບການຕົວຈິງ ແລະ ການປະຕິບັດກິດຈະກຳທີ່ເປັນສ່ວນໜຶ່ງຂອງໂຄງການ INNO4Tourism, ຄູ່ມືສະບັບນີ້ເຮັດໜ້າທີ່ເປັນສື່ການຮຽນຮູ້/ແຫຼ່ງການຮຽນຮູ້ເຊີງປະຕິບັດທີ່ໃຫ້ຄຳແນະນຳວິທີປະຕິບັດ ແລະ ເປັນເຄື່ອງມືໃຫ້ຜູ້ຊົມໃຊ້ສາມາດນຳໄປປະຕິບັດໃຊ້ໂດຍກົງໃນການພັດທະນາຫຼັກສູດ ແລະ ການທອ່ງທ່ຽວແບບຍືນຍົງ ແລະ ປັບໃຊ້ໃຫ້ເຂົ້າກັບບໍລິບົດການສຶກສາສະເພາະໃດໜຶ່ງຂອງເຂົາເຈົ້າ.

## ເປົ້າໝາຍ

- ເປົ້າໝາຍຂອງຄູ່ມືນີ້**ໃຫ້ຄຳແນະນຳວິທີປະຕິບັດ ແລະ ເປັນເຄື່ອງມືໃຫ້ຜູ້ຊົມໃຊ້ໄປສະໜັບສະໜູນພະນັກງານ-ອາຈານ ຂອງສະຖາບັນການສຶກສາຊັ້ນສູງ ເພື່ອເພີ່ມຄວາມຮູ້ ແລະ ທັກສະ ຂອງເຂົາເຈົ້າໃນການພັດທະນາຫຼັກສູດການທ່ອງທ່ຽວແບບຍືນຍົງ ທີ່ມີນະວັດຕະກຳ ແລະ ປະສິດຕິພາບ** ເພື່ອຕອບສະໜອງຕໍ່ຄວາມຕ້ອງການຂອງບໍລິບົດໃດໜຶ່ງສະເພາະ, ໂດຍເນັ້ນໃສ່ຫຼັກສູດຝຶກອົບຮົມອາຊີບໄລຍະສັ້ນ.

## ຄູ່ມືນີ້ສ້າງເພື່ອໃຜ

- ຄູ່ມືສະບັບນີ້ເຮັດໜ້າທີ່ເປັນຂອບການເຮັດວຽກ ແລະ ສື່ການຮຽນຮູ້ສຳລັບພະນັກງານ-ອາຈານ ແລະ ຜູ້ຊ່ຽວຊານອາຊີບຕ່າງໆຂອງສະຖາບັນການສຶກສາຊັ້ນສູງ ທີ່ຮັບຜິດຊອບພັດທະນາຫຼັກສູດເຊັ່ນ: ພະນັກງານວິຊາການ, ອາຈານສອນ, ນັກຄົ້ນຄວ້າ ແລະ ຜູ້ບໍລິຫານສະຖາບັນການສຶກສາ.

- ນັກວິຊາການ/ຜູ້ຊ່ຽວຊານອາຊີບສາມາດນຳໃຊ້ຄູ່ມືນີ້ໃນສະຖານການສຶກສາອື່ນໆໄດ້ເຊັ່ນ: ໂຮງຮຽນ, ວິທະຍາໄລ ແລະ ສູນພັດຝຶກອົບຮົມວິຊາຊີບ ທີ່ມີສ່ວນຮ່ວມ ຫຼື ມີຄວາມປະສົງເຂົ້າຮ່ວມການອອກແບບ ແລະ ພັດທະນາຫຼັກສູດການສຶກສາ ແລະ ໂຄງການລິເລີ່ມຕ່າງໆທີ່ເນັ້ນໃສ່ເລື່ອງການທ່ອງທ່ຽວແບບຍືນຍົງ.

# ຄູ່ມືນີ້ໃຊ້ແນວໃດ

ຄູ່ມືສະບັບນີ້ປະກອບດ້ວຍບົດຮຽນຕ່າງໆລຸ່ມນີ້:

- **ບົດທີ 1 "ຫຼັກສູດເສີມສ້າງຂີດຄວາມສາມາດຂອງໂຄງການ INNO4Tourism"** ແນະນໍາຂໍ້ມູນເບື້ອງຕົ້ນກ່ຽວກັບຄູ່ມື, ຜົນການຮຽນສະເພາະ, ກຸ່ມເປົ້າໝາຍ ແລະ ໂຄງສ້າງໂດຍລວມຂອງຄູ່ມື

- **ບົດທີ 2 "ຄວາມຮູ້ ແລະ ທັກສະ ສໍາລັບບຸກຄະລາກອນດ້ານການທ່ອງທ່ຽວ ແລະ ການບໍລິການ"** ລົງເລິກຄວາມຕ້ອງການເສີມສ້າງຂີດຄວາມສາມາດໃນຂະແໜງການທ່ອງທ່ຽວແບບຍືນຍົງ, ໂດຍເນັ້ນໜັກຂົງເຂດທີ່ຈໍາເປັນເຊັ່ນ: ທັກສະສີຂຽວ, ຄວາມສາມາດດ້ານດິຈິຕອນ, ແລະ ການບໍລິຫານຈັດການສໍາລັບຜູ້ປະກອບການ.

- **ບົດທີ 3 "ຄໍາແນະນໍາ ແລະ ຂັ້ນຕອນສໍາຄັນໃນການພັດທະນາຫຼັກສູດ"** ເນັ້ນໜັກຂັ້ນຕອນທີ່ສໍາຄັນໃນການພັດທະນາຫຼັກສູດ ໂດຍສຸມໃສ່ບັນດາຄວາມຮູ້ ແລະ ທັກສະ ທີ່ຈໍາເປັນຕໍ່ການພັດທະນາຫຼັກສູດການທ່ອງທ່ຽວແບບຍືນຍົງ ທີ່ມີປະສຸດຕິພາບ. ເວົ້າສະເພາະ, ນໍາສະເໜີຂະບວນການພັດທະນາຫຼັກສູດທີ່ເປັນວົງຈອນເຊິ່ງຂັ້ນຕອນຕ່າງໆມີການເຊື່ອມໂຍງ ແລະ ເພິ່ງພາເຊິ່ງກັນ ແລະ ກັນ ຢ່າງເປັນລະບົບ.

- **ບົດທີ 4 "ວິທີການຮຽນ-ການສອນທີ່ມີປະສິດຕິພາບ"** ເນັ້ນໃສ່ວິທີການສອນແບບທົດລອງ, ເອົານັກຮຽນເປັນໃຈກາງ, ຮຽນຮູ້ແບບມີສ່ວນຮ່ວມ ແລະ ຮຽນຮູ້ແບບສະຫະວິຊາ ແລະ ປະຕິບັດຕົວຈິງ ທີ່ສາມາດປັບປຸງການມີສ່ວນຮ່ວມຢ່າງຈິງຈັງຂອງນັກສຶກສາ, ການຄົ້ນຄິດແບບມີວິຈາລະນາຍານ, ການສື່ສານ ແລະ ການຮ່ວມມືກັນ ພາຍໃຕ້ຂອບຂອງລາຍວິຊາ ແລະ ຫຼັກສູດການທ່ອງທ່ຽວແບບຍືນຍົງ.

- **ບົດທີ 5 "ຫຼັກສູດໄລຍະສັ້ນກ່ຽວກັບການພັດທະນາແບບຍືນຍົງຂອງ INNO4Tourims"** ລວມມີຂໍ້ມູນລະອຽດກ່ຽວກັບຫຼັກສູດຝຶກອົບຮົມອາຊີບໄລຍະສັ້ນ (ຮຽນຜ່ານທາງອອນລາຍ).

- **ເອກະສານຊ້ອນທ້າຍ 1 - ແມ່ແບບ 1 "ຂອບການພັດທະນາຫຼັກສູດ"**
- **ເອກະສານຊ້ອນທ້າຍ 2 - ແມ່ແບບ 2 "ອອກແບບໂມດູນການຮຽນ"**

ບົດຮຽນຕ່າງໆໃນຄູ່ມືສະບັບນີ້ຖືກອອກແບບໃຫ້ມີລັກສະນະເຂົ້າໃຈງ່າຍ ແລະ ສາມາດນໍາໃຊ້ໄດ້ຈິງ, ພ້ອມກັບຄໍາແນະນໍາລະອຽດ ແລະ ຕົວຢ່າງທີ່ເປັນຮູບປະທໍາ ທີ່ຜູ້ຊົມໃຊ້ສາມາດນໍາໄປປະຕິບັດໄດ້ໃນສະຖາບັນຂອງຕົນ ແລະ ປັບປ່ຽນໃຫ້ເຂົ້າກັບບໍລິບົດການສຶກສາອື່ນໆທີ່ຫຼາກຫຼາຍ.

ແຕ່ລະບົດມີໂຄງສ້າງດັ່ງລຸ່ມນີ້:

- ພາກສະເໜີໂດຍຫຍໍ້
- ຜົນການຮຽນທີ່ສໍາຄັນ
- ແນວທາງປະຕິບັດ ແລະ ຄໍາແນະນໍາສໍາລັບຄູຝຶກ (ວິທະຍາກອນ)
- ແນວຄວາມຄິດຫຼັກ

- ພາກຍ່ອຍ (ຫຼືຂໍ້ຫຍໍ້ອຍ) ລົງເລິກເນື້ອໃນ ແລະ ຫົວຂໍ້ສະເພາະໃດໜຶ່ງ
- ກິດຈະກຳແບບມີສ່ວນຮ່ວມ (ລວມມີບົດຝຶກຫັດສະທ້ອນຄວາມຄິດ, ສະແດງບົດບາດສົມມຸດ, ອື່ນໆ)
- ບົດປະເມີນຕົນເອງ
- ແຫຼ່ງຂໍ້ມູນເພີ່ມເຕີມ
- ເອກະສານອ້າງອີງຂອງບົດ

## ຂໍ້ມູນໂຄງການ INNO4Tourism

ໂຄງການພັດທະນາຫຼັກສູດນະວັດຕະກຳສຳລັບການຮຽນຮູ້ຕະຫຼອດຊີວິດຂອງແຮງງານໃນຂະແໜງການທ່ອງທ່ຽວແບບຍືນຍົງ (INNO4Tourism) (ລະຫັດໂຄງການ: 101129247 — INNO4TOURISM — ERASMUS-EDU-2023-CBHE) ແມ່ນໂຄງການເສີມສ້າງຂີດຄວາມສາມາດໃນຂະແໜງການສຶກສາຊັ້ນສູງ, ໂດຍໄດ້ຮັບທຶນສະໜັບສະໜູນຈາກ ERASMUS-EDU-2023-CBHE. ຈຸດປະສົງລວມຂອງໂຄງການ INNO4Tourism ແມ່ນສະໜັບສະໜູນໃຫ້ເກີດຄວາມສອດຄ່ອງລະຫວ່າງການສະຖາບັນການສຶກສາໃນ ສປປ ລາວ ແລະ ປະເທດໄທ ແລະ ຕະຫຼາດແຮງງານໃນຂະແໜງການທ່ອງທ່ຽວ ແລະ ການບໍລິການ ທີ່ມີການພັດທະນາຢ່າງໄວວາ, ເພື່ອຍົກລະດັບຄວາມສາມາດໃນການມີວຽກເຮັດງານທຳຂອງນັກສຶກສາ ແລະ ນັກສຶກສາຈົບໃໝ່, ລວມທັງການຍົກລະດັບຄວາມຮູ້ ແລະ ທັກສະຂອງພະນັກງານທີ່ເຮັດວຽກໃນຂະແໜງການນີ້. ໂດຍການຮ່ວມມືກັບມະຫາວິທະຍາໄລ ແລະ ອົງກອນທີ່ກ່ຽວຂ້ອງຈາກທະວີບເອີຣົບ, ໂຄງການດັ່ງກ່າວນີ້ຈະເຮັດໃຫ້ພວກກ່ຽວສາມາດຖ່າຍຄວາມສຳນານ, ຕົວຢ່າງການຈັດຕັ້ງປະຕິບັດທີ່ໄດ້ຮັບຜົນດີໃນເອີຣົບ ແລະ ນະໂຍບາຍຕ່າງໆຂອງເຂົາເຈົ້າ ແລະ ປັບໃຊ້ເພື່ອໃຫ້ເກີດປະໂຫຍດແກ່ບັນດາລະບົບການສຶກສາ ແລະ ສະຖາບັນການສຶກສາຊັ້ນສູງໃນອາຊີ. ໂຄງການ INNO4Tourism ໄດ້ສະເໜີກົນໄກການຮ່ວມມືເພື່ອປັບປຸງ, ສ້າງຄວາມທັນສະໄໝ, ແລະ ຍົກລະດັບການສຶກສາຊັ້ນສູງໃນອາຊີ, ໂດຍເນັ້ນໃສ່ການພົ້ນໂຕຄືນຂອງເສດຖະກິດ-ສັງຄົມ, ການເຕີບໂຕ ແລະ ຄວາມຍືນຍົງຂອງບັນດາປະເທດທີ່ເປັນຄູ່ຮ່ວມໃນໂຄງການ ໃນບໍລິບົດຂອງກະແສໂລກາພິວັດດ້ານເສດຖະກິດໃນປັດຈຸບັນ, ການພັດທະນາຊັບພະຍາກອນມະນຸດທີ່ຫຼຸດໜ້ອຍຖອຍລົງ, ຄວາມບອບບາງ ແລະ ການເພີ່ມຂຶ້ນຂອງຄວາມບໍ່ເທົ່າທຽມກັນທາງສັງຄົມ ແລະ ສະພາບແວດລ້ອມ ທີ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດ COVID-19. ໂຄງການດັ່ງກ່າວນີ້ໄດ້ສະເໜີແນວທາງແກ້ໄຂທີ່ມີປະສິດຕິພາບຕໍ່ຄວາມທ້າທາຍລະດັບໂລກ, ເຜີຍແຜ່ບັນດານະໂຍບາຍ ແລະ ຂໍ້ລິເລີ່ມຕ່າງໆຂອງສະຫາພາບເອີຣົບທີ່ສົ່ງເສີມທີ່ກວມເອົາການເຕີບໃຫ່ຍແບບຍືນຍົງ ແລະ ເສດຖະກິດສີຂຽວ, ທີ່ສະທ້ອນໃຫ້ເຫັນເຖິງຄຸນຄ່າຂອງສະຫາເອີຣົບທີ່ໄດ້ດຳເນີນການ.

ອີງຕາມທັດສະນະທີ່ກ່າວມາຂ້າງເທິງນັ້ນ, ໂຄງການດັ່ງກ່າວນີ້ມີຈຸດປະສົງເພື່ອບັນລຸເປົ້າໝາຍດັ່ງຕໍ່ໄປນີ້:

- ປັບປຸງການສະໜອງການຮຽນ-ການສອນຂອງສະຖາບັນການສຶກສາຊັ້ນສູງ ແລະ ການເຂົ້າເຖິງຫຼັກສູດນະວັດຕະກຳການທ່ຽວທ່ຽວແບບຍືນຍົງຂອງນັກສຶກສາໃນແບບອອນລາຍ, ຫຼັກສູດໄລຍະສັ້ນ (ການທ່ອງທ່ຽວແບບຍືນຍົງ, ການທ່ອງທ່ຽວແບບມີສ່ວນຮ່ວມ ແລະ ເຂົ້າເຖິງໄດ້ງ່າຍ, ການເປັນຜູ້ປະກອບການ ແລະ ການຈັດການທ່ອງທ່ຽວ, ທັກສະລິຈິຕ່ອນ, ທັກສະທາງສັງຄົມ ເຊັ່ນ: ທັກສະການແກ້ໄຂບັນຫາ, ການບໍລິຫານເວລາ, ການເຮັດວຽກເປັນທີມ)
- ພັດທະນາທັກສະຂອງນັກສຶກສາທີ່ກຳລັງສຶກສາຢູ່ມະຫາວິທະຍາໄລ ແລະ ນັກສຶກສາທີ່ຈະເຂົ້າໃໝ່ໃນຫຼັກສູດການທ່ອງ ທ່ຽວ ແລະ ການບໍລິການ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ.

- ຍົກລະດັບທັກສະ/ເພີ່ມທັກສະຂອງແຮງງານໃນຂະແໜງການທ່ອງທ່ຽວ ແລະ ການບໍລິການ ແລະ ນັກສຶກສາຈົບໃໝ່, ຫຼຸດຊ່ອງຫວ່າງຄວາມຕ້ອງການຂອງຕະຫຼາດແຮງງານ / ຍົກລະດັບຄວາມສາມາດໃນການມີວຽກເຮັດງານທຳຂອງເຂົາເຈົ້າ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ອາຈານສອນໃນສະຖາບັນການສຶກສາຊັ້ນສູງໃນການພັດທະນາຫຼັກສູດແບບນະວັດຕະກໍາ ແລະ ນໍາສະເໜີອົງປະກອບຕ່າງໆທີ່ມີຄວາມເປັນນະວັດຕະກໍາເພື່ອປັບປຸງຫຼັກສູດການທ່ອງທ່ຽວແບບຍືນຍົງ.
- ຍົກລະດັບທັກສະການສອນຂອງອາຈານໃນຫຼັກສູດການທ່ຽວທ່ຽວ ແລະ ການບໍລິການ (ລວມທັງວິທີການເອົານັກຮຽນເປັນໃຈກາງ ແລະ ການຮຽນການສອນໂດຍເອົາການແກ້ໄຂບັນຫາເປັນພື້ນຖານ)
- ເພີ່ມຂີດຄວາມສະມາດຂອງພະນັກງານບໍລິຫານຂອງສະຖາບັນການສຶກສາຊັ້ນສູງໃນການຮ່ວມມືກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງໃນຂະແໜງການທ່ອງທ່ຽວ ແລະ ການບໍລິການ ແລະ ອື່ນໆ, ແລະ ໃຫ້ຂໍ້ມູນກ່ຽວກັບກົນໄກການພັດທະນາອາຊີບແບບອົງລວມ ແກ່ນັກສຶກສາປັດຈຸບັນ ແລະ ນັກສຶກສາຈົບໃໝ່ຈາກສາຂາວິຊາການທ່ອງທ່ຽວ ແລະ ການບໍລິການ.
- ຍົກລະດັບການເຂົ້າເຖິງກົນໄກການພັດທະນາອາຊີບແບບອົງລວມ ໃຫ້ແກ່ນັກສຶກສາ ແລະ ນັກສຶກສາຈົບໃໝ່ (ສິດເກົ່າ).
- ຍົກລະດັບການມີສ່ວນຮ່ວມຢ່າງຕັ້ງໜ້າຂອງສະຖາບັນການສຶກສາຊັ້ນສູງ ແລະ ພາກທຸລະກິດເພື່ອແກ້ໄຂບັນຫາຄວາມບໍ່ສອດຄ່ອງລະຫວ່າງຄວາມຕ້ອງການຂອງຜູ້ຈ້າງງານ ແລະ ແຮງງານ/ການສຶກສາທີ່ສະຖາບັນການສຶກສາສະໜອງໃຫ້ໃນຂະແໜງການທ່ອງທ່ຽວ ແລະ ການບໍລິການ.

ເພື່ອບັນລຸຈຸດປະສົງທີ່ກ່າວມານັ້ນ, ໂຄງການໄດ້ດຳເນີນກິດຈະກຳຕ່າງໆປິ່ນອ້ອມ ຫ້າ ແກນຫຼັກທີ່ສຳຄັນ. ຂັ້ນຕອນທຳອິດໄດ້ເຮັດຄົ້ນຄວ້າແບບໃຊ້ຂໍ້ມູນປະຖົມມະພູມ ແລະ ທຸຕິຍະພູມ ເພື່ອກຳນົດແຜນຜັງຄວາມຕ້ອງການທັກສະ ແລະ ຊ່ອງຫວ່າງໃນປັດຈຸບັນ ໃນຂະແໜງການບໍລິການ ພ້ອມທັງລະບຸຄວາມຮູ້ ແລະ ທັກສະທີ່ຈຳເປັນຕ່າງໆ ຕາມດຳລັບ. ອີງຕາມຜົນການຄົ້ນຄວ້າ, ຫຼັກສູດເສີມສ້າງຂີດຄວາມສາມາດສຳລັບພະນັກງານ-ອາຈານ ຂອງສະຖາບັນການສຶກສາຊັ້ນສູງໄດ້ຖືກອອກແບບ ແລະ ຈັດຕັ້ງປະຕິບັດຜ່ານ (ກ) ການຝຶກອົບຮົມການສ້າງກົນໄກການຮ່ວມມືລະຫວ່າງມະຫາວິທະຍາໄລ ແລະ ພາກທຸລະກິດ ແລະ ການບໍລິການອາຊີບແບບເຕັມຮູບແບບ, (ຂ) ວິຊາພັດທະນາຫຼັກສູດ (ຫຼັກສູດຝຶກອົບຮົມສຳລັບຄູຝຶກ), (ຄ) ການຝຶກອົບຮົມຫຼັກສູດໃໝ່ກ່ຽວກັບການທ່ອງທ່ຽວແບບຍືນຍົງ ໃຫ້ແກ່ພະນັກງານ-ອາຈານ.

ຄູ່ຮ່ວມມືໃນໂຄງການ:

- ມະຫາວິທະຍາໄລສົງຂານະຄະລິນ, ປະເທດໄທ
- ມະຫາວິທະຍາໄລຊຽງໃໝ່, ປະເທດໄທ
- ມະຫາວິທະຍາໄລແຫ່ງຊາດ, ສປປ ລາວ
- ມະຫາວິທະຍາໄລສະຫວັນນະເຂດ, ສປປ ລາວ
- ມະຫາວິທະຍາໄລມາເຊໂລເນຍ, ປະເທດເກັຣກ
- ອົງການ SYMPLEXIS, ປະເທດເກຣັກ
- ມະຫາວິທະຍາໄລປາເລີໂມ, ປະເທດອີຕາລີ
- ອົງການ CESIE, ປະເທດອີຕາລີ
- ສະມາຄົມທຸລະກິດການທ່ອງທ່ຽວແຂວງພູເກັດ, ປະເທດໄທ

# ບົດທີ 2: ຄວາມຮູ້ ແລະ ທັກສະສໍາລັບແຮງງານ ການທ່ອງທ່ຽວ ແລະ ການບໍລິການ

## ພາກສະເໜີ

ການທ່ອງທ່ຽວມີບົດບາດສໍາຄັນໃນເສດຖະກິດໂລກ, ຊຶ່ງປະກອບສ່ວນປະມານ 10% ໃຫ້ແກ່ GDP ຂອງໂລກ ແລະ ສ້າງວຽກເຮັດງານທໍາໃຫ້ກັບປະຊາກອນປະມານລ້ານຕໍາແໜ່ງໃນທົ່ວໂລກ (Streimikiene et al., 2021), ອຸດສະຫະກໍາດັ່ງກ່າວນີ້ມີບົດບາດສໍາຄັນໃນການພັດທະນາເສດຖະກິດ ແລະ ສັງຄົມຂອງຫຼາຍປະເທດ. ຊຶ່ງໄດ້ສ້າງໂອກາດການຈ້າງງານ ແລະ ຊຸກຍູ້ການປັບປຸງພື້ນຖານໂຄງລ່າງ. ເຖິງຢ່າງໃດກໍ່ຕາມ, ຂະແໜງການທ່ອງທ່ຽວອັນໃຫຍ່ຫຼວງນີ້ຍັງສ້າງສິ່ງທ້າທາຍຫຼາຍຢ່າງເຊັ່ນ: ການທໍາລາຍສິ່ງແວດລ້ອມ, ການໃຊ້ຊັບພະຍາກອນຫຼາຍເກີນໄປ, ແລະ ຜົນກະທົບ ດ້ານລົບຕໍ່ຊຸມຊົນທ້ອງຖິ່ນ (Streimikiene et al., 2021). ປະລິມານນັກທ່ອງທ່ຽວທີ່ຫຼາຍເກີນໄປສາມາດເຮັດໃຫ້ກາຍເປັນການທ່ອງທ່ຽວເກີນຄວນ (Overtourism), ຊຶ່ງການທ່ອງທ່ຽວນີ້ບໍ່ພຽງແຕ່ເຮັດໃຫ້ຊັບພະຍາກອນທໍາມະຊາດ ແລະ ວັດທະນະທໍາບໍ່ພຽງ, ແຕ່ຍັງເຮັດໃຫ້ຄຸນນະພາບຊີວິດຂອງຊຸມຊົນທ້ອງຖິ່ນຫລຸດລົງອີກດ້ວຍ.

ແຕ່ກົງກັນຂ້າມ, ການທ່ອງທ່ຽວແບບຍືນຍົງແມ່ນທາງເລືອກທີ່ຊ່ວຍແກ້ໄຂຜົນກະທົບດ້ານລົບເຫຼົ່ານີ້ໂດຍການສົ່ງເສີມການທ່ອງທ່ຽວທີ່ມີຄວາມຮັບຜິດຊອບ ທີ່ຮັກສາມໍລະດົກວັດທະນະທໍາ ແລະ ຮັກສາສິ່ງແວດລ້ອມ (Abreu et al., 2024; Streimikiene et al., 2021). ໂດຍສົ່ງເສີມການນໍາໃຊ້ຊັບພະຍາກອນທ້ອງຖິ່ນ, ຫຼຸດຜ່ອນສິ່ງເສດເຫຼືອ ແລະ ຮັບປະກັນຜົນປະໂຫຍດທາງດ້ານເສດຖະກິດ ໃນໄລຍະຍາວໃຫ້ແກ່ຊຸມຊົນທີ່ຢູ່ແຫຼ່ງທ່ອງທ່ຽວນັ້ນ. ການທ່ອງທ່ຽວແບບຍືນຍົງແມ່ນສອດຄ່ອງກັບເປົ້າໝາຍການພັດທະນາແບບຍືນຍົງຂອງອົງການສະຫະປະຊາຊາດ (SDGs) ທີ່ເນັ້ນໜັກຄວາມສໍາຄັນຂອງການຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ ແລະ ສົ່ງເສີມການພັດທະນາແບບມີສ່ວນຮ່ວມໃນຂະແໜງການທ່ອງທ່ຽວ (UNTWO, 2017).

ດັ່ງນັ້ນ, ບົດນີ້ຈະນໍາສະເໜີຫຼັກການຕົ້ນຕໍ, ຮູບແບບ ແລະ ກອບຂອງການທ່ອງທ່ຽວ ແບບຍືນຍົງ ພ້ອມກັບການສໍາຫຼວດທັກສະຕ່າງໆ ແລະ ຄວາມສາມາດທີ່ຈໍາເປັນສໍາລັບບຸກຄະລາກອນການທ່ອງທ່ຽວ ແລະ ການບໍລິການເພື່ອອໍານວຍຄວາມສະດວກໃຫ້ແກ່ການຫັນປ່ຽນຢ່າງຄ່ອງຕົວ ແລະ ໝູນໃຊ້ເຂົ້າໃນການປະຕິບັດການທ່ອງທ່ຽວແບບຍືນຍົງ. ບົດນີ້ຍັງກວມເອົາກິດຈະກໍາປະຕິບັດຕົວຈິງ ແລະ ບົດທົດສອບສັ້ນໆ, ທີ່ຈະຊ່ວຍໃຫ້ຜູ້ຮຽນຮຽນຮູ້ທິດສະດີ ແລະ ຮັບເອົາຄວາມຮູ້ໄດ້ງ່າຍຂຶ້ນ, ລວມທັງແຫຼ່ງຂໍ້ມູນ ເພີ່ມເຕີມເພື່ອຊ່ວຍໃຫ້ຜູ້ຮຽນສາມາດຊອກຮູ້ເພີ່ມເຕີມກ່ຽວກັບຫົວຂໍ້ດັ່ງກ່າວນັ້ນ.

## ຜົນການຮຽນທີ່ສຳຄັນ

- **ຄວາມເຂົ້າໃຈຫຼັກການຂອງການທ່ອງທ່ຽວແບບຍືນຍົງ**: ຜູ້ຮຽນຈະມີຄວາມເຂົ້າໃຈພື້ນຖານກ່ຽວກັບແນວ ຄວາມຄິດ ຂອງການທ່ອງທ່ຽວແບບຍືນຍົງ, ລວມມີມິຕິດ້ານສິ່ງແວດລ້ອມ, ວັດທະນະທຳ ແລະ ເສດຖະກິດ.

- **ການຮັບຮູ້ເຖິງຄວາມສຳຄັນຂອງທັກສະສີຂຽວ**: ຜູ້ຮຽນຈະຮັບຮູ້ເຖິງທັກສະສີຂຽວທີ່ສຳຄັນທີ່ຈຳເປັນສຳລັບ ການປະຕິບັດເນື້ອໃນແບບຍືນຍົງ.

- **ຄວາມຮັບຮູ້ດ້ານດິຈິຕອລ**: ຜູ້ຮຽນຈະເຂົ້າໃຈບົດບາດຂອງເຄື່ອງມືດິຈິຕອລ ແລະ ເທັກໂນໂລຢີຕ່າງໆ ທີ່ເຮັດ ໃຫ້ການທ່ອງທ່ຽວທັນມີຄວາມສະໄໝ, ໂດຍສະເພາະການຈັດການຂໍ້ມູນ ແລະ ການເພີ່ມການມີສ່ວນຮ່ວມ ຂອງລູກຄ້າ.

- **ຄວາມເຂົ້າໃຈກ່ຽວກັບແນວຄວາມຄິດການເປັນຜູ້ປະກອບການ ແລະ ການຈັດການ**: ຜູ້ຮຽນຈະໄດ້ ຮຽນທັກສະການເປັນຜູ້ປະກອບການ ແລະ ການຈັດການທີ່ຈຳເປັນ, ລວມທັງຄວາມຄິດສ້າງສັນ, ຈັນຍາບັນການຕັດສິນໃຈ ແລະ ການວາງແຜນພາຍໃນອຸດສາຫະກຳການທ່ອງທ່ຽວ

- **ກຳນົດການປະຕິບັດແບບຍືນຍົງ**: ຜູ້ຮຽນຈະພັດທະນາຄວາມເຂົ້າໃຈກ່ຽວກັບການປະຕິບັດການທ່ອງທ່ຽວແບບຍືນຍົງ ແລະ ຄວາມສຳຄັນຂອງ ການທ່ອງທ່ຽວແບບຍືນຍົງໃນການສົ່ງເສີມຄວາມຍືນຍົງດ້ານສິ່ງແວດລ້ອມ ແລະ ເສດຖະກິດ-ສັງຄົມ ໃນໄລຍະຍາວ.

## ຄຳແນະນຳສຳລັບຄູຝຶກ

- **ສົ່ງເສີມການການອະທິບາຍຢ່າງຈິງຈັງ**: ດຶງດູດໃຫ້ຜູ້ຮຽນມີສ່ວນຮ່ວມໃນການສົນທະນາກ່ຽວກັບຄວາມສຳຄັນຂອງການທ່ອງທ່ຽວແບບຍືນຍົງໂດຍໃຊ້ຕົວຢ່າງຈາກຊີວິດຈິງ ແລະ ກໍລະນີສຶກສາຕ່າງໆ .

- **ລວມເອົາກິດຈະກຳແບບເນັ້ນການມີສ່ວນຮ່ວມ**: ເຮັດກິດຈະກຳເປັນກຸ່ມ ຫຼື ການສະແດງບົດບາດສົມມຸດເພື່ອຊ່ວຍໃຫ້ຜູ້ຮຽນສາມາດກຳນົດ ແລະ ວິເຄາະແນວທາງການຈັດຕັ້ງປະຕິບັດແບບຍືນຍົງ ແລະ ສິ່ງທ້າທາຍຕ່າງໆ.

- **ເນັ້ນໃສ່ໃນການປະຕິບັດຕົວຈິງ**: ເນັ້ນໃສ່ວິທີການນຳໃຊ້ແນວຄວາມຄິດຂອງທັກສະສີຂຽວ, ຄວາມສາມາດດ້ານດິຈິຕອລ ແລະ ແນວຄວາມຄິດຂອງຜູ້ປະກອບການເພື່ອນຳໃຊ້ໃນອຸດສະຫະກຳການທ່ອງທ່ຽວ

- **ໃຊ້ເຄື່ອງມືສື່ສານສົ່ງເສີມການຮຽນຮູ້**: ນຳເອົາວິດີໂອ, ແຜ່ນວາດຂໍ້ມູນ, ຫຼື ຜູ້ບັນຍາຍພິເສດເພື່ອສະແດງແນວຄວາມຄິດ ແລະ ແນວໂນ້ມທີ່ສຳຄັນໃນການທ່ອງທ່ຽວແບບຍືນຍົງ ໃຫ້ປະຈັກຕາ.

- **ສົ່ງເສີມການຄິດແບບວິເຄາະ:**
  ໃຫ້ຜູ້ຮຽນປະເມີນຜົນກະທົບໄລຍະຍາວຂອງການປະຕິບັດການທ່ອງທ່ຽວຕໍ່ສິ່ງແວດລ້ອມ ແລະ ຊຸມຊົນທ້ອງຖິ່ນ, ສົ່ງເສີມຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ການຖອດຖອນບົດຮຽນຄືນ.

## ແນວຄວາມຄິດຫຼັກ

ບົດນີ້ເນັ້ນໃສ່ຄວາມຕ້ອງການສ້າງຂີດຄວາມສາມາດໃນການທ່ອງທ່ຽວແບບຍືນຍົງ, ໂດຍເລັງໃສ່ບັນດາທັກສະທີ່ສຳຄັນຕ່າງໆເຊັ່ນ: ທັກສະສີຂຽວ, ຄວາມສາມາດດ້ານດິຈິຕອລ ແລະ ການບໍລິຫານຈັດການສຳລັບການເປັນຜູ້ປະກອບການ. ການປະຕິບັດການທ່ອງທ່ຽວແບບຍືນຍົງ ມີຈຸດປະສົງເພື່ອຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ພ້ອມກັບສົ່ງເສີມວັດທະນະທຳທ້ອງຖິ່ນ ແລະ ການພັດທະນາເສດຖະກິດ-ສັງຄົມ. ທັກສະສີຂຽວແມ່ນມີຄວາມສຳຄັນຕໍ່ການນຳໃຊ້ຊັບພະຍາກອນໃຫ້ມີປະສິດທິພາບ, ການຈັດການສິ່ງເສດເຫຼືອ, ແລະ ການອະນຸລັກຊີວະນາໆພັນ, ໂດຍຜ່ານໂຄງການຝຶກອົບຮົມທີ່ຈຳເປັນເພື່ອສະໜອງກຳລັງແຮງງານໃນການແກ້ໄຂສິ່ງທ້າທາຍເຫຼົ່ານີ້. ທັກສະດ້ານດິຈິຕອລເຊັ່ນ: ການຈັດການຂໍ້ມູນ ແລະ ການສ້າງເນື້ອຫາດິຈິຕອລແມ່ນນັບມື້ມີຄວາມສຳຄັນຫຼາຍຂຶ້ນໃນຕະຫຼາດແຮງງານປະຈຸບັນ, ຊ່ວຍໃຫ້ມີນະວັດຕະກຳທຸລະກິດແບບປະດິດສ້າງ ແລະ ປັບປຸງການມີສ່ວນຮ່ວມຂອງລູກຄ້າ. ນອກຈາກນັ້ນ, ການສົ່ງເສີມທັກສະການເປັນຜູ້ປະກອບການ ແລະ ການປະຕິບັດການຈັດການແມ່ນມີຄວາມຈຳເປັນສຳລັບການຫັນຂະແໜງການທ່ອງທ່ຽວໃຫ້ທັນສະໄໝ, ໂດຍສຸມໃສ່ຄວາມຄິດສ້າງສັນ, ການຕັດສິນໃຈທີ່ມີຈັນຍາບັນ, ແລະ ການວາງແຜນທີ່ມີປະສິດທິພາບ. ແນວຄວາມຄິດເຫຼົ່ານີ້ຊີ້ໃຫ້ເຫັນເຖິງຄວາມສຳຄັນຂອງການເຊື່ອມໂຍງຄວາມຍືນຍົງກັບນະວັດຕະກຳ ແລະ ຂະແໜງການສຶກສາໃນການສ້າງບຸກຄະລາກອນການທ່ອງທ່ຽວທີ່ຕອບສະໜອງຕາມຄວາມຕ້ອງການແຮງງານໃນອຸດສາຫະກຳການທ່ອງທ່ຽວທີ່ມີການປ່ຽນແປງຕາມຍຸກສະໄໝ.

# ບົດທີ 2.1: ຫຼັກການທີ່ສຳຄັນ, ນິຍາມ ແລະ ປະເພດ

ການທ່ອງທ່ຽວແບບຍືນຍົງ, ເປັນແນວຄວາມຄິດ ແລະ ປັດຊະຍາການເດີນທາງ, ມີຈຸດປະສົງເພື່ອຫຼຸດຜ່ອນຜົນກະທົບຕໍ່ລະບົບນິເວດ, ສົ່ງເສີມໃຫ້ມີຄວາມຮັບຜິດຊອບທາງດ້ານເສດຖະກິດ ແລະ ສັງຄົມ, ແລະ ການຮັກສາລັກສະນະວັດທະນະທຳແບບດັ້ງເດີມ. ອີງຕາມອົງການທ່ອງທ່ຽວໂລກ (2024), ແນວຄວາມຄິດການທ່ອງທ່ຽວແບບຍືນຍົງໝາຍເຖິງ "ການທ່ອງທ່ຽວທີ່ຄຳນຶງເຖິງຜົນກະທົບດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມໃນປະຈຸບັນ ແລະ ອະນາຄົດ, ແກ້ໄຂຄວາມຕ້ອງການຂອງນັກທ່ອງທ່ຽວ, ອຸດສາຫະກຳການທ່ອງທ່ຽວ, ສິ່ງແວດລ້ອມ ແລະ ຊຸມຊົນໃນຂົງເຂດການທ່ອງທ່ຽວຕ່າງໆ". ໃນຄວາມໝາຍອື່ນ, ຂະແໜງການທ່ອງທ່ຽວໂລກຄວນນຳໃຊ້ຍຸດທະສາດຮອບດ້ານ ແລະ ສົມດຸນເພື່ອຈຳກັດຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ໃນຂະນະດຽວກັນກໍສ້າງຜົນປະໂຫຍດສູງສຸດໃຫ້ຂະແໜງການນີ້. ຜົນກະທົບດ້ານລົບ ແລະ ຄວາມເປັນອັນຕະລາຍຕໍ່ການທ່ອງທ່ຽວອາດລວມເຖິງປະຊາກອນທີ່ຫຼາຍເກີນໄປ, ຄວາມເສຍຫາຍຈາກສິ່ງແວດລ້ອມ ແລະ ການຮົ່ວໄຫຼທາງດ້ານເສດຖະກິດ. ແຕ່ຜົນກະທົບດ້ານດີທີ່ເປັນປະໂຫຍດ ລວມມີການສ້າງວຽກເຮັດງານທຳ, ການອະນຸຮັກມໍລະດົກວັດທະນະທຳ, ການອານຸລັກສັດປ່າ ແລະ ການຟື້ນຟູທິວທັດທຳມະຊາດ (GSTC, n.d.)

ການທ່ອງທ່ຽວແບບຍືນຍົງຖືວ່າເປັນແນວທາງທີ່ເອົາໃຈໃສ່ ຕໍ່ກັບບັນຫາສິ່ງແວດລ້ອມ ແລະ ສັງຄົມໂລກ, ໂດຍມີຈຸດປະສົງເພື່ອແນະນຳການປະຕິບັດການທ່ອງທ່ຽວ ແລະ ວິທີການທີ່ຈະຊ່ວຍໃຫ້ຄົນຫຸ່ນປັດຈຸບັນ ແລະ ອະນາຄົດມີຄວາມເພີດເພີນຈຸດໝາຍປາຍທາງດຽວກັນ ແລະ ປະສົບການໃນໄລຍະຍາວ. ເພື່ອບັນລຸເປົ້າໝາຍນີ້ ອຸດສາຫະກຳການທ່ອງທ່ຽວຕ້ອງຍຶດໝັ້ນກັບມາດຕະຖານຄວາມຍືນຍົງຢ່າງແທ້ຈິງ. ມີສະຖຽນລະພາບທາງດ້ານການເງິນໃນໄລຍະຍາວ ແລະ ມີຄວາມຍຸດຕິທຳດ້ານສິລະທຳ ແລະ ສັງຄົມຕໍ່ກັບປະຊາຊົນທ້ອງຖິ່ນ, ພ້ອມທັງເຄົາລົບຄວາມສົມດຸນອັນລະອຽດອ່ອນທີ່ທີ່ເປັນລັກສະນະສະເພາະຂອງແຫຼ່ງທ່ອງທ່ຽວຕ່າງໆ. ນອກຈາກນີ້, ການທ່ອງທ່ຽວຍັງຕ້ອງເຊື່ອມໂຍງກັບທຳມະຊາດ, ເສດຖະກິດ, ວັດທະນະທຳ ແລະ ສິ່ງແວດລ້ອມຂອງມະນຸດ ເພື່ອສະໜັບສະໜູນການເຕີບໂຕແບບຍືນຍົງ (Juganaru et al., 2008; UNTWO, 2024). ອີງຕາມແນວທາງເຫຼົ່ານີ້, ສະພາການທ່ອງທ່ຽວແບບຍືນຍົງຂອງໂລກ (GSTC, n.d.) ໄດ້ນຳສະເໜີເກນມາດຕະຖານທີ່ກຳນົດຕ່າງໆ, ເຊິ່ງແບ່ງອອກເປັນ 4 ເສົາຄ້ຳຄື: a) ການບໍລິຫານຈັດການແບບຍືນຍົງ, b) ຜົນກະທົບຕໍ່ເສດຖະກິດ - ສັງຄົມ, c) ຜົນກະທົບດ້ານວັດທະນະທຳ, d) ຜົນກະທົບດ້ານສິ່ງແວດລ້ອມ. ບັນດາເກນມາດຕະຖານເຫຼົ່ານີ້ເຮັດໜ້າທີ່ເປັນມາດຕະຖານສາກົນສຳລັບການເດີນທາງ ແລະ ການທ່ອງທ່ຽວແບບຍືນຍົງ. ໂດຍ ນຳໃຊ້ເພື່ອປູກຈິດສຳນຶກ, ໃຫ້ການສຶກສາແກ່ສາທາລະນະ ຫຼື ບຸກຄົນທົ່ວໄປ, ແລະ ລວມທັງຂະບວນການວັດ, ປະເມີນຜົນ ແລະ ກຳນົດນະໂຍບາຍ.

ໃນວ່າງບໍ່ດົນມານີ້, UNTWO (2024) ເນັ້ນໜັກວ່າການທ່ອງທ່ຽວແບບຍືນຍົງຄວນ:

1. ນຳໃຊ້ຊັບພະຍາກອນສິ່ງແວດລ້ອມໃຫ້ມີປະສິດທິພາບເທົ່າທີ່ຈະເປັນໄປໄດ້
   ເພື່ອສົ່ງເສີມການອະນຸຮັກຊີວະນາງພັນ ແລະ ມໍລະດົກທາງທຳມະຊາດ, ຂະບວນການລະບົບນິເວດວິທະຍາ
   ທີ່ສຳຄັນ ແລະ ການພັດທະນາການທ່ອງທ່ຽວ.

2. ເຄົາລົບຄວາມຖືກຕ້ອງທາງວັດທະນະທໍາ-ສັງຄົມ ຂອງຊຸມຊົນແຫຼ່ງທ່ອງທ່ຽວ, ອະນຸລັກຮັກສາບັນດາ ຄຸນຄ່າວັດທະນະທໍາດັ້ງເດີມ ແລະ ມໍລະດົກວັດທະນະທໍາທີ່ສ້າງຂຶ້ນ ແລະ ມໍລະດົກ ວັດທະນະທີ່ຕ້ອງໃຊ້ຄົນສືບທອດ ແລະ ສົ່ງເສີມຄວາມອົດທົນ ແລະ ຄວາມເຂົ້າໃຈລະຫວ່າງວັດທະນະທໍາ.

3. ຮັບປະກັນໃຫ້ເສດຖະກິດມີຄວາມຍືນຍົງໃນໄລຍະຍາວ. ຜົນປະໂຫຍດດ້ານເສດຖະກິດ-ສັງຄົມ ໄດ້ຖືກແຈກ ຢາຍຢ່າງເໝາະສົມໃຫ້ທຸກໆພາກສ່ວນກ່ຽວຂ້ອງ. ຊຸມຊົນເຈົ້າພາບໄດ້ບໍລິການທາງສັງຄົມ ແລະ ມີໂອກາດໃນ ການເຮັດວຽກ ແລະ ມີລາຍໄດ້ທີ່ຫມັ້ນຄົງ ຊຶ່ງເຮັດໃຫ້ລຸດຜ່ອນຄວາມທຸກຈົນລົງ

ເພື່ອໃຫ້ມີຄວາມຊັດເຈນຫຼາຍຂຶ້ນ, ການທ່ອງທ່ຽວແບບຍືນຍົງຕ້ອງປະຕິບັດຕາມຫຼັກການ ແລະ ຂໍ້ກໍານົດດັ່ງຕໍ່ໄປນີ້ (Upskill, n.d.):

ເຂົ້າຮ່ວມການອະນຸລັກຮັກສາຄວາມຫຼາກຫຼາຍດ້ານວັດທະນະທໍາ ແລະ ຊີວະນາໆພັນ.

ຫຼຸດຜ່ອນຜົນກະທົບຕໍ່ລະບົບນິເວດ

ຮັບປະກັນສະຫວັດດີການຂອງຊຸມຊົນທ້ອງຖິ່ນ ແລະ ຊົນເຜົ່າພື້ນເມືອງ.

ລວມມີອົງປະກອບດ້ານການສຶກສາ

ຊຸກຍູ້ໃຫ້ນັກທ່ອງທ່ຽວ ແລະ ອຸດສາຫະກໍາທ່ອງທ່ຽວດໍາເນີນການເຄື່ອນໄຫວຢ່າງເໝາະສົມ.

ຮຽກຮ້ອງໃຫ້ມີການນໍາໃຊ້ຊັບພະຍາກອນທີ່ບໍ່ສາມາດນໍາມາໃຊ້ຄືນໃໝ່ໄດ້ ຫນ້ອຍທີ່ສຸດ.

ຮັບຮູ້ຄວາມສາມາດທາງດ້ານສັງຄົມ ແລະ ທາງດ້ານກາຍະພາບຂອງຄົນອື່ນ.

ລວມລາຍຮັບທັງໝົດທີ່ໄດ້ຮັບທີ່ນັກລົງທຶນເອົາກັບຄືນບ້ານໃຫ້ໜ້ອຍທີ່ສຸດ.

ການທ່ອງທ່ຽວແບບຍືນຍົງແມ່ນໃຫ້ບູລິມະສິດການຄຸ້ມຄອງຊັບພະຍາກອນໃນໄລຍະຍາວເພື່ອຕອບສະຫນອງ ຄວາມຕ້ອງການຂອງສັງຄົມ ແລະ ເສດຖະກິດ. ພ້ອມກັນນັ້ນກໍຍັງຮັກສາຄວາມຫຼາກຫຼາຍດ້ານຊີວະນາໆພັນ. ຄວາມສົມບູນ ຂອງວັດທະນະທໍາ ແລະ ຂະບວນການທາງນິເວດວິທະຍາທີ່ສໍາຄັນ ເພື່ອຊຸກຍູ້ການມີສ່ວນຮ່ວມຢ່າງກວ້າງຂວາງ ແລະ ເພື່ອຄວາມເປັນເອກະພາບ, ການພັດທະນາການທ່ອງທ່ຽວແບບຍືນຍົງ ຈໍາເປັນຕ້ອງໃຫ້ມີການມີສ່ວນຮ່ວມຈາກທຸກພາກ ສ່ວນທີ່ກ່ຽວຂ້ອງທັງໝົດ, ລວມທັງຜູ້ທີ່ມີບົດບາດນໍາພາທາງການເມືອງທີ່ເຂັ້ມແຂງ (UNTWO, 2024), ນອກຈາກການມອບປະສົບການທີ່ມີຄວາມຫມາຍ ແລະ ຮັກສາລະດັບຄວາມພໍໃຈໃນລະດັບສູງໃຫ້ແກ່ນັກທ່ອງທ່ຽວ , ການທ່ອງທ່ຽວແບບຍືນຍົງຄວນເພີ່ມຄວາມເຂົ້າໃຈກ່ຽວກັບຄວາມກັງວົນກ່ຽວກັບຄວາມຍືນຍົງ ແລະ ສະຫນັບສະຫນູນ ການຮັບເອົາພຶດຕິກໍາການທ່ອງທ່ຽວແບບຍືນຍົງ (UNTWO, 2024).

ຕະຫຼອດໄລຍະຫຼາຍປີຜ່ານມາ, ການຈັດຕັ້ງປະຕິບັດທີ່ເປັນມິດກັບສິ່ງແວດລ້ອມຫຼາຍຮູບແບບໄດ້ເກີດຂຶ້ນເພື່ອຍົກສູງ ຄວາມຮັບຮູ້ຂອງຄວາມຕ້ອງການການປະຕິບັດແບບຍືນຍົງ, ຄະນະທີ່ຍັງມີຄວາມມ່ອນຊື່ນໃນການເດີນທາງ. ດັ່ງນັ້ນ, ຄໍາວ່າ "ການທ່ອງທ່ຽວແບບຍືນຍົງ", ຈຶ່ງກວມເອົາແນວຄວາມຄິດ ແລະ ຮູບແບບທີ່ແຕກຕ່າງກັນຢ່າງຫຼວງຫຼາຍ.

ຮູບແບບການທ່ອງທ່ຽວແບບຍືນຍົງຕົ້ນຕໍລວມມີ (Juganaru et al., 2008; Sharma, 2023; Barten, 2024):

1. ການທ່ອງທ່ຽວແບບອະນຸລັກ: ຄໍາວ່າ ການທ່ອງທ່ຽວແບບອະນຸລັກ ຖືກກໍານົດຂຶ້ນໃນຊຸມປີ 1980 ໂດຍເນັ້ນ ໃສ່ການທ່ອງທ່ຽວແບບມີຄວາມຮັບຜິດຊອບຕໍ່ທໍາມະຊາດ. ມີຈຸດປະສົງເພື່ອອະນຸຮັກສິ່ງແວດລ້ອມ (ຕົວຢ່າງ, ໂດຍຜ່ານການອະນຸຮັກພະລັງງານ ແລະ ນໍ້າ) ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນ.

ການທ່ອງທ່ຽວ ແບບອະນຸລັກສົ່ງເສີມການສຶກສາສິ່ງແວດລ້ອມ. ການປະຕິບັດແບບຍືນຍົງ ແລະ ຫຼຸດຜ່ອນຜົນກະທົບ ຕໍ່ລະບົບນິເວດ. ໃນສະພາບການພັດທະນາແບບຍືນຍົງ, ການທ່ອງທ່ຽວແບບອະນຸຮັກ ຍັງກ່ຽວຂ້ອງກັບການເຄົາລົບພື້ນທີ່ສໍາຄັນຂອງພາກພື້ນ ແລະ ປະເພນີວັດທະນະທໍາ.

2. ການທ່ອງທ່ຽວແບບຊຸມຊົນມີສ່ວນຮ່ວມ: ສົ່ງເສີມຊຸມຊົນທ້ອງຖິ່ນໃຫ້ມີສ່ວນຮ່ວມ ແລະ ໃຫ້ປະຊາຊົນເປັນເຈົ້າການໃນການວາງແຜນ ແລະ ສ້າງກິດຈະກໍາການທ່ອງທ່ຽວ. ນັກທ່ອງທ່ຽວໄດ້ພັກກັບເຈົ້າພາບທ້ອງຖິ່ນ, ໄດ້ປະສົບການຊີມອາຫານທ້ອງຖິ່ນ, ວິຖີຊີວິດທ້ອງຖິ່ນ, ແລະ ປະເພນີວັດທະນະທໍາຂອງຊຸມຊົນທ້ອງຖິ່ນ. ຊຶ່ງເປັນການຊ່ວຍໃຫ້ໃຫ້ຊຸມຊົນທ້ອງຖິ່ນໄດ້ ຮັບຜົນປະໂຫຍດທາງດ້ານເສດຖະກິດພ້ອມທັງຮັກສາປະເພນີ ແລະ ວັດທະນະທໍາຂອງເຂົາເຈົ້າ. ການທ່ອງທ່ຽວແບບຊຸມຊົນມີສ່ວນຮ່ວມເຮັດໃຫ້ຊຸມຊົນທ້ອງຖິ່ນເປັນເຈົ້າຕົນໃນຄວບຄຸມຂະແໜງອຸດສະຫະກໍາການທ່ອງທ່ຽວ, ລະບຽບການຕ່າງໆ, ແລະ ລາຍຮັບຕ່າງໆຂອງເຂົາເຈົ້າ. ສະນັ້ນ, ການທ່ອງທ່ຽວແບບດັ່ງກ່າວນີ້ຊ່ວຍຍົກສູງມາດຕະຖານຊີວິດການເປັນຢູ່ຂອງຊຸມຊົນ.

3. ການທ່ອງທ່ຽວຊົນນະບົດ ຫຼື ການທ່ອງທ່ຽວແບບກະເສດ: ເປີດໂອກາດໃຫ້ນັກທ່ອງທ່ຽວໄດ້ ສໍາຜັດກັບຊີວິດໃນຊົນນະບົດ, ປົກກະຕິແລ້ວພັກໃນຟາມ. ນີ້ເປັນການສົ່ງເສີມການກະສິກໍາແບບຍືນຍົງ ແລະເຮັດໃຫ້ຄວາມເຂົ້າໃຈເລິກເຊິ່ງ ກ່ຽວກັບອາຫານທ້ອງຖິ່ນ ແລະ ວັດທະນະທໍາກະສິກໍາ. ການທ່ອງທ່ຽວຊົນນະບົດກວມເອົາກິດຈະກໍາຕ່າງໆໃນໄລຍະທີ່ທ່ອງທ່ຽວໃນຊົນນະບົດ; ການທ່ອງທ່ຽວກະສິກໍາປະຕິບັດຕາມກົດລະບຽບການພັກຜ່ອນ ແລະ ພິຈາລະນາຜົນກະທົບດ້ານການເງິນຂອງການທ່ອງທ່ຽວຕໍ່ທຸລະກິດໃນຊົນນະບົດ ແລະ ຄົວເຮືອນ. ສະນັ້ນ, ການທ່ອງທ່ຽວກະສິກໍາ ແມ່ນກວມເອົາການພັກເຊົາຢູ່ເຮືອນ (ຟາມ ຫຼື ເຮືອນກິນນອນ), ກິນອາຫານທີ່ຜະລິດຢູ່ບ່ອນນັ້ນ ແລະ ມີສ່ວນຮ່ວມໃນກິດຈະກໍາດ້ານກະສິກໍາຈໍານວນໜຶ່ງ. ເຖິງວ່າການທ່ອງທ່ຽວກະສິກໍາຈະສ້າງລາຍໄດ້ຫຼາຍຢ່າງໃຫ້ແກ່ຊຸມຊົນຊົນນະບົດ, ແຕ່ການໄຫຼເຂົ້າຂອງນັກທ່ອງທ່ຽວຍັງມີທ່າອຽງລົບກວນວິຖີຊີວິດຊົນນະບົດຂອງຊຸມຊົນທ້ອງຖິ່ນ ແລະ ເຮັດໃຫ້ຊັບພະຍາກອນທີ່ຈໍາກັດຂອງເຂົາເຈົ້າໝົດໄປ.

4. ການທ່ອງທ່ຽວແບບຜ່ອນຄາຍ (Soft Tourism): ໃຫ້ຄວາມສໍາຄັນຕໍ່ປະສົບການທ່ອງທ່ຽວມີຜົນກະທົບດ້ານສິ່ງແວດລ້ອມຕໍ່າ. ໂດຍເນັ້ນໃສ່ວັດທະນະທໍາທ້ອງຖິ່ນ ແລະ ຊຸມຊົນ. ຮູບແບບການທ່ອງທ່ຽວນີ້ຫຼີກລ່ຽງບ່ອນທີ່ມີນັກທ່ອງທ່ຽວທີ່ແອອັດ ແລະ ສົ່ງເສີມການມີປະສົບການທ່ອງທ່ຽວໃນທີ່ງຽບສະຫງົບ ແລະ ຫຼີກລ່ຽງດື່ມສິ່ງມຶນເມົາ, ໂດຍຊຸກຍູ້ໃຫ້ອາໄສຢູ່ບ່ອນທ່ອງທ່ຽວເປັນໄລຍະດົນຂຶ້ນ ແຕ່ຈໍາບ່ອນສະຖານທີ່ທ່ອງທ່ຽວ. ການທ່ອງທ່ຽວແບບນີ້ຊ່ວຍໃຫ້ນັກທ່ອງທ່ຽວເຂົ້າໃຈວັດທະນະທໍາ ແລະ ສະພາບແວດລ້ອມທ້ອງຖິ່ນໄດ້ເລິກເຊິ່ງ. ການທ່ອງທ່ຽວແບບຜ່ອນຄາຍສົ່ງເສີມສັງຄົມ (ເຊັ່ນ: ການເຄົາລົບວັດທະນະທໍາ, ປະເພນີ, ສັງຄົມ ແລະ ໂຄງສ້າງທາງຄອບຄົວຂອງປະຊາຊົນທ້ອງຖິ່ນ) ແລະ ພັດທະນາເສດຖະກິດ (ເຊັ່ນ: ການກະຈາຍລາຍໄດ້ທີ່ເທົ່າທຽມກັນ ແລະ ການເພີ່ມຄວາມຫຼາກຫຼາຍໃນການສະໜອງການທ່ອງທ່ຽວ)

5. ການທ່ອງທ່ຽວສີຂຽວ: ເປັນອີກຄໍາສັບໜຶ່ງທີ່ຖືກນໍາໃຊ້ທໍາອິດໃນຊຸມປີ 1980, ໂດຍນໍາເອົາແນວທາງການປະຕິບັດເຊັ່ນ: ການນໍາໃຊ້ຜະລິດຕະພັນທີ່ເປັນມິດກັບສິ່ງແວດລ້ອມ ແລະ ຊຸກຍູ້ການໝູນໃຊ້ຜະລິຕະພັນຕ່າງໆຄືນໃໝ່. ຈຸດປະສົງແມ່ນເພື່ອຫຼຸດຜ່ອນຜົນກະທົບທາງລົບຕໍ່ສິ່ງແວດລ້ອມໃນຂະນະທີ່ສ້າງຜົນປະໂຫຍດທາງດ້ານເສດຖະກິດ. ເຖິງຢ່າງໃດກໍ່ຕາມ, ອຸດສາຫະກໍາໂຮງແຮມໄດ້ນໍາໃຊ້ແນວຄິດນີ້ໄປໃນທາງທີ່ບໍ່ຖືກຕ້ອງ

ແລະ ເຮັດສິ່ງທີ່ເອີ້ນວ່າ "ການຟອກຂຽວ (greenwashing)" ຊຶ່ງເປັນການອ້າງ ແລະ ສົ່ງເສີມ "ການທ່ອງທ່ຽວສີຂຽວ" ໂດຍບໍ່ດຳເນີນການຕາມແນວທາງປະຕິບັດການທ່ອງທ່ຽວສີຂຽວຢ່າງແທ້ຈິງ.

6. ການທ່ອງທ່ຽວທີ່ມີຄວາມຮັບຜິດຊອບ / ສາມັກຄີ: ໝາຍເຖິງການເຄື່ອນໄຫວທາງສັງຄົມທີ່ມີຈຸດປະສົງເພື່ອຄວບຄຸມ ແລະ ເສີມຂະຫຍາຍອຸດສາຫະກຳການທ່ອງທ່ຽວເພື່ອຜົນປະໂຫຍດຂອງຊຸມຊົນທ້ອງຖິ່ນ. ການທ່ອງທ່ຽວປະເພດນີ້ຕ້ອງການຄວາມຮັບຜິດຊອບຈາກທຸກພາກສ່ວນທີ່ກ່ຽວຂ້ອງລວມທັງ ຊຸມຊົນຂອງສະຖານທີ່ທ່ອງທ່ຽວ, ຜູ້ເປັນສື່ກາງ ແລະ ນັກທ່ອງທ່ຽວ. ຄວາມຮັບຜິດຊອບດັ່ງກ່າວຂຶ້ນກັບການເຄົາລົບຕໍ່ສິ່ງແວດລ້ອມ, ປະເພນີ, ຄ່ານິຍົມຂອງທ້ອງຖິ່ນ ແລະ ການແບ່ງປັນລາຍໄດ້ທີ່ຍຸດຕິທຳ.

7. ການທ່ອງທ່ຽວແບບຜະຈົນໄພ: ປະກອບດ້ວຍກິດຈະກຳທີ່ທ້າທາຍທາງກາຍະພາບເຊັ່ນ: ການຍ່າງປ່າ, ປີນພູ, ຫຼືກິລາທາງນ້ຳ ໂດຍເນັ້ນໃສ່ຄວາມຍືນຍົງ. ການທ່ອງທ່ຽວແບບນີ້ສົ່ງເສີມການອະນຸຮັກພື້ນທີ່ທຳມະຊາດ ແລະ ສະໜອງປະສົບການທີ່ໜ້າຕື່ນເຕັ້ນໃຫ້ກັບນັກທ່ອງທ່ຽວ.

8. ການທ່ອງທ່ຽວສັດປ່າ: ເປັນການສັງເກດສັດທີ່ອາໄສຢູ່ຕາມທຳມະຊາດ ໂດຍມີການລົບກວນໜ້ອຍທີ່ສຸດ. ການທ່ອງທ່ຽວປະເພດນີ້ຊ່ວຍສ້າງຈິດສຳນຶກໃນການອະນຸຮັກສັດປ່າ ແລະ ປະກອບສ່ວນປົກປັກຮັກສາລະບົບນິເວດ ແລະ ສັດທີ່ໃກ້ຈະສູນພັນ.

9. ການທ່ອງທ່ຽວວັດທະນະທຳ/ຊົນເຜົ່າ: ເປັນການທ່ອງທ່ຽວທີ່ເນັ້ນສຳຫຼວດວັດທະນະທຳ, ປະເພນີ ແລະ ມໍລະດົກຂອງທ້ອງຖິ່ນ. ນັກທ່ອງທ່ຽວຈະໄດ້ຮັບປະສົບການດ້ານວັດທະນະທຳທີ່ແທ້ຈິງ, ຊຶ່ງຊ່ວຍສະໜັບສະໜູນການອະນຸຮັກປະເພນີ, ສິລະປະ ແລະ ປະຫວັດສາດຂອງທ້ອງຖິ່ນ.

ປະເພດການທ່ອງທ່ຽວແບບຍືນຍົງເຫຼົ່ານີ້ບາງຄັ້ງອາດທັບຊ້ອນກັນ, ແຕ່ທັງໝົດນັ້ນແມ່ນມີເປົ້າໝາຍຮ່ວມກັນໃນການຫຼຸດຜ່ອນຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມ ແລະ ວັດທະນະທຳ, ພ້ອມທັງສະໜັບສະໜູນເສດຖະກິດທ້ອງຖິ່ນອີກດ້ວຍ.

## ບົດທີ 2.2: ຂອບຄວາມສາມາດດ້ານການທ່ອງທ່ຽວແບບຍືນຍົງ: ຈາກທິດສະດີສູ່ການປະຕິບັດຕົວຈິງ

ດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ, ຈຸດປະສົງຫຼັກຂອງການພັດທະນາແບບຍືນຍົງແມ່ນເພື່ອຮັບປະກັນການອະນຸລັກສິ່ງແວດລ້ອມ. ການມີສ່ວນຮ່ວມຂອງຊຸມຊົນ ແລະ ຜົນປະໂຫຍດອື່ນໆ. ພ້ອມກັນນັ້ນ, ກໍປົກປ້ອງສິ່ງແວດລ້ອມຈາກຜົນກະທົບດ້ານລົບພາຍນອກຂອງການພັດທະນາຕ່າງໆ. ເມື່ອພະຍາຍາມນໍາເອົາທິດສະດີການທ່ອງທ່ຽວແບບຍືນຍົງໄປສູ່ພາກປະຕິບັດ, ມັນມີຄວາມຈໍາເປັນທີ່ຕ້ອງພິຈາລະນາບັນດາຫຼັກການພື້ນຖານດັ່ງຕໍ່ໄປນີ້. (Dumbrăveanu, 2004):

a. ການທ່ອງທ່ຽວແບບຍືນຍົງ ແນໃສ່ຫຼຸດຜ່ອນຜົນກະທົບດ້ານລົບຂອງການທ່ອງທ່ຽວຕໍ່ສິ່ງແວດລ້ອມ ເພື່ອບັນລຸຄວາມຍືນຍົງດ້ານນິເວດວິທະຍາ. ນີ້ອາດຈະເຮັດໄດ້ໂດຍການຄືນກໍາໄລສ່ວນໜຶ່ງໃຫ້ກັບເຂດສະຫງວນຊຶ່ງຈະຊ່ວຍປົກປັກຮັກສາແລະປັບປຸງການອະນຸລັກ.

b. ເພື່ອບັນລຸຄວາມຍືນຍົງທາງດ້ານສັງຄົມ, ຜົນກະທົບດ້ານລົບຂອງການທ່ອງທ່ຽວທີ່ມີຕໍ່ປະຊາກອນທີ່ດໍາລົງຊີວິດຢູ່ທ້ອງຖິ່ນກໍ່ຕ້ອງໄດ້ຮັບການຫຼຸດຜ່ອນ. ຕົວຢ່າງ: ອຸດສາຫະກໍາການທ່ອງທ່ຽວທີ່ບໍ່ລົບກວນການດໍາລົງຊີວິດປະຈໍາວັນຂອງປະຊາຊົນທ້ອງຖິ່ນໃນແຫຼ່ງທ່ອງທ່ຽວທີ່ມີຊື່ສຽງ, ຊຶ່ງຈະຊ່ວຍໃຫ້ຫຼີກລ້ຽງບັນຫາຕ່າງໆໃນທ້ອງຖິ່ນນັ້ນ.

c. ເພື່ອບັນລຸຄວາມຍືນຍົງດ້ານວັດທະນະທໍາທີ່ແທ້ຈິງ, ການທ່ອງທ່ຽວຕ້ອງຫຼຸດຜ່ອນຜົນກະທົບທີ່ເປັນອັນຕະລາຍຕໍ່ຮີດຄອງ, ປະເພນີ ແລະ ວັດທະນະທໍາຂອງຄົນທີ່ຢູ່ອ້ອມຂ້າງ ໃຫ້ຫຼາຍທີ່ສຸດ, ໂດຍຊຸກຍູ້ອຸດສະຫະກໍາການທ່ອງທ່ຽວທີ່ສາມາດຈໍາແນກຄວາມເປັນເອກະລັກສະເພາະ ແລະ ວັດທະນະທໍາທີ່ແທ້ຈິງຂອງພາກພື້ນ ແລະ ຫຼຸດຜ່ອນອິດທິພົນພາຍນອກທີ່ມີຫຼາຍເກີນໄປ.

d. ຫຼັກການໜຶ່ງທີ່ສໍາຄັນອັນໜຶ່ງຂອງການທ່ອງທ່ຽວແບບຍືນຍົງແມ່ນການປະກອບສ່ວນເຂົ້າໃນການເຕີບໂຕ ທາງດ້ານເສດຖະກິດ ແລະ ການອະນຸລັກຊຸມຊົນໃກ້ຄຽງ ແລະ ເຂດປ່າສະຫງວນ, ຊຶ່ງສາມາດເຮັດໄດ້ໂດຍການເພີ່ມກໍາໄລທາງດ້ານການເງິນໃຫ້ປະຊາກອນທ້ອງຖິ່ນຈາກການຂະຫຍາຍຕົວຂອງການທ່ອງທ່ຽວເພື່ອບັນລຸຄວາມຍືນຍົງທາງດ້ານເສດຖະກິດ.

e. ຄວາມຮັບຮູ້, ຄວາມພ້ອມ ແລະ ການຝຶກອົບຮົມ, ໂດຍການສົ່ງເສີມຄວາມເຂົ້າໃຈ ແລະ ເຫັນຄຸນຄ່າຕໍ່ຜົນກັບ ຜົນກະທົບຈາກນັກທ່ອງທ່ຽວໃຫ້ຫຼາຍຂຶ້ນ, ເພື່ອປ່ຽນແປງພຶດຕິກໍາ ແລະ ຫຼຸດຜ່ອນຄວາມ ເສຍຫາຍ. ອີງຕາມທັດສະນະການຜະລິດພັນ ແລະ ນໍານາດການປົກຄອງທ້ອງຖິ່ນ, ອົງປະກອບດ້ານການສຶກ ສານິເວດວິທະຍາ (ສໍາລັບນັກທ່ອງທ່ຽວ, ຜູ້ຢູ່ອາໄສ, ອໍານາດການປົກຄອງທ້ອງຖິ່ນ ປະຊາກອນທີ່ອາໄສຢູ່ຊົນນະບົດ ແລະ ຕົວເມືອງ, ແລະ ອື່ນໆ) ກໍມີຄວາມຈໍາເປັນສໍາລັບການທ່ອງທ່ຽວແບບອະນຸລັກ.

ຫຼັກການພື້ນຖານອີກຢ່າງໜຶ່ງຂອງການທ່ອງທ່ຽວແບບຍືນຍົງ ແມ່ນໃຫ້ທ້ອງຖິ່ນເປັນເຈົ້າການ. ຊຸມຊົນທ້ອງຖິ່ນຄວນມີສ່ວນຮ່ວມຢ່າງຈິງຈັງໃນການຕັດສິນໃຈ ແລະ ໄດ້ຮັບການປຶກສາຫາລືທຸກເລື່ອງທີ່ກ່ຽວຂ້ອງກັບການພັດທະນາການທ່ອງທ່ຽວແບບຍືນຍົງ. ການເປັນເຈົ້າການດ້ານໂຄງສ້າງພື້ນຖານການທ່ອງທ່ຽວທ້ອງຖິ່ນ (ເຊັ່ນ: ໂຄງສ້າງທີ່ພັກ) ແມ່ນມີຄວາມສໍາຄັນ. ອໍານາດການປົກຄອງ ແລະ ຊຸມຊົນທ້ອງຖິ່ນຄວນມີສ່ວນຮ່ວມ ແລະ ຮັບຜິດຊອບຢ່າງຈິງຈັງ, ໂດຍສະເພາະແມ່ນເລື່ອງຊັບພະຍາກອນ ທາງດ້ານການເງິນຂອງເຂົາເຈົ້າ.

ການຄົ້ນຄວ້າວິໄຈທີ່ຜ່ານມາ (ເຊັ່ນ: Abreu et al., 2024; Yang, 2023) ສະແດງໃຫ້ເຫັນວ່າການນຳເອົາການປະຕິບັດການທ່ອງທ່ຽວແບບຍືນຍົງມາໃຊ້ ຕ້ອງມີການວາງແຜນຢ່າງລະອຽດຮອບຄອບ ແລະ ຮ່ວມມືກັບພາກສ່ວນກ່ຽວຂ້ອງຕ່າງໆ ເພື່ອແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ເສດຖະກິດ, ຄຽງຄູ່ກັບການມີສ່ວນຮ່ວມຂອງຊຸມຊົນຢ່າງຈິງຈັງ ແລະ ການເຊື່ອມໂຍງກັບການອະນຸລັກສິ່ງແວດລ້ອມ ແລະ ວັດທະນະທຳຢ່າງຕັ້ງໜ້າ. ການມີສ່ວນຮ່ວມຂອງທ້ອງຖິ່ນແມ່ນປັດໃຈສຳຄັນໃນການສ້າງຜົນປະໂຫຍດດ້ານເສດຖະກິດ ຄຽງຄູ່ກັບຮັກສາວັດ ທະນະ ທຳ. ການປະຕິບັດທີ່ສຳຄັນລວມມີການຫຼຸດຜ່ອນການນຳໃຊ້ຊັບພະຍາກອນຫຼາຍເກີນໄປ; ການອະນຸລັກຊີວະນາໆພັນ, ສົ່ງເສີມວັດທະນະທຳ ແລະ ມໍລະດົກຂອງທ້ອງຖິ່ນ ແລະ ພື້ນຖານໂຄງລ່າງທີ່ເປັນມິດກັບສິ່ງແວດລ້ອມ, ການບໍລິໂພກຢ່າງມີຄວາມຮັບຜິດຊອບ ແລະ ສະໜັບສະໜູນທຸລະກິດຂະໜາດນ້ອຍໃນທ້ອງຖິ່ນ. ບັນດາທຸລະກິດທ່ອງທ່ຽວຄວນປະຕິບັດວິທີນຳໃຊ້ພະລັງງານຢ່າງມີປະສິດທິຜົນ, ຫຼຸດຜ່ອນສິ່ງເສດເຫຼືອ ແລະ ສະໜອງການບໍລິການທີ່ເປັນມິດກັບສິ່ງແວດລ້ອມ. ນະໂຍບາຍທີ່ມີປະສິດທິຜົນ, ການຄຸ້ມຄອງທີ່ເຂັ້ມແຂງ ແລະ ການຕິດຕາມກິດຈະກຳການທ່ອງທ່ຽວຢ່າງຕໍ່ເນື່ອງແມ່ນມີຄວາມຈຳເປັນເພື່ອບັນລຸຄວາມຍືນຍົງໃນໄລຍະຍາວ ແລະ ສ້າງປະສົບການທາງບວກໃຫ້ແກ່ນັກທ່ອງທ່ຽວ ແລະ ເຈົ້າຂອງສະຖານທີ່ທ່ອງທ່ຽວ.

ການກຳນົດ ແລະ ການວິເຄາະຢ່າງລະອຽດກ່ຽວກັບຕົວຊີ້ວັດທີ່ກ່ຽວຂ້ອງກັບສະຖານທີ່ສະເພາະໃດໜຶ່ງແມ່ນມີຄວາມຈຳເປັນກ່ອນທີ່ຈະປະຕິບັດນະໂຍບາຍ ແລະ ການລິເລີ່ມສົ່ງເສີມການທ່ອງທ່ຽວແບບຍືນຍົງ. ການນຳໃຊ້ຕົວຊີ້ວັດສະເພາະໂດຍອີງໃສ່ບັນຫາ ແລະ ຄວາມຫຍຸ້ງຍາກໃນພື້ນທີ່ສະເພາະໃດໜຶ່ງ ອາດຈະຊ່ວຍສົ່ງເສີມການທ່ອງທ່ຽວແບບຍືນຍົງໂດຍໃຊ້ລະບົບການຕິດຕາມທົ່ວໄປ (Torres-Delgado & Saarinen, 2017).

Dumbrăveanu (2004) ແນະນຳຍຸດທະສາດທີ່ເປັນປະໂຫຍດ ແລະ ສາມາດປະຕິບັດໄດ້ດັ່ງຕໍ່ໄປນີ້, ເພື່ອຮັບປະກັນຄວາມຕ້ອງການຂອງການທ່ອງທ່ຽວແບບຍືນຍົງ ແລະ ປະຊາກອນທີ່ອາໄສຢູ່ທ້ອງຖິ່ນ:

- ✔ ການສ້າງຕັ້ງສວນອຸທິຍານແຫ່ງຊາດ, ເຂດສະຫງວນຊີວະພາບ ແລະ ເຂດສະຫງວນທຳມະຊາດ ນີ້ໝາຍຄວາມວ່າການເຂົ້າເຖິງ, ຄວາມຍາວ, ກິດຈະກຳ, ທັດສະນະຄະຕິ, ແລະ ພຶດຕິກຳ ໃນສະຖານທີ່ເຫຼົ່ານີ້ ແມ່ນຖືກຄວບຄຸມຕາມລະບຽບການທີ່ກຳນົດໄວ້. ທັງໝົດນີ້ແມ່ນສ່ວນໜຶ່ງຂອງຂະບວນການ **ສ້າງເຂດສະຫງວນ.**
- ✔ **ແນວທາງການຄຸ້ມຄອງນັກທ່ອງທ່ຽວ**: ການກຳນົດເຂດທ່ອງທ່ຽວຂອງປ່າສະຫງວນໃຫ້ຄຳນຶງເຖິງຄວາມອາດສາມາດໃນການຮອງຮັບນັກທ່ອງທ່ຽວໃນລະດັບ ແລະ ປະລິມານທີ່ແຕກຕ່າງກັນ. ການແບ່ງເຂດພາຍໃນຄຳນຶງເຖິງການລວມກຸ່ມ, ການແຈກຢາຍ, ການເຂົ້າເຖິງແບບຈຳກັດ ຫຼື ເລືອກ (ນະໂຍບາຍດ້ານລາຄາ), ຂໍ້ຫ້າມການເຂົ້າເຖິງສຳລັບນັກທ່ອງທ່ຽວໃນເຂດສະຫງວນທາງວິທະຍາສາດ ແລະ ການເຂົ້າເຖິງເຂດຫວງຫ້າມ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນຫຼາຍທີ່ຈະພັດທະນາລະບົບການການສຶກສາໂດຍອີງໃສ່ເປົ້າຫມາຍທ້ອງຖິ່ນ ເປົ້າຫມາຍສ່ວນບຸກຄົນ ແລະ ເປົ້າໝາຍສະເພາະຕ່າງໆ.
- ✔ **ຂີດຄວາມສາມາດໃນການຮອງຮັບ (ລະບົບນິເວດ, ເສດຖະກິດ, ສັງຄົມ, ຈິດຕະວິທະຍາ)**: ໝາຍເຖິງການກຳນົດລະດັບການນຳໃຊ້ສະພາບແວດລ້ອມໜຶ່ງໃດໜຶ່ງທີ່ສາມາດທົນທານໄດ້ໃນໄລຍະເວລາທີ່ກຳນົດໄວ້ໂດຍບໍ່ມີການທຳລາຍຄວາມຍືນຍົງໃນໄລຍະຍາວ. ມັນເປັນຍຸດທະສາດສຳລັບການກຳນົດມູນຄ່າທີ່ສຳຄັນ ຫຼື ສູງສຸດ, ຖ້າເກີນຂີດຈຳກັດ, ອາດຈະສົ່ງຜົນກະທົບດ້ານລົບຕໍ່ການພັດທະນາຕາມປົກກະຕິ.
- ✔ **ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (EIA)**, ເຄື່ອງມືສຳລັບປະເມີນຜົນກະທົບທີ່ເກີດຈາກການເພີ່ມຂຶ້ນຂອງກິດຈະກຳການທ່ອງທ່ຽວ, ແມ່ນເປົ້າໝາຍສຳຄັນຂອງແຜນພັດທະນາການທ່ອງທ່ຽວແບບອະນຸລັກໃດໜຶ່ງ,

ຄຽງຄູ່ກັບການປະເມີນຄວາມອາດສາດມາດຂອງສານຖານທີ່ທ່ອງທ່ຽວ. ການປະເມີນທັງສອງນີ້ຊ່ວຍກຳນົດ ແລະ ຂະໜາດຂອງຜົນກະທົບ, ການຈັດປະເພດຜົນກະທົບ ແລະ ຍຸດທະສາດການຈັດຕັ້ງປະຕິບັດ.

- ✔ ການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນ
- ✔ ຈັນຍາບັນຂອງນັກທ່ອງທ່ຽວ ແລະ ຜູ້ປະກອບການທ່ອງທ່ຽວ
- ✔ ກົດໝາຍ, ລະບຽບການ, ຂະບວນການອານຸຍາດ ແລະ ໃບອະນຸຍາດການເຄື່ອນໄຫວກິດຈະກຳການທ່ອງທ່ຽວ.

ເຖິງຢ່າງໃດກໍຕາມ, ການນຳເອົາທິດສະດີການທ່ອງທ່ຽວແບບຍືນຍົງໄປປະຕິບັດໄດ້ພົບອຸປະສັກຫຼາຍຢ່າງ (Abreu et al., 2024; Yang, 2023). ສິ່ງທ້າທາຍທີ່ສຳຄັນແມ່ນຄວາມເຄັ່ງຕຶງລະຫວ່າງການເຕີບໂຕຂອງເສດຖະກິດ ແລະ ການອະນຸລັກສິ່ງແວດລ້ອມ. ເນື່ອງຫາກແຮງຈູງໃຈເພື່ອຜົນກຳໄລໄລຍະສັ້ນມັກຈະຂັດແຍ້ງກັບເປົ້າໝາຍ ຄວາມຍືນຍົງໃນໄລຍະຍາວ. ການຄຸ້ມຄອງທີ່ບໍ່ມີປະສິດຕິພາບ ແລະ ຂາດການປະຕິບັດນະໂຍບາຍຢ່າງຈິງຈັງເຮັດໃຫ້ເກີດມີການທ່ອງທ່ຽວທີ່ແອອັດ, ການທຳລາຍສິ່ງແວດລ້ອມ ແລະ ການເອົາລັດເອົາປຽບໃນຊຸມຊົນທ້ອງຖິ່ນ. ນອກຈາກນັ້ນ, ພື້ນຖານໂຄງລ່າງ, ທຶນຮອນ ແລະ ການຝຶກອົບຮົມທີ່ບໍ່ພຽງພໍສຳລັບການປະຕິບັດແນວທາງແບບຍືນຍົງຍັງເປັນອຸປະສັກໃນຈັດຕັ້ງປະຕິບັດຮູບແບບການທ່ອງທ່ຽວທີ່ເປັນມິດກັບສິ່ງແວດລ້ອມ. ການມີສ່ວນຮ່ວມຂອງຊຸມຊົນແມ່ນສຳຄັນ, ແຕ່ຄວາມພະຍາຍາມປົກປັກຮັກສາວັດທະນະທຳມັກຈະຂັດແຍ້ງກັບການທ່ອງທ່ຽວທີ່ມີນັກທ່ອງທ່ຽວຈຳນວນຫຼາຍ, ສິ່ງຜົນໃຫ້ການແສູນເສຍຄວາມເປັນດັ້ງເດີມຂອງວັດທະນະທຳ. ສຸດທ້າຍ, ຂະບວນການດັ່ງກາວນີ້ມັກຈະຖືກກີດຂວາງເພາະວ່າຜູ້ທີ່ມີສ່ວນກ່ຽວຂ້ອງຕ່າງໆບໍ່ມີຄວາມຮັບຮູ້ ແລະ ຄວາມມຸ້ງໝັ້ນຢ່າງພຽງພໍ.

**ກໍລະນີສຶກສາ - ຊຸມຊົນ Chã de Jardim (Nascimento, 2020)**

ກິດຈະກຳການທ່ອງທ່ຽວໃນຊຸມຊົນ Chã de Jardim ໄດ້ເລີ່ມຕົ້ນໃນປະມານປີ 1995, ເມື່ອລັດຖະບານກາງ, ລັດ ແລະ ເທດສະບານໄດ້ສ້າງໂຄງການເພື່ອຟັນປ່ຽນປ່າໄມ້ Pau-Ferro ໃຫ້ເປັນໜ່ວຍອະນຸລັກຂອງລັດໃນຕອນນັ້ນ. ໃນໄລຍະນັ້ນ, ຄອບຄົວທີ່ອາໄສຢູ່ໃນປ່າ ແລະ ມີລາຍໄດ້ຫຼັກຈາກການກະສິກຳ ແລະ ການລ້ຽງສັດໄດ້ຖືກຍົກຍ້າຍໄປອາໄສຢູ່ໃກ້ເຂດປ່າສະຫງວນ. ໃນທາງກັບກັນ, ເຮືອນຊານບ້ານຊ່ອງ ແລະ ໂຮງງານຜະລິດນ້ຳໝາກໄມ້ໄດ້ຮັບການກໍ່ສ້າງຂຶ້ນເພື່ອຊ່ວຍໃຫ້ບັນດາຄອບຄົວເຫຼົ່ານີ້ມີລາຍຮັບຈາກການຜະລິດນ້ຳໝາກໄມ້ ແລະ ການທ່ອງທ່ຽວ ຈາກນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມສວນສາທາລະນະ Mata do Pau-Ferro. ໂຄງການນີ້ໄດ້ຖືກຍົກເລີກໃນທີ່ສຸດ. ເຖິງຢ່າງໃດກໍ່ຕາມ, ຍ້ອນຂາດການຝຶກອົບຮົມ ແລະ ການເອົາໃຈໃສ່ຈາກປະຊາຊົນໃນທ້ອງຖິ່ນ ສຸດທ້າຍໂຄງການນີ້ໄດ້ຖືກຍົກເລີກ. ໃນປີ 2006, ກຸ່ມຊາວໜຸ່ມ 20 ຄົນໄດ້ສ້າງຕັ້ງສະມາຄົມການພັດທະນາແບບຍືນຍົງຂອງຊຸມຊົນ Chã de Jardim, ຫຼື ADESCO, ໄດ້ເປີດໂຮງງານຜະລິດນ້ຳໝາກໄມ້ຂຶ້ນອີກຄັ້ງ ແລະ ເລີ່ມວາງແຜນການທ່ອງທ່ຽວໃນປ່າ Pau-ferro ເພື່ອສ້າງລາຍຮັບໃຫ້ແກ່ຊຸມຊົນ. ຈາກນັ້ນເປັນຕົ້ນມາ, ຈຶ່ງມີໂຄງການອື່ນໆເກີດຂຶ້ນຢູ່ໃນຊຸມຊົນເຊັ່ນ: ຮ້ານອາຫານ Vó Maria, ເຊິ່ງເປັນຂອງວິສາຫະກິດເອກະຊົນໃນນັ້ນມີຜູ້ນຳຂອງສະມາຄົມເປັນເຈົ້າຂອງທຸລະກິດຮ່ວມ. ມັນສ້າງໂອກາດວຽກເຮັດງານທຳ ແລະ ສ້າງລາຍໄດ້ໃຫ້ສະມາຊິກອື່ນໆຂອງສະມາຄົມ. ສະມາຄົມ Bodega Vó Maria ໄດ້ຖືກສ້າງຕັ້ງເພື່ອເປັນພື້ນທີ່ໃຫ້ສະມາຊິກຂອງສະມາຄົມນຳເອົາສິນຄ້າຕ່າງໆມາຂາຍເຊັ່ນ: ເຄື່ອງຫັດຖະກຳ ແລະ ຜະລິດຕະພັນອື່ນໆ.

ADESCO ມີ ສະມາຊິກ28ຄົນ, ແບ່ງອອກເປັນກຸ່ມກິດຈະກໍາຕ່າງໆເຊັ່ນ: ຄົນຂັບລົດທ້ອງຖິ່ນ, ການຜະລິດໃນໂຮງງານຜະລິດນໍ້າຫມາກໄມ້, ຜູ້ປະກອບການຂະຫນາດນ້ອຍ, ພະນັກງານຮ້ານອາຫານ ແລະ ອື່ນໆອີກ. ນອກຈາກນີ້, ຍັງມີບໍລິການອື່ນໆອີກເຊັ່ນ: ການຍ່າງປ່າ ແລະ ຂີ່ລົດຖີບໃນປ່າ Pau-Ferro; ຂີ່ມ້າ, ກິນເຂົ້າປ່າ; ເບິ່ງຕາເວັນຕົກດິນຂອງ Grandma Maria; ເທດສະການບຸນນໍ້າໝາກໄມ້; ຝຶກອົບຮົມກ່ຽວກັບສວນກ້າເບ້ຍ ແລະ ການເຮັດຝຸ່ນໝັກຈາກເສດອາຫານສິ່ງເສດເຫຼືອ; ການຝຶກອົບຮົມການເຮັດເຟືອງກ້ວຍ. ກິດຈະກໍາການທ່ອງທ່ຽວສ້າງລາຍຮັບໃຫ້ແກ່ຊຸມຊົນທຸກປີ ແລະ ສ້າງວຽກເຮັດງານທໍາຫຼາຍກວ່າ 40 ຕໍາແໜ່ງງານ ເນື່ອງຈາກຈາກມີນັກທ່ອງທ່ຽວໄປທ່ຽວຊົມ ແລະ ກິນອາຫານຢູ່ຮ້ານອາຫານ. ຜະລິດຕະພັນສ່ວນຫຼາຍແມ່ນປູກໂດຍຊາວກະສິກອນອິນຊີໃນທ້ອງຖິ່ນ ແລະ ຂາຍຢູ່ຮ້ານອາຫານ Vó Maria ແລະ ຕະຫຼາດ Areia. ປະຈຸບັນນີ້, ບ້ານມີບ່ອນຕັ້ງແຄ້ມ ແລະ ເຮືອນພັກຂະໜາດນ້ອຍ. ຊຸມຊົນນີ້ໄດ້ຮັບລາງວັນຢ່າງຫຼວງຫລາຍເຊິ່ງເປັນຜົນມາຈາກອິດທິພົນທາງສັງຄົມທີ່ສໍາຄັນ ແລະ ຄວາມຍືນຍົງ.

## ບົດທີ 2.3.: ການທ່ອງທ່ຽວແບບຍືນຍົງ ແລະ ທັກສະສີຂຽວ

ຄວາມຍືນຍົງໃນອະນາຄົດຂອງຂະແໜງທ່ອງທ່ຽວແມ່ນຂຶ້ນກັບຄວາມສາມາດ ແລະ ທັກສະຕ່າງໆ ຂອງບຸກຄະລາກອນການທ່ອງທ່ຽວ ຫຼາຍທີ່ສຸດ; ການພັດທະນາທັກສະ ແລະ ຄວາມຊ່ຽວຊານ ຂອງເຂົາເຈົ້າຍັງລວມເຖິງການເສີມສ້າງຄວາມສາມາດໃນການປັບຕົວຂອງອຸດສາຫະກໍາການທ່ອງທ່ຽວ ແລະ ການກຽມຄວາມພ້ອມຂອງຊຸມຊົນ ແລະ ສະຖານທີ່ທ່ອງທ່ຽວທີ່ດີກວ່າ ເພື່ອຮັບມືກັບຄວາມສ່ຽງ ແລະ ໄພຂົ່ມຂູ່ທີ່ເກີດຂຶ້ນຈາກສັງຄົມ, ເສດຖະກິດ, ສິ່ງແວດລ້ອມ ແລະ ການປ່ຽນແປງເງື່ອນໄຂດ້ານພູສາດການເມືອງຕ່າງໆ. ດັ່ງນັ້ນ, ມັນມີຄວາມຈໍາເປັນທີ່ອົງການຈັດຕັ້ງການທ່ອງທ່ຽວ ຈະຕ້ອງພິຈາລະນາການລົງທຶນໃນການສ້າງຂີດຄວາມສາມາດ ແລະ ການຝຶກອົບຮົມໃນຂົງເຂດທີ່ກ່ຽວຂ້ອງກັບຄວາມຍືນຍົງ ເພື່ອຮັກສາຄວາມສາມາດໃນການແຂ່ງຂັນ ແລະ ປັບປຸງແນວທາງການປະຕິບັດຄວາມຍືນຍົງຂອງພວກເຂົາ (Bremner, 2020).

ຕະຫຼອດໄລຍະຜ່ານມາ, ອຸດສາຫະກໍາການທ່ອງທ່ຽວ ແລະ ໂຮງແຮມມີຜົນກະທົບຢ່າງໃຫຍ່ຫຼວງຕໍ່ສິ່ງແວດລ້ອມຈາກການນໍາໃຊ້ຜະລິດຕະພັນບໍລິໂພກທີ່ສິ້ນເປືອງ ແລະ ຫຍ່ອຍສະຫຼາຍຢາກ, ກໍ່ໃຫ້ເກີດສິ່ງເສດເຫຼືອທີ່ເປັນຂອງແຂງ ແລະ ອັນຕະລາຍ ແລະ ການນໍ້າໃຊ້ພະລັງງານ ແລະ ນໍ້າຫຼາຍເກີນໄປ (Heesup et al., 2018; Pham Phu et al., 2018). ດັ່ງນັ້ນ, ຕ້ອງໃຫ້ຄວາມສໍາຄັນໃນການຈັດການພະລັງງານ, ການນໍາໃຊ້ເຕັກໂນໂລຊີພະລັງງານທາງເລືອກ, ການຕິດຕາມ ແລະ ປະເມີນຜົນເພື່ອກໍານົດປະລິມານການປ່ອຍອາຍພິດກາກບອນ ແລະ ຍຸດທະສາດໃໝ່ໃນການຫຼຸດຜ່ອນການປ່ອຍອາຍພິດກາກບອນ, ຄຽງຄູ່ກັບການຄຸ້ມຄອງສິ່ງເສດເຫຼືອເຊັ່ນ: ການຫຼຸດຜ່ອນການນໍາໃຊ້ປາສຕິກ, ເສດອາຫານ, ແລະ ສິ່ງເສດເຫຼືອທົ່ວໄປຈາກທຸລະກິດການທ່ອງທ່ຽວ ແລະ ການບໍລິການ (Heesup et al., 2018).

ການຄຸ້ມຄອງສິ່ງແວດລ້ອມຢ່າງມີປະສິດທິຜົນ ຊ່ວຍໃຫ້ຂະແໜງການຕ່າງໆສະແດງໃຫ້ເຫັນຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມຂອງເຂົາເຈົ້າ, ໂດຍການສົ່ມຂະຫຍາຍຊັບພະຍາກອນທໍາມະຊາດທີ່ດຶງດູດລູກຄ້າ ແລະ ສ້າງຄວາມພໍໃຈໃຫ້ລູກຄ້າ ແລະ ຫຼຸດຜ່ອນສິ່ງເສດເຫຼືອ, ການໃຊ້ພະລັງງານ, ແລະ ການນໍາໃຊ້ນໍ້າ, ຊຶ່ງຫຼຸດຜ່ອນຄ່າໃຊ້ຈ່າຍໃນການດໍາເນີນງານ ແລະ ປັບປຸງຄວາມຢູ່ດີກິນດີຂອງຊຸມຊົນ (Radwan et al., 2010).

ສ່ວນຫຼາຍແລ້ວ, ແນວທາງການທ່ອງທ່ຽວແບບຍືນຍົງຈະພົວພັນກັນກັບອົງປະກອບສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ, ຊຶ່ງກວມເອົາການພັດທະນາໃນໄລຍະຍາວ ແລະ ການສະໜັບສະໜູນສໍາລັບຄົນລຸ້ນຕໍ່ໄປ, ການສະໜອງການບໍລິການທີ່ມີຄຸນນະພາບສູງ ແລະ ການແຂ່ງຂັນຂອງການທ່ອງທ່ຽວ, ການຕອບສະໜອງຄວາມຕ້ອງການຂອງນັກທ່ອງທ່ຽວ ແລະ ການພັດທະນາຄວາມຮູ້ ແລະ ການສຶກສາ (Chan, 2023). ມີຫຼາຍປັດໃຈເຊັ່ນ: ຄວາມໄດ້ປຽບທາງດ້ານເສດຖະກິດ, ການຕະຫຼາດທີ່ດີຂຶ້ນ ແລະ ການແຂ່ງຂັນທີ່ຫຼາຍຂຶ້ນ, ນະໂຍບາຍ ແລະ ການຊ່ວຍເຫຼືອຂອງລັດຖະບານ, ການພັດທະນາຄວາມຮູ້ ແລະ ທັກສະ, ຄວາມຕ້ອງການທີ່ຈະປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາສັງຄົມ ແລະ ທ້ອງຖິ່ນໃນແງ່ຂອງການຮ່ວມມືເຫຼົ່ານີ້ແມ່ນກໍາລັງຂັບເຄື່ອນທີ່ສໍາຄັນທີ່ຢູ່ເບື້ອງຫຼັງການນໍາແນວ ທາງການປະຕິບັດແບບຍືນຍົງ (Chan, 2023).

ແນວທາງການປະຕິບັດຄວາມຍືນຍົງທົ່ວໄປ ແລະ ໄດ້ຮັບຄວາມນິຍົມໃນອຸດສາຫະກໍາການທ່ອງທ່ຽວ ແລະ ການບໍລິການປະກອບມີດັ່ງຕໍ່ໄປນີ້ (Ivanov, Ivanova, ແລະ Iankova, 2014):

- ການແຍກຂີ້ເຫຍື້ອ ແລະ ການເຮັດຝຸ່ນໝັກຈາກເສດອາຫານ.
- ການເຮັດສັນຍາຮ່ວມທຸລະກິດເພື່ອຮັບຊື້ ແລະ ຄຸ້ມຄອງສິ່ງເສດເຫຼືອ.
- ການຕິດຕັ້ງແຜງພະລັງງານແສງຕາເວັນເພື່ອຜະລິດພະລັງງານໄຟຟ້າ ແລະ ນໍ້າຮ້ອນ.
- ການປະຕິບັດນະໂຍບາຍການປະຢັດພະລັງງານ ແລະ ໂຄງສ້າງ (ເຊັ່ນ: ເຊັນເຊີແສງທີ່ໃຊ້ງານເມື່ອມີການເຄື່ອນໄຫວ, ຫຼອດໄຟປະຢັດພະລັງງານ ແລະ ເຄື່ອງໃຊ້ໄຟຟ້າ)
- ນະໂຍບາຍ ແລະ ຂັ້ນຕອນການທໍາຄວາມສະອາດນໍ້າ ແລະ ການອະນຸລັກນໍ້າ (ເຊັ່ນ: ກ໋ອກນໍ້າເຊັນເຊີເພື່ອຄວບຄຸມການໃຊ້ນໍ້າ, ເຄື່ອງປັ່ນອາກາດ, ຜ້າເຊັດໜ້າສະອາດຕາມຄໍາຮ້ອງຂໍເທົ່ານັ້ນ)
- ຕິດຕັ້ງເຄື່ອງກັນຄວາມຮ້ອນ ແລະ ນໍ້າ ຂອງຕາມສະຖານປະກອບການ.
- ການຜະລິດຕະພັນອາຫານຂອງຕົນເອງ (ເຊັ່ນ: ນົມ, ໄຂ່, ຜະລິດຕະພັນຈາກນົມ) ແລະ ນໍາໃຊ້ຜະລິດຕະພັນອາຫານຊີວະພາບ ແລະ ເຄື່ອງສໍາອາງຈາກທໍາມະຊາດ.
- ການນໍາໃຊ້ວັດສະດຸທີ່ສາມາດຍ່ອຍສະຫຼາຍໄດ້ເພື່ອທໍາຄວາມສະອາດ.
- ການໝູນໃຊ້ຄືນ (ເຈ້ຍ, ແກ້ວ, ປາດສະຕິກ, ຜ້າ) ແລະ ນໍາໃຊ້ຜະລິດຕະພັນທີ່ນໍາມາໃຊ້ໃໝ່.

ອຸດສາຫະກໍາການທ່ອງທ່ຽວ ແລະ ການບໍລິການ ແມ່ນອີງໃສ່ການມີສ່ວນຮ່ວມຂອງທຸກໆພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນການຈັດຕັ້ງປະຕິບັດແບບຍືນຍົງໃຫ້ສໍາເລັດ. ພ້ອມກັນນີ້, ການຝຶກອົບຮົມ ແລະ ການສຶກສາສີຂຽວທີ່ເປັນມິດກັບສິ່ງແວດລ້ອມແມ່ນມີຄວາມຈໍາເປັນສໍາລັບພະນັກງານ ແລະ ລູກຄ້າ. ຄວາມສາມາດໃນການກໍານົດບັນຫາສິ່ງແວດລ້ອມ ແລະ ສະເໜີວິທີແກ້ໄຂທີ່ເປັນໄປໄດ້ ຫຼື ຕອບສະໜອງມາດຕະຖານຄວາມຍືນຍົງທີ່ແນ່ນອນເອີ້ນວ່າ "ທັກສະສີຂຽວ" ເຊິ່ງນໍາໄປສູ່ຄໍາຖາມທີ່ວ່າ:

**ຄວາມຮູ້ ແລະ ທັກສະອັນໃດແດ່ ທີ່ບຸກຄະລາກອນການທ່ອງທ່ຽວ ແລະ ບໍລິການ ຕ້ອງການເພື່ອຈັດຕັ້ງປະຕິບັດຄວາມຍືນຍົງ?**

ການປະເມີນຊ່ອງຫວ່າງທັກສະຢ່າງຮອບດ້ານໃນປີ 2019 ໂດຍ Next Tourism Generation Alliance ໄດ້ກໍານົດທັກສະສີຂຽວ (ສິ່ງແວດລ້ອມ) (NTG, 2019) ດັ່ງລຸ່ມນີ້:

- ຄວາມສາມາດໃນການຫຼຸດຜ່ອນ ແລະ ເພີ່ມປະສິດທິພາບການນຳໃຊ້ພະລັງງານ ແລະ ນ້ຳໃຫ້ຄຸ້ມຄ່າທີ່ສຸດ: ການປະຕິບັດທີ່ໄດ້ຮັບຜົນສຳເລັດຂອງມາດຕະການປະສິດທິພາບພະລັງງານສ່ວນໃຫຍ່ແມ່ນຂຶ້ນກັບການຄຸ້ມຄອງການດຳເນີນງານ ແລະ ກິດຈະກຳທີ່ກ່ຽວຂ້ອງ ແລະ ສົ່ງເສີມພຶດຕິກຳທີ່ມີສະຕິຕໍ່ສິ່ງແວດລ້ອມຂອງພະນັກງານ ແລະ ລູກຄ້າ. ຜູ້ຈ້າງງານຕ້ອງຊອກຫາທາງເລືອກໃນການຫຼຸດຜ່ອນກາກບອນຢ່າງຈິງຈັງເພື່ອຫຼຸດຜ່ອນການປ່ອຍອາຍພິດກາກບອນ. ການນຳໃຊ້ພະລັງງານທົດແທນ ແລະ ເຕັກໂນໂລຢີສາມາດຊ່ວຍຫຼຸດຜ່ອນການປ່ອຍອາຍຄາບອນໄດ້ເຊັ່ນກັນ.
- ຄວາມສາມາດໃນການຈັດການສິ່ງເສດເຫຼືອ, ນ້ຳເປື້ອນ, ການໝູນໃຊ້ຄືນໃໝ່ (ລີໄຊເຄີນ) ແລະ ຝຸ່ນບົ່ມ: ເພື່ອປົກປ້ອງປະຊາຊົນໃນທ້ອງຖິ່ນ, ນັກທ່ອງທ່ຽວ ແລະ ສິ່ງແວດລ້ອມ, ຂີ້ເຫຍື່ອໃນເທດບານເມືອງ (MSW) ຕ້ອງໄດ້ຮັບການເກັບມ້ຽນ, ຂົນສົ່ງ, ແປຮູບ ແລະ ກຳຈັດຂີ້ເຫຍື້ອໃນເຂດທ່ອງທ່ຽວ ແບບປະຫຍັດ ແລະ ຮັບຜິດຊອບຕໍ່ສິ່ງແວດລ້ອມ. ທຸລະກິດອາຫານ ແລະ ເຄື່ອງດື່ມສາມາດຫຼຸດຜ່ອນສິ່ງເສດເຫຼືອໄດ້ໂດຍການຄວບຄຸມຂະໜາດຊິ້ນສ່ວນ ແລະ ການນຳໃຊ້ຝຸ່ນບົ່ມ ແລະ ເຕັກນິກການຫຼຸດຜ່ອນສິ່ງເສດເຫຼືອເພື່ອຫຼຸດຜ່ອນການຖິ້ມຂີ້ເຫຍື້ອ, ປະຢັດຄ່າໃຊ້ຈ່າຍ ແລະ ເພີ່ມຜົນຜະລິດ (Dhir et al., 2020).
- ການອະນຸລັກຊີວະນາໆພັນ: ການທ່ອງທ່ຽວສາມາດສົ່ງຜົນກະທົບທາງລົບຕໍ່ຊີວະນາໆພັນເນື່ອງຈາກມົນລະພິດ, ຜົນກະທົບຈາກນັກທ່ອງທ່ຽວ ແລະ ການທຳລາຍລະບົບນິເວດທາງທຳມະຊາດ. ເຖິງຢ່າງໃດກໍ່ຕາມ, ຜົນກຳໄລຂອງອຸດສະຫະກຳນີ້ແມ່ນຂຶ້ນກັບສຸຂະພາບຂອງລະບົບນິເວດ, ເພາະມັນດູດນັກທ່ອງທ່ຽວທີ່ເຫັນຄຸນຄ່າຂອງທິວທັດທຳມະຊາດຊີວະນາໆພັນ (Petrosillo et al., 2006). ພ້ອມດຽວກັນນີ້, ຄວາມຫຼາກຫຼາຍທາງຊີວະນາໆພັນຍັງໃຫ້ໂອກາດໃນການຍົກລະດັບຄວາມເຂົ້າໃຈຂອງນັກທ່ອງທ່ຽວກ່ຽວກັບຄຸນຄ່າຂອງລະບົບນິເວດ ແລະ ເປັນແຫຼ່ງລາຍຮັບ ແລະ ແຮງຈູງໃຈໃຫ້ແກ່ປະຊາຊົນທ້ອງຖິ່ນໃນການປົກປ້ອງສິ່ງແວດລ້ອມທຳມະຊາດອ້ອມຂ້າງ (Whitelaw et al., 2014). ແຕ່ຍັງຂາດແຄນບຸກຄະລາກອນທີ່ມີຄຸນວຸດທິໃນຂະແໜງທ່ອງທ່ຽວເພື່ອ ສະໜັບສະໜູນຊີວະນາໆພັນພາຍໃນ ແລະ ອ້ອມຂ້າງສະຖານທີ່ທ່ອງທ່ຽວ.
- ການສົ່ງເສີມການຂົນສົ່ງແບບຍືນຍົງ (ເຊັ່ນ: ການຂົນສົ່ງສາທາລະນະ): ຜູ້ຈັດການການທ່ອງທ່ຽວ ແລະ ພະນັກງານຕ້ອງໄດ້ຮັບການສຶກສາທີ່ດີກ່ຽວກັບການເດີນທາງ ແລະ ການທ່ອງທ່ຽວແບບຍືນຍົງ, ນັ້ນແມ່ນ, ຮູບແບບການຂົນສົ່ງທີ່ເປັນມິດກັບສິ່ງແວດລ້ອມ ແລະ ການຂົນສົ່ງສີຂຽວທີ່ຫຼຸດຜ່ອນ ຫຼື ລົບລ້າງການໃຊ້ນ້ຳມັນເຊື້ອໄຟ, ເພາະການຂົນສົ່ງການທ່ອງທ່ຽວສົ່ງຜົນກະທົບຕໍ່ສິ່ງແວດລ້ອມ (ສ່ວນຫຼາຍແມ່ນການເດີນທາງທາງອາກາດ, ການເດີນທາງທາງທະເລ ແລະ ທາງບົກ). ຄວນເອົາໃຈໃສ່ການສົ່ງເສີມໃຫ້ນັກທ່ອງທ່ຽວໃຊ້ຮູບແບບການຂົນສົ່ງທີ່ເປັນມິດຕໍ່ສິ່ງແວດລ້ອມ; ການປັບປຸງຄຸນນະພາບຂອງຂໍ້ມູນຂ່າວສານທີ່ນັກທ່ອງທ່ຽວສາມາດເຂົ້າເຖິງໄດ້, ຊອກຫາວິທີຫຼຸດຜ່ອນການປ່ອຍອາຍພິດທີ່ເກີດຈາກການຂົນສົ່ງ. ຫຼຸດຜ່ອນຈຳນວນຍານພາຫະນະທີ່ປ່ອຍມົນລະພິດ ແລະ ສົ່ງເສີມການນຳໃຊ້ລົດໂດຍສານສາທາລະນະ (Hall et al., 2017).
- ການສົ່ງເສີມກິດຈະກຳ ແລະ ຜະລິດຕະພັນທີ່ເປັນມິດກັບສິ່ງແວດລ້ອມ: ທັກສະທີ່ຈຳເປັນເພື່ອສົ່ງເສີມພຶດຕິກຳທີ່ໃສ່ໃຈກັບສິ່ງແວດລ້ອມປະກອບດ້ວຍການຕີຄວາມໝາຍ ແລະ ການສື່ສານແນວທາງການປະຕິບັດດ້ານສິ່ງແວດລ້ອມໃຫ້ກັບນັກທ່ອງທ່ຽວໃນແບບທີ່ສົ່ງເສີມພຶດຕິກຳທີ່ມີຄວາມຮັບຜິດຊອບ. ຜູ້ບໍລິໂພກປະຕິບັດການກະທຳທີ່ເປັນມິດກັບສິ່ງແວດລ້ອມແມ່ນເຊື່ອມໂຍງກັບທັດສະນະຂອງສິ່ງແວດລ້ອມຂອງເຂົາເຈົ້າເອງ, ແຕ່ມັນຍັງສາມາດໄດ້ຮັບຜົນກະທົບຈາກການສະໜັບສະໜູນຂອງພາກທຸລະກິດທີ່ສົ່ງເສີມຄວາມຍືນຍົງສິ່ງແວດລ້ອມ ແລະ ນະໂຍບາຍສິ່ງແວດລ້ອມ ທີ່ສົ່ງເສີມຄວາມຫຼາກຫຼາຍຂອງພຶດຕິກຳທີ່ເປັນມິດກັບສິ່ງແວດລ້ອມເຊັ່ນ: ການອະນຸລັກສິ່ງແວດລ້ອມ, ຊື້ສິນຄ້າ ແລະ ຫັດຖະກຳທ້ອງຖິ່ນ ຫຼື ການຫຼຸດຜ່ອນການໃຊ້ປາດສະຕິກ (Carlisle et al., 2022, 2022). ເຖິງຢ່າງໃດກໍ່ຕາມ, ພວກເຮົາຕ້ອງລະວັງ "ການຟອກສີຂຽວ", ຊຶ່ງເປັນກົນລະຍຸດການ

ຕະຫຼາດທີ່ເປັນຂໍ້ອ້າງທີ່ບໍ່ເປັນຈິງວ່າເປົ້າຫມາຍ, ນະໂຍບາຍ ຫຼື ຜະລິດຕະພັນຂອງອົງການຈັດຕັ້ງທີ່ເປັນປະໂຫຍດຕໍ່ສິ່ງແວດລ້ອມ.

- ຄວາມຮູ້ກ່ຽວກັບການປ່ຽນແປງດິນຟ້າອາກາດ: ຄວາມຮູ້ ແລະ ການປະຕິບັດມີ 2 ປະເພດ ທີ່ອີງໃສ່ທັກສະຕ່າງໆ: ອັນທີ 1 ແມ່ນຄວາມເຂົ້າໃຈພື້ນຖານວ່າຂະແໜງການທ່ອງທ່ຽວປະກອບສ່ວນເຂົ້າໃນການປ່ຽນແປດິນຟ້າອາກາດແນວໃດ ແລະ ມີວິທີການຫຼຸດຜ່ອນ ແລະ ດັດປັບຂະແໜງການແນວໃດ, ໂດຍການປ່ຽນແປງພາລະບົດບາດ ແລະ ຄວາມຮັບຜິດຊອບຂອງພະນັກງານ ເພື່ອປົກປັກຮັກສາສິ່ງແວດລ້ອມ; ອັນທີ 2, ຮູ້ວິທີການປົກປ້ອງອຸດສາຫະກຳການທ່ອງທ່ຽວຈາກຜົນກະທົບຂອງການປ່ຽນແປງດິນຟ້າອາກາດຕໍ່ການທ່ອງທ່ຽວໃນປະຈຸບັນ (Carlisle et al., 2022).

ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງໃຫ້ມີທັກສະທີ່ຖືກຕ້ອງໃນລະດັບທີ່ເຫມາະສົມສຳລັບການຝຶກວິຊາຊີບທັງໃນ ພາກທຸລະກິດ ແລະ ສະຖາບັນການສຶກສາ, ເລີ່ມຈາກຄວາມເຂົ້າໃຈຂັ້ນພື້ນຖານ ແລະ ຄວາມຮັບຮູ້ເຖິງລະດັບການປະຕິບັດງານ , ລະດັບການຊີ້ນຳ ແລະ ລະດັບຜູ້ບໍລິຫານອາວຸໂສ. ເຖິງຢາງໃດກໍຕາມ, ຍັງມີຄວາມແຕກຕ່າງໃນຂະແໜງອຸດສະຫະກຳຄຽງຄູ່ກັບການຂາດຄວາມເຂົ້າໃຈເຖິງການນຳໃຊ້ທັກສະຕ່າງໆດ້ານສິ່ງແວດລ້ອມພາຍໃນອົງການຈັດຕັ້ງ (Carlisle et al., 2022).

ອີງຕາມບົດລາຍງານລະຫວ່າງປະເທດທີ່ສຶກສາຄວາມຕ້ອງການດ້ານທັກສະ ແລະ ຊ່ອງຫວ່າງໃນຂະແໜງການທ່ອງທ່ຽວ ແລະ ການບໍລິການ ຂອງປະເທດໄທ ແລະ ສປປ ລາວ ທີ່ໄດ້ພັດທະນາຂຶ້ນເປັນສ່ວນຫນຶ່ງຂອງໂຄງການ INNO4Tourism ໄດ້ມີການເພີ່ມຂຶ້ນຂອງການຮັບຮູ້ຄວາມສຳຄັນຂອງການທ່ອງທ່ຽວແບບຍືນຍົງຂອງທັງສອງປະເທດ. ສິ່ງທີ່ເປັນທີ່ຫນ້າສົນໃຈແມ່ນພາກສ່ວນທີ່ກ່ຽວຂ້ອງຫຼາຍກວ່າ 90% ເຫັນວ່າທັກສະສີຂຽວເປັນສິ່ງຈຳເປັນໃນອຸດສາຫະກຳການທ່ອງທ່ຽວ ແລະ ການບໍລິການໃນ ສປປ ລາວ, ຜູ້ຕອບແບບສອບຖາມສ່ວນໃຫຍ່ຖືວ່າແຮງງານມີທັກສະສີຂຽວທີ່ຈຳກັດ, ມີພຽງ 51.9% ຍອມຮັບວ່າມີຄວາມສາມາດດ້ານທັກສະສີຂຽວໃນລະດັບໃດໜຶ່ງ. ໃນທາງກົງກັນຂ້າມ, ບົດລາຍງານຂອງປະເທດໄທ ໄດ້ລາຍງານວ່າມີຄວາມເຊື່ອຫລາຍ (76.5%) ວ່າບຸກຄະລາກອນການບໍລິການມີການພັດທະນາທັກສະເຫຼົ່ານີ້ພຽງແຕ່ບາງສ່ວນ, ມີພຽງແຕ່ 7.8% ເຊື່ອວ່າພວກເຂົາມີຄວາມສາມາດດ້ານທັກສະສີຂຽວຢ່າງເຕັມທີ່.

ມີຫຼັກສູດຝຶກອົບຮົມຫຼາຍໂຄງການໃນ ສປປ ລາວ, ໂດຍມີຜູ້ທີ່ກ່ຽວຂ້ອງ 61.1% ຮູ້ສຶກວ່າແຮງງານໄດ້ຮັບການຝຶກອົບຮົມຢ່າງພຽງພໍ, ແຕ່ໃນປະເທດໄທ, ມີພຽງແຕ່ 35,3% ເຫັນດີກັບທັດສະນະດັ່ງກ່າວ, ເຊິ່ງຊີ້ໃຫ້ເຫັນຊ່ອງຫວ່າງທີ່ສຳຄັນຂອງໂອກາດໃນການຝຶກອົບຮົມ. ສິ່ງທີ່ຫນ້າສົນໃຈ, ເຖິງແມ່ນວ່າຜູ້ຕອບແບບສອບຖາມສ່ວນໃຫຍ່ໃນປະເທດໄທ (90.2%) ສະຫນັບສະຫນູນການເຊື່ອມສານການຝຶກອົບຮົມທັກສະສີຂຽວເຂົ້າໃນຫຼັກສູດຂອງມະຫາວິທະຍາໄລ ແລະ ສືບຕໍ່ພັດທະນາວິຊາຊີບຢ່າງຕໍ່ເນື່ອງ. ແຕ່ 55.6% ຂອງຈຳນວນຜູ້ຕອບແບບສອບຖາມໃນ ສປປ ລາວ ບໍ່ແນ່ໃຈກ່ຽວກັບໄລຍະເວລາທີ່ເຫມາະສົມທີ່ສຸດສຳລັບການສຶກສາດັ່ງກ່າວ. ອຸປະສັກໃນການໄດ້ຮັບ ແລະ ເສີມສ້າງທັກສະສີຂຽວໃນສອງປະເທດລວມມີການຂາດຄວາມສົນໃຈ ແລະ ທັດສະນະຄະຕິສີຂຽວຂອງຜູ້ບໍລິຫານ ແລະ ພະນັກງານໃນລະດັບປະຕິບັດການ, ການຊ່ວຍເຫຼືອຂອງລັດຖະບານຍັງບໍ່ທັນພຽງພໍ ແລະ ຂາດແຄນຊັບພະຍາກອນສຳລັບໂຄງການຝຶກອົບຮົມຕ່າງໆ. ຂໍ້ມູນດັ່ງກ່າວນີ້ຊີ້ໃຫ້ເຫັນເຖິງຄວາມຈຳເປັນທີ່ຈະໃຫ້ເພີ່ມທະວີການຮັບຮູ້ ແລະ ກຳນົດຂໍ້ລິເລີ່ມທີ່ເປັນເປົ້າໝາຍເພື່ອສົ່ງເສີມແນວທາງການປະຕິບັດແບບຍືນຍົງໃນຂະແໜງການທ່ອງທ່ຽວຂອງທັງສອງປະເທດ.

# ບົດທີ 2.4: ທັກສະດິຈິຕອນ

ຄວາມສາມາດດ້ານດິຈິຕອນຖືກຍອມຮັບວ່າເປັນໜຶ່ງໃນຄວາມສາມາດທີ່ສຳຄັນສຳລັບການຮຽນຮູ້ຕະຫຼອດຊີວິດ ແລະ ມີຄວາມສຳຄັນເປັນຢ່າງຍິ່ງໃນຕະຫຼາດແຮງງານໃນປັດຈຸບັນ. ປັດຈຸບັນນີ້, ຫຼາຍໆອາຊີບຕ້ອງການທັກສະດ້ານດິຈິຕອນ, ເຊິ່ງເປັນສິ່ງຈຳເປັນໃນຊີວິດປະຈຳວັນເຊັ່ນດຽວກັນ.

ອີງຕາມຄະນະກຳມະທິການສະຫະພາບເອີຣົບ (2019, ໜ້າ 12), "ຄວາມສາມາດດ້ານດິຈິຕອນ ກວມເອົາຄວາມໝັ້ນໃຈ, ວິຈາລະນາຍານ ແລະ ຄວາມຮັບຜິດຊອບໃນການນຳໃຊ້ ແລະ ການມີສ່ວນຮ່ວມກັບເຕັກໂນໂລຊີດິຈິຕອນ ເພື່ອການຮຽນຮູ້, ໃນຫ້ອງການ ແລະ ການມີສ່ວນຮ່ວມໃນສັງຄົມ. ນອກຈາກນີ້, ຍັງລວມເອົາການຮູ້ຂໍ້ມູນຂ່າວສານ ແລະ ຂໍ້ມູນດິບ, ການສື່ສານ ແລະ ການຮ່ວມມື, ຄວາມຮູ້ດ້ານສື່ມວນຊົນ, ການສ້າງເນື້ອຫາດິຈິຕອລ (ລວມທັງການຂຽນໂປແກຼມ), ຄວາມປອດໄພ (ລວມທັງສະຫວັດດີການດິຈິຕອນ ແລະ ຄວາມສາມາດທີ່ກ່ຽວຂ້ອງກັບຄວາມປອດໄພທາງອິນເຕີເນັດ), ຄຳຖາມທີ່ກ່ຽວຂ້ອງກັບຊັບສິນທາງປັນຍາ, ການແກ້ໄຂບັນຫາ ແລະ ການຄິດແບບວິເຄາະ."

ຂໍ້ມູນດັ່ງຕໍ່ໄປນີ້ໄດ້ອະທິບາຍເຖິງທັກສະ ແລະ ຄວາມສາມາດດ້ານດິຈິຕອນຕ່າງໆ ທີ່ກຳນົດໄວ້ໃນກອບ DigComp (2022), ເຊິ່ງໄດ້ກຳນົດ 5 ຂົງເຂດຄວາມອາດສາມາດຫຼັກ: a) **ການຮູ້ຂໍ້ມູນຂ່າວສານ ແລະ ຂໍ້ມູນດິບ**, b) **ການສື່ສານ ແລະ ການຮ່ວມມື**, c) **ການສ້າງເນື້ອຫາດິຈິຕອນ**, d) **ຄວາມປອດໄພ**, ແລະ e) **ການແກ້ໄຂບັນຫາ**.

## 2.4.1. ການຮູ້ຂໍ້ມູນຂ່າວສານ ແລະ ຂໍ້ມູນດິບ

ການຮູ້ຂໍ້ມູນຂ່າວສານ ແລະ ຂໍ້ມູນດິບ ເປັນຄວາມສາມາດທຳອິດທີ່ກວມເອົາການຊອກຫາ, ການເຂົ້າເຖິງ, ເກັບຮັກສາ, ແລະ ການຈັດລະບຽບຂໍ້ມູນດິຈິຕອລ, ຂໍ້ມູນຂ່າວສານ, ແລະ ເນື້ອຫາ, ແລະ ການປະເມີນຄວາມກ່ຽວຂ້ອງ ແລະ ເນື້ອຫາຂອງແຫຼ່ງຂໍ້ມູນ, ເຊິ່ງປະກອບມີ 3 ປະເພດຍ່ອຍ:

1. ຊອກຫາ, ຄົ້ນຫາ, ແລະ ການກັ່ນຕອງຂໍ້ມູນດິບ, ຂໍ້ມູນຂ່າວສານ, ແລະ ເນື້ອຫາດິຈິຕອລ: ລວມມີການອະທິບາຍຄວາມຕ້ອງການຂໍ້ມູນ, ການເຂົ້າເຖິງ ແລະ ນຳທາງສະພາບແວດລ້ອມດິຈິຕອນ ແລະ ການຊອກຫາຂໍ້ມູນ, ຂໍ້ມູນຂ່າວສານ, ແລະ ເນື້ອຫາ, ລວມທັງການພັດທະນາ ແລະ ບຳລຸງຮັກສາແນວທາງການຄົ້ນຫາຂໍ້ມູນແບບສະເພາະສ່ວນບຸກຄົນ.

2. ການປະເມີນຂໍ້ມູນດິບ, ຂໍ້ມູນຂ່າວສານ, ແລະ ເນື້ອຫາດິຈິຕອລ: ລວມມີການກວດສອບ, ການປຽບທຽບ, ການວິເຄາະ, ຄວາມເຂົ້າໃຈ ແລະ ການປະເມີນຄວາມຖືກຕ້ອງ ແລະ ຄວາມໜ້າເຊື່ອຖືຂອງແຫຼ່ງຂໍ້ມູນດິບຕ່າງໆ ແລະ ຂໍ້ມູນ, ຂໍ້ມູນຂ່າວສານ, ແລະ ແຫຼ່ງທີ່ມາຂອງເນື້ອຫາດິຈິຕອລ ແລະ ວັດຖຸທີ່ເປັນແຫຼ່ງຂໍ້ມູນຕ່າງໆແບບມີວິຈາລະຍານ.

3. ການຈັດການຂໍ້ມູນດິບ, ຂໍ້ມູນຂ່າວສານ, ແລະ ເນື້ອຫາດິຈິຕອລ: ລວມມີການຈັດຕັ້ງ, ບັນທຶກ, ເຂົ້າເຖິງ, ແລະ ປະມວນຜົນເນື້ອຫາ, ຂໍ້ມູນດິບ, ຂໍ້ມູນຂ່າວສານທາງດິຈິຕອລ ໃນບໍລິບົດດິຈິຕອລຕ່າງໆ.

## 2.4.2. ການສື່ສານ ແລະ ການຮ່ວມມື

ຄວາມສາມາດທີສອງກວມເອົາການນຳໃຊ້ເຄື່ອງມືດິຈິຕອນສຳລັບການສົນທະນາແລກປ່ຽນ, ການສື່ສານ ແລະ ການເຮັດວຽກເປັນທີມ. ຄຳນຶງເຖິງຄວາມຫຼາກຫຼາຍຂອງວັດທະນະທຳ ແລະ ຮຸ້ນຄົນ; ການມີສ່ວນຮ່ວມໃນກິດຈະກຳທາງສັງຄົມ, ການບໍລິການດິຈິຕອນຂອງລັດຖະບານ ແລະ ເອກະຊົນ ເພື່ອສ້າງຜົນປະໂຫຍດໃຫ້ແກ່ສັງຄົມ; ການຮັກສາເອກະລັກ, ຊື່ສຽງ , ແລະ ການມີຕົວຕົນທາງອອນໄລນ໌. ຄວາມສາມາດນີ້ແບ່ງອອກເປັນ 6 ປະເພດຄື:

1. ການສົນທະນາແລກປ່ຽນແບບດິຈິຕອລ: ຫມາຍເຖິງການສື່ສານໂດຍຜ່ານຮູບແບບດິຈິຕອລ ຕ່າງໆ ແລະ ສາມາດເຂົ້າໃຈວ່າຊ່ອງທາງການສື່ສານດິຈິຕອລມີຄວາມເຫມາະສົມໃນສະຖານະການໃດຫນຶ່ງ ຫຼື ບໍ່.
2. ການແລກປ່ຽນຜ່ານເທັກໂນໂລຍີດິຈິຕອລ: ຫມາຍເຖິງການໃຊ້ເຕັກໂນໂລຊີດິຈິຕອລທີ່ກ່ຽວຂ້ອງ ເພື່ອແລກປ່ຽນຂໍ້ມູນ, ຂໍ້ມູນຂ່າວສານ, ແລະ ສື່ດິຈິຕອລກັບຜູ້ອື່ນ; ແລະ ເຮັດໜ້າທີ່ເປັນສື່ກາງ ແລະ ຮັບຮູ້ການອ້າງອີງ ແລະ ລະບຸແຫຼ່ງທີ່ມາຂອງຂໍ້ມູນ.
3. ການມີສ່ວນຮ່ວມໃນຖານະຂອງພົນລະເມືອງຜ່ານເຕັກໂນໂລຊີດິຈິຕອລ: ລວມເຖິງການນຳໃຊ້ການບໍລິການດ້ານດິຈິຕອລຂອງທັງພາກລັດ ແລະ ເອກະຊົນ. ເພື່ອມີສ່ວນຮ່ວມໃນສັງຄົມ ແລະ ນຳໃຊ້ເຄື່ອງມືດິຈິຕອລທີ່ກ່ຽວຂ້ອງເພື່ອຊອກຫາໂອກາດໃນການມີສ່ວນຮ່ວມຂອງພົນລະເມືອງ ແລະ ການສ້າງຄວາມເຂັ້ມແຂງດ້ວຍຕົນເອງ
4. ການຮ່ວມມືກັນຜ່ານເຕັກໂນໂລຍີດິຈິຕອລ: ຫມາຍເຖິງການຮ່ວມມືສ້າງຂໍ້ມູນ, ຊັບພະຍາກອນ, ແລະ ຄວາມຮູ້ໂດຍຜ່ານຂະບວນການເຮັດວຽກຮ່ວມກັນ ແລະ ນຳໃຊ້ເຄື່ອງມືດິຈິຕອລ.
5. ມາລະຍາດທາງອິນເຕີເນັດ: ຫມາຍເຖິງການສະແດງພຶດຕິກຳ ແລະ ຄວາມຮູ້ທີ່ເຫມາະສົມ ໃນເວລານຳໃຊ້ເຄື່ອງມືດິຈິຕອລ ແລະ ການມີສ່ວນຮ່ວມໃນສະຖານະການດິຈິຕອລຕ່າງໆ. ການຄຳນຶງເຖິງ ຄວາມຫຼາກຫຼາຍທາງດ້ານຮຸ້ນຄົນ ແລະ ວັດທະນະທຳໃນບໍລິບົດຂອງດິຈິຕອລ ແລະ ການປັບປ່ຽນຍຸດທະສາດການສື່ສານຕາມກຸ່ມເປົ້າໝາຍ
6. ການຈັດການຕົວຕົນແບບດິຈິຕອລ: ເປັນປະເພດສຸດທ້າຍທີ່ລວມມີການຈັດການຂໍ້ມູນທີ່ສ້າງ ຂຶ້ນໂດຍ ໃຊ້ເຄື່ອງມືດິຈິຕອລ, ສະພາບແວດລ້ອມ ແລະ ການບໍລິການຕ່າງໆ. ການສ້າງ ແລະ ຮັກສາ ຫນຶ່ງ ຫຼື ຫຼາຍຂໍ້ມູນທີ່ສະແດງຕົວຕົນທາງດິຈິຕອລ ແລະ ປົກປ້ອງຊື່ສຽງຂອງຕົນເອງ.

## 2.4.3. ການສ້າງເນື້ອຫາດິຈິຕອລ

ຄວາມສາມາດທີສາມກວມເອົາການສ້າງ ແລະ ດັດແກ້ສື່ດິຈິຕອລ; ການປັບປຸງ ແລະ ເຊື່ອມໂຍງຂໍ້ມູນຂ່າວສານ ແລະ ເອກະສານເຂົ້າໃນຄັງຄວາມຮູ້ໃນປະຈຸບັນ, ພ້ອມດຽວກັນນັ້ນ, ກໍຕ້ອງຮູ້ເຖິງການນຳໃຊ້ທີ່ລິຂະສິດ ແລະ ໃບອະນຸຍາດໃຫ້ຖືກຕ້ອງ ແລະ ສາມາດໃຫ້ຄຳແນະນຳທີ່ເຂົ້າໃຈງ່າຍສຳລັບລະບົບຄອມພິວເຕີ. ຄວາມສາມາດນີ້ແບ່ງອອກເປັນ 4 ປະເພດຍ່ອຍ:

1. ການພັດທະນາເນື້ອຫາດິຈິຕອລ: ການສະແດງອອກທາງດ້ານດິຈິຕອລ ແລະ ການຜະລິດ ແລະ ການດັດແກ້ຂໍ້ມູນດິຈິຕອລໃນຮູບແບບຕ່າງໆ.

2. ການເຊື່ອມໂຍງ ແລະ ການສ້າງເນື້ອຫາດິຈິຕອລຄືນໃຫມ່: ປະກອບມີການພັດທະນາເນື້ອຫາ ແລະ ຄວາມຮູ້ໃຫມ່ບໍ່ຊ້ຳໃຜ, ເປັນເອກະລັກ ແລະ ເປັນປະໂຫຍດ ໂດຍການປັບປ່ຽນ, ປັບແຕ່ງ, ແລະ ເຊື່ອມສານຂໍ້ມູນ ແລະ ເນື້ອຫາໃຫມ່ ເຂົ້າກັບຄວາມຮູ້ ແລະ ຊັບພະຍາກອນທີ່ມີຢູ່.
3. ລິຂະສິດ ແລະ ໃບອະນຸຍາດ: ກ່ຽວກັບການເຂົ້າໃຈກົດຫມາຍທີ່ຄຸ້ມຄອງລິຂະສິດ ແລະ ໃບອະນຸຍາດ ແລະ ຮູ້ວ່າມັນ ກ່ຽວຂ້ອງກັບຂໍ້ມູນ ແລະ ເນື້ອຫາດິຈິຕອລແນວໃດ.
4. ການຂຽນໂປລແກລມ: ກ່ຽວກັບການຈັດລະບຽບ ແລະ ການສ້າງຊຸດຄຳແນະນຳທີ່ຊັດເຈນທີ່ລະບົບຄອມພິວເຕີອາດຈະປະຕິບັດຕາມເພື່ອເຮັດວຽກງານ ຫຼື ແກ້ໄຂບັນຫາໃດຫນຶ່ງໃຫ້ສຳເລັດ.

### 2.4.4. ຄວາມປອດໄພ

ຄວາມສາມາດດິຈິຕອລອັນທີສີ່ ແມ່ນການຮັກສາຄວາມເປັນສ່ວນຕົວຂອງຜູ້ຊົມໃຊ້ອຸປະກອນດິຈິຕອລ, ຂໍ້ມູນຂ່າວສານສ່ວນຕົວ ແລະ ຂໍ້ມູນສ່ວນຕົວຂອງບຸກຄົນ, ປົກປ້ອງສຸຂະພາບຈິດ ແລະ ສຸຂະພາບຮ່າງກາຍ ແລະ ການຮັບຮູ້ຂໍ້ມູນກ່ຽວກັບເຄື່ອງມືດິຈິຕອລຂອງບຸກຄົນ ທີ່ສົ່ງເສີມການມີສ່ວນຮ່ວມທາງສັງຄົມ ແລະ ຄວາມເປັນຢູ່ທີ່ດີ, ຄວາມເຂົ້າໃຈການນຳໃຊ້ເຕັກໂນໂລຢີດິຈິຕອລສົ່ງຜົນກະທົບຕໍ່ສິ່ງແວດລ້ອມແນວໃດ. ຄວາມສາມາດນີ້ປະກອບ ມີ 4 ປະເພດຍ່ອຍ:

1. ການປົກປ້ອງອຸປະກອນ: ຫມາຍເຖິງການຮັບຮູ້ເຖິງອັນຕະລາຍ ແລະ ຄວາມສ່ຽງໃນສະພາບແວດລ້ອມດິຈິຕອລ, ປົກປ້ອງອຸປະກອນ ແລະ ຊັບສິນດິຈິຕອລ ລວມກັບຄວາມຮັບຮູ້ກ່ຽວກັບຄວາມປອດໄພ ແລະ ໂຄງສ້າງວິທີການຮັກສາຄວາມປອດໄພ ແລະ ປະຕິບັດຄວາມເປັນສ່ວນຕົວ ແລະ ຄວາມຫນ້າເຊື່ອຖືດ້ວຍຄວາມເຫມາະສົມ
2. ການປົກປ້ອງຂໍ້ມູນສ່ວນບຸກຄົນ ແລະ ຄວາມເປັນສ່ວນຕົວ: ຫມາຍເຖິງການປົກປ້ອງຂໍ້ມູນ ຂ່າວສານສ່ວນບຸກຄົນ ແລະ ຄວາມເປັນສ່ວນຕົວໃນສະພາບແວດລ້ອມດິຈິຕອລ. ຄວາມສາມາດໃນການປົກປ້ອງຕົວເອງ ແລະ ຜູ້ອື່ນຈາກອັນຕະລາຍ. ພ້ອມດຽວກັນ, ກໍຕ້ອງຮູ້ວິທີການນຳໃຊ້ ແລະ ແລກປ່ຽນຂໍ້ມູນທີ່ກຳນົດຕົວຕົນຂອງບຸກຄົນ. ລວມທັງການຮັບຮູ້ວ່າການນຳໃຊ້ຂໍ້ມູນສ່ວນຕົວໃນໃນອຸປະກອນດິຈິຕອລແມ່ນຂຶ້ນກັບ "ນະໂຍບາຍຄວາມເປັນສ່ວນຕົວ"
3. ການປົກປ້ອງສຸຂະພາບ ແລະ ຄວາມເປັນຢູ່ທີ່ດີ: ຫມາຍເຖິງຄວາມສາມາດໃນການນຳໃຊ້ເຕັກໂນໂລຢີດິຈິຕອລຢ່າງປອດໄພ ແລະ ຫ່າງໄກຈາກໄພຂົ່ມຂູ່ຕໍ່ຮ່າງກາຍ ແລະ ຈິດໃຈ. ຄວາມສາມາດໃນການປົກປ້ອງຕົວເອງ ແລະ ຜູ້ອື່ນຈາກໄພຂົ່ມຂູ່ທີ່ອາດເກີດຂຶ້ນໃນສະພາບແວດລ້ອມດິຈິຕອລ (ເຊັ່ນ: ການທຳຮ້າຍກຽດສັກສີຂອງຜູ້ອື່ນຜ່ານທາງອິນເຕີເນັດ) ແລະ ຄວາມເຂົ້າໃຈກ່ຽວວ່າເຕັກໂນໂລຢີດິຈິຕອລອາດຈະສົ່ງເສີມການມີສ່ວນຮ່ວມ ແລະ ຄວາມເປັນຢູທີ່ດີຂອງສັງຄົມແນວໃດ.
4. ການປົກປ້ອງສິ່ງແວດລ້ອມ: ຫມາຍເຖິງຄວາມເຂົ້າໃຈວ່າການນຳໃຊ້ເຕັກໂນໂລຢີດິຈິຕອລຈະສົ່ງຜົນກະທົບຕໍ່ສິ່ງແວດລ້ອມແນວໃດ.

### 2.4.5. ການແກ້ໄຂບັນຫາ

ຄວາມສາມາດດິຈິຕອນທີຫ້າ ແລະ ສຸດທ້າຍກວມເອົາການຮັບຮູ້ບັນຫາ, ຄວາມຕ້ອງການ, ແລະ . ການແກ້ໄຂບັນຫາໃນບໍລິບົດການດິຈິຕອລ; ການສ້າງຂະບວນການ ແລະ ຜະລິດຕະພັນທີ່ເປັນນະວັດຕະກຳ ໂດຍການໃຊ້ເຄື່ອງມືດິຈິຕອລ ແລະ ການປະຕິບັດຕາມຄວາມກ້າວຫນ້າຂອງເຕັກໂນໂລຊີດິຈິຕອລ, ປະກອບດ້ວຍ 4 ປະເພດຍ່ອຍ:

1. ການແກ້ໄຂບັນຫາດ້ານເຕັກນິກ: ກ່ຽວກັບການຮັບຮູ້ ແລະ ແກ້ໄຂບັນຫາດ້ານເຕັກນິກ ທີ່ເກີດຂຶ້ນໃນເວລານໍາໃຊ້ສະພາບແວດລ້ອມ ແລະ ອຸປະກອນດິຈິຕອລ (ນັບແຕ່ການແກ້ໄຂບັນຫາພື້ນຖານ ແລະ ການແກ້ໄຂບັນຫາທີ່ສະລັບສັບຊ້ອນຫຼາຍ)
2. ການກໍານົດຄວາມຕ້ອງການທາງດ້ານເຕັກໂນໂລຢີ ແລະ ການຕອບສະໜອງ: ລວມມີການກໍານົດ, ການປະເມີນ, ການເລືອກ ແລະ ການນໍາໃຊ້ເຄື່ອງມືດິຈິຕອລ ແລະ ວິທີແກ້ໄຂດ້ານເຕັກໂນໂລຢີທີ່ເປັນໄປໄດ້ ເພື່ອ ວິເຄາະບັນຫາ ແລະ ຊອກຫາວິທີແກ້ໄຂ; ດັດແກ້ໄຂ ແລະ ປັບແຕ່ງການຕັ້ງຄ່າດິຈິຕອລໃຫ້ສອດຄ່ອງກັບຂໍ້ກໍານົດ (ເຊັ່ນ: ຄວາມສາມາດໃນການເຂົ້າເຖິງ).
3. ການນໍາໃຊ້ເຕັກໂນໂລຊີດິຈິຕອລຢ່າງສ້າງສັນ: ກ່ຽວກັບການສ້າງສັນຂໍ້ມູນ ແລະ ການປະຕິບັດ ແລະ ຜະລິດຕະພັນທີ່ເປັນນະວັດຕະກໍາໂດຍໃຊ້ເຄື່ອງມື ແລະ ເຕັກໂນໂລຢີດິຈິຕອລ. ນອກ ຈາກການນໍາໃຊ້ຄອມພິວເຕີ້ເພື່ອວິເຄາະເພື່ອເຂົ້າໃຈ ແລະ ແກ້ໄຂບັນຫາໃນສະພາບແວດລ້ອມດິຈິຕອລ.
4. ການຊອກຫາຊ່ອງຫວ່າງຄວາມສາມາດດ້ານດິຈິຕອລ: ແມ່ນພົວພັນກັບການສ້າງຈິດສໍານຶກໃນ ຂອບເຂດຂອງການປັບປຸງຄວາມ ຕ້ອງການດ້ານຄວາມສາມາດດ້ານດິຈິຕອລ. ຄວາມສາມາດໃນການຊ່ວຍຄົນອື່ນ, ພັດທະນາຄວາມສາມາດດ້ານ ດິຈິຕອລ ແລະ ການສະແຫວງຫາໂອກາດໃນການເຕີບໂຕຂອງຕົນເອງ ແລະ ຕິດຕາມຄວາມກ້າວໜ້າ ໃນເຕັກໂນໂລຢີດິຈິຕອລ.

ຄືກັບລະບົບນິເວດອື່ນໆທັງໝົດໃນເສດຖະກິດ ແລະ ສັງຄົມຂອງພວກເຮົາ, ການທ່ອງທ່ຽວໄດ້ຮັບຜົນກະທົບ ແລະ ປ່ຽນແປງໂດຍການຫັນເປັນດິຈິຕອລ; ສື່ສັງຄົມອອນລາຍ, ການຊໍາລະເງິນອອນໄລນ໌ ແລະ ຮູບແບບອື່ນໆ, ເຊິ່ງທັງຫມົດມີອິດທິພົນອັນໃຫຍ່ຫຼວງຕໍ່ວິທີທີ່ ການເດີນທາງ ແລະ ດໍາລົງຊີວິດຂອງພວກເຮົາ. ຄວາມກ້າວໜ້າທາງດ້ານເຕັກໂນໂລຢີຖືກນໍາໃຊ້ໃນອຸດສາຫະກໍາການທ່ອງທ່ຽວ ແລະ ການບໍລິການ ເພື່ອແກ້ໄຂບັນຫາ (ເຊັ່ນ: ການຂາດແຄນແຮງງານ, ການສູນເສຍອາຫານ ຄ່າໃຊ້ຈ່າຍສູງ, ວິກິດການຕ່າງໆ), ການອໍານວຍຄວາມສະດວກຂະບວນການຕ່າງໆ (ເຊັ່ນ: ປະສິດທິພາບໃນການສື່ສານ, ການບໍລິການທີ່ເນັ້ນໃສ່ລູກຄ້າເປັນໃຈກາງ ແລະ ຮ່ວມມືກັນບໍລິການ) ແລະ ປັບປຸງປະສົບການຂອງລູກຄ້າ (ເຊັ່ນ: ປະສານງານ ແລະ ຕໍ່ລອງຜ່ານໂລກສະເໝືອນຈິງ, ກໍານົດເປົ້າໝາຍຜະລິດຕະພັນ, ການບໍລິການ, ການໂຄສະນາ) (UNESCO, 2024), ທັງຫມົດນີ້ທີ່ສົ່ງຜົນກະທົບຕໍ່ຜູ້ບໍລິໂພກ ແລະ ຜູ້ສະໜອງໃນຮູບແບບ ແລະ ທັດສະນະທີ່ແຕກຕ່າງກັນ.

ເຕັກໂນໂລຊີດິຈິຕອລໄດ້ຊ່ວຍໃຫ້ຂະແໜງການທ່ອງທ່ຽວນໍາເອົາການປະຕິບັດແບບຍືນຍົງ, ເຊັ່ນ: ການນໍາໃຊ້ການວິເຄາະຂໍ້ມູນເພື່ອເພີ່ມປະສິດທິພາບການນໍາໃຊ້ຊັບພະຍາກອນ. ຈັດຕັ້ງປະຕິບັດໂຄງການຕົວເມືອງອັສະລິຍະ ເພື່ອຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສົ່ງເສີມການຂົນສົ່ງທີ່ເປັນມິດກັບສິ່ງແວດລ້ອມ ເຊັ່ນ: ການເຊົ່າລົດໄຟຟ້າ ແລະ ແອັບແບ່ງປັນການຂັບຂີ່ (The Digital Travel Expert, 2024). ການທົບທວນວັນນະກໍາທີ່ກ່ຽວຂ້ອງໂດຍ Gutierriz et al (2023) ໄດ້ສະຫຼຸບວ່າເຕັກໂນໂລຢີດິຈິຕອລສົ່ງເສີມການພັດທະນາການທ່ອງທ່ຽວໂດຍການເປີດໂອກາດໃຫ້ທຸລະກິດຕ່າງໆ, ການພົວພັນກັບລູກຄ້າ, ການສ້າງປະສົບການສ່ວນຕົວ ແລະ ປັບປຸງປະສິດທິພາບການດໍາເນີນງານດ້ວຍເຄື່ອງມືຕ່າງໆເຊັ່ນ: ຄວາມສະເໝືອນຈິງ ແລະ ແພັດຟອມອອນລາຍທີ່ຂັບເຄື່ອນດ້ວຍ AI, ນັກທ່ອງທ່ຽວສາມາດມີສ່ວນຮ່ວມໃນປະສົບການທີ່ສົມຈິງ ແລະ ປັບແຕ່ງໄດ້ຫຼາຍຂຶ້ນ. ພ້ອມດຽວກັນບໍລິສັດຕ່າງໆປັບປຸງການບໍລິການເພື່ອເຮັດໃຫ້ລູກຄ້າພໍໃຈຫຼາຍຂຶ້ນ. ນອກຈາກນັ້ນ, ລະບົບນິເວດດິຈິຕອລຂະຫຍາຍການສື່ສານລະຫວ່າງທຸລະກິດການທ່ອງທ່ຽວ ແລະ ລູກຄ້າ. ເຮັດໃຫ້ຂໍ້ມູນສາມາດເຂົ້າເຖິງໄດ້ຫຼາຍຂຶ້ນ ແລະ ຮ່ວມກັນສ້າງປະສົບການທີ່ເພີ່ມການມີສ່ວນຮ່ວມຂອງລູກຄ້າ. ການຄົ້ນພົບທີ່ສໍາຄັນອີກອັນຫນຶ່ງແມ່ນບົດບາດຂອງຄວາມຮູ້ທາງດ້ານດິຈິຕອລໃນການສຶກສາການທ່ອງທ່ຽວ. ຊຶ່ງຜູ້ຊໍານານງານໃນອາຊີບ ຈະໄດ້ຮັບການຝຶກອົບຮົມທັງທາງດ້ານເຕັກນິກ ແລະ

ດ້ານຈັນຍາບັນຂອງການມີສ່ວນຮ່ວມດິຈິຕອລ, ຊຶ່ງບໍ່ພຽງແຕ່ກະກຽມໃຫ້ເຂົາເຈົ້າປັບຕົວເຂົ້າກັບເສດຖະກິດດິຈິຕອລເທົ່ານັ້ນ; ແຕ່ມັນຍັງສົ່ງເສີມການປະຕິບັດທີ່ມີຄວາມຮັບຜິດຊອບພາຍໃນອຸດສາຫະກໍາຕື່ມອີກ. ພ້ອມກັນນີ້, ຍັງສັງເກດເຫັນວ່າເຖິງແມ່ນວ່າການຫັນເປັນດິຈິຕອລມີຄວາມສໍາຄັນ ແຕ່ການທ່ອງທ່ຽວແບບດັ້ງເດີມຍັງມີທ່າອ່ຽວເພີ່ມຂຶ້ນ. ການທ່ອງທ່ຽວແບບ "ບໍ່ມີດິຈິຕອລ," ຊຶ່ງນັກທ່ອງທ່ຽວຊອກຫາປະສົບການທີ່ຊ່ວຍໃຫ້ພວກເຂົາຕັດການເຊື່ອມຕໍ່ຈາກເຕັກໂນໂລຢີເພື່ອສ້າງສາຍພົວພັນທີ່ເລິກເຊິ່ງກວ່າກັບທໍາມະຊາດ ຫຼື ວັດທະນະທໍາທ້ອງຖິ່ນ

ເມື່ອພິຈາລະນາທັກສະດິຈິຕອລໃນປະຈຸບັນ ແລະ ຊ່ອງຫວ່າງທີ່ກ່ຽວຂ້ອງໃນອຸດສາຫະກໍາການບໍລິການ ແລະ ການທ່ອງທ່ຽວຂອງເອີຣົບ, Carlisle et al (2023) ໄດ້ສະຫຼຸບວ່າທັກສະດິຈິຕອລທີ່ສໍາຄັນເຊັ່ນ: ການຕະຫຼາດອອນໄລນ໌ , ສື່ສັງຄົມອອນລາຍ ແລະ ການສາມາດນໍາໃຊ້ MS Office ແມ່ນສໍາຄັນ. ໃນຂະນະທີ່ທັກສະຂັ້ນສູງເຊັ່ນ: AI, ຫຸ່ນຍົນ, ແລະ ພາບສະເໝືອນຈິງ ເຫັນວ່າມີຄວາມສໍາຄັນໜ້ອຍ. ແຕ່ຍັງມີຊ່ອງຫວ່າງຫຼາຍທີ່ສຸດລະຫວ່າງຄວາມຕ້ອງການໃນປະຈຸບັນ ແລະ ອະນາຄົດ. ການຝຶກອົບຮົມທັກສະດິຈິຕອລເປັນສິ່ງຈໍາເປັນ. ແຕ່ພະນັກງານຫຼາຍຄົນຍັງບໍ່ໄດ້ຮັບການຝຶກອົບຮົມຢ່າງພຽງພໍ. ສ່ວນໃຫຍ່ແລ້ວພວກເຂົາຕ້ອງອີງໃສ່ການຮຽນຮູ້ຜ່ານການວຽກຕົວຈິງ. ການປິດຊ່ອງຫວ່າງດ້ານທັກສະດິຈິຕອລເປັນສິ່ງຈໍາເປັນສໍາລັບການຮັກສາຄວາມສາມາດໃນການແຂ່ງຂັນ ແລະ ປະສິດຕິຜົນໃນອຸດສາຫະກໍາການທ່ອງທ່ຽວ.

ບົດລາຍງານລະຫວ່າງປະເທດຂອງ INNO4Tourism ຍັງໄດ້ເນັ້ນໜັກຄວາມຕ້ອງການດ້ານທັກສະດ້ານດິຈິຕອລທີ່ເພີ່ມຂຶ້ນໃນຂະແໜງການທ່ອງທ່ຽວ ແລະ ການບໍລິການ ຂອງ ສປປ ລາວ ແລະ ປະເທດໄທ, ເຊິ່ງມີພາກສ່ວນກ່ຽວຂ້ອງເຖິງ 63% ແລະ 74% ຕາມລໍາດັບ, ຮັບຮູ້ເຖິງຄວາມສໍາຄັນຂອງທັກສະດັ່ງກ່າວ. ທັກສະດ້ານດິຈິຕອລທີ່ສໍາຄັນທີ່ສຸດທີ່ຖືກລະບຸແມ່ນຄວາມສາມາດໃນການຊອກຫາ, ຄົ້ນຫາ, ແລະ ການກັ່ນຕອງຂໍ້ມູນ. ຮອງລົງມາແມ່ນການແບ່ງປັນເນື້ອຫາດິຈິຕອລ, ການຈັດການຂໍ້ມູນ ແລະ ການຮ່ວມມືໂດຍຜ່ານເຕັກໂນໂລຊີດິຈິຕອລ. ເຖິງແມ່ນວ່າຜູ້ເຂົ້າຮ່ວມການສໍາຫຼວດຫຼາຍຄົນໄດ້ເຂົ້າຮ່ວມໂຄງການຝຶກອົບຮົມທັກສະດ້ານດິຈິຕອລ (44.4% ໃນ ສປປ ລາວ ແລະ 50.98% ໃນປະເທດໄທ), ຍັງມີອຸປະສັກທີ່ສໍາຄັນໃນການພັດທະນາທັກສະນີ້. ຜູ້ຕອບແບບສອບຖາມໃນ ສປປ ລາວ ໄດ້ຍົກໃຫ້ເຫັນບັນຫາຕ່າງໆທີ່ສໍາຄັນເຊັ່ນ: ຄວາມຮູ້ທີ່ຈໍາກັດ, ຂໍ້ຈໍາກັດດ້ານງົບປະມານ ແລະ ຄວາມລັງເລທີ່ຈະລົງທຶນໃນເຕັກໂນໂລຊີດິຈິຕອລ, ເຊິ່ງສິ່ງທ້າທາຍເຫຼົ່ານີ້ຂັດຂວາງການນໍາເອົາດິຈິຕອລມາໃຊ້. ໃນປະເທດໄທ, ໂດຍສະເພາະໃນແຂວງຊຽງໃຫມ່ ແລະ ພູເກັດ, ໄດ້ເນັ້ນຫນັກໃສ່ຄວາມສາມາດດ້ານການຕະຫຼາດດິຈິຕອລຢ່າງຫຼວງຫຼາຍ. ການວິເຄາະຂໍ້ມູນ ແລະ ຍຸດທະສາດການຂາຍຕົງ , ເຊິ່ງການເປັນສິ່ງຈໍາເປັນ ສໍາລັບການຕັດສິນໃຈ ແລະ ການໂຄສະນາການຕະຫຼາດທີ່ມີປະສິດທິພາບ. ອຸປະສັກທົ່ວໄປໃນສອງປະເທດປະກອບມີ: ບັນຫາການເຂົ້າເຖິງ, ການຕໍ່ຕ້ານຂອງພະນັກງານໃນການຮຽນຮູ້ທັກສະໃຫມ່ ແລະ ການຝຶກອົບຮົມຄວາມສາມາດດ້ານດິຈິຕອລຂັ້ນສູງທີ່ນອກເໜືອການໃຊ້ສື່ສັງຄົມອອນລາຍຂັ້ນພື້ນຖານ ຍັງບໍ່ພຽງພໍ.

# ບົດທີ 2.5.:ການເປັນຜູ້ປະກອບການ, ການບໍຫານຈັດການ ແລະ ທັກສະທາງສັງຄົມ

ການເປັນຜູ້ປະກອບການ, ການບໍລິຫານຈັດການ ແລະ ທັກສະທາງສັງຄົມຖືວ່າ ເປັນສິ່ງສຳຄັນ ແລະເປັນຄວາມຕ້ອງການໃນຕະຫຼາດແຮງງານໃນປັດຈຸບັນ. ຄວາມສາມາດໃນການໃຊ້ໂອກາດແລະແນວຄວາມຄິດ ເພື່ອເພີ່ມມູນຄ່າໃຫ້ກັບຜູ້ອື່ນເອີ້ນວ່າ "ການເປັນຜູ້ປະກອບການ" (McCallum et al., 2018). ໃນທາງກົງກັນຂ້າມ, ທັກສະທາງດ້ານສັງຄົມ ແມ່ນຄວາມສາມາດທາງດ້ານພຶດຕິກຳ ແລະການພົວພັນລະຫວ່າງບຸກຄົນ ທີ່ອຳນວຍຄວາມສະດວກ ໃຫ້ແກ່ການຮ່ວມມືທີ່ມີປະສິດທິຜົນ. ພ້ອມດຽວກັນ ທັກສະ ການບໍລິຫານຈັດການ ຫມາຍເຖິງຄວາມສາມາດໃນການນຳພາທີມງານຫຼືເບິ່ງແຍງໂຄງການຢ່າງມີປະສິດທິພາບ (Indeed, 2023; 2024), ພາກສ່ວນຕໍ່ໄປນີ້ຈະພິຈາລະນາຢ່າງເລິກເຊິ່ງກ່ຽວກັບ 3 ຄວາມສາມາດ ທີ່ສຳຄັນຂອງການຮຽນຮູ້ຕະຫຼອດຊີວິດ.

## 2.5.1. ທັກສະການເປັນຜູ້ປະກອບການ

ໃນພາກນີ້, ຈະເນັ້ນໃສ່ທັກສະການ ເປັນຜູ້ປະກອບການທີ່ສຳຄັນທີ່ສຸດ, ເຊິ່ງໄດ້ສະຫຼຸບໄວ້ໃນ EntreComp ຂອງສະຫະພາບເອີລົບ (McCallum et al., 2018):

1. ການຊອກຫາໂອກາດ: ວິເຄາະສະພາບການທາງດ້ານສັງຄົມ, ວັດທະນະທຳ ແລະ ເສດຖະກິດ ເພື່ອຊອກຫາໂອກາດໃນການເພີ່ມມູນຄ່າ; ກຳນົດຄວາມຕ້ອງການ ແລະ ອຸປະສັກທີ່ຕ້ອງແກ້ໄຂ; ການສ້າງເຄືອຄ່າຍໃຫມ່ໆ ແລະ ນຳເອົາຫຼາກຫຼາຍມຸມມອງມາປະກອບກັນເພື່ອສ້າງໂອກາດໃຫ້ມີຜົນກຳໄລ.
2. ຄວາມຄິດສ້າງສັນ: ພັດທະນາແນວຄວາມຄິດ ແລະ ໂອກາດທີ່ຈະເພີ່ມມູນຄ່າ, ເຊັ່ນ: ຄຳຕອບທີ່ດີກວ່າຕໍ່ກັບການແກ້ບັນຫາໃນປະຈຸບັນ ແລະ ອະນາຄົດ; ສຶກສາ ແລະ ທົດສອບຍຸດທະສາດໃຫມ່; ລວບລວມເອົາຊັບພະຍາກອນ ແລະ ຄວາມຊຳນານເພື່ອສ້າງຜົນໄດ້ຮັບທີ່ຄຸ້ມຄ່າ
3. ວິໄສທັດ: ເບິ່ງສະຖານະການໄປໃນອະນາຄົດເພື່ອຊ່ວຍກຳນົດທິດທາງ ແລະ ການປະຕິບັດໃຫ້ສຳເລັດ ແລະ ສ້າງວິໄສທັດເພື່ອຫັນຄວາມຄິດ ໄປສູ່ການຈັດຕັ້ງປະຕິບັດ.
4. ການໃຫ້ຄຸນຄ່າກັບແນວຄິດປະດິດສ້າງ: ກຳນົດຄຸນຄ່າທາງທາງດ້ານສັງຄົມ, ວັດທະນະທຳ ແລະ ເສດຖະກິດ ຂອງແນວຄວາມຄິດ; ຍອມຮັບໃນສັກກາຍະພາບທີ່ຈະເຮັດໃຫ້ເກີດມູນຄ່າ; ແລະ ກຳນົດຍຸດທະສາດທີ່ເຫມາະສົມເພື່ອຂະຫຍາຍ ທ່າແຮງນີ້ໃຫ້ໄດ້ສູງສຸດ
5. ການຄິດແບບມີຈັນຍາບັນ ແລະ ຄວາມຍືນຍົງ: ການປະຕິບັດຢ່າງມີຄວາມຮັບຜິດຊອບ ໂດຍການປະເມີນຜົນກະທົບຂອງແນວຄວາມຄິດທີ່ເພີ່ມມູນຄ່າ ແລະ ກິດຈະກຳຂອງການເປັນຜູ້ປະກອບການຕໍ່ກັບຊຸມຊົນທີ່ເປັນເປົ້າໝາຍ, ຕະຫຼາດ, ສັງຄົມ, ແລະ ສິ່ງແວດລ້ອມ; ພິຈາລະນາຄວາມຍືນຍົງໃນໄລຍະຍາວຂອງສັງຄົມ, ວັດທະນະທຳ ແລະ  ເສດຖະກິດ ແລະ ເລືອກແນວທາງໃນປະຕິບັດຕົວຈິງ.
6. ຄວາມຮັບຮູ້ ແລະ ປະສິດທິພາບຂອງຕົນເອງ: ສະທ້ອນໃຫ້ເຫັນເຖິງຄວາມຕ້ອງການໄລຍະສັ້ນ, ກາງ ແລະ ໄລຍະຍາວ, ເປົ້າໝາຍ ແລະ ຄວາມມຸ່ງຫວັງ; ປະເມີນຈຸດແຂງ ແລະ ຂໍ້ຈຳກັດຕ່າງໆຂອງຕົນເອງ;  ແລະ ມີຄວາມຫມັ້ນໃຈໃນຄວາມອາດສາມາດຂອງຕົນເອງທີ່ຈະມີອິດທິພົນເຮັດໃຫ້ປ່ຽນແປງ, ເຖິງແມ່ນວ່າຈະມີຄວາມບໍ່ແນ່ນອນ, ມີອຸປະສັກ, ແລະ ຄວາມລົ້ມເຫຼວຊົ່ວຄາວ

7. ແຮງຈູງໃຈ ແລະ ຄວາມພະຍາຍາມ: ມີຄວາມຕັ້ງໃຈເອົາແນວຄວາມຄິດໄປສູ່ການຈັດຕັ້ງປະຕິບັດ ແລະ ຕອບສະໜອງຕາມຄວາມຄວາມຕ້ອງການ; ຝຶກຝົນຄວາມອົດທົນ ແລະ ບໍ່ຍອມແພ້ຕໍ່ເປົ້າໝາຍໄລຍະຍາວ, ທັງສ່ວນຕົວ ແລະ ສ່ວນລວມ; ອົດທົນຕໍ່ກັບຄວາມຫຍຸ້ງຍາກ, ຄວາມກົດດັນ, ແລະ ຄວາມລົ້ມເຫຼວ.
8. ການລະດົມທຶນ: ຈັດຫາ ແລະ ບໍລິຫານຈັດດ້ານເຕັກນິກ, ກົດໝາຍ, ການເງິນ ແລະ ທັກສະດິຈິຕອລ ແລະ ຊັບພະຍາກອນທີ່ຈຳເປັນເພື່ອນຳເອົາແນວຄວາມຄິດໄປຈັດຕັ້ງປະຕິບັດ; ເຮັດໃຫ້ຊັບພະຍາ ກອນມີຢູ່ຫຼາຍທີ່ສຸດ.
9. ຄວາມຮູ້ດ້ານການເງິນ ແລະ ເສດຖະກິດ: ຄິດໄລ່ຄ່າຕົ້ນທຶນໃນການປ່ຽນຄວາມຄິດ ເປັນກິດຈະກຳທີ່ສ້າງມູນຄ່າເພີ່ມ; ວາງແຜນ, ຈັດຕັ້ງປະຕິບັດ ແລະ ປະເມີນທາງເລືອກຕ່າງໆດ້ານການເງິນ ຕະຫຼອດເວລາ ແລະ ຄຸ້ມຄອງການເງິນ ເພື່ອຮັບປະກັນການສ້າງມູນຄ່າໃຫ້ມີຄວາມຍືນຍົງ.
10. ລະດົມຄົນອື່ນ: ສ້າງແຮງຈູງໃຈ ແລະ ສ້າງແຮງບັນດານໃຈໃຫ້ຄົນອື່ນ; ຮັບເອົາການຊ່ວຍເຫຼືອທີ່ຈຳເປັນເພື່ອບັນລຸເປົ້າຫມາຍທີ່ຕັ້ງໄວ້; ສະແດງໃຫ້ເຫັນ ເຖິງການເປັນຜູ້ນຳທີ່ເຂັ້ມແຂງ, ທັກສະການໂນ້ມນ້າວ, ການສື່ສານ ແລະ ການເຈລະຈາ.
11. ແນວຄິດການລິເລີ່ມ: ລິເລີ່ມກິດຈະກຳທີ່ສ້າງມູນຄ່າ; ພ້ອມຮັບມືກັບສິ່ງທ້າທາຍຕ່າງໆ; ປະຕິບັດວຽກງານຕ່າງຢ່າງເອກະລາດເພື່ອບັນລຸຈຸດປະສົງ, ປະຕິບັດຕາມຄຳຫມັ້ນສັນຍາ ແລະ ເຮັດວຽກງານໃຫ້ສຳເລັດຕາມກຳນົດເວລາ.
12. ການວາງແຜນ ແລະ ການບໍລິຫານຈັດການ: ກຳນົດເປົ້າໝາຍໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ, ຈັດບຸລິມະສິດຕ່າງໆ, ແລະ ແຜນປະຕິບັດງານ; ປັບຕົວເຂົ້າກັບການປ່ຽນແປງທີ່ບໍ່ຄາດຄິດ
13. ຮັບມືກັບຄວາມບໍ່ແນ່ນອນ, ຄວາມຄຸມເຄືອ ແລະ ຄວາມສ່ຽງຕ່າງໆ: ຕັດສິນໃຈເຖິງວ່າຈະມີຜົນທີ່ບໍ່ຄາດຄິດ ແລະ ຜົນຮັບທີ່ບໍ່ທັນຮັບຮູ້ແນ່ນອນ ແລະ ມີຂໍ້ມູນບໍ່ຄົບຖ້ວນ ຫຼື ບໍ່ຈະແຈ້ງ. ການປະຕິບັດວິທີການທີ່ເປັນລະບົບໃນການທົດສອບແນວຄວາມຄິດ ແລະ ຕົ້ນແບບເບື້ອງຕົ້ນໃນຂະບວນການສ້າງມູນຄ່າເພີ່ມເພື່ອຫຼຸດຜ່ອນໂອກາດຂອງຄວາມລົ້ມເຫຼວ; ຕອບສະຫນອງຢ່າງໄວວາ ແລະ ມີຄວາມຍືດຫຍຸ່ນຕໍ່ສະຖານະການທີ່ມີການປ່ຽນແປງ ຢ່າງໄວວາ.
14. ການເຮັດວຽກກັບຜູ້ອື່ນ: ຮ່ວມມືກັບຜູ້ອື່ນເພື່ອສ້າງແນວຄວາມຄິດ ແລະ ນຳມັນໄປ ຈັດຕັ້ງປະຕິບັດ; ສ້າງເຄືອຂ່າຍ; ການແກ້ໄຂຂໍ້ຂັດແຍ່ງ ແລະ ການປະເຊີນຫນ້າກັບຄູ່ແຂ່ງໃນລັກສະນະສ້າງສັນ.
15. ການຮຽນຮູ້ຜ່ານປະສົບການ: ສວຍໃຊ້ທຸກໂອກາດທີ່ມີເພື່ອສ້າງມູນຄ່າເປັນ ຊ່ວງເວລາການສອນ; ການຮຽນຮູ້ຈາກຜູ້ອື່ນໆເຊັ່ນ: ທີ່ປຶກສາ ແລະ ເພື່ອນຮ່ວມງານ; ການສະທ້ອນຄືນດ້ານຄວາມສຳເລັດ ແລະ ຄວາມລົ້ມເຫລວໃນລະດັບບຸກຄົນ ແລະ ກຸ່ມ, ເພື່ອຖອດຖອນບົດຮຽນອັນລ້ຳຄ່າເພື່ອເຮັດໃຫ້ສຳເລັດໃນອະນາຄົດ.

### 2.5.2. ທັກສະທາງສັງຄົມ

ທັກສະທາງສັງຄົມລວມມີທັດສະນະຄະຕິ ແລະ ການປະຕິບັດຕໍ່ການບໍລິການລູກຄ້າ, ຄວາມສະເໝີພາບຍິງ-ຊາຍ ຄວາມເຂົ້າໃຈວັດທະນະທຳຕ່າງໆ ແລະ ການສື່ສານລະຫວ່າງບຸກຄົນ (NGTA, 2019). ນອກຈາກນີ້, ທັກສະທາງສັງຄົມຍັງກວມເອົາການຈັດການຄວາມສຳພັນ ລະຫວ່າງບຸກຄົນ, ການເຮັດວຽກກັບຄົນອື່ນ, ການເບິ່ງໂລກໃນແງ່ດີ, ສະແດງຄວາມເຄົາລົບ, ການສ້າງສາຍພົວພັນທີ່ເຫມາະສົມ ແລະ ການຟັງຢ່າງຈິງຈັງ. ເພື່ອສົ່ງເສີມຍຸດທະສາດການທ່ອງທ່ຽວແບບຮອບດ້ານ ທັກສະເຫຼົ່ານີ້ສະແດງໃຫ້ເຫັນເຖິງຄວາມຈຳເປັນໃນເຮັດໃຫ້ທຸກຊັ້ນຄົນສັງຄົມມີສ່ວນຮ່ວມຫຼາຍຂຶ້ນໃນ

ອຸດສາຫະກຳການທ່ອງທ່ຽວ ແລະ ຄວາມເຈົ້າໃຈຕໍ່. ຄວາມຕ້ອງການຂອງຄົນກຸ່ມນ້ອຍເຊັ່ນ: ຊຸມຊົນທີ່ຢູ່ອາໄສ, ຊົນເຜົ່າກຸ່ມນ້ອຍ, ແລະ ຄົນພິການ (Scheyvens & Biddulph, 2018).

ຕົວຢ່າງຂອງທັກສະທາງສັງຄົມທີ່ສຳຄັນປະກອບມີ (Indeed, 2024):

1. ການສື່ສານ: ເພື່ອໃຫ້ສາມາດສື່ສານຢ່າງມີປະສິດທິພາບ, ບຸກຄົນໜຶ່ງຕ້ອງມີຄວາມສາມາດຮັບຟັງຄວາມຄິດເຫັນ ແລະ ຄວາມກັງວົນຂອງຄົນອື່ນເປັນຢ່າງດີ, ໃຫ້ ແລະ ຮັບຄຳຕິຊົມທີ່ສ້າງສັນ ແລະ ຂໍ້ສະເໜີແນະ, ເພື່ອທີ່ຈະສາມາດແກ້ໄຂຂໍ້ຂັດແຍ່ງໄດ້, ມີທັກສະການເວົ້າ ແລະ ຂຽນໃນສາທາລະນະດີ ແລະ ເວົ້າດ້ວຍຄວາມເຄົາລົບຕໍ່ຜູ້ອື່ນ, ຕ້ອງສະແດງຄວາມເຫັນອົກເຫັນໃຈ ແລະ ຄວາມ ເຂົ້າໃຈຕໍ່ຜູ້ອື່ນ.
2. ການແກ້ໄຂບັນຫາ: ການແກ້ໄຂບັນຫາທີ່ໄວ ແລະ ມີປະສິດທິພາບອາດຈະຕ້ອງການຄວາມຊຳນານໃນອຸດສາຫະກຳເພື່ອແກ້ໄຂບັນຫາທີ່ເກີດຂຶ້ນ ຫຼື ອຸທິດເວລາ ໃນການສຶກສາ ແລະ ປຶກສາຫາລືກັບທີມງານເພື່ອກຳນົດວິທີການແກ້ໄຂໃນໄລຍະຍາວ ແລະ ຂະຫຍາຍໃຫຍ່ຂຶ້ນ. ນອກຈາກນັ້ນ, ຍັງຕ້ອງມີທັກສະຄົ້ນຄິດແບບວິເຄາະ, ການວິເຄາະ, ແລະ ທັກສະການຕັດສິນໃຈ.
3. ຄວາມຄິດສ້າງສັນ: ພະນັກງານທີ່ມີຄວາມຄິດສ້າງສັນ ສາມາດຄິດວິທີການໃຫມ່ ເພື່ອເຮັດວຽກງານໃຫ້ສຳເລັດ, ປັບປຸງຂັ້ນຕອນການເຮັດວຽກທີ່ມີຢູ່ແລ້ວ ຫຼື ສ້າງໂອກາດໃໝ່ໆທີ່ດີຕໍ່ທຸລະກິດ ແລະ ຫນ້າສົນໃຈ ແລະ ມີລັກສະນະເປັນຄົນທີ່ຢາກຮູ້ຢາກເຫັນໃນເລື່ອງຕ່າງໆ, ການເປີດກວ້າງ, ມີຄວາມກະຕືລືລົ້ນ ທີ່ຈະທົດລອງ ແລະ ຮຽນຮູ້ຈາກຜູ້ອື່ນ
4. ຄວາມສາມາດໃນການປັບຕົວ: ຫຼາຍອາຊີບ ແລະ ຂະແໜງການຕ່າງໆ ໃຫ້ຄວາມສຳຄັນກັບພະນັກງານທີ່ສາມາດປັບຕົວເຂົ້າກັບສະພາບແວດລ້ອມ ແລະ ວິທີການເຮັດວຽກທີ່ປ່ຽນແປງ ແລະ ບຸກຄົນຜູ້ທີ່ຄວາມອົດທົນ, ຄວາມຍືດຫຍຸ່ນ, ແລະ ເບິ່ງໂລກໃນແງ່ດີ.
5. ຈັນຍາບັນໃນການເຮັດວຽກ: ຄວາມສາມາດໃນການປະຕິບັດໜ້າທີ່ ແລະ ມີຄວາມຮັບຜິດ ຊອບທີ່ທັນເຫດການ ແລະ ມີຄຸນນະພາບສູງ, ເອົາໃຈໃສ່ກັບລາຍລະອຽດ ແລະ ມີຄວາມຊື່ສັດ ແລະ ຄວາມໄວ້ວາງໃຈ

### 2.5.3. ທັກສະການບໍລິຫານຈັດການ

ມີພອນສະຫວັນ ແລະ ຄວາມສາມາດຈຳນວນຫຼາຍທີ່ຈຳເປັນສຳລັບພະນັກງານໃນການຕັ້ງເປົ້າໝາຍ ແລະ ຈັດສັນຄວາມພະຍາຍາມຂອງຕົນເພື່ອໃຫ້ໄດ້ທັກສະ ແລະ ຄວາມສາມາດເຫຼົ່ານັ້ນ. ທັກສະທານບໍລິຫານຈັດການທີ່ຈຳເປັນປະກອບມີ (Indeed, 2023):

1. ຄວາມເປັນຜູ້ນຳ: ການເປັນຜູ້ນຳປະກອບມີການກະຕຸ້ນໃຫ້ພະນັກງານສຸມກຳລັງຂອງເຂົາເຈົ້າເພື່ອບັນລຸເປົ້າຫມາຍ ແລະ ຈຸດປະສົງທີ່ຕັ້ງໄວ້. ບັນດາທັກສະດານບໍລິຫານທີ່ຈຳເປັນລວມມີການໂນ້ມນ້າວຈິດໃຈ, ການວາງແຜນ, ການສື່ສານ, ແລະ ທັກສະການເຂົ້າກັບຜູ້ອື່ນ. ການປະສານງານກິດຕ່າງໆ, ການສ້າງທີມ ການຝຶກອົບຮົມພະນັກງານ, ການປະເມີນຜົນຂອງພະນັກງານ ແລະ ຄວາມສາມາດໃນການບັນລຸຈຸດປະສົງຂອງ ອົງການຈັດຕັ້ງ ແມ່ນມີຄວາມຈຳເປັນສຳລັບການບໍລິຫານທີມງານ ແລະ ວຽກຂອງພະນັກງານອື່ນໆ.
2. ການວາງແຜນ: ກ່ຽວຂ້ອງກັບການຕັ້ງເປົ້າໝາຍ ແລະ ກຳນົດແນວທາງການປະຕິບັດທີ່ຈຳເປັນ ເພື່ອບັນລຸເປົ້າຫມາຍເຫຼົ່ານັ້ນ. ພ້ອມທັງຈັດວາງງົບປະມານ ແລະ ສ້າງເປົ້າໝາຍການດຳເນີນງານໄລຍະສັ້ນ ແລະ ແຜນຍຸດທະສາດໃນໄລຍະຍາວ. ການວາງແຜນໃຊ້ການວິເຄາະ ແລະ ການຄິດແບບຄາດຄະເນລ່ວງຫນ້າເພື່ອກຳນົດ ແລະ ບັນລຸເປົ້າຫມາຍ ແລະ ຈຸດປະສົງ. ພັດທະນາແຜນຍຸດທະສາດ ແລະ ຍຸດທະວິທີ, ລວມທັງການວາງແຜນວຽກງານ, ກຳນົດ

ເວລາ, ໄລຍະເວລາການເຮັດວຽກ, ແລະ ຄຳແນະນຳເພື່ອບັນລຸເປົ້າໝາຍ ແລະ ຈຸດປະສົງພາຍໃນຂໍ້ຈຳກັດຂອງຊັບພະຍາກອນ ຂອງອົງການຈັດຕັ້ງ. ທັງໝົດເຫຼົ່ານີ້ແມ່ນໜ້າທີ່ການວາງແຜນຂອງຜູ້ຈັດການ.

3. ຍຸດທະສາດ: ຜູ້ຈັດການໃຊ້ການວາງແຜນຍຸດທະສາດເພື່ອບັນລຸຈຸດປະສົງຂອງພວກເຂົາໂດຍການ ສ້າງຍຸດທະສາດທີ່ວາງແຜນໄວ້ຢ່າງດີ ແລະ ປະຕິບັດຕາມແຜນນັ້ນເພື່ອແກ້ບັນຫາ. ການຄິດແບບຍຸດທະສາດ ຊ່ວຍໃຫ້ບັນລຸວິໄສທັດໄລຍະຍາວຂອງອົງກອນ. ນອກຈາກນັ້ນ, ຜູ້ຈັດການທີ່ມີຍຸດທະສາດສາມາດກຳນົດ ຄວາມບໍ່ມີປະສິດທິພາບ ແລະ ຊອກຫາວິທີແກ້ໄຂທີ່ເໝາະສົມໄດ້.
4. ການຈັດການຄວາມເປັນລະບຽບ: ການຈັດລຳດັບຄວາມສຳຄັນ, ຮັກສາສະພາບແວດລ້ອມທີ່ເປັນລະບຽບຮຽບຮ້ອຍ, ການສ້າງລາຍການທີ່ຕ້ອງເຮັດ, ການເຂົ້າຮ່ວມກອງປະຊຸມຕ່າງໆ, ກຳນົດເວລາ, ຕາຕະລາງກາເຮັດວຽກ, ແລະ ໂຄງການ, ການບໍລິຫານເວລາ ແລະ ການເຮັດວຽກຫຼາຍຢ່າງພ້ອມກັນ, ເຊິ່ງທັງໝົດເຫຼົ່ານີ້ແມ່ນຕົວຢ່າງຂອງຄວາມສາມາດໃນການຈັດການ. ການມີຄວາມສາມາດໃນການຈັດການທີ່ເຂັ້ມແຂງເຮັດໃຫ້ງ່າຍຕໍ່ການບໍຫານສະຖານະການທີ່ອາດຈະເກີດຂຶ້ນໂດຍບໍ່ຄາດຄິດ, ເຮັດວຽກໃຫ້ທັນຕາມກຳນົດເວລາ, ບັນທຶກເອກະສານ ແລະ ລາຍງານຕ່າງໆ, ຕິດຕາມການເຮັດວຽກ, ແລະ ມີຄວາມຮູ້ສຶກຄວາມກົດດັນໜ້ອຍ. ການມີທັກສະການຈັດການສົ່ງເສີມຄວາມສົມດູນຂອງການເຮັດວຽກ ແລະ ໃຊ້ຊີວິດ (work-life banlance) ແລະ ຊ່ວຍປ້ອງກັນຄວາມເຂົ້າໃຈຜິດ ແລະ ການເລື່ອນເວລາການເຮັດວຽກ.
5. ການສື່ສານ: ຜູ້ຈັດການຈະຕ້ອງສາມາດພົວພັນສື່ສານກັບຜູ້ບັງຄັບບັນຊາ, ເພື່ອນຮ່ວມງານ ແລະ ພະນັກງານ. ຄວາມສາມາດ ໃນການສື່ສານທີ່ດີຈະຮັບປະກັນວ່າ ຂໍ້ມູນທີ່ຖືກຕ້ອງໄດ້ຖືກແບ່ງປັນ ແລະ ທຸກຄົນຮູ້ເຖິງຄວາມຮັບຜິດຊອບ ຂອງຕົນເອງ.

ໃນອຸດສາຫະກຳການທ່ອງທ່ຽວ, ການສື່ສານທີ່ດີ ແລະ ທັກສະການພົວພັນລະຫວ່າງບຸກຄົນ ແມ່ນຈຳເປັນເພື່ອສະໜອງການບໍລິການທີ່ດີເລີດໃຫ້ຖືກຕາມຄວາມຕ້ອງການຂອງລູກຄ້າ ໂດຍອີງໃສ່ຄວາມມັກທາງດ້ານວັດທະນະທຳ, ຂໍ້ຈຳກັດດ້ານອາຫານ ແລະ ຄວາມຕ້ອງການອາຫານ ລວມທັງການບໍລິການທີ່ສາມາດເຂົ້າເຖິງໄດ້ກັບທຸກໄວ ແລະ ຄວາມຕ້ອງການ. (Kiryakova-Dineva et al., 2019). ທັກສະການບໍລິຫານແມ່ນຈຳເປັນໃນອຸດສາຫະກຳການທ່ອງທ່ຽວ ແລະ ການບໍລິການ ເພາະວ່າທັກສະເຫຼົ່ານີ້ເຮັດໃຫ້ການພົວພັນລະຫວ່າງບຸກຄົນທີ່ເຂັ້ມແຂງ, ເຊິ່ງເປັນສິ່ງສຳຄັນໃນການຮັກສາຄຸນະພາບການບໍລິການ. ທັກສະເຫຼົ່ານີ້ແມ່ນມີຄວາມສຳຄັນໃນທຸກຂັ້ນຕອນຂອງຂະບວນການທ່ອງທ່ຽວ - ການໂຄສະນາສົ່ງເສີມ, ການຂາຍ, ແລະ ການບໍລິການ - ແລະ ຊ່ວຍໃຫ້ບໍລິສັດບັນລຸເປົ້າໝາຍທີ່ຍືນຍົງໃນການບໍລິການລູກຄ້າ ແລະ ການບໍລິການ (Kiryakova-Dineva et al., 2019). ໃນທາງກົງກັນຂ້າມ, ການເປັນຜູ້ປະກອບການທີ່ມີຄວາມຮັບຜິດຊອບ ສາມາດສະໜັບສະໜູນການພັດທະນາແບບຍືນຍົງໂດຍການປົກປັກຮັກສາ ປະຊາກອນ (ຊຸມຊົນ) ທ້ອງຖິ່ນ, ເປີດກວ້າງການທ່ອງທ່ຽວຊົນນະບົດ ແລະ ຜັນຂະຫຍາຍກິດຈະກຳການທ່ອງທ່ຽວ, ເສີມຂະຫຍາຍວັດທະນະທຳ ແລະ ເອກະລັກຂອງທ້ອງຖິ່ນ, ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມທີ່ເກີດຈາກທຸລະກິດການທ່ອງທ່ຽວຊົນນະບົດຂະໜາດນ້ອຍ (Lordkipanidze et al., 2005)

ບົດລາຍງານລະຫວ່າງປະເທດຂອງ INNO4Tourism ຍັງໄດ້ເວົ້າເຖິງສາຂາໃໝ່ຂອງການເປັນຜູ້ປະກອບການທຸລະກິດໃນ ສປປ ລາວ ແລະ ຂະແໜງການທ່ອງທ່ຽວ ແລະ ການບໍລິການຂອງປະເທດໄທ. ໃນ ສປປ ລາວ, ຄວາມຮູ້ກ່ຽວກັບການເປັນຜູ້ປະກອບການແມ່ນກຳລັງຖືກເຊື່ອມສານເຂົ້າໃນລະບົບການສຶກສາຂອງໂຮງຮຽນເອກະຊົນ ແລະ ວິທະຍາໄລຂອງລັດ, ເຊິ່ງຜູ້ຕອບແບບສອບຖາມໄດ້ເນັ້ນໜັກຄວາມສຳຄັນຂອງທັກສະທາງດ້ານສັງຄົມສຳລັບກຳລັງແຮງງານ. ໃນປະເທດໄທ, ການປັບປຸງທັກສະດ້ານທຸລະກິດ ແລະ ການບໍລິຫານຈັດການແມ່ນມີຄວາມຈຳເປັນຕໍ່ການເຮັດໃຫ້ອຸດສາຫະກຳການທ່ອງທ່ຽວມີຄວາມທັນສະໄໝໂດຍສະເພາະໃນຫຼາຍພື້ນທີ່ໃນປະເທດເຊັ່ນ: ຊຽງໃໝ່ ແລະ ພູເກັດ. ການສົ່ງເສີມເພື່ອ

ປູກຝັງຈິດສຳນຶກເປັນຜູ້ປະກອບການ ແລະ ການປະຕິບັດການບໍລິຫານຈັດການທີ່ມີປະສິດຕິພາບແມ່ນມີຄວາມຈຳເປັນສຳລັບການສ້າງນະວັດຕະກຳ ແລະ ການແຂ່ງຂັນ.

ຜົນການສຳຫຼວດຍັງລະບຸວ່າຜູ້ທີ່ມີສ່ວນກ່ຽວຂ້ອງໃນ ສປປ ລາວ ໃຫ້ຄວາມສຳຄັນກັບທັກສະເຊັ່ນ: ຄວາມຄິດສ້າງສັນ, ການຊອກຮູ້ໂອກາດ ແລະ ການວາງແຜນ, ຂະນະທີ່ຢູ່ ປະເທດໄທ ໄດ້ເນັ້ນໜັກເລື່ອງການບໍລິການລູກຄ້າ ແລະ ທັກສະການວິເຄາະ, ເຊິ່ງການວາງແຜນ ແລະ ການບໍລິຫານຈັດການ ແມ່ນມີຄວາມສຳຄັນໃນທັງສອງປະເທດ. ເຖິງຢ່າງໃດກໍຕາມ, ຜູ້ຕອບແບບສອບຖາມຫຼາຍຄົນເຫັນວ່າກຳລັງແຮງງານໃນປັດຈຸບັນມີທັກສະເຫຼົ່ານີ້ໃນຂອບເຂດຈຳກັດ ເຖິງແມ່ນວ່າຈະໄດ້ມີໂອກາດໄດ້ເຂົ້າຝຶກອົບຮົມຢ່າງພຽງພໍແລ້ວກໍຕາມ. ຜູ້ຕອບແບບສອບຖາມສ່ວນຫຼາຍໃນທັງສອງປະເທດເຫັນດີວ່າທັກສະການເປັນຜູ້ປະກອບການ ແລະ ການບໍລິຫານ ຄວນຖືກສອນໃນລະດັບມະຫາວິທະຍາໄລເພື່ອກຽມພ້ອມນັກສຶກສາຢ່າງມີປະສິດຕິພາບໃນການປະກອບອາຊີບ. ເຖິງຢ່າງໃດກໍຕາມ, ເຂົາເຈົ້າຍັງລະບຸອຸປະສັກຫຼາຍປະການທີ່ຂັດຂວາງການພັດທະນາທັກສະເຊັ່ນ: ມີຄ່າໃຊ້ຈ່າຍສູງ, ບໍ່ໄດ້ຮັບການຝຶກອົບຮົມຢ່າງພຽງພໍ, ຂາດຄວາມຕື່ນຕົວກ່ຽວກັບຄວາມສຳຄັນຂອງທັກສະເຫຼົ່ານີ້ ແລະ ຂາດແຮງຈູງໃຈຈາກຜູ້ບໍລິຫານລະດັບສູງ.

## ສະຫຼຸບ

ສະຫຼຸບແລ້ວ, ການທ່ອງທ່ຽວແບບຍືນຍົງແມ່ນວິທີການທີ່ຈຳເປັນທີ່ຈະສ້າງຄວາມສົມດູນຂອງການເຕີບໂຕທາງດ້ານເສດຖະກິດກັບຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ໂດຍຮັບຮູ້ການປະກອບສ່ວນສຳຄັນຂອງຂະແໜງການການທ່ອງທ່ຽວຕໍ່ເສດຖະກິດໂລກ, ພາກສ່ວນກ່ຽວຂ້ອງສາມາດດຳເນີນຕາມຂັ້ນຕອນຕ່າງໆເພື່ອຫຼຸດຜ່ອນຜົນກະທົບດ້ານລົບຂອງກິດຈະກຳການທ່ອງທ່ຽວທີ່ມີຫຼາກຫຼາຍເຊັ່ນ: ການທຳລາຍສິ່ງແວດລ້ອມ ແລະ ການອົບພະຍົບອອກຈາກຊຸມຊົນ. ການເນັ້ນໃສ່ການທ່ອງທ່ຽວແບບຊຸມຊົນມີສ່ວນຮ່ວມ ແລະ ການປະຕິບັດແບບຍືນຍົງແມ່ນໃຫ້ໂອກາດສຳລັບການສ້າງຄວາມເຂັ້ມແຂງໃນທ້ອງຖິ່ນ ແລະ ການປົກປັກຮັກສາວັດທະນະທຳ. ນອກຈາກນັ້ນ, ການເຊື່ອມໂຍງຂອງທັກສະດິຈິຕອລ ແລະ ຄວາມສາມາດການເປັນຜູ້ປະກອບການແມ່ນສຳຄັນຕໍ່ການປັບຕົວໃຫ້ເຂົ້າກັບການເຕີບໃຫຍ່ຂະຫຍາຍຕົວຂອງຂະແໜງການທ່ອງທ່ຽວ. ເນື່ອງຈາກອຸດສາຫະກຳສືບຕໍ່ຂະຫຍາຍຕົວ, ການຊຸກຍູ້ໃຫ້ເກີດຈິດສຳນຶກ ແລະ ການປະຕິບັດຍຸດທະສາດສ້າງນະວັດຕະກຳໃໝ່ໆ ຈະເປັນສິ່ງຈຳເປັນເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ. ສຸດທ້າຍ, ຄວາມມຸ້ງໝັ້ນຕໍ່ກັບການປະຕິບັດຄວາມຍືນຍົງໃນອຸດສາຫະກຳການທ່ອງທ່ຽວບໍ່ພຽງແຕ່ຈະຍົກລະດັບປະສົບການຂອງນັກທ່ອງທ່ຽວເທົ່ານັ້ນ, ແຕ່ມັນຍັງຊ່ວຍຮັບປະກັນຄວາມເປັນຢູ່ທີ່ດີຂອງຊຸມຊົນທ້ອງຖິ່ນ ແລະ ລະບົບນິເວດໃຫ້ແກ່ຄົນລຸ້ນຫຼັງອີກດ້ວຍ.

# ກິດຈະກຳແບບມີສ່ວນຮ່ວມ

### ກິດຈະກຳ 1

| | |
|---|---|
| **ຫົວຂໍ້ກິດຈະກຳ** | ການທ່ອງທ່ຽວແບບຍືນຍົງທຽບກັບການທ່ອງທ່ຽວແບບດັ້ງເດີມ |
| **ເວລາ** | 20-30 ນາທີ |
| **ວິທີການສິດສອນ** | • ແບ່ງຜູ້ຮຽນອອກເປັນສອງກຸ່ມ ຫຼື ຫຼາຍກຸ່ມ (ອີງຕາມຈຳນວນຜູ້ເຂົ້າຮ່ວມ).<br>• ຢາຍເຈ້ຍແຜນວາດ (flipchart) ແລະ ບິກເຟີດ ຫຼື ບິກ ແລະ ເຈ້ຍໃຫ້ເຂົາເຈົ້າ.<br>• ບອກໃຫ້ເຂົາເຈົ້າຄິດ ແລະ ຂຽນຄວາມແຕກຕ່າງລະຫວ່າງການທ່ອງທ່ຽວແບບດັ້ງເດີມ ແລະ ແບບຍືນຍົງ (ຕົວຢ່າງ: ຂຽນ 5 ຈຸດທີ່ເປັນເອກະລັກຂອງແຕ່ລະອັນ). |

| | |
|---|---|
| | • ບອກໃຫ້ເຂົາເຈົ້າຂຽນຂໍ້ດີ ແລະ ຂໍ້ເສຍຂອງແຕ່ລະຮູບແບບການທ່ອງທ່ຽວ.<br>• ລາຍງານ ແລະ ສົນທະນາກ່ຽວກັບຜົນຮັບ |

## ກິດຈະກຳທີ 2

| | |
|---|---|
| **ຫົວຂໍ້ກິດຈະກຳ** | **ກໍລະນີສຶກສາ** |
| **ເວລາ** | 20-30 ນາທີ |
| **ວິທີການສິດສອນ** | • ແບ່ງຜູ້ຮຽນອອກເປັນສອງກຸ່ມ ຫຼື ຫຼາຍກຸ່ມ (ອີງຕາມຈຳນວນຜູ້ເຂົ້າຮ່ວມ).<br>• ຢາຍຂໍ້ມູນກໍລະນີສຶກສາຂອງ Chã de Jardim (ບົດທີ2.2.).<br>• ໃຫ້ເຂົາເຈົ້າຕອບຄຳຖາມຕໍ່ໄປນີ້:<br>- ໃນກໍລະນີນີ້ມີການທ່ອງທ່ຽວແບບຍືນຍົງປະເພດໃດແດ່?<br>- ເຂົາເຈົ້າພົບຄວາມຫຍຸ້ງຍາກຫຍັງແດ່ ແລະ ເຂົາເຈົ້າແກ້ໄຂໄດ້ແນວໃດ?<br>- ມີຂໍ້ລິເລີ່ມໃດແດ່ທີ່ຄ້າຍຄືກັນຢູ່ປະເທດຂອງເຈົ້າ?<br>- ຖ້າມີ, ການທ່ອງທ່ຽວແບບຍືນຍົງປະເພດໃດແດ່ທີ່ໃກ້ຄຽງກັບຂອງປະເທດເຈົ້າ? ເຂົາເຈົ້າດຳເນີນການແນວໃດ? ເຂົາເຈົ້າປະເຊີນກັບບັນຫາໃດແດ່?<br>- ຖ້າບໍ່ມີ, ທ່ານຈະເຮັດແນວໃດເພື່ອອອກແບບການລິເລີ່ມທີ່ຄ້າຍຄືກັນໃນປະເທດຂອງທ່ານ? ທ່ານຈະຕ້ອງພິຈາລະນາຫຍັງແດ່? ບັນຫາໃດແດ່ທີ່ອາດຈະປະເຊີນ ແລະ ຈະມີວິທີການແກ້ໄຂແນວໃດ? |

## ກິດຈະກຳທີ 3

| | |
|---|---|
| **ຫົວຂໍ້ກິດຈະກຳ** | **ການປະເມີນທັກສະດິຈິຕອລດ້ວຍຕົນເອງ** |
| **ເວລາ** | 20-30 ນາທີ |
| **ວິທີການສິດສອນ** | • ໃຫ້ຜູ້ຮຽນເຂົ້າໄປເວັບໄຊສ໌ຕໍ່ໄປນີ້ https://europa.eu/europass/digitalskills/screen/home ແລະ ທົດສອບທັກສະດິຈິຕອລດ້ວຍຕົນເອງ.<br>ຖ້າເຂົາເຈົ້າສາມາດເຮັດບົດທົດສອບໄດ້, ນັກຮຽນບາງຄົນສາມາດສົນທະນາແລກປ່ຽນກ່ຽວກັບຜົນການປະເມີນຂອງເຂົາເຈົ້າ ແລະ  ແລກປ່ຽນວິທີການ ເສີມສ້າງທັກສະຂອງເຂົາເຈົ້າ. |

# ແບບປະເມີນນ້ອຍ

1. ເປົ້າໝາຍການທ່ອງທ່ຽວແບບຍືນຍົງ ແມ່ນແນໃສ່ຫຼຸດຜ່ອນຜົນກະທົບດ້ານລົບຂອງການທ່ອງທ່ຽວຕໍ່ສິ່ງແວດລ້ອມ ແລະ ຊຸມຊົນທ້ອງຖິ່ນ ພ້ອມກັບສົ່ງເສີມການພັດທະນາທາງດ້ານເສດຖະກິດ.

    ກ. ຖືກຕ້ອງ

    ຂ. ບໍ່ຖືກ

2. ໃນປະໂຫຍກຕໍ່ໄປນີ້ອັນໃດບໍ່ແມ່ນຮູບແບບການທ່ອງທ່ຽວແບບຍືນຍົງ?

    ກ. ການທ່ອງທ່ຽວຂະໜາດໃຫຍ່

ຂ. ການທ່ອງທ່ຽວແບບຊຸມຊົນ

ຄ. ການທ່ອງທ່ຽວແບບນິເວດ

ງ. ການທ່ອງທ່ຽວແບບຜ່ອນຄາຍ

3. ການປະຕິບັດອັນໃດຕໍ່ໄປນີ້ແມ່ນກ່ຽວຂ້ອງກັບການທ່ອງທ່ຽວແບບຍືນຍົງ?

ກ. ຊຸກຍູ້ໃຫ້ໃຊ້ພາດສະຕິກແບບໃຊ້ຄັ້ງດຽວ

ຂ. ສົ່ງເສີມວັດທະນະທຳ ແລະ ປະເພນີທ້ອງຖິ່ນ

ຄ. ສະຖານທີ່ທ່ອງທ່ຽວຍອດນິຍົມທີ່ແອອັດ

ງ. ບໍ່ສົນໃຈການຈັດການສິ່ງເສດເຫຼືອ

4. ທັກສະດ້ານດິຈິຕອລແມ່ນມີຄວາມສຳຄັນຫຼາຍຂຶ້ນໃນຂະແໜງທ່ອງທ່ຽວເພື່ອບໍລິຫານການພົວພັນລູກຄ້າ ແລະ ຍົກລະດັບການບໍລິການໃຫ້ດີຂຶ້ນ.

ກ. ຖືກຕ້ອງ

ຂ. ບໍ່ຖືກຕ້ອງ

5. ທັກສະໃດແດ່ທີ່ຈຳເປັນສຳລັບການປະກອບການໃນອຸດສາຫະກຳການທ່ອງທ່ຽວ?

ກ. ທັກສະການບັນຊີພື້ນຖານ

ຂ. ຄວາມສາມາດໃນພາສາຕ່າງປະເທດ

ຄ. ຄວາມຄິດສ້າງສັນແລະການແກ້ໄຂບັນຫາ

ງ. ແມ່ນທັງສອງຂໍ້ທີ່ກ່າວມານັ້ນ

# ແຫຼ່ງຂໍ້ມູນເພີ່ມເຕີມ

Sustainable Tourism Concepts

The Tourism Sector Skills Toolkit

DigComp – The Digital Competence Framework for Citizens

Green and digital skills for hospitality and tourism: From industry trends to competencies within TVET

EntreComp - The Entrepreneurship Competence Framework

# ເອກະສານອ້າງອີງ

Abreu, L. A. D., Walkowski, M. D. C., Perinotto, A. R. C., & Fonseca, J. F. D. (2024). Community-Based Tourism and Best Practices with the Sustainable Development Goals. *Administrative Sciences*, *14*(2), 36.

Barten, M. (2024). Sustainable Tourism Guide: What is, Why Important, Examples and More. *Revfine*. Retrieved from https://www.revfine.com/sustainable-tourism/. Accessed on 26/09/2024.

Bremner, C. (2020). *Accelerating travel innovation after coronavirus*. Euromonitor International.

Carlisle, S., Ivanov, S., & Dijkmans, C. (2023). The digital skills divide: evidence from the European tourism industry. *Journal of tourism futures, 9*(2), 240-266.

Carlisle, S., Ivanov, S., Dijkmans, C., & Marco-Lajara, B. M. L. (2022). Environmental skills gaps in tourism and hospitality organisations: Evidence from Europe. *Tourism: An International Interdisciplinary Journal*, *70*(3), 411-431.

Chan, J. K. L. (2023). Sustainable rural tourism practices from the local tourism stakeholders' perspectives. *Global Business & Finance Review, 28*(3), 136.

Dhir, A., Talwar, S., Kaur, P., & Malibari, A. (2020). Food waste in hospitality and food services: A systematic literature review and framework development approach. *Journal of Cleaner Production, 270*, Article 122861.

Dumbrăveanu, D. (2004). Principles and practice of sustainable tourism planning. *MTCTANT, Bucuresti, Romania Pitoreasca*.

European Commission: Directorate-General for Education, Youth, Sport and Culture. (2019). *Key competences for lifelong learning*. Publications Office. Retrieved from https://data.europa.eu/doi/10.2766/569540. Accessed on 10/10/2024.

GSTC (n.d.). What is Sustainable Tourism?. Retrieved from https://www.gstcouncil.org/what-is-sustainable-tourism/. Accessed on 26/09/2024.

Gutierriz, I., Ferreira, J. J., & Fernandes, P. O. (2023). Digital transformation and the new combinations in tourism: A systematic literature review. *Tourism and Hospitality Research*, 14673584231198414.

Hall, C.M., Le-Klähn, D.T., & Ram, Y. (2017). *Tourism, public transport and sustainable mobility*. Channel View Publications.

Heesup, H., Jin-Soo, L., Trang, H.L., Kim,W. (2018) Water conservation and waste reduction management for increasing guest loyalty and green hotel practices. *Int. J. Hos. Manag., 75*, 58–66.

Indeed (2023). Management skills: definitions and examples. Available online at https://uk.indeed.com/career-advice/career-development/management-skills. Accessed on 11/10/2024.

Indeed (2024). What Are Soft Skills? (With Examples and Resume Tips). Available online at https://www.indeed.com/career-advice/resumes-cover-letters/soft-skills. Accessed on 11/10/2024.

Ivanov, S. and Ivanova, M. and Iankova, K. (2014). Sustainable Tourism Practices of Accommodation Establishments in Bulgaria: An Exploratory Study. *Tourismos,* 9(2), 175-206.

Juganaru, I. D., Juganaru, M., & Anghel, A. (2008). Sustainable tourism types. *Annals of University of Craiova-Economic Sciences Series*, *2*(36), 797-804.

Kiryakova-Dineva, T., Kyurova, V., & Chankova, Y. (2019). Soft skills for sustainable development in tourism: the Bulgarian experience. *European Journal of Sustainable Development*, *8*(2), 57-57.

Lordkipanidze, M., Brezet, H., & Backman, M. (2005). The entrepreneurship factor in sustainable tourism development. *Journal of cleaner production, 13*(8), 787-798.

McCallum E., Weicht R., McMullan L., Price A. (2018). EntreComp into Action: get inspired, make it happen (M. Bacigalupo & W. O'Keeffe Eds.), EUR 29105 EN, Publications Office of the European Union, Luxembourg, 2018. ISBN 978-92-79-79360-8, doi:10.2760/574864, JRC109128

Nascimento, F. G. D. (2020). Turismo de base comunitária como alternativa para o desenvolvimento rural: a experiência da comunidade de Chã de Jardim, Areia–PB. Retrieved from https://www.ccta.ufpb.br/editoraccta/contents/titulos/hotelaria/turismo-de-base-comunitaria-como-alternativa-para-o-desenvolvimento-rural-a-experiencia-da-comunidade-de-cha-de-jardim-areia-pb/livro-turismo-comunitario.pdf. Accessed on 02/10/2024.

Next Tourism Generation Alliance (NTG) (2019). Desk Research Summary on the future of digital, green and social skills in tourism. Retrieved from https://nexttourismgeneration.eu/wp-content/uploads/2020/07/Desk-research-report-NTG.pdf. Accessed on 08/10/2024.

Petrosillo, I., Zurlini, G., Grato, E., & Zaccarelli, N. (2006). Indicating fragility of socio-ecological tourism-based systems. *Ecological Indicators, 6*(1), 104-113.

Pham Phu, S.T., Hoang, M.G., Fujiwara, T. (2018). Analysing solid waste management practice for the hotel industry. *Global Journal of Environmental Science and Management*, 4, 19–30.

Radwan, H. R., Jones, E., & Minoli, D. (2010). Managing solid waste in small hotels. *Journal of sustainable tourism*, *18*(2), 175-190.

Scheyvens, R., & Biddulph, R. (2018). Inclusive tourism development. *Tourism Geographies, 20*(4), 589-609.

Sharma, P. (2023). Sustainable Tourism Practices. *Enter Climate*. Retrieved from https://enterclimate.com/blog/sustainable-tourism-practices/. Accessed on 26/09/2024.

Streimikiene, D., Svagzdiene, B., Jasinskas, E., & Simanavicius, A. (2021). Sustainable tourism development and competitiveness: The systematic literature review. *Sustainable development, 29*(1), 259-271.

The Digital Travel Expert (2024). 10 Digital Transformation Tips For Great Sustainable Tourism. Accessed online at https://digitaltravelexpert.com/digital-transformation-sustainable-tourism/ on 09/10/2024.

Torres-Delgado, A., & Saarinen, J. (2017). Using indicators to assess sustainable tourism development: A review. *New research paradigms in tourism geography*, 31-47.

UNESCO (2024). *Green and digital skills for hospitality and tourism: From industry trends to competencies within TVET.* Retrieved from https://unesdoc.unesco.org/in/documentViewer.xhtml?v=2.1.196&id=p::usmarcdef_0000391115&file=/in/rest/annotationSVC/DownloadWatermarkedAttachment/attach_import_07a50bf1-3cdc-4bfc-99b5-dfcd53dc05e5%3F_%3D391115eng.pdf&locale=en&multi=true&ark=/ark:/48223/pf0000391115/PDF/391115eng.pdf#Expert%20report%20v4.indd%3A.151714%3A494. Accessed on 10/10/2024.

UNTWO (2024). Sustainable Development. Retrieved from https://www.unwto.org/sustainable-development. Accessed on 26/09/2024.

UNWTO. 2017. Tourism and the Sustainable Development Goals: Journey to 2030. Madrid: UNWTO.

Upskill (n.d.). Sustainable Tourism Guidelines. Retrieved from https://upskill.study/sustainable-tourism. Accessed on 26/09/2024.

Vuorikari, R., Kluzer, S. and Punie, Y. (2022). *DigComp 2.2: The Digital Competence Framework for Citizens*, EUR 31006 EN, Publications Office of the European Union, Luxembourg, ISBN 978-92-76-48882-8, doi:10.2760/115376, JRC128415.

Whitelaw, P.A., King, B.E., & Tolkach, D. (2014). Protected areas, conservation and tourism – Financing the sustainable dream. *Journal of Sustainable Tourism, 22*(4), 584-603.

Yang, Y., Wani, G. A., Nagaraj, V., Haseeb, M., Sultan, S., Hossain, M. E., Shah, S. M. R. (2023). Progress in sustainable tourism research: an analysis of the comprehensive literature and future research directions. *Sustainability*, *15*(3), 2755.

# ບົດທີ 3: ຄຳແນະນຳ ແລະ ຂັ້ນຕອນສຳຄັນໃນການພັດທະນາຫຼັກສູດ

## ພາກສະເໜີ

ຄຳວ່າການພັດທະນາຫຼັກສູດກວມເອົາ "ຂະບວນການອອກແບບຫຼັກສູດແຫ່ງຊາດ, ທ້ອງຖິ່ນ ຫຼື ໂຮງຮຽນ. ເພື່ອຜະລິດຫຼັກສູດທີ່ມີຄຸນນະພາບ, ຂະບວນການນີ້ຄວນໄດ້ຮັບການວາງແຜນ ແລະ ເປັນລະບົບ. ມັນຄວນຈະໃຫ້ຄວາມສຳຄັນກັບຄວາມຄິດເຫັນຂອງຜູ້ມີສ່ວນກ່ຽວຂ້ອງ ແລະ ຍັງຄຳນຶງເຖິງຄວາມຍືນຍົງ ແລະ ຜົນກະທົບໃນໄລຍະຍາວ" (IBE-UNESCO, Glossary of Curriculum Terminology, 2013). ໃນບົດນີ້, **ຂະບວນການຂອງການພັດທະນາຫຼັກສູດໄດ້ຖືກນຳສະເໜີເປັນວົງຈອນ ຊຶ່ງແຕ່ລະຂັ້ນຕອນແມ່ນເຊື່ອມໂຍງກັນ ແລະ ເພິ່ງພາຊຶ່ງກັນ ແລະ ກັນຢ່າງເປັນລະບົບ ແລະ ເກາະກ່າຍກັນຢ່າງສົມເຫດສົມຜົນ**. ການປະຕິບັດຕາມຮູບແບບຈຳລອງດັ່ງກ່າວນີ້ ແມ່ນມີຄວາມສຳຄັນເພາະວ່າແບບຈຳລອງນີ້ ຊ່ວຍໃຫ້ເກີດແລະຮັບປະກັນຄວາມສອດຄ່ອງໃນທຸກຂັ້ນຕອນຂອງຂະບວນການພັດທະນາຫຼັກສູດ, ຊ່ວຍໃຫ້ມີວິທີທີ່ມີໂຄງສ້າງເພື່ອບັນລຸເປົ້າຫມາຍການສຶກສາ. ການດຳເນີນການຢ່າງເປັນລະບົບ ແລະ ມີເຫດຜົນນີ້ ສົ່ງເສີມໃຫ້ເກີດຄວາມສອດຄ່ອງ, ສາມາດປັບຕົວໄດ້, ແລະ ການປັບປຸງຢ່າງຕໍ່ເນື່ອງ ຊຶ່ງເຮັດໃຫ້ສາມາດຮັບປະກັນວ່າຫຼັກສູດຈະຕອບສະໜອງຄວາມຕ້ອງການຂອງຜູ້ຮຽນ ແລະ ຜູ້ມີສ່ວນກ່ຽວຂ້ອງໄດ້ຢ່າງມີປະສິດທິພາບ ພ້ອມນີ້ຍັງຮັກສາການຕອບສະໜອງຄວາມຕ້ອງການຂອງຕະຫຼາດ ແລະ ບໍລິບົດຂອງການສຶກສາ.

## ຜົນການຮຽນທີ່ສຳຄັນ

- **ຄວາມຮູ້ກ່ຽວກັບຂັ້ນຕອນຫຼັກໃນການພັດທະນາຫຼັກສູດ**: ຜູ້ຮຽນຈະໄດ້ຮັບຄວາມຮູ້ ແລະ ທັກສະກ່ຽວກັບຂະບວນການພັດທະນາຫຼັກສູດ ແລະ ຂັ້ນຕອນຫຼັກໆທີ່ຈຳເປັນເພື່ອພັດທະນາຂອບຫຼັກສູດໃຫ້ປະສົບຜົນສຳເລັດ.
- **ຄວາມເຂົ້າໃຈກ່ຽວກັບການປັບຕົວຫຼັກສູດ**: ຜູ້ຮຽນຈະສາມາດເຂົ້າໃຈວ່າຂອບຫຼັກສູດສາມາດພັດທະນາ ແລະ ປັບໃຫ້ເໝາະສົມກັບສະພາບການການສຶກສາຕ່າງໆ ແລະຄວາມຕ້ອງການການຮຽນຮູ້ທີ່ແຕກຕ່າງກັນໄດ້ແນວໃດ.

## ຄຳແນະນຳສຳລັບຄູຝຶກ

- **ສົ່ງເສີມໃຫ້ມີການສົນທະນາຢ່າງຫ້າວຫັນ**: ໃຫ້ຜູ້ຮຽນມີສ່ວນຮ່ວມໃນການສົນທະນາກ່ຽວກັບຫຼັກການ ແລະ ຂັ້ນຕອນທີ່ສຳຄັນທີ່ກ່ຽວຂ້ອງກັບການພັດທະນາຫຼັກສູດໂດຍການໃຊ້ຕົວຢ່າງທີ່ເປັນຮູບປະທຳ ແລະ ກໍລະນີສຶກສາ.
- **ຈັດໃຫ້ມີກິດຈະກຳແບບມີສ່ວນຮ່ວມ (ໂຕ້ຕອບ)**: ໃຊ້ກິດຈະກຳເປັນກຸ່ມ ຫຼື ການສະແດງບົດບາດສົມມຸດເພື່ອຊ່ວຍໃຫ້ຜູ້ຮຽນເຂົ້າໃຈວິທີການສ້າງຂອບຫຼັກສູດກ່ຽວກັບການທ່ອງທ່ຽວແບບຍືນຍົງ.

- **ເນັ້ນການນຳໄປໃຊ້ໃນພາກປະຕິບັດ**: ເນັ້ນໃສ່ການນຳໃຊ້ແນວຄວາມຄິດກ່ຽວກັບການພັດທະນາຫຼັກສູດໃນສະພາບແວດລ້ອມທາງການສຶກສາທີ່ຫຼາກຫຼາຍ, ສະພາບດ້ານວັດທະນະທຳສັງຄົມ ແລະ ລັກສະນະຂອງຂະແໜງການທ່ອງທ່ຽວໃນປະເທດ ແລະ ພາກພື້ນຕ່າງໆ.
- **ໃຊ້ແຫຼ່ງຊັບພະຍາກອນສື່ປະຈັກຕາທີ່ຫຼາກຫຼາຍ**: ປະສົມປະສານເທກໂນໂລຢີດິຈິຕອລເພື່ອແນະນາແນວຄວາມຄິດຫຼັກທີ່ກ່ຽວຂ້ອງກັບການພັດທະນາຫຼັກສູດ.

# ແນວຄິດຫຼັກ

ບົດນີ້ມີຈຸດປະສົງເພື່ອສະເໜີພາບລວມທີ່ຄອບຄຸມອົງປະກອບທີ່ສຳຄັນທີ່ກ່ຽວຂ້ອງກັບການພັດທະນາຫຼັກສູດ ແລະ ການຈັດຕັ້ງປະຕິບັດໃນທັດສະນະທີ່ກວ້າງຂວາງຂຶ້ນ. ນອກນັ້ນ, ຍັງໄດ້ນຳສະເໜີກອບການເຮັດວຽກ ແລະ ແນວທາງປະຕິບັດໃນການພັດທະນາ ແລະ ສ້າງຫຼັກສູດໃໝ່ສຳລັບຫຼັກສູດວິຊາຊີບ ຫຼື ຫຼັກສູດວິຊາການກ່ຽວກັບການທ່ອງທ່ຽວແບບຍືນຍົງຂອງສະຖາບັນການສຶກສາຊັ້ນສູງ (HEIs) ຂອງປະເທດໄທ ແລະ ສປປ ລາວ, ໂດຍຄຳນຶງເຖິງການວິເຄາະຄວາມຕ້ອງການຈາກບົດລາຍງານແຫ່ງຊາດ ແລະ ນາໆຊາດທີ່ສ້າງຂຶ້ນພາຍໃຕ້ໂຄງການ INNO4Tourism.

ແຕ່ລະບົດຈະສະເໜີພາບລວມລະອຽດຂອງອົງປະກອບທີ່ສຳຄັນທີ່ກ່ຽວຂ້ອງກັບການພັດທະນາ ແລະ ການຈັດຕັ້ງປະຕິບັດຫຼັກສູດ, ຊ່ວຍໃຫ້ຜູ້ຮຽນສາມາດສ້າງປະສົບການດ້ານການສຶກສາທີ່ມີຄວາມໝາຍ ແລະ ມີຜົນກະທົບ ລວມມີດັ່ງນີ້:

- ນຳສະເໜີກ່ຽວກັບແນວຄວາມຄິດ ແລະ ຂັ້ນຕອນທີ່ສຳຄັນທີ່ກ່ຽວຂ້ອງກັບການພັດທະນາຫຼັກສູດ.
- ແນວທາງປະຕິບັດທີ່ທີ່ກຳນົດວິທີ່ການປະຕິບັດທີ່ມີປະສິດທິຜົນສຳລັບການອອກແບບ ແລະ ພັດ ທະນາຫຼັກສູດ.
- ເຄື່ອງມືເຊັ່ນ: ແມ່ແບບ, ຕາຕະລາງ, ແລະ ຄຳແນະນຳທີ່ຈະນຳໃຊ້ ແລະ ດັດແປງໃນການປະຕິບັດປະຈຳວັນ.

# ບົດທີ 3.1: ນິຍາມຂອງ "ຫຼັກສູດ"

ການຂາດຄວາມເຂົ້າໃຈຮ່ວມກັນຂອງຄຳວ່າ "ຫຼັກສູດ" ສາມາດເຮັດໃຫ້ເກີດຄວາມສັບສົນໃນລະຫວ່າງກິດຈະກຳການອອກແບບຫຼັກສູດການຮ່ວມມືລະຫວ່າງພະນັກງານ, ໂດຍສະເພາະໃນບັນດາຜູ້ຊ່ຽວຊານຈາກສະຖານທີ່ ແລະ ວັດທະນະທຳ-ສັງຄົມ ທີ່ແຕກຕ່າງກັນ. ເມື່ອນັກວິຊາການດ້ານການສຶກສາມາດເຕົ້າໂຮມກັນເພື່ອພັດທະນາຫຼັກສູດ, ການຕີຄວາມໝາຍທີ່ແຕກຕ່າງກັນອາດຂັດຂວາງການສື່ສານທີ່ມີປະສິດທິພາບ ແລະ ການສ້າງຄວາມເຂົ້າໃຈ. ນອກຈາກນັ້ນ, ຄຳວ່າ "ການອອກແບບຫຼັກສູດ" ແລະ "ການພັດທະນາຫຼັກສູດ" ມັກຈະຖືກນຳໃຊ້ປ່ຽນແທນກັນໄດ້, ແຕ່ຄຳສັບທັງສອງມີຄວາມຫມາຍທີ່ແຕກຕ່າງກັນ. ການອອກແບບຫຼັກສູດແມ່ນເນັ້ນໃສ່ການວາງແຜນ ແລະ ສ້າງໂຄງຮ່າງຂອງຫຼັກສູດ, ໃນຂະນະທີ່ການ**ພັດທະນາຫຼັກສູດລວມເອົາຂັ້ນຕອນການອອກແບບຫຼັກສູດແຫ່ງຊາດ, ທ້ອງຖິ່ນ ຫຼື ໂຮງຮຽນ. ເພື່ອຜະລິດຫຼັກສູດທີ່ມີຄຸນນະພາບ, ຂະບວນການນີ້ຄວນໄດ້ຮັບການວາງແຜນ ແລະ ເປັນລະບົບ. ມັນຄວນຈະຄວາມສຳຄັນການປະກອບສ່ວນຂອງຜູ້ມີສ່ວນກ່ຽວຂ້ອງ ແລະ ຕອບສະໜອງຄວາມຍືນຍົງ ແລະ ຜົນກະທົບໃນໄລຍະຍາວ** (IBE-UNESCO, Glossary of Curriculum Terminology, 2013). ເວົ້າສະເພາະ, ບົດນີ້ນຳສະເຫນີຂະບວນການຂອງການພັດທະນາຫຼັກສູດ**ແບບເປັນວົງຈອນທີ່ມີຂັ້ນຕອນເຊື່ອມໂຍງກັນ ແລະ ເພິ່ງພາຊຶ່ງກັນ ແລະ ກັນຢ່າງເປັນລະບົບ ແລະ ເກາະກ່າຍກັນຢ່າງສົມເຫດສົມຜົນ.**

ຂະບວນການພັດທະນາຫຼັກສູດຄວນມີທັດສະນະທີ່ຫຼາກຫຼາຍ, ລວມທັງການຮ່ວມມື ແລະ ການປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ແລະ ຜູ້ຮຽນຜ່ານວິທີການແບບມີສ່ວນຮ່ວມ. ຫຼັກສູດຍັງໄດ້ຮັບການກຳນົດຮູບຮ່າງຢາກຫຼວງຫຼາຍຈາກປັດໄຈພາຍນອກຕ່າງໆ ຊຶ່ງລວມທັງບໍລິບົດທາງດ້ານສັງຄົມ, ດ້ານກາຍຍະພາບ, ເສດຖະກິດ, ວັດທະນະທຳ. ອິດທິພົນເຫຼົ່ານີ້ມີຄວາມສຳຄັນຢ່າງຫຍິ່ງເມື່ອພິຈາລະນາເຖິງຄວາມຕ້ອງການການຮຽນຮູ້ ແລະ ຄຸນລັກສະນະສະເພາະຂອງນັກຮຽນພາຍໃນຊຸມຊົນ ແລະ ກອບສັງຄົມສະເພາະຂອງພວກເຂົາ. ຂອບຫຼັກສູດອາດມີຄວາມໝາຍທີ່ແຕກຕ່າງກັນຫຼາຍສຳລັບຄົນໃນໃນບໍລິບົດປະເທດ ແລະ ພາກພື້ນທີ່ແຕກຕ່າງກັນ. ສິ່ງສຳຄັນຄືຕ້ອງອະທິບາຍເຫດຜົນສຳລັບການປັບໃຊ້ກອບວິທີການໃນການອອກແບບ ແລະ ການພັດທະນາຫຼັກສູດຢ່າງລະອຽດຮອບຄອບ, ແລະ ຕ້ອງໄດ້ອະທິບາຍຈຸດປະສົງ ແລະ ຫນ້າທີ່ຕ່າງໆຂອງຫຼັກສູດໃນບໍລິບົດຂອງປະເທດ. ສະນັ້ນ, ໃນການວາງແຜນ ແລະ ພັດທະນາຫຼັກສູດໃໝ່, ນັກວິຊາການດ້ານສຶກສາຕ້ອງຮູ້ເຖິງມິຕິຕ່າງໆເຫຼົ່ານີ້. ການເຂົ້າໃຈບໍລິບົດຂອງທ້ອງຖິ່ນ ແລະ ພື້ນຫຼັງຄວາມເປັນມາທີ່ຫຼາກຫຼາຍຂອງຜູ້ຮຽນ ຈະຊ່ວຍສ້າງຫຼັກສູດທີ່ມີຄວາມກ່ຽວຂ້ອງ ແລະ ມີປະສິດທິພາບຫຼາຍຂຶ້ນ ເຊິ່ງຈະສາມາດຕອບສະໜອງຄວາມຕ້ອງການຂອງຜູ້ຮຽນໄດ້ຫຼາຍຂຶ້ນ.

## ບົດທີ 3.2: ວົງຈອນການພັດທະນາຫຼັກສູດ

ດັ່ງທີ່ກ່າວມາແລ້ວ, ການເບິ່ງການພັດທະນາຫຼັກສູດເປັນວົງຈອນ ທີ່ເນັ້ນວ່າຫຼັກສູດບໍ່ຄວນຖືກພິຈາລະນາໃຫ້ເປັນເລື່ອງຄົງທີ່ ຊຶ່ງກໍໝາຍຄວາມວ່າການພັດທະນາຫຼັກສູດບໍ່ແມ່ນວຽກທີ່ເຮັດຄັ້ງດຽວ, ແຕ່ມັນຄວນຈະມີຈຸດມຸ້ງໝາຍໃຫ້ເປັນການເດີນທາງຢ່າງຕໍ່ເນື່ອງ ແລະ ເປັນຂະບວນການແບບວົງຈອນທີ່ພັດທະນາຢ່າງຕໍ່ເນື່ອງ ແລະ ມີມູນຄ່າຫຼາຍຂື້ນເມື່ອເວລາຜ່ານໄປ. ວົງຈອນການພັດທະນາຫຼັກສູດປະກອບດ້ວຍຂັ້ນຕອນທີ່ສຳຄັນທີ່ຄວນເຮັດໃຫ້ສຳເລັດຕາມລຳດັບທີ່ມີຄວາມຄືບໜ້າ ແລະ ເປັນລະບົບເກາະກາຍກັນ. ແຕ່ລະຂັ້ນຕອນສ້າງຂຶ້ນຕໍ່ຈາກຂັ້ນຕອນກ່ອນໜ້າທີ່ຜ່ານມາ, ເຮັດໃຫ້ກິດຈະກຳການຮຽນຮູ້ກ່ອນທີ່ຈະກຳນົດຜົນການຮຽນ ແລະ ເນື້ອຫາ. ເຊັ່ນດຽວກັນ, ເນື້ອຫາບໍ່ສາມາດຖືກກຳນົດຈົນກ່ວາຜົນການຮຽນໄດ້ຖືກອະທິບາຍຢ່າງຊັດເຈນ.

ຂັ້ນຕອນສຳຄັນໃນການພັດທະນາຫຼັກສູດປະກອບມີ:

1. **ວິໄສທັດ**
2. **ການປະເມີນຄວາມຕ້ອງການ ແລະ ການວິເຄາະ**
3. **ຂໍ້ມູນລາຍລະອຽດດ້ານຄຸນນະວຸດຂອງຜູ້ຮຽນດ້ານການທ່ອງທ່ຽວແບບຍືນຍົງ**
4. **ຂໍ້ກຳນົດໃນການເຂົ້າຮຽນ**
5. **ຈຸດປະສົງ**
6. **ຜົນການຮຽນ**
7. **ການເລືອກເນື້ອໃນ ແລະ ການອອກແບບໂມດູນການຮຽນຮູ້**
8. **ທີມງານການສຶກສາ**
9. **ວິທີການຮຽນ-ການສອນ**
10. **ອຸປະກອນ/ສື່ຮັບໃຊ້ການຮຽນ ແລະ ແຫຼ່ງຊັບພະຍາກອນ**
11. **ໄລຍະເວລາ**
12. **ການຕິດຕາມ ແລະ ປະເມີນຜົນ**




ແຕ່ລະວົງຈອນສ້າງຂື້ນຈາກປະສົບການ ແລະ ຂໍ້ມູນເຊີງເລິກໃນອະດີດທີ່ຜ່ານມາ, ສາມາດເຮັດໃຫ້ຫຼັກສູດພັດທະນາໄດ້ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດທີ່ເກີດຂື້ນມາໃໝ່, ບູລິມະສິດດ້ານການສຶກສາໃໝ່ ແລະ/ຫຼື ການປ່ຽນແປງນະໂຍບາຍ. ວິທີການທີ່ວົນຊ້ຳໆແບບນີ້ເຮັດໃຫ້ແນ່ໃຈວ່າຫຼັກສູດຍັງມີຄວາມກ່ຽວຂ້ອງ, ປະສິດທິຜົນ ແລະ ຄວາມຍືນຍົງໃນໄລຍະຍາວ. ຫຼັກສູດໃໝ່ຄວນສ້າງຂື້ນຈາກປະສົບການຂອງການພັດທະນາຫຼັກສູດ ແລະ ບົດຮຽນທີ່ຖອດຖອນໄດ້ຈາກອະດີດ.

## ບົດທີ 3.3: ວິໄສທັດຂອງຫຼັກສູດ

ວິໄສທັດຂອງຫຼັກສູດແມ່ນ "ເປັນຄຳຊີ້ແຈງທີ່ສຳຄັນຫຼາຍ, ເຊິ່ງສະໜອງທັງຄຳແນະນຳ ແລະ ແຮງບັນດານໃຈໃຫ້ແກ່ຜູ້ໃຊ້ຫຼັກສູດ ແລະ ທຸກພາກສ່ວນກ່ຽວຂ້ອງຂອງການສຶກສາ. ວິໄສທັດຂອງຫຼັກສູດຄວນເສີມຂະຫຍາຍຄວາມເປັນເອກະພາບຂອງຈຸດປະສົງ ແລະ ຄວາມຮູ້ສຶກເຖິງທິດທາງໃນໄລຍະຍາວຂອງບັນດາຜູ້ມີຄວາມຮັບຜິດຊອບໃນການພັດທະນາ, ການຈັດຕັ້ງດຳເນີນ ແລະ ການຕິດຕາມກວດກາຫຼັກສູດ" (UNESCO 2023). ວິໄສທັດຂອງຫຼັກສູດໄດ້ຖືກພັດທະນາເປັນບາດກ້າວທຳອິດຖືກເປັນສິ່ງສຳຄັນທີ່ໃນຂະບວນການສ້າງກອບຫຼັກສູດ.

ວິໄສທັດລັກສູດຄວນປະກອບມີ:

- ເປັນຖານການຄົ້ນຄວ້າວິໄຈ ແລະ ມີຄວາມກ່ຽວຂ້ອງໂດຍໄດ້ຮັບຂໍ້ມູນຈາກການວິເຄາະຄວາມຕ້ອງການການຮຽນຮູ້, ແນວໂນ້ມຕະຫຼາດແຮງງານ, ແລະ ການສຶກສາທາງວິທະຍາສາດຢ່າງລະອຽດ ແລະ ຄົບຖ້ວນ.

- ຕ້ອງເປັນທັງຄວາມມຸ່ງຫວັງ ແລະ ແຮງບັນດານໃຈ: ຫຼັກສູດຄວນຖືດສອດແຊກຄຸນຄ່າທີ່ "ສັງຄົມໂດຍລວມຍຶດຖື, ຕີລາຄາ ແລະ ສະແດງອອກໃນບໍລິບົດການສຶກສາ" (UNESCO 2023), ໂດຍເປັນພື້ນຖານສຳຄັນໃຫ້ແກ່ການສ້າງຫຼັກສູດ. ວິໄສທັດຂອງຫຼັກສູດຄວນສອດຄ່ອງຕາມຄຸນຄ່າ ແລະ ຫຼັກການດ້ານຄວາມຍືນຍົງທີ່ອ້າງອີງເຖິງດ້ານສິ່ງແວດລ້ອມ, ເສດຖະກິດ, ວັດທະນະທຳ-ສັງຄົມຂອງການພັດທະນາການທ່ອງທ່ຽວ, ວາລະການພັດທະນາແບບຍືນຍົງ 2030, ຕະຫຼອດເຖິງວຽກບຸລິມະສິດ ແລະ ນະໂຍບາຍແຫ່ງຊາດກ່ຽວກັບການທ່ອງທ່ຽວແບບຍືນຍົງ ແລະ/ຫຼື ການພັດທະນາແບບຍືນຍົງ;

- ສະແດງອອກໃນແບບຫຍໍ້ໆ ແລະ ກະທັດຫັດ ເພື່ອດຶງດູງຄວາມສົນໃຈຂອງຜູ້ອ່ານ ແລະ ຜູ້ຮຽນ;

- ແລະ, ສຳຄັນທີ່ສຸດ, ເປັນຜົນຂອງຂະບວນການປຶກສາຫາລືຢ່າງກວ້າງຂວາງລະຫວ່າງພາກສ່ວນກ່ຽວຂ້ອງ, ນັກຮຽນ, ແລະ ການສຶກສາຂອງຊຸມຊົນ, ເພື່ອໃຫ້ມີການແບ່ງປັນ ແລະ ເສີມສ້າງຄວາມເປັນເຈົ້າຂອງ.

## ບົດທີ3.4: ການປະເມີນຄວາມຕ້ອງການ

ການປະເມີນຄວາມຕ້ອງການແມ່ນຂັ້ນຕອນທຳອິດໃນການພັດທະນາຫຼັກສູດ (Jordan, 1997), ແລະ ມັນເປັນໄລຍະທີ່ສຳຄັນທີ່ເປັນພື້ນຖານຂອງຂະບວນການພັດທະນາຫຼັກສູດ. ການປະຕິບັດການປະເມີນຄວາມຕ້ອງການຢ່າງລະອຽດແມ່ນຈຳເປັນສຳລັບການກຳນົດອົງປະກອບພື້ນຖານທັງຫມົດທີ່ສິ່ງຜົນກະທົບຕໍ່ປະສິດທິຜົນ ແລະ ຄວາມກ່ຽວຂ້ອງຂອງຫຼັກສູດ. ການປະເມີນຄວາມຕ້ອງການແມ່ນສຳຄັນໃນການຮັບປະກັນວ່າຫຼັກສູດຍັງຄົງສາມາດຕອບສະໜອງໄດ້ຕໍ່ຄວາມຕ້ອງການທີ່ປ່ຽນແປງຂອງຕະຫຼາດແຮງງານ ແລະ ຄວາມຕ້ອງການທີ່ເກີດຂຶ້ນໃໝ່ຂອງທັງຜູ້ຮຽນ ແລະ ສັງຄົມ.

**ຄວາມເຂົ້າໃຈຄວາມຕ້ອງການ ແລະຄຸນລັກສະນະຂອງຜູ້ຮຽນ:** ຊີ້ໃຫ້ເຫັນເຖິງຈຸດແຂງ ແລະ ຈຸດອ່ອນທີ່ມີຢູ່ແລ້ວຂອງກຸ່ມເປົ້າໝາຍ, ຕະຫຼອດເຖິງປັດໄຈສະພາບການທີ່ສິ່ງຜົນກະທົບຕໍ່ການສຶກສາ ແລະ ການພັດທະນາວິຊາຊີບຂອງເຂົາເຈົ້າ. ໂດຍ

ການໄດ້ຮັບຂໍ້ມູນຢ່າງເລິກເຊິ່ງກ່ຽວກັບພື້ນຖານປະຫວັດຂອງນັກຮຽນ, ຄວາມຕ້ອງການການຮຽນຮູ້ ແລະ ສິ່ງທ້າທາຍຂອງຜູ້ຮຽນ, ຜູ້ພັດທະນາຫຼັກສູດສາມາດສ້າງປະສົບການດ້ານການສຶກສາທີ່ເໝາະສົມຍິ່ງຂຶ້ນ.

**ການກໍານົດຄວາມຕ້ອງການທີ່ເກີດຂຶ້ນໃໝ່ໃນຂະແໜງການທ່ອງທ່ຽວ ແລະ ການບໍລິການ:** ເປີດເຜີຍໃຫ້ເຫັນທ່າອ່ຽງດ້ານວິຊາຊີບໃຫມ່ ແລະ ໂອກາດທີ່ມີຄວາມສໍາຄັນໃນການຮັກສາຫຼັກສູດໃຫ້ສອດຄ່ອງກັບຕະຫຼາດແຮງງານທີ່ປ່ຽນແປງໄປ. ໂດຍການແກ້ໄຂຄວາມຕ້ອງການທີ່ເກີດຂຶ້ນໃໝ່ເຫຼົ່ານີ້, ຜູ້ພັດທະນາຫຼັກສູດສາມາດຮັບປະກັນວ່າຜູ້ຮຽນມີການກະກຽມທີ່ດີສໍາລັບຄວາມຕ້ອງການຂອງອຸດສາຫະກໍາໃນປະຈຸບັນ ແລະ ໃນອະນາຄົດ..

**ການກໍານົດຊ່ອງຫວ່າງ:** ກໍານົດຄວາມແຕກຕ່າງລະຫວ່າງສະຖານະປະຈຸບັນຂອງຫຼັກສູດ ແລະ ສະຖານະທີ່ຕ້ອງການແມ່ນຖືເປັນສິ່ງສໍາຄັນ. ນີ້ລວມມີການປະເມີນຊ່ອງຫວ່າງລະຫວ່າງຄວາມຮູ້ທາງທິດສະດີ ແລະ ການປະຕິບັດຕົວຈິງ, ລວມໄປເຖິງການປະເມີນວ່າມາດຕະຖານ, ຈຸດປະສົງ, ແລະ ການປະຕິບັດທີ່ດີທີ່ສຸດທີ່ມີຢູ່ແລ້ວນັ້ນສອດຄ່ອງກັບຄວາມຄາດຫວັງຂອງການສຶກສາໃນປະຈຸບັນຫຼືບໍ່.

ຍຸດທະສາດການປຶກສາຫາລືຈະອະທິບາຍເຖິງກຸ່ມຜູ້ມີສ່ວນກ່ຽວຂ້ອງທີ່ຕ້ອງໄດ້ຮັບການປຶກສາຫາລືໃນລະຫວ່າງຂະບວນການ, ເປັນຫຍັງທັດສະນະຂອງແຕ່ລະກຸ່ມຈຶ່ງມີຄວາມສໍາຄັນ ແລະ ຄວນປຶກສາຫາລືແນວໃດ (UNESCO, 2017). ສາມາດນໍາໃຊ້ເຕັກນິກຕ່າງໆເພື່ອເກັບກໍາຂໍ້ມູນທາງເລິກຢ່າງມີປະສິດທິພາບ, ລວມມີດັ່ງນີ້;

- ການເກັບກໍາ ແລະ ການວິເຄາະຂໍ້ມູນ (ຜ່ານການສໍາພາດ, ສົນທະນາກຸ່ມ, ກອງປະຊຸມສໍາມະນາ, ການສໍາຫຼວດ, ແບບສອບຖາມ, ການເກັບກໍາຂໍ້ຄິດເຫັນ, ແລະ ອື່ນໆ. ເພື່ອລວບລວມຄວາມຮັບຮູ້ຈາກຜູ້ມີສ່ວນຮ່ວມທີ່ຫຼາກຫຼາຍເຊັ່ນ: ນັກຮຽນ, ພະນັກງານວິຊາການ, ຜູ້ຊ່ຽວຊານ, ກຸ່ມເສດຖະກິດ, ພົນລະເມືອງ ແລະ ສັງຄົມ, ບັນດາສະຖາບັນພາກລັດ ແລະ ເອກະຊົນ.

- ການສຶກສາຕະຫຼາດສະເພາະທີ່ສະໜອງຂໍ້ມູນ ແລະ ຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບຄວາມຕ້ອງການຂອງຕະຫຼາດທີ່ເກີດຂຶ້ນໃໝ່, ທ່າອ່ຽງ ແລະ ຄວາມສາມາດທີ່ຈໍາເປັນໃນບຸກຄະລາກອນ.

- ການທົບທວນວັນນະກໍາ ແລະ ການວິເຄາະວິທະຍາສາດຕ່າງໆ.

ການປະເມີນຄວາມຕ້ອງການທີ່ປະຕິບັດໄດ້ດີຊ່ວຍໃຫ້ຜູ້ພັດທະນາຫຼັກສູດສ້າງປະສົບການການຮຽນຮູ້ທີ່ຕົງເປົ້າໝາຍ ແລະ ມີປະສິດທິພາບ, ຮັບປະກັນວ່າຫຼັກສູດຍັງຄົງມີຄວາມກ່ຽວຂ້ອງ ແລະ ຕອບສະໜອງໄດ້ກັບສະພາບການປ່ຽນແປງ ແລະ ຄວາມຕ້ອງການທີ່ເກີດຂຶ້ນໃໝ່ຂອງຂະແໜງບໍລິການ ແລະ ການທ່ອງທ່ຽວ. ຫຍິ່ງຫຼັກສູດມີສອດຄ່ອງກັນຫຼາຍຂຶ້ນກັບຄວາມຕ້ອງການຂອງຜູ້ຮຽນ ແລະ ຂະແໜງການຕ່າງໆຫຼາຍເທົ່າໃດ, ຜົນໄດ້ຮັບຂອງການສຶກສາຈະປະສົບຜົນສໍາເລັດຫຼາຍຂຶ້ນເທົ່ານັ້ນ.

ດັ່ງທີ່ກ່າວມາຂ້າງເທິງນີ້, ໃນບໍລິບົດຂອງໂຄງການ INNO4Tourism, ໄດ້ມີການສ້າງບົດລາຍງານລະຫວ່າງປະເທດກ່ຽວກັບຄວາມຕ້ອງການດ້ານທັກສະ ແລະ ຊ່ອງຫວ່າງຂອງແຮງງານໃນອຸດສາຫະກໍາການບໍລິການ ແລະ ການທ່ອງທ່ຽວ ລວມທັງຂໍ້ສະເໜີແນະນໍາໃນການພັດທະນາຫຼັກສູດໃໝ່ ເພື່ອແນໃສ່ອະທິບາຍສະຖານະການປະຈຸບັນໃນ ສປປ ລາວ ແລະ ປະເທດໄທ ໃນຫົວຂໍ້ດັ່ງກ່າວ, ພ້ອມທັງນໍາສະເຫນີພາບລວມໂດຍປຽບທຽບ ແລະ ຄໍາແນະນໍາທີ່ເປັນປະໂຫຍດ. ບົດລາຍງານລະຫວ່າງປະເທດສະບັບນີ້ແມ່ນອີງຕາມຂໍ້ມູນທີ່ໄດ້ເກັບກໍາ ແລະ ວິເຄາະໂດຍມະຫາວິທະຍາໄລແຫ່ງຊາດ ແລະ ມະຫາວິທະຍາໄລສະຫວັນນະເຂດ ໃນ ສປປ ລາວ ແລະ ໂດຍມະຫາວິທະຍາໄລສົງຂານະຄະລິນ ແລະ ມະຫາວິທະຍາໄລຊຽງໃໝ່ ຂອງປະເທດໄທ. ໂດຍສະເພາະ:

1. ການທົບທວນບົດວິໄຈ ແລະ/ຫຼື ວັນນະກຳ/ຂໍ້ມູນອື່ນໆ ກ່ຽວກັບຄວາມຕ້ອງການທັກສະ ແລະ ຊ່ອງຫວ່າງແຮງງານດ້ານການບໍລິການ ແລະ ການທ່ອງທ່ຽວຂອງ ສປປ ລາວ ແລະ ປະເທດໄທ;

2. ການສຳຫຼວດທາງອອນໄລນ໌ຂອງພາກສ່ວນກ່ຽວຂ້ອງທີ່ສຳຄັນໃນຂະແໜງການທ່ອງທ່ຽວ ແລະ ການບໍລິການ ເພື່ອສຳຫຼວດຄວາມຮູ້ ແລະ ທັດສະນະຂອງເຂົາເຈົ້າກ່ຽວກັບຄວາມຕ້ອງການ ແລະ ຊ່ອງຫວ່າງໃນປະຈຸບັນກ່ຽວກັບຄວາມຮູ້ ແລະ ທັກສະທີ່ຈຳເປັນໃນຂະແໜງການບໍລິການ ແລະ ການທ່ອງທ່ຽວໃນ ສປປລາວ ແລະ ປະເທດໄທ;
3. ການສຳພາດກັບຜູ້ໃຫ້ຂໍ້ມູນສຳຄັນຂອງຂະແໜງການ ການທ່ອງທ່ຽວ ແລະ ການບໍລິການ ເພື່ອກວດສອບ ແລະ ປະກອບຜົນຂອງການທົບທວນວັນນະຄະດີ/ບົດຄົ້ນຄວ້າວິໄຈ ແລະ ການສຳຫຼວດ, ເຮັດໃຫ້ມີຄວາມເຂົ້າໃຈດີຂຶ້ນໃນບັນຫາທີ່ກຳລັງຄົ້ນຫາ.

## ບົດທີ3.5.: ຂໍ້ມູນລາຍລະອຽດຂອງຄຸນວຸດທິ

ລາຍລະອຽດຂອງຄຸນວຸດທິປະກອບມີຄວາມສາມາດທີ່ສຳຄັນທີ່ຜູ້ຮຽນຄວນຈະມີເມື່ອສຳເລັດຫຼັກສູດ ແລະ / ຫຼື ຫຼັກສູດທາງວິຊາການ. ພາຍໃນສະຫະພາບເອີຣົບໄດ້ກຳນົດຂອບເຂດຄວາມສາມາດໃຫ້ເປັນການປະສົມປະສານລະຫວ່າງຄວາມຮູ້, ທັກສະ ແລະ ທັດສະນະຄະຕິ ທີ່ເໝາະສົມກັບສະພາບການ. ຄວາມສາມາດຊີ້ບອກເຖິງຄວາມສາມາດໃນການນຳໃຊ້ຜົນການຮຽນຢ່າງພຽງພໍໃນສະພາບການທີ່ກຳນົດໄວ້ (ການສຶກສາ, ການເຮັດວຽກ, ການພັດທະນາສ່ວນບຸກຄົນ ຫຼື ວິຊາຊີບ). ຄວາມສາມາດບໍ່ຈຳກັດພຽງແຕ່ອົງປະກອບຂອງປັນຍາ (ທີ່ກ່ຽວຂ້ອງກັບການນຳໃຊ້ທິດສະດີ, ແນວຄວາມຄິດຫຼືຄວາມຮູ້ໂດຍປະລິຍາຍ); ແຕ່ຍັງກວມເອົາລັກສະນະທີ່ການເຮັດວຽກ (ທີ່ກ່ຽວຂ້ອງກັບທັກສະດ້ານເທັກນິກວິຊາການ) ຕະຫຼອດເຖິງຄຸນລັກສະນະການພົວພັນລະຫວ່າງບຸກຄົນ (ເຊັ່ນ: ທັກສະທາງດ້ານສັງຄົມ ຫຼື ອົງກອນ) ແລະ ຄຸນຄ່າດ້ານຈັນຍາບັນ (CEDEFOP, 2011). ຄວາມສາມາດອາດເປັນດ້ານສະເພາະ, ຕົວຢ່າງ, ກ່ຽວຂ້ອງກັບຄວາມຮູ້, ທັກສະ ແລະ ທັດສະນະຄະຕິພາຍໃນວິຊາສະເພາະໃດໜຶ່ງ ຫຼື ລະບຽບວິໄນ, ຫຼື ໂດຍທົ່ວໄປ/ຄອບຄຸມທຸກດ້ານ ເພາະວ່າມັນມີຄວາມກ່ຽວພັນກັບທຸກຂົງເຂດ/ວິຊາ (UNESCO-IBE, 2013, ໜ້າ 12).

ໃນບໍລິບົດຂອງການພັດທະນາຫຼັກສູດການທ່ອງທ່ຽວແບບຍືນຍົງ, ຂໍ້ມູນຄຸນຄຸນວຸດທິຄວນປະກອບມີ:

- **ຄວາມຮູ້ ແລະ ທັກສະພື້ນຖານສະເພາະດ້ານ** ໂດຍອ້າງອີງໃສ່ຫຼັກການ, ທິດສະດີ, ແນວຄວາມຄິດ ແລະ ການປະຕິບັດທີ່ກ່ຽວຂ້ອງກັບການທ່ອງທ່ຽວແບບຍືນຍົງພວກເປັນພື້ນຖານສຳລັບການແກ້ໄຂດ້ານສິ່ງແວດລ້ອມ, ສັງຄົມ, ແລະ ເສດຖະກິດຂອງການທ່ອງທ່ຽວແບບຍືນຍົງ.
- **ທັກສະທາງດ້ານວິທີການ** ທີ່ກ່ຽວຂ້ອງກັບຄວາມສາມາດໃນການວິເຄາະ, ປະເມີນຜົນ, ແລະ ຈັດຕັ້ງປະຕິບັດຍຸດທະສາດການທ່ອງທ່ຽວແບບຍືນຍົງຢ່າງມີປະສິດທິຜົນ.
- **ຄວາມຮູ້ ແລະ ທັກສະດ້ານວິຊາສະເພາະສະຫະວິຊາຊີບ** ທີ່ກວມເອົາສາຂາຕ່າງໆເຊັ່ນ: ວິທະຍາສາດສິ່ງແວດລ້ອມ, ເສດຖະສາດ, ພາສາ, ສັງຄົມວິທະຍາ, ແລະ ICT, ເຊິ່ງມີຄວາມເຊື່ອມໂຍງກັນ ແລະ ມີຄວາມຈຳເປັນໃນການແກ້ໄຂບັນຫາຄວາມຍືນຍົງຫຼາຍດ້ານໃນຂະແໜງການທ່ອງທ່ຽວ.

- **ຄວາມຮັບຮູ້ກ່ຽວກັບສະພາບການ** ໝາຍເຖິງຄວາມເຂົ້າໃຈຢ່າງຄອບຄຸມກ່ຽວກັບສະພາບການທາງດ້ານວັດທະນະທຳ, ສັງຄົມ ແລະ ເສດຖະກິດຂອງທ້ອງຖິ່ນ ຊຶ່ງກ່ຽວຂ້ອງກັບການສ້າງຫຼັກສູດທີ່ອອກແບບມາໃຫ້ຕອບສະໜອງໄດ້ຕໍ່ກັບຄວາມຕ້ອງການທີ່ເປັນເອກະລັກສະເພາະ, ຄວາມຈຳເປັນ ແລະ ຄຸນລັກສະນະສະເພາະຂອງພາກພື້ນ ແລະ / ຫຼື ຊຸມຊົນສະເພາະ.
- **ທັກສະທາງສັງຄົມ ແລະ ການແລກປ່ຽນ** ເຊັ່ນ: ການເຮັດວຽກເປັນທີມ, ຄວາມຮູ້ຈັກພໍໃນຕົວເອງ, ແຮງຈູງໃຈ, ຄວາມສາມາດໃນການແກ້ໄຂບັນຫາ, ການປັບຕົວ, ຄວາມເຂົ້າໃຈລະຫວ່າງວັດທະນະທຳ, ການເປີດເຜີຍ, ແລະ ການສື່ສານທີ່ມີປະສິດທິພາບ..

ໃນບໍລິບົດຂອງໂຄງການINNO4Tourism project, ດັ່ງທີ່ໄດ້ຮັບການຍົກຂຶ້ນໃນບົດລາຍງານນາໆຊາດ, ໄດ້ຍົກຂໍ້ສະເໜີແນະຕໍ່ໄປນີ້ເພື່ອພັດທະນາຫຼັກສູດໃໝ່:

"ຂະແໜງການທ່ອງທ່ຽວ ແລະ ການບໍລິການ ຢູ່ ສປປ ລາວ ແລະ ປະເທດໄທ ກຳລັງມີການປ່ຽນແປງຢ່າງວ່ອງໄວ ຍ້ອນປັດໄຈເສດຖະກິດ, ສັງຄົມ, ແລະ ສິ່ງແວດລ້ອມ. ການປ່ຽນແປັງດັ່ງກ່າວໄດ້ກຳນົດຄວາມຕ້ອງການກຳລັງແຮງງານທີ່ມີຄວາມຍືດຫຍຸ່ນ. ສະນັ້ນ, ການສຶກສາ ແລະ ບຳລຸງສ້າງດ້ານການບໍລິການ ແລະ ການທ່ອງທ່ຽວຕ້ອງໄດ້ສະທ້ອນໃຫ້ເຫັນເຖິງການຫັນປ່ຽນຢ່າງຕໍ່ເນື່ອງໃນພູມມີທັດອຸດສາຫະກຳການທ່ອງທ່ຽວ ແລະ ເປັນບ່ອນກະກຽມນັກສຶກສາ ຜູ້ທີ່ຮຽນຈົບພຽບພ້ອມດ້ວຍ "ຄວາມຮອບຮູ້, ມີຄວາມຮູ້ຄວາມສາມາດປະກອບສ່ວນເຂົ້າໃນການພັດທະນາການທ່ອງທ່ຽວ"."

# ບົດທີ 3.6.: ເງື່ອນໄຂໃນການເຂົ້າຮຽນ

ການສ້າງເງື່ອນໄຂການເຂົ້າຮຽນທີ່ຊັດເຈນແມ່ນມີຄວາມຈຳເປັນເພື່ອຮັບປະກັນວ່າຜູ້ຮຽນມີຄວາມພ້ອມຢ່າງພຽງພໍ ເພື່ອເຂົ້າຮ່ວມຮຽນໃນຫຼັກສູດ ແລະ ປະສົບຜົນສຳເລັດໃນຂະແໜງການທ່ອງທ່ຽວແບບຍືນຍົງ. ຂໍ້ກຳນົດ ຫຼື ເງື່ອນໄຂເຫຼົ່ານີ້ໂດຍປົກກະຕິປະກອບມີການປະສົມປະສານຂອງຄຸນວຸດທິ, ຄວາມຮູ້ເບື້ອງຕົ້ນ, ທັກສະ, ແລະ ຄຸນລັກສະນະສ່ວນຕົວທີ່ຜູ້ຮຽນຄາດວ່າຈະມີກ່ອນການລົງທະບຽນ. ລາຍລະອຽດຂໍ້ມູນນີ້ອະທິບາຍເຖິງຂໍ້ມູນການຢັ້ງຢືນທາງການສຶກສາທີ່ເປັນທາງການທີ່ຜູ້ສົນໃຈຈະຮຽນຕ້ອງມີ. ອາດຈະປະກອບມີວຸດທິການສຶກສາທີ່ຜ່ານມາ, ອານຸປະລິນຍາ, ຫຼື ໃບຢັ້ງຢືນທີ່ກ່ຽວຂ້ອງກັບການທ່ອງທ່ຽວ, ການສຶກສາສິ່ງແວດລ້ອມ, ຫຼື ຂະແໜງການທີ່ກ່ຽວຂ້ອງ.

ການປະເມີນເງື່ອນໄຂການເຂົ້າຮຽນຄວນຈະຖືກກຳນົດຢ່າງຊັດເຈນ ແລະ ມຸ່ງໝັ້ນຕໍ່ຂະບວນການເຂົ້າຮຽນທີ່ຍຸຕິທຳ ແລະ ໂປ່ງໃສທີ່ສະໜອງໂອກາດເທົ່າທຽມກັນສຳລັບທຸກຄົນ. ຄຳແນະນຳສະເພາະສາມາດໄດ້ຮັບການພັດທະນາໂດຍມີຈຸດປະສົງເພື່ອໃຫ້ຜູ້ສະໝັກທີ່ມີທ່າແຮງເຂົ້າໃຈຫຼາຍກວ່າເກົ່າກ່ຽວກັບວິທີການປະຕິບັດ ແລະ ເງື່ອນໄຂການຄັດເລືອກທີ່ພິຈາລະນາຄຳຮ້ອງສະໝັກຂອງພວກເຂົາ. ເງື່ອນໄຂການເຂົ້າຮຽນຄວນລະບຸຄະແນນສະສົມ ແລະ / ຫຼື ເກຣດຄະແນນສຸດທ້າຍ (ແລະວິຊາຖ້າຫາກວ່າຈຳເປັນ) ທີ່ຈຳເປັນໃນການພິຈາລະນາຮັບການສະເໜີ, ລວມເຖິງ ຄວາມຕ້ອງການເພີ່ມເຕີມອື່ນໆ (ການສຳພາດ, ການກວດສອບ, ການທົດສອບ, ຫຼັກສູດກ່ອນການເຂົ້າຮຽນ). ດັ່ງນັ້ນ, ຜູ້ສະໝັກໄດ້ຖືກເລືອກຖ້າພວກເຂົາສາມາດຕອບສະໜອງຂໍ້ກຳນົດການເຂົ້າຮຽນທັງໝົດທີ່ຈຳເປັນກ່ອນທີ່ຈະລົງທະບຽນ.

# ບົດທີ 3.7.: ຈຸດປະສົງຫຼັກສູດ ແລະ ຜົນການຮຽນ

ເມື່ອຄວາມຕ້ອງການການຮຽນຮູ້ຖືກປະເມີນ, ວິເຄາະ, ແລະ ຈັດລໍາດັບຄວາມສໍາຄັນ, ຂັ້ນຕອນຕໍ່ໄປແມ່ນການພັດທະນາເປົ້າໝາຍຫຼັກສູດ ແລະ ຜົນການຮຽນຮູ້. ກ່ອນອື່ນໝົດ, ການຊີ້ແຈງຄວາມແຕກຕ່າງລະຫວ່າງຈຸດປະສົງການຮຽນຮູ້ ແລະ ຜົນການຮຽນຮູ້ ແມ່ນເປັນສິ່ງສໍາຄັນທີ່ຈໍາເປັນ.

ຈຸດປະສົງຂອງຫຼັກສູດປະກອບມີເປົ້າໝາຍສະເພາະຂອງຫຼັກສູດ, ໂດຍສະເພາະແມ່ນສິ່ງທີ່ພວກເຮົາຕ້ອງການໃຫ້ຜູ້ຮຽນທີ່ເປັນກຸ່ມເປົ້າໝາຍສາມາດບັນລຸໄດ້. ເປົ້າໝາຍຂອງຫຼັກສູດແມ່ນກ່ຽວຂ້ອງກັບຈຸດປະສົງ, ຄ່ານິຍົມ ແລະ ປັດຊະຍາການສຶກສາສະເພາະເຈາະຈົງ.[1].

ຜົນການຮຽນ ແມ່ນຂໍ້ຄວາມສະເພາະທີ່ອະທິບາຍເຖິງສິ່ງທີ່ຜູ້ຮຽນຄວນຈະສາມາດເຮັດໄດ້ຫຼັງຈາກສໍາເລັດການຮຽນໃນລາຍວິຊາ ແລະ/ຫຼື ຫຼັກສູດທາງວິຊາການ, ບໍ່ວ່າຈະຢູ່ໃນຜົນສໍາເລັດຂອງການຮຽນ (ສິ່ງທີ່ຜູ້ຮຽນຄາດວ່າຈະຮຽນຮູ້), ຜະລິດຕະພັນ ຫຼື ການປະຕິບັດ (ສິ່ງທີ່ຜູ້ຮຽນຄາດວ່າຈະສົ່ງຕໍ່ ແລະ/ຫຼື ຜະລິດ), ແລະ ຂະບວນການ (ສິ່ງທີ່ຜູ້ຮຽນຄາດວ່າຈະເຮັດ). ຜົນການຮຽນຮູ້ທີ່ມີປະສິດທິພາບແມ່ນອົງປະກອບທີ່ສໍາຄັນຂອງຫຼັກສູດທີ່ມີປະສິດຕິພາບ. ຄວນຈະມີຄວາມເປັນສະເພາະເຈາະຈົງ, ສາມາດວັດແທກໄດ້, ແລະ ສອດຄ່ອງກັບຈຸດປະສົງຂອງຫຼັກສູດທີ່ຕ້ອງການ. ການສ້າງຜົນການຮຽນຮູ້ທີ່ມີປະສິດທິຜົນ ຍັງຈະສ້າງຄວາມສະດວກໃນການຄັດເລືອກຍຸດທະສາດການສຶກສາ ແລະ ວິທີການປະເມີນຜົນທີ່ເຫມາະສົມ, ເຊິ່ງຈະໄດ້ສົນທະນາຕໍ່ໄປໃນບົດ.

ເພື່ອກໍານົດຜົນການຮຽນໄດ້ຢ່າງຊັດເຈນ, ສາມາດປະຕິບັດຕາມຄໍາແນະນໍາຕໍ່ໄປນີ້:

- ຈໍາກັດຈຸດສຸມໃຫ້ແຄບລົງ: ກໍານົດຜົນການຮຽນຮູ້ທີ່ສົ່ງເສີມກັນ 3 ຫຼື 4 ຢ່າງ ທີ່ສາມາດບັນລຸໄດ້.
- ກໍານົດຜົນການຮຽນທີ່ສະທ້ອນໃຫ້ເຫັນຜົນຂອງການປະເມີນຄວາມຕ້ອງການການຮຽນຮູ້ ແລະ ສອດຄ່ອງກັບຄ່ານິຍົມທີ່ກ່ຽວຂ້ອງກັບການທ່ອງທ່ຽວແບບຍືນຍົງ.
- ໃຊ້ພາສາທີ່ຊັດເຈນ: ຂຽນຜົນການຮຽນດ້ວຍຄໍາກໍາມະສະເພາະເພື່ອອະທິບາຍສິ່ງທີ່ຜູ້ຮຽນຄາດວ່າຈະບັນລຸ.
- ຫຼີກລ່ຽງຄວາມບໍ່ແນ່ນອນ: ຫຼີກລ່ຽງຄໍາກິລິຍາຄຸມເຄືອ (ບໍ່ຊັດເຈນ) ຫຼື ວັດແທກໄດ້ຍາກ (ເຊັ່ນ: "ຮູ້," "ເຂົ້າໃຈ," "ຮຽນຮູ້").
- ຮັກສາຂອບເຂດທີ່ເໝາະສົມ: ຫຼີກລ້ຽງຜົນການຮຽນຮູ້ທີ່ກວ້າງ ຫຼື ແຄບເກີນໄປ, ເພາະວ່າສາມາດເຮັດໃຫ້ການວັດແທກ ແລະ ການປະເມີນຫຍຸ້ງຍາກສັບສົນ.
- ປະສົມປະສານເອົາ Bloom's Taxonomy ຫຼື ວິທີການທີ່ຄ້າຍຄືກັນ: ຊຶ່ງເວົ້າກ່ຽວກັບລະດັບຄວາມຮູ້-ສະຕິປັນຍາຕ່າງໆ, ຈາກຄວາມເຂົ້າໃຈຂັ້ນພື້ນຖານໄປສູ່ການຄິດຂັ້ນສູງເຊັ່ນ: ການວິເຄາະ ແລະ ການປະເມີນຜົນ.
- . ເຊື່ອມສານພາກປະຕິບັດ ແລະ ທິດສະດີ: ດຸ່ນດ່ຽງຄວາມຮູ້ທາງທິດສະດີກັບທັກສະພາກປະຕິບັດທີ່ກ່ຽວຂ້ອງກັບສາຂາວິຊາ.

---

[1] UNESCO-IBE, 2013, p. 17

# ບົດທີ 3.8.: ເນື້ອໃນ ແລະ ໂມດູນການຮຽນຮູ້

ຂັ້ນຕອນຕໍ່ໄປໃນຂະບວນການພັດທະນາຫຼັກສູດແມ່ນການເລືອກເນື້ອໃນ ແລະ ການພັດທະນາໂມດູນທີ່ຈະສົ່ງຜົນກະທົບຢ່າງຫຼວງຫຼາຍຕໍ່ຊີວິດຂອງຜູ້ຮຽນ ແລະ ສັງຄົມໂດຍລວມຢ່າງມີຄວາມສໍາຄັນທີ່ສຸດ. ໃນຂັ້ນຕອນນີ້, ຄໍາຖາມທີ່ສໍາຄັນເກີດຂື້ນ: "ເພື່ອບັນລຸຜົນໄດ້ຮັບທີ່ຕັ້ງໄວ້, ຄວາມຮູ້ ແລະ ທັກສະໃດທີ່ຜູ້ຮຽນຕ້ອງໄດ້ຮັບ? ທັດສະນະຄະຕິ ແລະ ພຶດຕິກໍາອັນໃດທີ່ຕ້ອງໄດ້ຮັບການພັດທະນາ ແລະ ເຝິກປະຕິບັດ?" ນອກຈາກນັ້ນ, ມັນຈໍາເປັນຕ້ອງເລືອກວິຊາ ແລະ ແນວຄວາມຄິດທີ່ຫຼັກສູດຄວນກວມເອົາ ໂດຍພິຈາລະນາວ່າອົງປະກອບເຫຼົ່ານີ້ເຊື່ອມໂຍງກັບວິຊາອື່ນໆແນວໃດ ຊຶ່ງຮຽກຮ້ອງໃຫ້ມີການແບ່ງສ່ວນອົງປະກອບອອກເປັນໂມດູນການຮຽນຮູ້ລະອຽດສະເພາະ. ແຕ່ລະໂມດູນຕ້ອງມີໂຄງສ້າງ, ປັບປຸງ, ແລະ ອອກແບບຢ່າງລະມັດລະວັງ. ໂຄງຮ່າງທີ່ສ້າງຂຶ້ນໄດ້ເປັນຢ່າງດີຈະແບ່ງຜົນການຮຽນຮູ້ອອກເປັນໂມດູນ, ຫົວຂໍ້, ແລະ ພາກສ່ວນສະເພາະ, ປະກອບເປັນກະດູກສັນຫຼັງຂອງຫຼັກສູດ. ມັນກໍານົດຂອບເຂດ (ຄວາມກວ້າງຂອງຄວາມຮູ້, ທັກສະ, ທັດສະນະຄະຕິ, ແລະ ພຶດຕິກໍາ) ແລະ ລໍາດັບ (ເປັນລໍາດັບ ແລະ ການຂຶ້ນເພິ່ງພາເຊິ່ງກັນ ແລະ ກັນ) ຂອງໂມດູນຕ່າງໆ.

ໃນບໍລິບົດຂອງໂຄງການ INNO4Tourism, ດັ່ງທີ່ປະກົດໃນບົດລາຍງານລະດັບຊາດ, ສະເໜີແນະຕໍ່ໄປນີ້ເພື່ອພັດທະນາຫຼັກສູດໃໝ່ ແລະ ທັກສະສະເພາະ.

ບັນດາສະຖາບັນການສຶກສາຊັ້ນສູງຂອງສອງປະເທດຄວນເອົາໃຈໃສ່ໃນການພັດທະນາຫລັກສູດ ແລະ ໂຄງການສໍາລັບຜູ້ຮຽນ ແລະ ພະນັກງານຂະແໜງການທີ່ສຸມໃສ່:

- ແນວຄວາມຄິດດ້ານຄວາມຍືນຍົງ ແລະ ຫຼັກການການຈັດການຄວາມຍືນຍົງ, ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ເສດຖະກິດ-ສັງຄົມ ຂອງການທ່ອງທ່ຽວ, ການທ່ອງທ່ຽວເປັນຕົວຂັບເຄື່ອນໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs), ຄວາມເຂົ້າໃຈ ແລະ ປະຕິບັດຕາມລະບຽບການ ແລະ ມາດຕະຖານຄວາມຍືນຍົງລະດັບຊາດ ແລະ ສາກົນ.
- ທັກສະສີຂຽວ (ເຊັ່ນ: ການປະຕິບັດການປະຢັດພະລັງງານ ແລະ ນໍ້າ, ການຈັດການສິ່ງເສດເຫຼືອ, ການນໍາໃຊ້ຄືນໃໝ່ ແລະ ການຍ່ອຍສະຫຼາຍ, ການອະນຸລັກຊີວະນາໆພັນ, ກິດຈະກໍາ ແລະ ຜະລິດຕະພັນທີ່ເປັນມິດກັບສິ່ງແວດລ້ອມ, ການຢັ້ງຢືນສີຂຽວ/ຄວາມຍືນຍົງ ແລະ ອື່ນໆ.)
- ທັກສະການເປັນຜູ້ປະກອບການ, ການຈັດການທຸລະກິດ ແລະ ທັກສະການຕະຫຼາດທີ່ລວມເອົາແນວຄວາມຄິດດ້ານຄວາມຍືນຍົງ
- ພາສາອັງກິດ ແລະ ພາສາຕ່າງປະເທດອື່ນໆ
- ທັກສະທາງສັງຄົມ ລວມທັງການແກ້ໄຂບັນຫາ, ການຈັດການວິກິດການ, ການວາງແຜນປະສິດທິຜົນ, ທັດສະນະຄະຕິ ແລະ ຈັນຍາບັນທີ່ເນັ້ນການບໍລິການ, ການເຮັດວຽກເປັນທີມ, ທັກສະການສື່ສານ ແລະ ການເຈລະຈາຕໍ່ລອງ , ທັກສະຄວາມເປັນຜູ້ນໍາ, ແລະ ການບໍລິຫານເວລາ.
- ເຕັກໂນໂລຊີດິຈິຕອລ, ແລະ ການຈັດການຂໍ້ມູນຂ່າວສານ ລວມທັງການຕະຫຼາດອອນໄລນ໌ / ການສົ່ງເສີມການຕະຫຼາດ, ການວິເຄາະຂໍ້ມູນ.

- ນອກນີ້ຫຼັກສູດ ແລະ ຫຼັກສູດການສຶກສາຊັ້ນສູງໃໝ່ ຍັງມີຄວາມຍືດຫຍຸ່ນເພື່ອໃຫ້ສາມາດປັບຕົວເຂົ້າກັບວິວັດທະນາການທາງດ້ານເທັກໂນໂລຍີ, ວັດທະນະທຳ ແລະ ສັງຄົມທີ່ກຳລັງດຳເນີນຢູ່.

ຄຳແນະນຳສຳລັບການເລືອກເນື້ອໃນ ແລະ ການພັດທະນາໂມດູນ:

**ກຳນົດຫົວຂໍ້ຫຼັກກ່ຽວກັບການທ່ອງທ່ຽວແບບຍືນຍົງ:** ເລີ່ມຕົ້ນໂດຍການລະບຸລາຍຊື່ຫົວຂໍ້ທີ່ຈຳເປັນເພື່ອບັນລຸຜົນການຮຽນທີ່ຕ້ອງການ. ແຕ່ລະຫົວຂໍ້ຄວນສອດຄ່ອງກັບໂມດູນທີ່ມີຈຸດປະສົງການຮຽນຮູ້, ວິທີການ, ແລະ ໄລຍະເວລາທີ່ຊັດເຈນ.

**ຮັບປະກັນຄວາມຄ່ອງຕົວຢ່າງເປັນລະບົບ:** ເນື່ອງຈາກໂມດູນມີໂຄງສ້າງແລ້ວ, ຕ້ອງສ້າງຄວາມຄ່ອງຕົວຢ່າງເປັນລະບົບ ຈາກຫົວຂໍ້ໜຶ່ງໄປຫາຫົວຂໍ້ຕໍ່ໄປ. ອັນນີ້ສົ່ງເສີມການເລົ່າເລື່ອງທີ່ສອດຄ່ອງກັນທີ່ຕໍ່ຍອດຄວາມຮູ້ເດີມທີ່ມີກ່ອນໜ້າ.

**ການແບ່ງໂມດູນ**: ພາຍໃນແຕ່ລະໂມດູນ, ໄດ້ແບ່ງຫົວຂໍ້ຫຼັກອອກເປັນບົດຮຽນຫຍ່ອຍທີ່ເນັ້ນຄວາມຮູ້ທີ່ສະໜັບສະໜູນການຮຽນຮູ້ໂດຍລວມຂອງຫົວຂໍ້ດັ່ງກ່າວ.

**ລວມເອົາໂມດູນສະຫະສາຂາ**ທີ່ເຊື່ອງໂຍງກັບການທ່ອງທ່ຽວແບບຍືນຍົງເຊັ່ນ: ວິທະຍາສາດສິ່ງແວດລ້ອມ, ເສດຖະສາດ, ພາສາ, ສັງຄົມວິທະຍາ, ແລະ ICT

### ອົງປະກອບຫຼັກຂອງໂມດູນລວມມີ:

- ຈຸດປະສົງ: ລະບຸຢ່າງຈະແຈ້ງວ່າຜູ້ຮຽນຄວນບັນລຸຫຍັງໃນຕອນທ້າຍຂອງໂມດູນ.
- ເນື້ອໃນ: ລາຍລະອຽດກ່ຽວກັບຫົວຂໍ້ ແລະ ເອກະສານທີ່ຈະກວມເອົາ/ສຶກສາ.
- ວິທີການສອນ: ອະທິບາຍວິທີການສອນ (ການບັນຍາຍ, ກິດຈະກຳ, ການສາທິດ, ແລະ ອື່ນໆ).
- ເວລາ: ຈັດສັນເວລາສະເພາະສຳລັບແຕ່ລະໂມດູນ.
- ສື່ການສອນ: ຈັດລຽງລາຍຊື່ແຫຼ່ງຊັບພະຍາກອນ ແລະ ເຄື່ອງມືທັງໝົດທີ່ຈຳເປັນ.
- ການປະເມີນ: ອະທິບາຍວ່າຜົນການຮຽນຈະຖືກປະເມີນແນວໃດ.

### ແຜນທີ່ (ໂຄງສ້າງ) ຫຼັກສູດ

ແຜນທີ່ຫຼັກສູດເປັນເຄື່ອງມືທີ່ໃຊ້ເພື່ອສະແດງໃຫ້ເຫັນຄວາມສຳພັນລະຫວ່າງດ້ານຕ່າງໆຂອງຫຼັກສູດ ແລະ ຜົນການຮຽນຮູ້ທີ່ກຳນົດໄວ້. ແຜນທີ່ຫຼັກສູດເປັນເຄື່ອງມືທີ່ມີຄຸນຄ່າໃນການພັດທະນາຫຼັກສູດໃຫມ່, ຊ່ວຍຮັບປະກັນຄວາມສອດຄ່ອງຕະຫຼອດຂະບວນການ.

ດັ່ງທີ່ສະແດງຢູ່ໃນຕາຕະລາງ 1, ແຜນທີ່ຫຼັກສູດພື້ນຖານສາມາດສ້າງຢູ່ໃນເມຕຣິກ, ໂດຍມີການຈັດໃຫ້ຜົນການຮຽນຮູ້ຂອງໂປແກມໃນແຖວ ແລະ ໂມດູນໃນຖັນ. ມີການເຮັດເຄື່ອງໝາຍໃນຕາລາງແຊວ) ທີ່ໂມດູນລະບຸເຖິງຜົນການຮຽນ.

| ຕາຕະລາງ 1 | | | | | | |
|---|---|---|---|---|---|---|
| ຜົນການຮຽນ | ໂມດູນ 1 | ໂມດູນ 2 | ໂມດູນ 3 | ໂມດູນ 4 | ໂມດູນ 5 | ໂມດູນ 6 |
| ຜົນການຮຽນ 1 | X | | X | | | |
| ຜົນການຮຽນ 1 | | X | | | | X |
| ຜົນການຮຽນ 1 | X | | | | X | |
| .. | | | | | | |

ຕາຕະລາງ 2 ຂ້າງລຸ່ມນີ້ກຳນົດຈຸດປະສົງການຮຽນຮູ້, ເນື້ອໃນ, ວິທີການສອນ, ແລະ ໄລຍະເວລາສຳລັບແຕ່ລະໂມດູນ.

| ຕາຕະລາງ 2 | | | | |
|---|---|---|---|---|
| ໂມດູນທີ່ຕ້ອງການ | ຈຸດປະສົງການຮຽນຮູ້ | ເນື້ອໃນ | ວິທີການສອນ | ໄລຍະເວລາ |
| ໂມດູນ 1 | | | | |
| ໂມດູນ 2 | | | | |
| ໂມດູນ 3 | | | | |
| ໂມດູນ 4 | | | | |
| ໂມດູນ 5 | | | | |
| ... | | | | |

## ບົດທີ 3.9: ວິທີການສຶກສາ

ເມື່ອເນື້ອໃນການຮຽນຮູ້ ແລະ ໂມດູນຖືກກຳນົດ, ຂັ້ນຕອນຕໍ່ໄປແມ່ນການເລືອກວິທີການຮຽນ-ການສິດສອນທີ່ມີປະສິດທິພາບ ແລະ ມີຄວາມກ່ຽວຂ້ອງທີ່ສຸດສຳລັບແຕ່ລະໂມດູນ. ບາງວິທີແມ່ນເໝາະສົມກວ່າວິທີອື່ນເພື່ອບັນລຸຜົນການຮຽນສະເພາະປະເພດໃດໜຶ່ງ.

ຕົວຢ່າງ:

- ຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບວິຊາໃດໜຶ່ງມັກຈະຖືກພັດທະນາໄດ້ດີທີ່ສຸດໂດຍຜ່ານການບັນຍາຍ ແລະ ສຳມະນາ.
- ທັກສະທາງປັນຍາ ເຊັ່ນ: ການວິເຄາະ, ການສັງເຄາະ, ການປະເມີນຜົນ, ແລະ ການແກ້ໄຂບັນຫາ, ສາມາດປະຕິບັດ ແລະ ສາທິດໂດຍຜ່ານຂະບວນການຮຽນຮູ້ຢ່າງຫ້າວຫັນ, ລວມທັງການມອບວຽກບ້ານ, ໂຄງການ, ກິດຈະກຳກຸ່ມ, ສຳມະນາ.
- ທັກສະການປະຕິບັດຄວນໄດ້ຮັບການພັດທະນາໂດຍຜ່ານໂອກາດໃນການປະຕິບັດໃນສະພາບການຮຽນຮູ້ທີ່ກ່ຽວຂ້ອງເຊັ່ນ: ຫ້ອງທົດລອງ, ປະສົບການໃນພາກສະໜາມ, ຫຼື ບ່ອນເຮັດວຽກ.
- ທັກສະທາງສັງຄົມສາມາດເສີມສ້າງໄດ້ໂດຍຜ່ານວິທີການຮຽນທີ່ເນັ້ນເອົາຜູ້ຮຽນເປັນໃຈກາງ, ປະສົບການ ແລະ ການຮ່ວມມື.

ການສະທ້ອນກ່ຽວກັບສະພາບແວດລ້ອມການຮຽນຮູ້ ແລະ ຮູບແບບການຈັດສິ່ງຄວນຖືກແກ້ໄຂເຊັ່ນກັນ. ຫຼັກສູດການຝຶກອົບຮົມສາມາດດໍາເນີນການດ້ວຍແບບເຊິ່ງໜ້າ ຫຼື ອອນໄລນ໌. ໃນກໍລະນີຫຼັກສູດອອນໄລນ໌ ຫຼື ຮູບແບບປະສົມ, ຄວນໄດ້ຮັບການກໍານົດເຄື່ອງມືພິເສດສໍາລັບການຮຽນຮູ້ຮ່ວມກັນ, ການຈັດການການສົນທະນາ, ການຝຶກອົບຮົມທີ່ນໍາໂດຍຜູ້ສອນ, ຫຼື ກອງປະຊຸມແບບຖ່າຍທອດສົດ.

ໃນບໍລິບົດຂອງໂຄງການ INNO4Tourism, ດັ່ງທີ່ປະກົດໃນບົດລາຍງານລະດັບຊາດ, ຂໍ້ສະເໜີແນະດັ່ງຕໍ່ໄປນີ້ໄດ້ຖືກສະຫຼຸບສໍາລັບການພັດທະນາຂອງຫຼັກສູດໃໝ່ ແລະ ຄໍາແນະນໍາກ່ຽວກັບ:

"ນັກວິຊາການດ້ານການທ່ອງທ່ຽວຫຼາຍທ່ານໄດ້ເຫັນດີວ່າຫຼັກສູດການສຶກສາຊັ້ນສູງຄວນຈະມີມິຕິສໍາຄັນໃນການແກ້ໄຂບັນຫາສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ, ເພື່ອຜະລິດຜູ້ປະຕິບັດດ້ານການທ່ອງທ່ຽວທີ່ມີວິຈາລະນາຍານ ແລະ ຄວາມຍືດຫຍຸ່ນຫຼາຍຂຶ້ນ ຊຶ່ງບໍ່ພຽງແຕ່ຈົບການສຶກສາທີ່ກຽມພ້ອມເຂົ້າເຮັດວຽກເທົ່ານັ້ນ (Jamal et al 2011; Belhassen ແລະ. Caton, 2011; Canziani, Sönmez, Hsieh, & Byrd 2012; Jennings 2017; Camargo & Gretzel 2017). Jamal ພ້ອມດ້ວຍຄະນະ ໄດ້ນໍາສະເໜີແນວທາງທີ່ກ້າວໜ້າໃນທາງດ້ານປະສົບການ ແລະ ການຮ່ວມເຊິ່ງເອີ້ນວ່າ ການສຶກສາການທ່ອງທ່ຽວແບບຍືນຍົງ (STP) ເຊິ່ງສາມາດຖືກລວມເຂົ້າໃນຫຼັກສູດການສຶກສາທົ່ວໄປ ເພື່ອໃຫ້ນັກຮຽນມີປະສົບການໃນໂລກແຫ່ງຄວາມເປັນຈິງ (Jamal et al. 2011; Seraphin et al. 2021; Septyandi & Prawira 2022). ອີງຕາມການ Jamal ພ້ອມດ້ວຍຄະນະ (2011), STP ແມ່ນແນວທາງການສິດສອນທີ່ເນັ້ນການລົງມືການປະຕິບັດ ແລະ ການປ່ຽນແປງທີ່ຄວນຈະແກ້ໄຂບັນຫາສິ່ງແວດລ້ອມ ແລະ ສັງຄົມທີ່ແທ້ຈິງຂອງໂລກແຫ່ງຄວາມເປັນຈິງ ແລະ ບໍ່ພຽງແຕ່ທາງດ້ານທິດສະດີເທົ່ານັ້ນ ແຕ່ຍັງຕ້ອງສິ່ງເສີມສະຫວັດດີພາບຂອງນັກທ່ອງທ່ຽວ ແລະ ທຸລະກິດທີ່ກ່ຽວຂ້ອງກັບການທ່ອງທ່ຽວ ແລະ ແນວຄວາມຄິດທີ່ຍືນຍົງຄົງທີ່ລະຫວ່າງຜູ້ນໍາໃນອະນາຄົດ. STP ປ່ຽນແປງຈາກຮູບແບບການສຶກສາແບບເສລີນິຍົມທີ່ເນັ້ນໃສ່ຕົນເອງໃນທາງທິດສະດີ ໄປສູ່ຮູບແບບຮັດທີ່ຜະລິດນັກຮຽນທີ່ມີຄວາມກ້າວໜ້າທີ່ເນັ້ນໄປສູ່ການປະຕິບັດທາງສັງຄົມ, ມີຄວາມຮູ້ໃນການປະຕິບັດແລະ ທັກສະການແກ້ໄຂບັນຫາ ແລະ ມີຄວາມອ່ອນໄຫວໂດຍສະເພາະກັບກຸ່ມຄົນດ້ອຍໂອກາດ ແລະ ໂຄງສ້າງທາງອໍານາດ. STP ໂດຍອີງໃສ່ຄວາມຮູ້ຫຼັກ 6 ດ້ານ (ດ້ານວິຊາການ, ການວິເຄາະ, ນິເວດວິທະຍາ, ພະຫຸວັດທະນະທໍາ, ຈັນຍາບັນ ແລະ ການເມືອງ) ຊຶ່ງກໍານົດເປັນເຊື່ອມສານເອົາຄວາມຮູ້ປະເພດຕ່າງໆມາເຂົ້າກັນ ໂດຍຄອບຄຸມເຖິງຂະບວນການໂດຍຜ່ານການຖືກສະສົມ, ປະມວນຜົນ, ແລະ ນໍາໃຊ້. (Jamal et al., 2011; Camargo & Gretzel, 2017; Seraphin et al., 2021).

## ບົດທີ 3.10: ທີມງານວິຊາການດ້ານການສຶກສາ ແລະ ເຕັກນິກ

ຂັ້ນຕອນຕໍ່ໄປກ່ຽວຂ້ອງກັບການມີສ່ວນຮ່ວມຂອງທີມງານການສຶກສາ, ຜູ້ຊ່ຽວຊານ ແລະ ຜູ້ປະກອບວິຊາຊີບຕ່າງໆ ເພື່ອສ້າງຄຸນສົມບັດ ແລະ ຄວາມຕ້ອງການດ້ານວິຊາການທີ່ກົງກັບຜົນການຮຽນ ແລະ ໂມດູນ.

ປັດໃຈຕໍ່ໄປນີ້ຄວນຖືກພິຈາລະນາ:

- ປະເມີນຄວາມສາມາດທີ່ຕ້ອງການເພື່ອສອດຄ່ອງກັບຜົນການຮຽນຂອງຫຼັກສູດໃນທົ່ວທຸກໂມດູນສະເພາະ.
- ກວດສອບລາຍລະອຽດການພັນລະນາຂອງນັກການສຶກສາ, ຊ່ຽວຊານ, ແລະ ຜູ້ປະກອບອາຊີບທີ່ກ່ຽວຂ້ອງກັບຫຼັກສູດ.
- ໃຫ້ແນ່ໃຈວ່າຄວາມສາມາດທີ່ຈໍາເປັນເຫຼົ່ານີ້ຖືກເຊື່ອມໂຍງໂດຍກົງກັບຜົນການຮຽນຂອງຫຼັກສູດໃນທຸກໂມດູນສະເພາະ ເພື່ອຮັບປະກັນຄວາມສອດຄ່ອງ ແລະ ຄວບຄຸ້ມຫົວຂໍ້ ແລະ ວິຊາທີ່ກ່ຽວຂ້ອງທັງຫມົດຄົບຖ້ວນ..

## ບົດທີ 3.11.: ແຫຼ່ງສື່ການຮຽນຮູ້

ຂັ້ນຕອນຕໍ່ໄປກ່ຽວຂ້ອງກັບການຄັດເລືອກເອົາສື່ການຮຽນຮູ້ທີ່ເຫມາະສົມ ຊຶ່ງສະໜັບສະໜູນໃຫ້ຜູ້ຮຽນໄດ້ຮັບຄວາມຮູ້ ແລະ ທັກສະທີ່ຕ້ອງການທີ່ຕັ້ງໄວ້ຢ່າງມີປະສິດທິພາບ. ຮັບປະກັນວ່າອຸປະກອນການສອນ ແລະ ການປະເມີນແມ່ນມີມາດຕະຖານໃນແຕ່ລະໂມດູນ, ສົ່ງເສີມຄວາມສອດຄ່ອງ, ເຊິ່ງຊ່ວຍສ້າງຄວາມຄາດຫວັງທີ່ຊັດເຈນ ແລະ ປະສົບການການຮຽນຮູ້ທີ່ເທົ່າທຽມ (UNESCO, 2014). ແຫຼ່ງ ແລະ ສື່ການຮຽນຮູ້ທີ່ຄວບຄຸມ, ເລິກເຊິ່ງ, ກວ້າງຂວາງ ແລະ ເປັນຫຼັກຖານອັນມີຄ່າເພື່ອສະໜັບສະໜູນຜົນໄດ້ຮັບທີ່ກ່ຽວຂ້ອງກັບຫຼັກສູດສະເພາ ເພື່ອຮັບປະກັນວ່າຜູ້ຮຽນທຸກຄົນແຫຼ່ງທີ່ຈໍາເປັນເພື່ອການຈະເລີນເຕີບໂຕ. ການລວມເອົາແຫຼ່ງຊັບພະຍາກອນທາງການສຶກສາແບບເປີດ ແລະ ເຄື່ອງມືດິຈິຕອນຊ່ວຍເສີມສ້າງສະພາບແວດລ້ອມການຮຽນຮູ້ໂດຍການເສີມສ້າງແນວຄວາມຄິດຫຼັກໆ, ສະເໜີນໍາແອບເພຣເຄຊັນທີ່ໃຊ້ໄດ້ຈິງ ແລະ ຊຸກຍູ້ການມີສ່ວນຮ່ວມ.

## ບົດທີ 3.12.: ການຕິດຕາມກວດກາ ແລະ ການປະເມີນ

ການວາງແຜນຍຸດທະສາດການປະເມີນຜົນແມ່ນໄລຍະທີ່ສໍາຄັນໃນຂະບວນການພັດທະນາຫຼັກສູດ. ສິ່ງນີ້ແມ່ນກ່ຽວຂ້ອງກັບການວາງແຜນເຄື່ອງມືການປະເມີນຜົນຮ່ວມກັນ:

- ເພື່ອວັດແທກຜົນການຮຽນ ແລະ ປະເມີນທັກສະ ແລະ ຄວາມຮູ້ທີ່ຜູ້ຮຽນຄາດວ່າຈະໄດ້ຮັບ;
- ເພື່ອກໍານົດຊ່ອງຫວ່າງ ແລະ ພື້ນທີ່ສໍາລັບການປັບປຸງເພີ່ມເຕີມເພື່ອຮັບປະກັນວ່າຫຼັກສູດຍັງກ່ຽວຂ້ອງກັບຄວາມຕ້ອງການຂອງຜູ້ຮຽນໃນຂະນະທີ່ສອດຄ່ອງກັບແນວໂນ້ມຂອງຕະຫຼາດ ແລະ ຄວາມຕ້ອງການຂອງອຸດສາຫະກໍາໃນປະຈຸບັນ.
- ເພື່ອປະເມີນຜົນກະທົບທາງດ້ານສັງຄົມຂອງຫຼັກສູດຕໍ່ກັບຊຸມຊົນທ້ອງຖິ່ນທີ່ກ່ຽວຂ້ອງ.
- ເພື່ອທົບທວນ ແລະ ປະເມີນປະສົບການການຮຽນຮູ້, ຜົນໄດ້ຮັບ ແລະ ບົດຮຽນທີ່ຖອດຖອນໄດ້ ເພື່ອປັບປຸງ ແລະ/ຫຼື ພັດທະນາຫຼັກສູດໃໝ່ທີ່ປະສົບຜົນສໍາເລັດ.

ຍຸດທະສາດການປະເມີນຜົນທີ່ມີປະສິດທິພາບຕ້ອງປະກອບມີ:

- ການຕິດຕາມ ແລະ ການທົບທວນແຕ່ລະໄລຍະຂອງຫຼັກຫສູດການຮຽນຮູ້ ແລະ ໂມດູນສະເພາະ.

- ການປະເມີນຜົນການຮຽນຮູ້, ຕະຫຼອດເຖິງຄວາມຄາດຫວັງ, ການມີສ່ວນຮ່ວມ ແລະ ສະຫວັດດີພາບຂອງຜູ້ຮຽນ
- ຄຸນະພາບຂອງຄູສອນ.
- ການປະເມີນສະພາບແວດລ້ອມການຮຽນຮູ້ ແລະ ຊັບພະຍາກອນ (ສື່ການສອນ).

ການວາງແຜນຍຸດທະສາດການປະເມີນຜົນພາຍໃນຂະບວນການພັດທະນາຫຼັກສູດເປັນຫຼາຍກວ່າການປະເມີນຄວາມຮູ້ ແລະ ທັກສະ. ມັນມີຈຸດປະສົງເພື່ອສ້າງວັດທະນະທຳຂອງການປັບປຸງຢ່າງບໍ່ຢຸດຢັ້ງ, ຊຸກຍູ້ໃຫ້ມີແນວຄິດວິຈາລະນາຍານ (ມີເຫດມີຜົນ), ມີສ່ວນຮ່ວມຢ່າງຕັ້ງໜ້າ, ການສື່ສານທີ່ເປີດກວ້າງ ແລະ ຄວາມຮັບຜິດຊອບຂອງທຸກພາກສ່ວນທີ່ກ່ຽວຂ້ອງ.

## ບົດທີ 3.13: ໄລຍະເວລາ

ການກຳນົດໄລຍະເວລາທີ່ຄອບຄຸມ ແລະ ປັບປ່ຽນໄດ້ ແມ່ນສິ່ງສຳຄັນ ເຊິ່ງບໍ່ພຽງແຕ່ກຳນົດໄລຍະເວລາໂດຍລວມຂອງຫຼັກສູດເທົ່ານັ້ນ, ແຕ່ຍັງມີອິດທິພົນຕໍ່ຈັງຫວະ ຫຼື ຄວາມໄວໃນການຮຽນຮູ້ຂອງຜູ້ຮຽນໃນແຕ່ລະໂມດູນທີ່ແຕກຕ່າງກັນດ້ວຍ. ເພື່ອກຳນົດໄລຍະເວລາທີ່ມີປະສິດທິພາບ, ມັນຈຳເປັນຕ້ອງປະກອບມີຕາຕະລາງເວລາ ແລະ ໂມດູນທີ່ຊັດເຈນ, ລະບຸຫົວຂໍ້, ບົດຮຽນ, ແລະ ກອງປະຊຸມປະເມີນຜົນ.

ໄລຍະເວລາທີ່ມີໂຄງສ້າງທີ່ດີຄວນປະກອບມີ:

- ຄາດຄະເນ(ເບິ່ງເຫັນ) ບັນດາໂມດູນ ແລະ ບົດຮຽນທີ່ໄດ້ຮັບການສ້າງຂຶ້ນເທື່ອລະກ້າວ ເພື່ອຮັບປະກັນວ່າບັນດາແນວຄິດພື້ນຖານຈະໜັກແໜ້ນຂຶ້ນກ່ອນທີ່ຈະນຳສະເໜີເອົາຫົວຂໍ້ທີ່ສັບສົນກວ່າເຂົ້າມາ;
- ປະສົມປະສານຄວາມຍືດຢຸ່ນເພື່ອພິຈາລະນາເຖິງສິ່ງທ້າທາຍທີ່ບໍ່ໄດ້ຄາດໄວ້ ຫຼື ຄວາມລ່າຊ້າທີ່ອາດເກີດຂຶ້ນ;
- ອະນຸຍາດໃຫ້ມີການປັບປ່ຽນໂດຍອີງໃສ່ຄຳຕິຊົມໃນເວລາທີ່ແທ້ຈິງຈາກຜູ້ຮຽນແລະ ທຸກພາກສ່ວນທີ່ກ່ຽວຂ້ອງ.

## ບົດທີ 3.14.: ກອບ (ແຜນງານ) ແລະ ເຄື່ອງມືຂອງສະຫະພາບເອີຣົບ ສຳລັບການປຽບທຽບ ແລະ ຄວາມໂປ່ງໃສ

**ກອບຄຸນວຸດທິການສຶກສາຂອງສະຫະພາບເອີຣົບ EQF – the European Qualifications Framework**[2]: ນີ້ແມ່ນການອ້າງອີງທົ່ວໄປສຳລັບການເຮັດໃຫ້ຄຸນວຸດທິທີ່ເຫັນໄດ້ຊັດເຈນ ແລະ ສາມາດປຽບທຽບໄດ້ຫຼາຍຂຶ້ນໃນແຕ່ລະປະເທດ ແລະ ລະບົບຕ່າງໆ. EQF ປະກອບດ້ວຍ 8 ລະດັບ ຊຶ່ງນັບແຕ່ຈົບການສຶກສາພາກບັງຄັບ (ລະດັບ 1 ຫາ 3) ຈົນເຖິງລະດັບຄຸນວຸດທິສູງສຸດເຊັ່ນ: ປະລິນຍາເອກ (ລະດັບ 8). ມັນກວມເອົາທຸກລະດັບ ແລະ ທຸກລະບົບຍ່ອຍຂອງການສຶກສາ ແລະ ການຝຶກອົບຮົມ, ສຸມໃສ່ຜົນການຮຽນຮູ້ ແລະຄວາມຮູ້, ທັກສະ ແລະ ຄວາມສາມາດຂອງບຸກຄົນ. ຄຸນຄຸນວຸດທິການສຶກສາໃນ EQF ແມ່ນຜົນໄດ້ຮັບຫຼາຍກວ່າປັດໃຈນຳເຂົ້າ. ຫຼັງຈາກການຮັບຮອງເອົາວຸດທິການສຶກສາ (EQF) ຂັ້ນພື້ນຖານມາໃຊ, ສະຫະພາບເອີຣົບໄດ້ເຊື້ອເຊີນປະເທດສະມາຊິກທັງຫມົດເພື່ອຮັບຮອງເອົາກອບຄຸນວຸດທິແຫ່ງຊາດ (NQF) ມາໃຊ້, ນັ້ນ

---

[2] The European Qualifications Framework (EQF), https://europass.europa.eu/en/europass-digital-tools/european-qualifications-framework

ແມ່ນ, ຄຳອະທິບາຍຕາມລະດັບຂອງຄຸນວຸດການສຶກສາທັງຫມົດຂອງລະບົບການສຶກສາແລະການຝຶກອົບຮົມແຫ່ງຊາດຂອງເຂົາເຈົ້າ. ບາງປະເທດແມ່ນເປັນສະມາຊິກຂອງ NQF ແລ້ວ, ບາງປະເທດບໍ່ທັນເປັນສະມາຊິກ.

**ລະບົບການໂອນ ແລະ ສະສົມໜ່ວຍກິດຂອງເອີຣົບ ( ECTS – European Credit Transfer and Accumulation System[3] )** ເປັນລະບົບໜ່ວຍກິດທີ່ອອກແບບເພື່ອອະນຸຍາດໃຫ້ນັກສຶກສາທີ່ຈະຍ້າຍຖິ່ນຖານໄປມາລະຫວ່າງປະເທດຕ່າງໆໄດ້. ໂດຍສະເພາະແມ່ນໃຊ້ກັບມະຫາວິທະຍາໄລ, ແຕ່ຍັງສາມາດນຳໃຊ້ໃນລະດັບການສຶກສາອື່ນໆໄດ້ ຊຶ່ງຈຳນວນໜ່ວຍກິດແມ່ນຂຶ້ນກັບວຽກທີ່ຜູ້ຮຽນຕ້ອງການເພື່ອບັນລຸຜົນການຮຽນຮູ້ທີ່ຄາດໄວ້; ຜົນໄດ້ຮັບການຮຽນຮູ້ກ່ຽວຂ້ອງກັບຕົວຊີ້ວັດລະດັບໃນຂອບເຂດຄຸນວຸດທິການສຶກສາລະດັບຊາດ ແລະ ລະດັບຢູເອີຣົບ. ປະລິມານວຽກຊີ້ບອກເຖິງເວລາທີ່ນັກຮຽນຕ້ອງເຮັດເພື່ອໃຫ້ສຳເລັດທຸກກິດຈະກຳການຮຽນ (ການບັນຍາຍ, ສຳມະນາ, ໂຄງການ, ເວລາຮຽນເອກະລາດ, ແລະອື່ນໆ) ທີ່ຈຳເປັນເພື່ອບັນລຸວຸດທິການສຶກສາ. ໜ່ວຍກິດທີ່ໄດ້ຮັບໂດຍການສອບເສັງຜ່ານ / ສຳເລັດກິດຈະກຳການຮຽນຮູ້ກາຍເປັນ "ສະກຸນເງິນ" ທີ່ຜູ້ຮຽນສາມາດນຳໃຊ້ເພື່ອປ່ຽນລະບົບການສຶກສາຫນຶ່ງໄປອີກລະບົບການສຶກສາຫນຶ່ງ.

**ມາດຕະຖານ ແລະ ຄຳແນະນຳສຳລັບການຮັບປະກັນຄຸນນະພາບການສຶກສາຊັ້ນສູງໃນເອີຣົບ (ESG – Standards and guidelines for quality assurance in European Higher Education[4])**: ແມ່ນຊຸດມາດຕະຖານ ແລະ ຄຳແນະນຳສຳລັບການຮັບປະກັນຄຸນນະພາບພາຍໃນ ແລະ ພາຍນອກຂອງການສຶກສາຊັ້ນສູງ. ESG ບໍ່ແມ່ນມາດຕະຖານດ້ານຄຸນນະພາບ, ແລະ ບໍ່ໄດ້ກຳນົດວິທີດຳເນີນການຂະບວນການຮັບປະກັນຄຸນນະພາບ, ແຕ່ເປັນການໃຫ້ຄຳແນະນຳ ທີ່ຄອບຄຸມເຖິງພື້ນທີ່ສຳຄັນສຳລັບການສະຫນອງຄຸນນະພາບ ແລະ ສະພາບແວດລ້ອມການຮຽນຮູ້ທີ່ປະສົບຜົນສຳເລັດໃນການສຶກສາຊັ້ນສູງ. ESG ສະຫນອງເງື່ອນໄຂໃນລະດັບຢູຣົບສຳລັບປະເມີນໜ່ວຍງານປະກັນຄຸນນະພາບ ແລະ ກິດຈະກຳຕ່າງໆ.

**ລະບົບໜ່ວຍກິດເອີຣົບສຳລັບການສຶກສາ ແລະ ການຝຶກອົບຮົມວິຊາຊີບ (ECVET - European Credit System for Vocational Education and Training[5])** ແມ່ນລະບົບໜ່ວຍກິດສຳລັບການສຶກສາ ແລະ ການຝຶກອົບຮົມວິຊາຊີບ (VET), ນັ້ນແມ່ນ, ກອບດ້ານເທັກນິດວິຊາການໃນການໂອນ, ຮັບຮູ້ ແລະ ສະສົມຜົນການຮຽນຮູ້ຂອງບຸກຄົນເພື່ອບັນລຸຄຸນວຸດທິການສຶກສາ. ລະບົບນີ້ມີຈຸດຮ່ວມບາງຈຸດກັບ ECTS, ECTS ແມ່ນລະບົບການສະສົມໜ່ວຍກິດ ໂດຍມີຈຸດປະສົງເພື່ອອຳນວຍຄວາມສະດວກໃນການຮັບຮູ້ຜົນການຮຽນຮູ້ ເພື່ອໃຫ້ໄດ້ຮັບຄຸນວຸດທິການສຶກສາ ແລະການສະຫນັບສະຫນູນການເຄື່ອນຍ້າຍຂອງພົນລະເມືອງໃນຢູ່ຣົບ. ໃນຂະນະດຽວກັນ, ລະບົບນີ້ບໍ່ໄດ້ຂຶ້ນກັບປະລິມານວຽກງານການຮຽນ ແຕ່ຂຶ້ນກັບຜົນການຮຽນໂດຍກົງ. ລະບຽບການນີ້ກວມເອົາການສຶກສາໃນລະບົບ (ເປັນທາງການ) ແລະ ນອກລະບົບ (ບໍ່ເປັນທາງການ); ແລະ ເນັ້ນໃສ່ຕະຫຼາດແຮງງານຫຼາຍຂຶ້ນ.

---

[3] European Credit Transfer and Accumulation System (ECTS), https://education.ec.europa.eu/education-levels/higher-education/inclusive-and-connected-higher-education/european-credit-transfer-and-accumulation-system

[4] ESG – Standards and guidelines for quality assurance in European Higher Education, https://enqa.eu/wp-content/uploads/2015/11/ESG_2015.pdf

[5] ECVET - European Credit System for Vocational Education and Training, https://www.cedefop.europa.eu/en/projects/european-credit-system-vocational-education-and-training-ecvet

**ກອບເອກະສານອ້າງອີງການຮັບປະກັນຄຸນນະພາບຂອງເອີຣົບ** (EQAVET – European Quality Assurance Reference Framework[6]): ເປັນເຄື່ອງມືອ້າງອີງທີ່ຖືກອອກແບບມາເພື່ອຊ່ວຍໃຫ້ບັນດາປະເທດສະມາຊິກສະຫະພາບເອີຣົບ ແນະນໍາການປັບປຸງລະບົບການສຶກສາ ແລະ ການຝຶກອົບຮົມວິຊາຊີບຢ່າງຕໍ່ເນື່ອງໂດຍອີງໃສ່ການອ້າງອີງທີ່ຕົກລົງກັນໄວ້. EQAVET ມີວັດຖຸປະສົງເພື່ອສ້າງຄວາມໄວ້ວາງໃຈເຊິ່ງກັນ ແລະ ກັນລະຫວ່າງລະບົບອະຊີວະສຶກສາ, ເພື່ອເຮັດໃຫ້ປະເທດຕ່າງໆຍອມຮັບ ແລະ ຮັບຮູ້ທັກສະ ແລະ ຄວາມສາມາດທີ່ໄດ້ມາໂດຍຜູ້ຮຽນໄດ້ຮັບມາຈາກປະເທດ ແລະ ສະພາບແວດລ້ອມການຮຽນຮູ້ທີ່ແຕກຕ່າງກັນໄດ້ງ່າຍຂຶ້ນ.

**ທັກສະ, ຄວາມສາມາດ, ຄຸນສົມບັດ ແລະ ວິຊາຊີບຂອງເອີຣົບ** (ESCO-European Skills, Competences, Qualifications and Occupations[7]): ແມ່ນການຈັດແບ່ງປະເພດທັກສະ, ຄວາມສາມາດ, ຄຸນສົມບັດ ແລະ ວິຊາຊີບໃນພະຫຸພາສາທີ່ກ່ຽວຂ້ອງກັບຕະຫຼາດແຮງງານ ແລະ ການສຶກສາ ແລະ ການຝຶກອົບຮົມຂອງ ສະຫະພາບຢູຣົບ ຊຶ່ງສ້າງຕັ້ງຂຶ້ນໃນປີ 2017, ມັນຍັງກໍາລັງພັດທະນາຢູ່. ຄະນະກໍາມະການພັດທະນາ ESCO ເປັນເຄື່ອງມືເສີມສໍາລັບ EQF. ESCO ສະເໜີຄໍາສັບທີ່ເປັນມາດຕະຖານເພື່ອເຮັດໃຫ້ຄໍາອະທິບາຍຜົນການຮຽນຮູ້ເຫຼົ່ານີ້ເຂົ້າໃຈໄດ້ ແລະສາມາດປຽບທຽບໄດ້ຂ້າມຊາດ.

## ສະຫຼຸບ

ສະຫລຸບແລ້ວ, ບົດທີ 3 ຂອງບົດແນະນໍາການພັດທະນາຫຼັກສູດໄດ້ຊີ້ແຈງຂະບວນການແບບບູລະນາການ ແລະ ວົນຊ້ໍາສໍາລັບການອອກແບບ, ອະນຸມັດ, ແລະ ຮັບປະກັນຄຸນນະພາບຂອງຫຼັກສູດ ໂດຍເນັ້ນໜັກວ່າການພັດທະນາຫຼັກສູດນັ້ນແມ່ນມີຈຸດປະສົງເພື່ອໃຫ້ເປັນຂະບວນການຢ່າງຕໍ່ເນື່ອງ ແລະ ວົງຈອນທີ່ມີຂັ້ນຕອນທີ່ເຊື່ອມໂຍງເກາະກ່າຍກັນ. ຂະບວນການນີ້ຮຽກຮ້ອງໃຫ້ຕ້ອງສອດຄ່ອງກັບມາດຕະຖານການຄຸ້ມຄອງ, ຕະຫຼອດເຖິງຄວາມຈໍາເປັນ ແລະ ຄວາມຕ້ອງການທີ່ປ່ຽນແປງໄປຂອງຂະແໜງການທ່ອງທ່ຽວ ແລະ ຂອງສັງຄົມ. ການພັດທະນາຫຼັກສູດແມ່ນອາໄສການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງທັງໝົດຕະຫຼອດຮອດການເປັນເຈົ້າການຂອງທີ່ເຂັ້ມແຂງຂອງຊຸມຊົນ ເພື່ອຮັບປະກັນການມີສ່ວນຮ່ວມຢ່າງກວ້າງຂວາງ ແລະ ການສ້າງຄວາມເຫັນດີເຫັນພ້ອມ ແລະ ຍັງຮຽກຮ້ອງໃຫ້ມີການຕິດຕາມສະຫມໍ່າສະເຫມີຂອງຜົນກະທົບ, ການແນະນໍາມາດຕະການປ້ອງກັນ ແລະ/ຫຼື ການແກ້ໄຂທີ່ຈໍາເປັນໃນທຸກຄັ້ງທີ່ມີຄວາມຈໍາເປັນ.

# ກິດຈະກໍາແບບມີສ່ວນຮ່ວມ

## ກິດຈະກໍາ 1

| | |
|---|---|
| ຫົວຂໍ້ກິດຈະກໍາ | ການມີສ່ວນຮ່ວມຂອງຜູ້ກ່ຽວຂ້ອງ |

[6] EQAVET – European Quality Assurance Reference Framework, https://epale.ec.europa.eu/en/blog/eqavet-framework

[7] ESCO - European Skills, Competences, Qualifications and Occupations, https://esco.ec.europa.eu/en

| | |
|---|---|
| ເວລາ | 60 ນາທີ |
| ວິທີການສິດສອນ | • ແບ່ງຜູ້ຮຽນອອກເປັນສອງກຸ່ມ ຫຼື ຫຼາຍກວ່ານັ້ນ (ຕາມຈຳນວນຂອງຜູ້ຮຽນ).<br>• ມອບແຜ່ນແຜ່ນພັບ ແລະ ເຄື່ອງໝາຍບິກເຟີດ ຫຼື ປາກກາ ແລະ ເຈ້ຍໃຫ້ແຕ່ລະກຸ່ມ.<br>• ແນະນຳຜູ້ເຂົ້າຮ່ວມກ່ຽວກັບຕາຕະລາງມາຕຣິກຂອງຜູ້ມີສ່ວນກ່ຽວຂ້ອງ. ມາຕຣິກຂອງຜູ້ມີສ່ວນກ່ຽວຂ້ອງລວມເຖິງບັນດານັກສະແດງທີ່ສຳຄັນທັງພາກລັດ ແລະ ເອກະຊົນ ແລະ ກຸ່ມຄົນຕ່າງໆໃນລະດັບຊຸມຊົນ, ລະດັບຊາດ, ພາກພື້ນແລະ ສາກົນທີ່ຄວນມີສ່ວນຮ່ວມ ເພື່ອຮັບປະກັນວ່າວິໄສທັດຫຼັກສູດແມ່ນຜົນມາຈາກຂະບວນການປຶກສາຫາລືຢ່າງກ້ວາງຂວາງ ແລະ ມີສ່ວນຮ່ວມກັບຜູ້ກ່ຽວຂ້ອງ. ມາຕຣິກແມ່ນແຜນງານຍຸດທະສາດທີ່ໃຊ້ເພື່ອຈັດປະເພດພາກສ່ວນກ່ຽວຂ້ອງອອກເປັນສີ່ສ່ວນ ໂດຍອີງໃສ່ສອງປັດໃຈຕົ້ນຕໍ, ຄື, ອຳນາດທີ່ມີອິດທິພົນຕໍ່ຫຼັກສູດ ແລະລະດັບຄວາມສົນໃຈຂອງເຂົາເຈົ້າ ແລະ/ຫຼື ອິດທິພົນໃນຜົນໄດ້ຮັບຂອງຫຼັກສູດ.<br>• ບອກໃຫ້ຜູ້ເຂົ້າຮ່ວມກຳນົດ ແລະ ຈັດວາງຢູ່ຜູ້ມີສ່ວນກ່ຽວຂ້ອງທັງຫມົດທີ່ມີອຳນາດ ແລະ ອິດທິພົນທີ່ສຳຄັນໃນຂະບວນການພັດທະນາຫຼັກສູດຂອງຕົນໃນຕາຕະລາງມາຕຣິສ.<br>• ຖາມຄຳຖາມຕໍ່ໄປນີ້: ກຸ່ມຜູ້ມີສ່ວນກ່ຽວຂ້ອງໃດສາມາດສະໜອງຂໍ້ມູນທີ່ມີຄວາມໝາຍທີ່ສຸດຕໍ່ຂະບວນການພັດທະນາຫຼັກສູດຂອງພວກເຮົາ? ຄຳຖາມສຳຄັນອັນໃດທີ່ພວກເຮົາຄວນຖາມແຕ່ລະກຸ່ມຜູ້ມີສ່ວນກ່ຽວຂ້ອງ? ກົນໄກໃດແດ່ (ເວທີປາໄສ, ກອງປະຊຸມສຳມະນາ, ການສຳມະນາ, ກອງປະຊຸມ, ການສຳຫຼວດ, ແລະອື່ນໆ) ທີ່ເຫມາະສົມທີ່ສຸດທີ່ຈະເຈາະຄຳຕອບຈາກແຕ່ລະກຸ່ມ? ພວກເຮົາສາມາດຮັບປະກັນແນວໃດວ່າບັນດາພາກສ່ວນກ່ຽວຂ້ອງເຫຼົ່ານີ້ມີສ່ວນຮ່ວມໃນການສ້າງ ແລະ ຮັກສາວິໄສທັດຫຼັກສູດຮ່ວມກັນ?<br>• ໃຫ້ແຕ່ລະກຸ່ມມີສ່ວນຮ່ວມເພື່ອນຳສະເໜີ ແລະ ປຶກສາຫາລືຜົນການຄົ້ນຄວ້າ ແລະ ແລກປ່ຽນຄຳຄິດເຫັນເຊິ່ງກັນ ແລະ ກັນ.<br> |

## ກິດຈະກຳ 2

| ຫົວຂໍ້ກິດຈະກຳ | ວິໄສທັດຫຼັກສູດ |
|---|---|
| ເວລາ | 60 ນາທີ |
| ວິທີການສິດສອນ | ນຳສະເໜີນິຍາມກ່ຽວກັບວິໄສທັດຫຼັກສູດຂອງ UNESCO ໂດຍເນັ້ນເປົ້າໝາຍການບັນລຸຂອງການບັນລຸວັດຖຸປະສົງທີ່ເປັນເອກະພາບ ແລະ ທິດທາງໃນໄລຍະຍາວ.<br>● ແບ່ງຜູ້ຮຽນອອກເປັນສອງກຸ່ມ ຫຼື ຫຼາຍກວ່ານັ້ນ (ອີງຕາມຕົວເລກຂອງຜູ້ຮຽນ).<br>● ມອບແຜ່ນແຜ່ນພັບ ແລະ ເຄື່ອງໝາຍບິກເຟີດ ຫຼື ປາກກາ ແລະ ເຈ້ຍໃຫ້ແຕ່ລະກຸ່ມ.<br>● ອີງຕາມການຄົ້ນພົບຕົ້ນຕໍ ແລະ ຜົນຂອງການປະເມີນຄວາມຕ້ອງການການຮຽນຮູ້ທີ່ດຳເນີນຢູ່ໃນຊຸມຊົນເປົ້າໝາຍ, ພາກພື້ນ ຫຼື ປະເທດສະເພາະ, ເຊີນແຕ່ລະກຸ່ມມາລະດົມຄວາມຄິດ ແລະ ກຳນົດວິໄສທັດໄລຍະຍາວ ແລະ ຄ່ານິຍົມຫຼັກຂອງຫຼັກສູດ.<br>● ໃຫ້ຄຳແນະນຳ ແລະ ແນວທາງປະຕິບັດໃນການລະບຸວິໄສທັດຂອງຫຼັກສູດນີ້, ເຊັ່ນ: ຖະແຫຼງການ ຫຼື ຄຳຊີ້ແຈງຄວນມີຄວາມຮັດກຸມ, ສັ້ນກະທັດຫັດ, ສົ່ງເສີມຄວາມເປັນອັນໜຶ່ງອັນດຽວຂອງຈຸດປະສົງ ແລະ ທິດທາງໄລຍະຍາວ, ອີງໃສ່ການຄົ້ນຄວ້າ ແລະ ຄວາມກ່ຽວຂ້ອງ, ມີຄວາມມຸ່ງຫວັງປາຖະໜາ ແລະ ແຮງບັນດານໃຈ, ເປັນໝາກຜົນຂອງຂະບວນການປຶກສາຫາລືຢ່າງກ້ວາງຂວາງ ແລະ ມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ, ຜູ້ຮຽນ ແລະ ຊຸມຊົນການສຶກສາ.<br>● ຫຼັງຈາກລະດົມສະໝອງແລ້ວ, ແຕ່ລະກຸ່ມຄວນຮ່ວມມືກັນຮ່າງຖະແຫຼງການວິໄສທັດໜຶ່ງວັກທີ່ສະທ້ອນແນວຄວາມຄິດລວມຂອງຕົນ.<br>● ໃຫ້ແຕ່ລະກຸ່ມມີສ່ວນຮ່ວມເພື່ອນຳສະເໜີ ແລະ ປຶກສາຫາລືກ່ຽວກັບຜົນການຄົ້ນຄວ້າ, ພ້ອມທັງແລກປ່ຽນຄຳຄິດເຫັນເຊິ່ງກັນ ແລະ ກັນ ພາຍຫຼັງການນຳສະເໜີແຕ່ລະຄັ້ງ, ເປີດພື້ນເພື່ອຮັບຄຳຄິດເຫັນໂດຍຫຍໍ້ຈາກບັນດາກຸ່ມອື່ນໆ, ໂດຍເນັ້ນໃສ່ວິໄສທັດທີ່ສອດຄ່ອງກັບແນວທາງຂອງອົງການ UNESCO ແລະ ຂໍ້ສະເໜີເພີ່ມເຕີມເພື່ອປັບປຸງ.<br>● ໃນຕອນທ້າຍ, ໃຫ້ຜູ້ເຂົ້າຮ່ວມທັງໝົດແລກປ່ຽນຄຳຄິດເຫັນກ່ຽວກັບຜົນສຳເລັດໃນການຮຽນຮູ້ຂອງຕົນ. ຂໍໃຫ້ຜູ້ເຂົ້າຮ່ວມສະທ້ອນວ່າຂະບວນການຮ່ວມມືນີ້ສາມາດນຳໃຊ້ໃນວຽກງານປະຈຳວັນ ແລະ ສະຖາບັນຂອງຕົນໄດ້ແນວໃດ. |

## ກິດຈະກຳ 3

| ຫົວຂໍ້ກິດຈະກຳ | ກອບພັດທະນາຫຼັກສູດ |
|---|---|
| ເວລາ | 120 ນາທີ |
| ວິທີການສິດສອນ | ● ແບ່ງຜູ້ຮຽນອອກເປັນສອງກຸ່ມ ຫຼື ຫຼາຍກວ່ານັ້ນ (ອີງຕາມຕົວເລກຂອງຜູ້ຮຽນ).<br>● ມອບແຜ່ນແຜ່ນພັບ ແລະ ເຄື່ອງໝາຍບິກເຟີດ ຫຼື ປາກກາ ແລະ ເຈ້ຍໃຫ້ແຕ່ລະກຸ່ມ.<br>● ໃຫ້ແຕ່ລະກຸ່ມ ເພື່ອພັດທະນາກອບຫຼັກສູດກ່ຽວກັບການບໍລິການ ແລະ ການທ່ອງທ່ຽວແບບຍືນຍົງ ໃນປະເທດ ແລະ/ຫຼື ພາກພື້ນໃດໜຶ່ງ, ໂດຍການນຳໃຊ້ ແລະ ຕື່ມໃສ່ໃນແບບທີ່ 1: “ກອບການພັດທະນາຫຼັກສູດ”. ແຜນງານຫຼັກສູດ “ກຳນົດພາລາມິເຕີ, ທິດທາງ ແລະ ມາດຕະຖານສຳລັບນະໂຍບາຍ ແລະ ການປະຕິບັດຫຼັກສູດ” (IBE-UNESCO, 2017, ໜ້າ 6-7-8).<br>● ອຳນວຍຄວາມສະດວກໃນການລະດົມສະໝອງກຸ່ມ, ການສື່ສານແບບເປີດ ແລະການພັດທະນາເນື້ອຫາຮ່ວມກັນ.<br>● ຊຸກຍູ້ໃຫ້ແຕ່ລະກຸ່ມນຳສະເໜີ ແລະ ສົນທະນາການຄົ້ນຄ້ວາຂອງຕົນ, ສົນທະນາຂໍ້ມູນຍາກເລີກເຊີງ ແລະ ແລກປ່ຽນຄຳຄິດເຫັນຢ່າງສ້າງສັນ.<br>● ສະຫຼຸບກິດຈະກຳ ໂດຍການເຊີນຜູ້ເຂົ້າຮ່ວມທັງໝົດໃຫ້ສະທ້ອນ ແລະ ແແລກປ່ຽນຄຳຄິດເຫັນກ່ຽວກັບສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ມາ.<br>    ● ເອກະສານຊ້ອນທ້າຍ - ແມ່ແບບທີ **1: “**ກອບການພັດທະນາຫຼັກສູດ”: ແມ່ແບບນີ້ປະກອບດວຍຊຸດຫົວຂໍ້, ຫົວຂໍ້ຍ່ອຍ ແລະ ລຳດັບສຳລັບຂໍ້ມູນທີ່ຖືກອອກແບບມາເພື່ອອຳນວຍຄວາມສະດວກໃນການພັດທະນາ, ການນຳສະເໜີ ແລະ ການກວດສອບຄວາມຖືກຕ້ອງຂອງກອບຫຼັກສູດ. ຜູ້ໃຊ້ທີ່ສົນໃຈອາດຈະເພີ່ມຫົວຂໍ້ເພີ່ມເຕີມທີ່ເຂົາເຈົ້າເຫັນວ່າກ່ຽວຂ້ອງ. |

## ກິດຈະກຳ 4

| ຫົວຂໍ້ກິດຈະກຳ | ການອອກແບບໂມດູນ |
|---|---|
| ເວລາ | 60 ນາທີ |
| ວິທີການສິດສອນ | ● ແບ່ງຜູ້ຮຽນອອກເປັນສອງກຸ່ມ ຫຼື ຫຼາຍກວ່ານັ້ນ (ອີງຕາມຕົວເລກຂອງຜູ້ຮຽນ).<br>● ມອບໝາຍໂມດູນການຮຽນຮູ້ສະເພາະທີ່ປະກອບເປັນຫຼັກສູດໃຫ້ແຕ່ລະກຸ່ມ.<br>● ມອບແຜ່ນແຜ່ນພັບ ແລະ ເຄື່ອງໝາຍມ ບິກ ຫຼື ປາກກາ ແລະ ເຈ້ຍໃຫ້ແຕ່ລະກຸ່ມ. |

| | |
|---|---|
| | • ໃຫ້ແຕ່ລະກຸ່ມມີສ່ວນຮ່ວມ ເພື່ອຈັດໂຄງສ້າງຂອງໂມດູນການຮຽນຮູ້ສະເພາະ , ໂດຍການໃຊ້ ແລະ ຕື່ມຂໍ້ມູນໃສ່ໃນແມ່ແບບ 2 "ການອອກແບບໂມດູນ".<br>• ອຳນວຍຄວາມສະດວກໃນການລະດົມສະໝອງກຸ່ມ, ການສື່ສານແບບເປີດ ແລະ ການພັດທະນາເນື້ອຫາຮ່ວມກັນ.<br>• ຊຸກຍູ້ໃຫ້ແຕ່ລະກຸ່ມນຳສະເໜີ ແລະ ສົນທະນາການຄົ້ນຄ້ວາຂອງຕົນ, ສົນທະນາຂໍ້ມູນຢາກເລີກເຊີງ ແລະ ແລກປ່ຽນຄຳຄິດເຫັນຢ່າງສ້າງສັນ.<br>• ສະຫຼຸບແຊຊັນ ໂດຍການເຊີນຜູ້ເຂົ້າຮ່ວມທັງໝົດໃຫ້ສະທ້ອນ ແລະ ແແລກປ່ຽນຄຳຄິດເຫັນກ່ຽວກັບສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ມາ.<br>**ເອກະສານຊ້ອນທ້າຍ- ແມ່ແບບທີ** 2: "ການອອແບບໂມດູນ": ແມ່ແບບນີ້ປະກອບດ້ວຍຊຸດຫົວຂໍ້, ຫົວຂໍ້ຍ່ອຍ ແລະ ລຳດັບສຳລັບຂໍ້ມູນທີ່ຖືກອອກແບບມາເພື່ອອຳນວຍຄວາມສະດວກໃນການພັດທະນາ, ການນຳສະເໜີ ແລະ ການກວດສອບຄວາມຖືກຕ້ອງຂອງກອບຫຼັກສູດ. ຜູ້ໃຊ້ທີ່ສົນໃຈອາດຈະເພີ່ມຫົວຂໍ້ເພີ່ມເຕີມທີ່ເຂົາເຈົ້າເຫັນວ່າກ່ຽວຂ້ອງ. |

## ແບບປະເມີນນ້ອຍ

1. ການວາງແຜນຍຸດທະສາດການປະເມີນຜົນເປັນໄລຍະທີ່ສຳຄັນໃນຂະບວນການພັດທະນາຫຼັກສູດ
   ກ. ຖືກຕ້ອງ
   ຂ. ບໍ່ຖືກຕ້ອງ

2. ວົງຈອນການພັດທະນາຫຼັກສູດປະກອບດ້ວຍຂັ້ນຕອນທີ່ສຳຄັນຄື:
   ກ. ຄວນຈະສຳເລັດໃນລຳດັບຄວາມຄືບໜ້າ ແລະ ມີເຫດຜົນຢ່າງເປັນລະບົບ
   ຂ. ຖືກຕັດການເຊື່ອມຕໍ່ເຊິ່ງກັນ ແລະ ກັນ
   ຄ. ສາມາດໄດ້ຮັບການປະຕິບັດເປັນເອກະລາດແລະບໍ່ມີລຳດັບເຫດຜົນຢ່າງເປັນລະບົບ
   ງ. ເປັນແບບຄົງທີ່
3. ອົງປະກອບຫຼັກຂອງໂມດູນແມ່ນຫຍັງ?
   ກ. ຈຸດປະສົງ, ຜົນການຮຽນຮູ້, ວິທີການ, ໄລຍະເວລາ, ສື່ອຸປະກອນການຮຽນ, ການປະເມີນ
   ຂ. ຈຸດປະສົງ, ຜົນການຮຽນຮູ້, ເນື້ອໃນ, ວິທີການ, ໄລຍະເວລາ, ສື່ອຸປະກອນການຮຽນ, ການປະເມີນ
   ຄ. ຈຸດປະສົງ, ຜົນການຮຽນຮູ້, ເນື້ອໃນ, ວິທີການ, ການປະເມີນຜົນ
   ງ. ເນື້ອໃນ, ວິທີການ, ໄລຍະເວລາ, ສື່ອຸປະກອນການຮຽນ, ການປະເມີນ
4. ຜົນການຮຽນເປັນຂໍ້ຄວາມທີ່ອະທິບາຍເຖິງສິ່ງທີ່ຜູ້ຮຽນຄວນສາມາດເຮັດໄດ້ໃນຕອນທ້າຍຂອງຫຼັກສູດການຮຽນ, ຫຼັກສູດ, ຫຼື ກິດຈະກຳການຮຽນຮູ້ ໂດຍສະເພາະທັກສະ, ຄວາມຮູ້ ຫຼື ຄວາມສາມາດທີ່ເຂົາເຈົ້າຄວນຈະໄດ້ຮັບ.
   ກ. ຖືກຕ້ອງ
   ຂ. ບໍ່ຖືກຕ້ອງ

5. ການດຳເນີນການປະເມີນຄວາມຕ້ອງການຢ່າງລະອຽດແມ່ນມີຄວາສຳລັບສຳລັບການກຳນົດອີງປະກອບຕ່າງໆທີ່ມີອິດທິພົນຕໍ່ປະສິດທິຜົນຂອງຫຼັກສູດ.
    ກ. ຖືກຕ້ອງ
    ຂ. ບໍ່ຖືກຕ້ອງ

# ແຫຼ່ງຂໍ້ມູນເພີ່ມເຕີມ

Curriculum Development Guidelines - CEDEFOP

Council of Europe Experts - Curriculum Development Good Practice Guide

Prototype of a national curriculum framework: Training tools for curriculum development - UNESCO

Skills for industry curriculum guidelines 4.0 - Publications Office of the EU

# ເອກະສານອ້າງອີງ

Council of Europe (2011). Towards a European Higher Education Area: Curriculum development good practice guide. Available at https://pjp-eu.coe.int/bih-higher-education/images/curriculum_development_good_practice_guide_eng_feb2011_-_abbyy.pdf

DiPietro, C., Dyjur, P., Fitzpatrick, K., Grant, K., Hoessler, C., Kalu, F., Richards, J., Skene, A., & Wolf, P. (2022), Educational Development Guide Series: No. 4. A Comprehensive Guide to Working with Higher Education Curriculum Development. Educational Developers Caucus. Available at https://prism.ucalgary.ca/server/api/core/bitstreams/4a60c3e9-139b-496d-b791-a5f43e49335f/content

European Commission, Executive Agency for Small and Medium-sized Enterprises (EASME) (2018). Skills for Industry - Curriculum Guidelines 4.0. Available at https://op.europa.eu/en/publication-detail/-/publication/845051d4-4ed8-11ea-aece-01aa75ed71a1

Kolomitro, Queen's University Centre for Teaching and Learning (2017). Curriculum design handbook. Available at https://www.aku.edu/qtl/Documents/Queens%20Curriculum%20Design%20Handbook.pdf

O'neill (2015). Curriculum Design in  Higher Education:  Theory to Practice. Available at https://www.ucd.ie/teaching/t4media/curriculum_design_in_higher_education.pdf

UNESCO (2017), Prototype of a National Curriculum Framework.   Available at https://unesdoc.unesco.org/ark:/48223/pf0000260045?posInSet=2&queryId=N-EXPLORE-ac404d96-0c2b-4f8c-9624-4ceae0843056

UNESCO (2017). Developing and implementing curriculum frameworks. Available at https://unesdoc.unesco.org/ark:/48223/pf0000250052

UNESCO (2013). Glossary of Curriculum Terminology. Available at https://openlearning.unesco.org/assets/courseware/v1/111c351f93f6c17c82675935a739f317/asset-v1:UNESCO+UNESCO-04+2021_01+type@asset+block/IBE_GlossaryCurriculumTerminology2013_eng.pdf

UNESCO (2014). Textbooks and Learning Resources: Guidelines for Developers and UsersTextbooks and Learning Resources, available at https://unesdoc.unesco.org/ark:/48223/pf0000226135_eng

University of Sussex, (2024). Curriculum Development Handbook. Available at https://www.sussex.ac.uk/adqe/curriculum/curriculumdevelopment

University of Tennessee (2019). Teaching and Learning Innovation's curriculum development guide. Available at  https://teaching.utk.edu/curriculum-development/the-curriculum-development-guide/

# ບົດທີ 4: ວິທີການສຶກສາທີ່ມີປະສິດທິພາບ

## ພາກສະເໜີ

ການນໍາໃຊ້ວິທີການສຶກສາ ແລະ ການປະຕິບັດທີ່ມີປະສິດທິພາບທີ່ສະໜັບສະໜູນ ແລະ ອໍານວຍຄວາມສະດວກໃນຂະບວນການຮຽນຮູ້ແມ່ນສິ່ງສໍາຄັນຂອງຫຼັກສູດທີ່ເຂັ້ມແຂງ. ໃນເວລາທີ່ໂຄງການສະຖາບັນການສຶກສາຊັ້ນສູງແມ່ນເພີ່ມຂຶ້ນຕາມຄວາມສາມາດ, ນັກວິຊາການດ້ານການສຶກສາຄາດວ່າຈະພິຈາລະນາໄປຫຼາຍກວ່າຮູບແບບການຖ່າຍທອດການສຶກສາ. UNESCO "ເນັ້ນໜັກເຖິງຄວາມຈໍາເປັນໃຫ້ມະຫາວິທະຍາໄລກາຍເປັນສະຖາບັນເປີດກວ້າງຂວາງສາມາດເຊື່ອມໂຍງລະບົບວັດທະນະທໍາ ແລະ ຄວາມຮູ້ທີ່ຫຼາກຫຼາຍ, ແລະ ໃຊ້ວິທີການແບ່ງປັນຄວາມຮູ້ແບບປະຊາທິປະໄຕ. ມັນຮຽກຮ້ອງໃຫ້ມີຄວາມເຂັ້ມແຂງຫຼາຍໃນສັງຄົມໂດຍຜ່ານການຍົກສູງຄວາມຮັບຮູ້, ການເຜີຍແຜ່ ແລະ ການຮ່ວມມື. ຈຸດປະສົງແມ່ນເພື່ອຄວາມຍືນຍົງເພື່ອກາຍເປັນການປະຕິບັດຫຼັກ ແລະ ຈຸດປະສົງຂອງສະຖາບັນການສຶກສາຊັ້ນສູງ, ສະທ້ອນໃຫ້ເຫັນໃນໂຄງສ້າງ, ໂຄງການ ແລະ ກິດຈະກໍາ, ເຮັດໃຫ້ນັກຮຽນພົວພັນກັບບັນຫາຕົວຈິງ ແລະ ປະສົບການທີ່ເລິກເຊິ່ງ (UNESCO, 2022)". ປະສົບການ, ການຮຽນຮູ້ແບບເອົານັກຮຽນເປັນໃຈກາງ, ການຮ່ວມມື ແລະ ວິທີການສຶກສາແບບສະຫະວິຊາ ແລະ ການປະຕິບັດສາມາດສະໜອງວິທີທີ່ມີປະສິດທິພາບຫຼາຍໃນການຍົກລະດັບຄວາມສາມາດ ແລະ ຄຸນຄ່າທີ່ສໍາຄັນສໍາລັບການຮຽນຮູ້ຕະຫຼອດຊີວິດ ແລະ ການເຕີບໂຕສ່ວນບຸກຄົນ. ການຮຽນຮູ້ຕະຫຼອດຊີວິດຕະຫຼອດຊີວິດການເຮັດວຽກຂອງແຕ່ລະຄົນເບິ່ງຄືວ່າມີຄວາມສໍາຄັນຕໍ່ການປັບປ່ຽນໃຫ້ເຂົ້າກັບການປ່ຽນແປງຂອງຕະຫຼາດແຮງງານໃນເສດຖະກິດທີ່ຫັນເປັນດິຈິຕອນທີ່ເພີ່ມຂຶ້ນ, ຍ້ອນວ່າມັນຊ່ວຍໃຫ້ບຸກຄົນຮັກສາທັກສະທີ່ກ່ຽວຂ້ອງກັບການເຮັດວຽກທີ່ມີຢູ່ ແລະ ໄດ້ຮັບທັກສະທີ່ຕ້ອງການໃໝ່ (OECD, 2019). ການແຜ່ລະບາດຂອງ COVID-19 ແລະ ຜົນກະທົບຂອງມັນໄດ້ສະແດງໃຫ້ເຫັນເຖິງຄຸນຄ່າ ແລະ ຄວາມຕ້ອງການທີ່ຈະເຊື່ອມໂຍງການຮຽນຮູ້ແບບດິຈິຕອລ ແລະ ອອນໄລນ໌ຢ່າງຍືນຍົງເຂົ້າໃນສະຖາບັນການສຶກສາຊັ້ນສູງ ແລະ ລະບົບການຝຶກອົບຮົມ. ຫຼັກສູດທັງໝົດຄວນໄດ້ຮັບການປັບປຸງທາງດ້ານດິຈິຕອລ, ການເຂົ້າເຖິງໄດ້ງ່າຍ, ມຸ່ງໝັ້ນເອົານັກຮຽນເປັນໃຈກາງ, ແລະ ຮັບປະກັນຄຸນນະພາບ (European Union, 2022).

## ຜົນການຮຽນທີ່ສໍາຄັນ

**ຄວາມເຂົ້າໃຈຂອງວິທີການດ້ານການສຶກສາທີ່ມີນະວັດຕະກໍາ**: ໄດ້ຮັບຄວາມເຂົ້າໃຈຈາກການວິທີການທົດລອງຫຼາຍຄັ້ງ, ການຮຽນແບບເອົານັກຮຽນເປັນໃຈກາງ, ການຮ່ວມມືກັນ, ແລະ ວິທີການສຶກສາແບບສະຫະວິຊາ ແລະ ການປະຕິບັດທີ່ປັບປຸງການມີສ່ວນຮ່ວມຂອງນັກສຶກສາຢ່າງຫ້າວຫັນ, ການຄິດແບບວິເຄາະ, ການສື່ສານ ແລະ ການຮ່ວມມືໃນຂອບຂອງລາຍວິຊາ ແລະ ຫຼັກສູດການທ່ອງທ່ຽວແບບຍືນຍົງ.

**ການຮຽນຮູ້ວິທີການນໍາໃຊ້ວິທີການສຶກສາເຫຼົ່ານີ້ເຂົ້າໃນການປະຕິບັດ**: ການຮຽນຮູ້ວິທີການນໍາໃຊ້ ແລະ ຮັບຮອງເອົາວິທີການທົດລອງ, ການຮຽນຮູ້ແບບເອົານັກຮຽນເປັນໃຈກາງ, ການຮ່ວມມືກັນ, ແລະ ວິທີການສຶກສາແບບສະຫະວິຊາ ແລະ ການປະຕິບັດໃນຫຼາຍບໍລິບົດຂອງການສຶກສາ ແລະ ສະພາບແວດລ້ອມການຮຽນຮູ້.

## ຄໍາແນະນໍາສໍາລັບຄູຝຶກ

- **ຄົ້ນຫາວິທີການສຶກສາ (ການຮຽນ-ການສອນ) ທີ່ມີປະສິດຕິພາບທີ່ສຸດ**: ລະບຸວິທີທີ່ມີປະສິດພາບຈາກວິທີການທົດລອງ, ການເອົານັກສຶກສາເປັນໃຈກາງ, ການຮ່ວມມືກັນ, ແລະ ຮຽນແບບສະຫະວິຊາ ແລະ ການປະຕິບັດທີ່ທົດລອງນໍາໃຊ້ເພື່ອຕອບສະໜອງຄວາມຕ້ອງການຂອງຜູ້ຮຽນ ແລະ ເພື່ອບັນລຸຜົນການຮຽນທີ່ມີຄວາມໝາຍ.

- **ສ້າງສະພາບແວດລ້ອມການຮຽນຮູ້ທີ່ເໝາະສົມ**: ສ້າງບັນຍາກາດການຮຽນຮູ້ທີ່ເໝາະສົມ ແລະ ສ້າງສະພາບແວດລ້ອມການຮຽນຮູ້ທີ່ເໝາະສົມເພື່ອສົ່ງເສີມການມີສ່ວນຮ່ວມຢ່າງຫ້າວຫັນຂອງນັກຮຽນ, ການຄິດແບບວິເຄາະ, ການສື່ສານ ແລະ ການຮ່ວມມືກັນ.

## ແນວຄວາມຄິດຫຼັກ

ບົດນີ້ນໍາສະເໜີວິທີການຮຽນ-ການສອນແບບທົດລອງ, ແບບເອົານັກຮຽນເປັນໃຈກາງ, ການຮ່ວມມື, ແລະ ຮຽນແບບສະຫະວິຊາ ແລະ ການປະຕິບັດທີ່ສາມາດນໍາໄປສູ່ການສ້າງນະວັດຕະກໍາ ແລະ ຫຼັກສູດການສຶກສາທີ່ປັບປຸງເປັນສ່ວນບຸກຄົນກ່ຽວກັບການທ່ອງທ່ຽວແບບຍືນຍົງ. ຂະນະທີ່ບໍ່ໄດ້ຕັ້ງໃຈເຮັດໃຫ້ບົດຮຽນຫຼາຍເກີນໄປ, ບົດນີ້ເນັ້ນແນວທາງ ແລະ ວິທີການສຶກສາທີ່ໄດ້ພິສູດແລ້ວວ່າມີປະສິດຕິພາບໃນການສ້າງສະພາບແວດລ້ອມການຮຽນຮູ້ໃນທາງບວກ ແລະ ບັນລຸຜົນການຮຽນໂດຍລວມ.

## ບົດທີ 4.1.: ສະພາບແວດລ້ອມການຮຽນຮູ້

ແນວທາງໃໝ່ຂອງການສຶກສາກ່ຽວກັບການທ່ອງທ່ຽວແບບຍືນຍົງໝາຍເຖິງການອອກແບບຂອບຫຼັກສູດໃໝ່ທີ່ຄໍານຶງເຖິງຄວາມຕ້ອງການໃນການສ້າງວັດທະນະທໍາການສຶກສາ ແລະ ສະພາບແວດລ້ອມແຫ່ງການຮຽນຮູ້ທີ່ນໍາໄປສູ່ການພັດທະນາບຸກຄະລາກອນທີ່ມີທັກສະສູງ, ມີສະຕິປັນຍາ ແລະ ມີຫົວຄິດປະດິດສ້າງ. ສະພາບແວດລ້ອມການຮຽນຮູ້, ທັງແບບເຊິ່ງໜ້າ ແລະ ແບບອອນລາຍ, ທີ່ສາມາດຈັດໃນຫຼາຍວິທີທີ່ ແລະ ລະດັບແຕກຕ່າງກັນ, ແລະ ມັນຈໍາເປັນຕ້ອງໄດ້ເລີ່ມຈາກຈຸດປະສົງການຮຽນຮູ້ສະເພາະ ແລະ ຜົນການຮຽນທີ່ຕ້ອງການ.

ບາງຫຼັກການທີ່ສໍາຄັນສໍາລັບການສ້າງສະພາບແວດລ້ອມການຮຽນຮູ້ທີ່ສ້າງສັນ ແລະ ມີສ່ວນຮ່ວມຢ່າງຕັ້ງໜ້າ ມີດັ່ງຕໍ່ໄປນີ້:

- **ວິທີການເອົານັກຮຽນເປັນໃຈກາງ**: ນັກຮຽນຕ້ອງເປັນສູນກາງຂອງການອອກແບບຫຼັກສູດ, ເພື່ອຊຸກຍູ້ໃຫ້ເຂົາເຈົ້າມີສ່ວນຮ່ວມ ແລະ ຮຽນຮູ້ຕະຫຼອດຊີວິດ. ນັກຮຽນຄວນມີສ່ວນຮ່ວມໃນການອອກແບບຫຼັກສູດການຮຽນຮູ້, ປະເມີນຄວາມຄືບໜ້າ ແລະ ປະສົບການຮຽນຂອງເຂົາເຈົ້າເອງ, ພ້ອມທັງປະເມີນປະສິດທິພາບການສິດສອນຂອງອາຈານ/ນັກວິຊາການດ້ານການສຶກສາ.

- **ການຮຽນຮູ້ຜ່ານການແກ້ໄຂບັນຫາ**: ການກະຕຸ້ນໃຫ້ຜູ້ຮຽນສຶກສາບັນຫາ ແລະ ສິ່ງທ້າທາຍທີ່ພົບໃນຊີວິດ ທີ່ຍັງບໍ່ທັນມີຄໍາຕອບ. ວິທີການດັ່ງກ່າວນີ້ສົ່ງເສີມໃຫ້ຜູ້ຮຽນປັບການຮຽນຮູ້ພາກທິດສະດີໃຫ້ເຂົ້າກັບບໍລິບົດຂອງເຂົາເຈົ້າທີ່ກ່ຽວກັບວິທີທີ່ຈະໝູນໃຊ້ທິດສະດີນັ້ນໃຫ້ເປັນປະໂຫຍດຕໍ່ໂລກອ້ອມຕົວເຂົາເຈົ້າ.

- **ການຮຽນຮູ້ແບບຮ່ວມມືກັນ**: ສົ່ງເສີມການເຮັດວຽກຮ່ວມກັນໃນທີມງານທີ່ມີພື້ນຖານແບບພະຫຸວິຊາ, ພ້ອມກັນນັ້ນກໍ່ສົ່ງເສີມການພັດທະນາທັກສະທາງສັງຄົມ ແລະ ການສື່ສານ.

- **ການຮຽນຮູ້ຜ່ານປະສົບການຕົວຈິງ**: ອໍານວຍຄວາມສະດວກໃຫ້ແກ່ການສ້າງປະສົບການຜ່ານການປະຕິບັດວຽກຕົວຈິງ ໂດຍສ້າງໂຄງການ ແລະ ບັນຫາຕ່າງໆທີ່ເປັນກໍລະນີສຶກສາໃນຊີວິດຈິງ ແລະ ການເຮັດວຽກ.

- **ການຮຽນແບບພະຫຸວິຊາ**: ເສີມຂະຫຍາຍລາຍວິຊາການທ່ອງທ່ຽວແບບຍືນຍົງ ແລະ ຫຼັກສູດທີ່ມີຫົວຂໍ້ການຮຽນຮູ້ ແລະ ເນື້ອໃນທີ່ກະຕຸ້ນການຄິດວິເຄາະ, ການເປັນຜູ້ປະກອບການ, ການຈ້າງງານ, ທັກສະສີຂຽວ ແລະ ດິຈິຕອນ, ລວມທັງທັດສະນະທາງດ້ານສັງຄົມ ແລະ ຈັນຍາບັນເພື່ອການພັດທະນາແບບຍືນຍົງ.

- **ວິທີສ້າງລະບົບນິເວດການຮຽນຮູ້**: ເຊື່ອມຜູ້ຮຽນກັບຜູ້ຈ້າງງານ ແລະ ຜູ້ມີສ່ວນກ່ຽວຂ້ອງທີ່ສໍາຄັນອື່ນໆ ຜ່ານການສ້າງໂຄງການຈັດກາງານ, ການເຮັດວຽກ-ຮຽນຮູ້ໄປພ້ອມກັນ, ການລົງຝຶກງານ, ແລະ ການຈັບຄູ່.

- **ການຮຽນຮູ້ແບບນໍາໃຊ້ເຕັກໂນໂລຊີເຂົ້າຊ່ວຍ**: ສົ່ງເສີມການນໍາໃຊ້ເຕັກໂນໂລຊີ ແລະ ຊອບແວແອັບພລິເຄຊັນສໍາລັບການຮຽນຮູ້ແບບດິຈິຕອລ (ເຊັ່ນ: ການຮຽນຜ່ານລະບົບອອນໄລນ໌, ຮຽນຜ່ານການຫຼິ້ນເກມ, ຫຼັກສູດອອນລາຍແບບເປີດກວ້າງ (MOOCs), ຮຽນຜ່ານຫຼັກສູດສະເໝືອນຈິງ, ປັນຍາປະດິດ ແລະ ອື່ນໆ).

## ບົດທີ 4.2.: ວິທີການສອນແບບເອົານັກຮຽນເປັນໃຈກາງ

ແນວທາງການສອນແບບເອົານັກຮຽນເປັນໃຈກາງໄດ້ຖືກນໍາສະເໜີຢູ່ໃນຖະແຫຼງການລູເວັນ (Leuven Communique) ປີ 2009, ເຊິ່ງໄດ້ຢືນຢັນຄືນໃໝ່ເຖິງຄວາມສໍາຄັນຂອງພາລະກິດການສິດສອນຂອງສະຖາບັນການສຶກສາຊັ້ນສູງ ແລະ ຄວາມຈໍາເປັນຂອງການປະຕິຮູບຫຼັກສູດຢ່າງຕໍ່ເນື່ອງເພື່ອປະຕິຮູບທີ່ເນັ້ນໃສ່ການພັດທະນາຜົນການຮຽນ. ການສອນທີ່ເອົານັກຮຽນເປັນໃຈກາງແມ່ນອີງໃສ່ສົມມຸດຕິຖານທີ່ວ່ານັກສຶກສາຢູ່ໃນຫ້ອງຮຽນມາຈາກຫຼາຍພື້ນທີ່. ດັ່ງນັ້ນ, ຄູຕ້ອງນໍາໃຊ້ວິທີການສອນທີ່ຫຼາກຫຼາຍເພື່ອຕອບສະໜອງຄວາມຕ້ອງການ ແລະ ຄວາມສາມາດຂອງນັກຮຽນ (Sylvester Donkoh, 2024). ສະນັ້ນຕ້ອງໄດ້ຄໍານຶງເຖິງການປັບປ່ຽນວິທີການສອນທີ່ເອົານັກຮຽນເປັນໃຈກາງທີ່ລວມເອົາຄວາມຕ້ອງການ, ຄວາມເຂົ້າໃຈ ແລະ ຄຸນລັກສະນະຂອງຜູ້ຮຽນເມື່ອອອກແບບຫຼັກສູດ. ສະນັ້ນ, ຫຼັກສູດສາມາດກົງກັບຄວາມສາມາດ ແລະ ຄວາມສົນໃຈຂອງນັກຮຽນຫຼາຍຂຶ້ນ, ເຊິ່ງສ້າງປະສົບການຮຽນຮູ້ທີ່ມີປະສິດທິພາບ ແລະ ມີສ່ວນຮ່ວມຫຼາຍຂຶ້ນ.

## ບົດທີ 4.3.: ການຮຽນຜ່ານປະສົບການປະຕິບັດຕົວຈິງ

ການຮຽນຮູ້ຜ່ານການປະຕິບັດຕົວຈິງ ແມ່ນຂະບວນການທີ່ດູເນັ້ນໃຫ້ນັກຮຽນມີສ່ວນຮ່ວມ "ຮຽນຮູ້ຜ່ານການປະຕິບັດ" ແລະ ປະສົບການປະຕິບັດຕົວຈິງ. ວິທີການດັ່ງກ່າວເນັ້ນບົດບາດສຳຄັນໃນຂະບວນການຮຽນຮູ້ໂດຍການນຳໃຊ້ປະສົບການ ແລະ ຄວາມຮູ້ ແລະ ປະສົບການຂອງປະຊາຊົນ. ການຮຽນຮູ້ຜ່ານການປະຕິບັດຕົວຈິງ ແມ່ນຕາມການສຶກສາຄົ້ນຄວ້າຂອງທ່ານ David A. Kolb, ຜູ້ທີ່ນິຍາມການຮຽນຮູ້ຜ່ານປະສົບການເປັນການຮຽນຮູ້ແບບວົງຈອນ ທີ່ກວມເອົາ 4 ຂັ້ນ: (1) ປະສົບການໂດຍກົງ (Concrete Experience), (2) ການສັງເກດ ແລະ ສະທ້ອນກັບປະສົບການ, (3) ການສ້າງຂອບແນວຄວາມຄິດ ແລະ (4) ການທົດສອບແນວຄວາມຄິດນັ້ນໃນສະຖານະການໃໝ່ (Kolb, 1984). ການຮຽນຮູ້ຜ່ານການປະຕິບັດຕົວຈິງ ຍັງເຊື່ອມໂຍງກັບສີ່ເສົາຄ້ຳຂອງການສຶກສາທີ່ກຳນົດໂດຍອົງການ UNESCO: ການຮຽນຮູ້ທີ່ຈະຮູ້; ການຮຽນຮູ້ທີ່ຈະເຮັດ, ຮຽນຮູ້ທີ່ຈະຢູ່ຮ່ວມ ແລະ ການຮຽນຮູ້ທີ່ຈະເປັນ (UNESCO, APEID International Conference on Education, 2014). ການຮຽນຮູ້ຜ່ານການປະຕິບັດຕົວຈິງ ສາມາດປະຕິບັດໄດ້ທັງແບບເຊິ່ງໜ້າ ແລະ ຜ່ານທາງອອນລາຍ ທີ່ສະໜັບສະໜູນໃຫ້ຜູ້ຮຽນໄດ້ພັດທະນາບໍ່ພຽງແຕ່ທັກສະການຄົ້ນຄິດ, ແຕ່ຍັງພັດທະນາທັກສະທາງສັງຄົມ, ອາລົມຈິດ ແລະ ຄວາມເຂົ້າໃຈວັດທະນະທຳທີ່ແຕກຕ່າງ.

## ບົດທີ 4.4.: ການຮຽນຮູ້ແບບເຮັດວຽກເປັນທີມ

ການຮຽນຮູ້ແບບເຮັດວຽກເປັນທີມ ແມ່ນວິທີການສອນທີ່ນັກຮຽນນຳໃຊ້ຄວາມຮູ້ທາງທິດສະດີຜ່ານກິດຈະກຳທີ່ເປັນຂັ້ນຕອນ ເຊິ່ງປະກອບມີການວຽກງານສ່ວນບຸກຄົນ, ເຮັດວຽກເປັນທີມ ແລະ ໃຫ້ຄວາມຄຳເຫັນ/ຄຳແນະນຳ. ການຮຽນຮູ້ແບບເຮັດວຽກເປັນທີມ ຖືກສ້າງຂຶ້ນໂດຍທ່ານ Larry Michaelsen ໃນຊຸມປີ 1970, ເມື່ອມີຈຳນວນນັກຮຽນເຂົ້າຮຽນໃນຫຼັກສູດບໍລິຫານທຸລະກິດຂອງລາວເພີ່ມຂຶ້ນຈາກ 40 ເປັນ 120 ຄົນ. ລາວຄຳນຶງວ່ານັກສຶກສາຄວນຈະສາມາດນຳໃຊ້ແນວຄວາມຄິດທິດສະດີເຂົ້າແກ້ໄຂບັນຫາໃນໂລກຄວາມເປັນຈິງໄດ້ ຫຼາຍກວ່າທີ່ຮູ້ພຽງຢ່າງດຽວ. ປັດຈຸບັນນີ້, ການຮຽນຮູ້ແບບເຮັດວຽກເປັນທີມ ຖືກສຶກສາເປັນຢ່າງດີ ແລະ ຍອມຮັບວ່າເປັນວິທີການສອນໜຶ່ງທີ່ຖືກຮັບຮອງ ແລະ ນຳໃຊ້ໃນຫຼາຍຂົງເຂດການສຶກສາ ແລະ ຫຼາຍປະເທດທົ່ວໂລກ. ຂະບວນການສະເພາະຂອງການຮຽນຮູ້ແບບເຮັດວຽກເປັນທີມເລີ່ມຈາກການວາງແຜນວຽກຈົນຮອດການປະເມີນເພື່ອຮ່ວມງານ, ເຊິ່ງປະຕິບັດໂດຍອີງໃສ່ສີ່ຫຼັກການທີ່ກຳນົດໄວ້ໃນກິດຈະກຳການຮຽນຮູ້ດັ່ງຕໍ່ໄປນີ້:

1. **ສ້າງ ແລະ ບໍລິການກຸ່ມຢ່າງຖືກຕ້ອງ**
2. **ຄວາມຮັບຜິດຊອບຂອງນັກຮຽນທັງໝົດ ແລະ ຂອງກຸ່ມ**
3. **ການປະກອບຄວາມຄິດເຫັນ ແລະ ແລກປ່ຽນເຊິ່ງກັນ ແລະ ກັນຂອງນັກຮຽນ**
4. **ກິດຈະກຳ/ວຽກທີ່ສົ່ງເສີມທັງການຮຽນຮູ້ ແລະ ການພັດທະນາທີມ**

ການຮຽນຮູ້ແບບເຮັດວຽກເປັນທີມ ສາມາດເພີ່ມການມີສ່ວນຮ່ວມ, ການເຮັດກິດຈະກຳ ແລະ ການຮ່ວມມືຂອງນັກສຶກສາ, ຄະນະດຽວກັນກໍປະກອບສ່ວນໃນການຮັບມືກັບສິ່ງທ້າທາຍຕ່າງໆເຊັ່ນ: ການສົນທະນາສື່ສານກ່ຽວກັບອຸປະສັກຕ່າງໆ,

ຄວາມຂັດແຍ່ງພາຍໃນກຸ່ມ, ຄວາມຄາດຫວັງ ແລະ ວິທີການຮຽນຮູ້ທີ່ຫຼາກຫຼາຍ. ການຮຽນຮູ້ແບບເຮັດວຽກເປັນທີມຍັງເພີ່ມຄວາມເຊື່ອໝັ້ນຂອງຜູ້ຮຽນໃນວຽກງານທີ່ສະຫຼັບຊັບຊ້ອນ ແລະ ແກ້ໄຂບັນຫາ ຫຼື ກ່ຽວຂ້ອງກັບຫົວຂໍ້ຕ່າງໆທີ່ເປັນອົງລວມ ແລະ ສະຫະວິຊາ.

## ບົດຮຽນ 4.5.: ຮຽນຮູ້ໂດຍການປຽບທຽບ: ຜົນປະໂຫຍດຂອງການສອນຮ່ວມກັນ

ການສອນຮ່ວມກັນເກີດຂຶ້ນໂດຍການຮ່ວມມືຢ່າງໃກ້ຊິດລະຫວ່າງອາຈານສອງ ຫຼື ຫຼາຍທ່ານ, ທີ່ແບ່ງໜ້າທີ່ຮັບຜິດຊອບກຸ່ມນັກສຶກສາ ແລະ ສອນລາຍວິຊາດຽວກັນ. ການຮ່ວມມືດັ່ງກ່າວນີ້ສາມາດເຮັດໄດ້ຫຼາຍຮູບແບບ, ເຊິ່ງເຫັນໃນຮູບແບບຕ່າງໆທີ່ໄດ້ອະທິບາຍໂດຍ Cook and Friend (1995):

- **ຄົນໜຶ່ງສອນ, ຄົນໜຶ່ງເປັນຜູ້ຊ່ວຍ:** ອາຈານທັງສອງທ່ານເຮັດວຽກຮ່ວມກັນຢູ່ໃນຫ້ອງຮຽນ, ແຕ່ທ່ານນຶ່ງມີບົດບາດເປັນຜູ້ສອນຫຼັກ, ໃນຂະນະອີກທ່ານເຮັດໜ້າທີ່ສະໜັບສະໜູນຜູ້ຮຽນ ແລະ ຜູ້ສອນຫຼັກ.
- **ການສອນແບບເປັນຈຸດ:** ອາຈານແບ່ງເນື້ອໃນວິຊາອອກເປັນຫຼາຍພາກສ່ວນ ແລະ ສອນເນື້ອໃນນັ້ນເປັນກຸ່ມນ້ອຍໂດຍສອນໝູນວຽນກັນ. ຂະນະດຽວກັນ, ການສອນຮ່ວມກັນປະເພດນີ້ຈະເຮັດວຽກຮ່ວມກັນໂດຍມີອາຈານສອງທ່ານຜັດປ່ຽນກັນສອນເນື້ອໃນທີ່ແຕກຕ່າງກັນໃຫ້ນັກຮຽນກຸ່ມດຽວກັນ.
- **ການສອນແບບຄູ່ຂະໜານ:** ອາຈານແບ່ງນັກຮຽນອອກເປັນກຸ່ມຕາມເງື່ອນໄຂສະເພາະ ແລະ ຕົກລົງເຫັນດີນຳກັນ.
- **ການສອນແບບທາງເລືອກ:** ອາຈານທ່ານໜຶ່ງສອນກຸ່ມໃຫຍ່, ຂະນະທີ່ຜູ້ອື່ນສອນກຸ່ມນ້ອຍ (ມີນັກສຶກສາໃນກຸ່ມ 3-6 ຄົນ) ເພື່ອຈຸດປະສົງແຍກຄວາມແຕກຕ່າງກັນ.
- **ການສອນເປັນທີມ:** ອາຈານ 2 ທ່ານຢູ່ໃນຫ້ອງຮຽນກັບນັກສຶກສາກຸ່ມໃຫຍ່ ແລະ ທັງສອງທ່ານສອນຮ່ວມກັນກັບນັກຮຽນທັງໝົດ.

## ບົດທີ 4.6.: ການຮຽນຮູ້ຜ່ານການແກ້ໄຂບັນຫາ

ການຮຽນຮູ້ຜ່ານການແກ້ໄຂບັນຫາ (PBL) ແມ່ນວິທີການຮຽນຮູ້ຢ່າງທ້າທາຍທີ່ຜູ້ຮຽນເຮັດວຽກຮ່ວມກັນເພື່ອເຂົ້າໃຈ ແລະ ແກ້ໄຂບັນຫາທີ່ຊັບຊ້ອນ, ບັນຫາທີ່ບໍ່ມີໂຄງສ້າງ. ເນື່ອງມາຈາກລັກສະນະສະລັບສັບຊ້ອນ ແລະ ໂຄງສ້າງຂອງບັນຫາຕາມທຳມະຊາດ, ບັນຫາເຫຼົ່ານີ້ຕ້ອງການໃຫ້ນັກຮຽນແບ່ງປັນຄວາມຮູ້ທີ່ມີຢູ່ແລ້ວ, ເຈລະຈາຕໍ່ລອງຈາກຫຼາຍແນວຄວາມຄິດ , ຄົ້ນຫາຂໍ້ມູນ, ແລະ ສົນທະນາແລກປ່ຽນຢ່າງມີຫຼັກການເພື່ອສະໜັບສະໜູນວິທີການແກ້ໄຂບັນຫາຂອງເຂົາເຈົ້າ (Lu, Bridges, & Hmelo-Silver, 2014). ການຮຽນຮູ້ຜ່ານການແກ້ໄຂບັນຫາ ຊ່ວຍເຊື່ອມຕໍ່ການຮຽນຮູ້ກັບບັນຫາໃນໂລກຄວາມເປັນຈິງ, ເຊິ່ງເປັນບັນຫາທີ່ນັກຮຽນສາມາດເຊື່ອມໂຍງໄດ້ໂດຍກົງ. ຜ່ານການຮຽນຮູ້ຜ່ານການແກ້ໄຂບັນຫາ, ນັກຮຽນບໍ່ພຽງແຕ່ສ້າງຄວາມເຂັ້ມແຂງໃຫ້ບັນດາທັກສະການເຮັດວຽກເປັນທີມ, ການສື່ສານ ແລະ ການຄົ້ນຄວ້າ ຂອງນັກຮຽນ, ແຕ່ຍັງຝຶກຝົນການຄົ້ນຄິດແບບວິເຄາະ ແລະ ຄວາມສາມາດໃນການແກ້ໄຂບັນຫາທີ່ຈຳເປັນສຳລັບການຮຽນຮູ້ຕະຫຼອດຊີວິດ.

ຂອບທົ່ວໄປ (ແຜນງານ) ຂອງປະສົບການຮຽນຜ່ານການແກ້ໄຂບັນກາລວມມີ:

- ກຳນົດ ແລະ ວິເຄາະບັນຫາທີ່ສະຫຼັບຊັບຊ້ອນໃນໂລກຄວາມເປັນຈິງທີ່ສົ່ງຜົນກະທົບໂດຍກົງຕໍ່ຜູ້ຮຽນ ແລະ/ຫຼື ຊຸມຊົນທີ່ພວກເຮົາອາໄສຢູ່.
- ສຳຫຼວດວິທີແກ້ໄຂບັນຫາຈາກມຸງມອງ ແລະ ທັດສະນະທີ່ຫຼາກຫຼາຍ.
- ປ່ຽນວິທີການທີ່ກຳນົດຂຶ້ນມາໃຫ້ເປັນຍຸດທະສາດ ແລະ ການປະຕິບັດທົ່ວໄປ.

## ບົດທີ 4.7.: COIL ໝາຍເຖິງ ການຮຽນຮ່ວມກັບຕ່າງປະເທດຜ່ານທາງອອນລາຍ

COIL ຫຍໍ້ມາຈາກ Collaborative Online International Learning (ການຮຽນຮ່ວມກັບຕ່າງປະເທດຜ່ານທາງອອນລາຍ), ຊຶ່ງຫມາຍຄວາມວ່າ "ການຮຽນໃນສະພາບແວດລ້ອມສາກົນ, ເຊິ່ງມີນັກສຶກສາ ແລະ ອາຈານ ຈາກປະເທດ ແລະ ພື້ນຖານວັດທະນະທຳທີ່ຫຼາກຫຼາຍ ທີ່ກຳລັງຮຽນຮ່ວມກັນທັງໃນ ແລະ ນອກຫ້ອງຮຽນ" (Leask, 2020). ຈຸດປະສົງຂອງໂຄງການ COIL ລວມມີ: ພັດທະນາຄວາມຮູ້ກ່ຽວກັບລາຍວິຊາ, ຫົວຂໍ້ ແລະ/ຫຼື ສິ່ງທ້າທາຍຊີວິດຈິງ ທົ່ວໄປ , ເພີ່ມທະວີການແລກປ່ຽນສາກົນ ແລະ ວັດທະນະທຳຕ່າງໆ, ສົ່ງເສີມການຮຽນຮູ້ແບບຮ່ວມມື ແລະ ມີມິດໃນການຮຽນ, ພ້ອມທັງພັດທະນາຄວາມສາມາດທາງດ້ານພາສາ ແລະ ທັກສະການສື່ສານ.

ຂັ້ນຕອນຂອງໂຄງການ COIL ປະກອບມີ:

- ການລະລາຍພຶດຕິກຳ: ເປັນກິດຈະກຳເບື້ອງຕົ້ນເພື່ອເຮັດໃຫ້ນັກຮຽນທຳຄວາມຮູ້ຈັກເຊິ່ງກັນ ແລະ ກັນ ແລະ ສ້າງຄວາມເຊື່ອໝັ້ນທີ່ຈະຮ່ວມມືກັນ.
- ມອບວຽກທີ່ຕ້ອງເຮັດຮ່ວມກັນໃຫ້ແຕ່ລະກຸ່ມໂດຍກຳນົດໃຫ້ແຕ່ລະຄົນປະກອບສ່ວນເປັນລາຍບຸກຄົນ ແລະ ມີສ່ວນ ພັດທະນາຜົນໄດ້ຮັບຮ່ວມກັນ.
- ການປະເມີນຜົນ: ປ່ຽນປະສົບການຮຽນຈາກໂຄງການ COIL ເປັນກິດຈະກຳສະທ້ອນ/ຖອດຖອນບົດຮຽນ ແລະ ສ້າງການຮັບຮູ້ໃໝ່.

## ບົດທີ 4.8.: ການຮ່ວມມືລະຫວ່າງມະຫາວິທະຍາໄລ ແລະ ພາກທຸລະກິດ

ໂຄງການ COIL ຂຶ້ນຢູ່ກັບການຮ່ວມມືລະຫວ່າງອາຈານ ແລະ ນັກສຶກສາ ທີ່ມາຈາກຫຼາຍຂົງເຂດ, ພາສາ ແລະ ວັດທະນະທຳທີ່ແຕກຕ່າງກັນ, ເພື່ອພັດທະນາຂະບວນການຮຽນ ແລະ ການສອນຮ່ວມກັນ ໂດຍໃຊ້ເຄື່ອງມືສື່ສານຜ່ານທາງອອນລາຍ. ໂຄງການຮ່ວມມືດັ່ງກ່າວເປັນທາງເລືອກທີ່ສາມາດເຂົ້າເຖິງໄດ້ເພື່ອສ້າງຄວາມສະເໝີພາບໃນກັບອາຈານ ແລະ ນັກສຶກສາ ໄດ້ຮັບປະສົບການການຫັນເປັນສາກົນ (ທີ່ສະຖາບັນຂອງຕົນເອງ) ຕະຫຼອດຈົນສ້າງໂອກາດໃນການເສີມສ້າງຂະບວນການສ້າງຄວາມຮູ້ຂອງບຸກຄົນ ແລະ ສ່ວນລວມ, ໂດຍນຳສະເໜີຄວາມທາທ້າຍທີ່ມີການປ່ຽນແປງໃນການເຮັດວຽກໃນທີມທີ່ແຕກຕ່າງກັນ.

ການເພື່ອກ້າວໄປສູ່ຂະບວນການຮຽນຮູ້ຕະຫຼອດຊີວິດ, ການຮ່ວມມືດ້ານຍຸດທະສາດລະຫວ່າງສະຖາບັນການສຶກສາຊັ້ນສູງ ແລະ ອຸດສະຫະກຳການທ່ອງທ່ຽວຄວນໄດ້ຮັບການປັບປຸງເພື່ອສ້າງລະບົບນິເວດການທ່ອງທ່ຽວແບບຍືນຍົງ. ການຮ່ວມມືລະຫວ່າງມະຫາວິທະຍາໄລ ແລະ ອຸດສະຫະກຳການທ່ອງທ່ຽວສາມາດນຳຜົນປະໂຫຍດຫຼາຍຢ່າງມາໃຫ້ທັງສອງຝ່າຍ, ເຮັດໃຫ້ແຕ່ລະຝ່າຍໄດ້ຜົນປະໂຫຍດຈາກຄວາມຊ່ຽວຊານຂອງອີກຝ່າຍ. ການຮ່ວມມືດ້ານຍຸດທະສາດດັ່ງກ່າວນີ້ສາມາດເກີດຂຶ້ນໄດ້ໃນຫຼາຍຮູບແບບ (ຕົວຢ່າງ, ໂຄງການລົງຝຶກງານ/ການຝຶກເຮັດວຽກຕົວຈິງ, ການໃຫ້ຄຳປຶກສາ, ສະໜັບສະໜູນໂຄງການ, ການແຂ່ງຂັນດ້ານວິຊາການ, ໂຄງການຮຽນຍາມພັກແລ້ງ, ອື່ນໆ).

- **ການຮ່ວມມືກັບຂະແໜງການທ່ອງທ່ຽວ**: ບໍລິສັດທ່ອງທ່ຽວ, ຜູ້ໃຫ້ບໍລິການ, ການຕັ້ງຕົ້ນທຸລະກິດເລີ່ມໃໝ່, ລວມທັງ ສວນສາທາລະນະທຳມະຊາດ ແລະ ວັດທະນະທຳ, ຫໍພິພິທະພັນ ແລະ ຈຸດໃຫ້ຂໍ້ມູນຂ່າວສານການທ່ອງທ່ຽວ.
- **ການຮ່ວມມືດ້ານໂຄງສ້າງສະໜັບສະໜູນການທ່ອງທ່ຽວ**: ຕົວຢ່າງ, ສະມາຄົມອຸດສາຫະກຳ, ກຸ່ມອົງກອນການທ່ອງທ່ຽວ, ແລະ ໜ່ວຍງານຂອງລັດທີ່ກ່ຽວຂ້ອງອື່ນໆ ທີ່ມີສ່ວນຮ່ວມໃນການທ່ອງທ່ຽວແບບຍືນຍົງ.
- **ການຮ່ວມມືກັບສະຖາບັນການສຶກສາອື່ນໆ**: ຜ່ານການສ້າງຫຼັກສູດຮ່ວມ, ລາຍວິຊາ, ເຄືອຂ່າຍ, ອື່ນໆ), ລວມທັງລັດຖະບານ, ອົງການຈັດຕັ້ງທາງສັງຄົມ, ອົງກອນທີ່ບໍ່ຂຶ້ນກັບລັດຖະບານ ແລະ ຊຸມຊົນທ້ອງຖິ່ນ.

## ບົດຮຽນ 4.9.: ຜູ້ຮຽນເປັນຕົວແທນການປ່ຽນແປງ

ສຸດທ້າຍ, ການກຳນົດຍຸດທະສາດຂອງຫຼັກສູດໝາຍເຖິງການຖືວ່ານັກຮຽນເປັນຕົວແທນການສ້າງການປ່ຽນແປງ ແລະ ມີສ່ວນຮ່ວມໃນການພັດທະນາ ແລະ ການປະຕິບັດຫຼັກສູດຢ່າງຈິງຈັງ.

ຮູບແບບການມີສ່ວນຮ່ວມທີ່ເປັນໄດ້ຂອງນັກຮຽນລວມມີ:

- **ການໃຫ້ຄຳປຶກສາ**: ປົກກະຕິແລ້ວຈະດຳເນີນໂດຍການສຳຫຼວດ ຫຼື ການສົນທະນາກຸ່ມ. ວິທີການເຫຼົ່ານີ້ສາມາດເຂົ້າເຖິງນັກຮຽນຈຳນວນຫຼາຍ, ນຳໄປສູ່ຊຸດຂໍ້ມູນຂະໜາດໃຫຍ່, ວ່ອງໄວ ແລະ ຄຸ້ມຄ່າ.
- **ການຮ່ວມມື**: ປົກກະຕິແລ້ວເປັນການລວມເອົາຜູ້ຮຽນເຂົ້າຮ່ວມໃນການປັບປຸງຂະບວນການຂອງໂຄງການທີ່ມີຢູ່ແລ້ວ, ຕົວຢ່າງ, ເຂົາເຈົ້າອາດຈະຖືກຂໍໃຫ້ເຂົ້າຮ່ວມໃນຄະນະກຳມະການໂຄງການ ຫຼື ເຂົ້າຮ່ວມໃນການທົບທວນຫຼັກສູດແຕ່ລະໄລຍະ. ສິ່ງດັ່ງກ່າວຈະອະນຸຍາດໃຫ້ຜູ້ຮຽນມີອິດທິພົນຕໍ່ຂະບວນການທີ່ມີຜົນກະທົບໂດຍກົງຕໍ່ເຂົາເຈົ້າ.
- **ການຜະລິດຮ່ວມກັນ**: ເປັນອີກວິທີໜຶ່ງທີ່ລວມເອົາຜູ້ຮຽນເຂົ້າຮ່ວມຢ່າງເທົ່າທຽມກັນ, ເຊິ່ງເຂົາເຈົ້າ ຈະກຳນົດເງື່ອນໄຂ ແລະ ບົດບາດຂອງຕົນໃນການມີສ່ວນຮ່ວມ, ເຊິ່ງນຳໄປສູ່ຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບປະສົບການການຮຽນຮູ້ຂອງເຂົາເຈົ້າ ແລະ ພັດທະນາຄວາມຮູ້ສຶກເປັນເຈົ້າຂອງຮ່ວມກັນ.

## ບົດທີ 4.10.: ກໍລະນີສຶກສາ: ໂຄງການ “ຄູຝຶກສອນ” ທີ່ມະຫາວິທະຍາໄລປາເລີໂມ

ໂຄງການ "MENTORE - ການປັບປຸງ ແລະ ປ່ຽນແປງການສອນໂດຍຜ່ານການສັງເກດເພື່ອນມິດ ແລະ ແລກປ່ຽນບົດຮຽນກັບຜູ້ຊ່ຽວຊານ" ໄດ້ປະຕິບັດໂດຍມະຫາວິທະຍາໄລປາເລີໂມ. ໂຄງການດັ່ງກ່າວສົ່ງເສີມການຮ່ວມມື ແລະ ແລກປ່ຽນປະສົບການລະຫວ່າງອາຈານສອນຈາກຫຼາຍສາຂາວິຊາ ແລະ ມີພື້ນຖານແຕກຕ່າງກັນ. ອາຈານທີ່ເປັນທີ່ປຶກສາ ຫຼື “ພີ່ລ້ຽງ” ຈະສະໜັບສະໜູນຊ່ວຍເຫຼືອອາຈານໜຸ່ມນ້ອຍເພື່ອພັດທະນາເສັ້ນທາງວິຊາຊີບຂອງເຂົາເຈົ້າ ໂດຍການສະໜັບສະໜູນ, ໃຫ້ຄຳແນະນຳ, ສະໜັບສະໜູນ ແລະ ສະເໜີແນວຄວາມຄິດໃໝ່ເພື່ອປັບປຸງວິທີການສອນໃຫ້ມີປະສິດທິຜົນກວ່າເກົ່າ. ອາຈານພີ່ລ້ຽງຊ່ວຍອາຈານທ່ານອື່ນໃນການວິເຄາະ ແລະ ຖອດຖອນບົດຮຽນຢ່າງຈິງຈັງກ່ຽວກັບການສອນຂອງເຂົາເຈົ້າ, ຊ່ວຍເຂົາເຈົ້າລະບຸຈຸດແຂງ ແລະ ຈຸດທີ່ເຂົາເຈົ້າຕ້ອງປັບປຸງ. ທັງສອງຝ່າຍຈະຮ່ວມກຳນົດຍຸດທະສາດ ແລະ ວິທີການເພື່ອທົດລອງໃຊ້ວິທີການສອນແບບໃໝ່ ແລະ ມີນະວັດຕະກຳ ແບະ ເຮັດໃຫ້ການຮຽນຮູ້ມີປະສິດທິພາບສູງຂຶ້ນ ແລະ ຜູ້ຮຽນເຂົ້າຮ່ວມການສອນ. ເນື່ອງຈາກເປັນຂະບວນການແບບ “ເພື່ອຊ່ວຍເພື່ອນ” (Peer-to-Peer), ອາຈານທີ່ເຂົ້າຮ່ວມໃນໂຄງການຈະມີບົດບາດເປັນທັງພີ່ລ້ຽງ ແລະ ຜູ້ຖືກແນະນຳ. ຜົນປະໂຫຍດຂອງຂະບວນການໃຫ້ຄຳປຶກສາແບບຮ່ວມມືນີ້ແມ່ນມີຫຼາຍ: ອາຈານມີໂອກາດຈະພັດທະນາທັກສະການສອນຂອງເຂົາເຈົ້າ, ໄດ້ຮັບວິທີການ ແລະ ແນວການສອນແບບໃ

ໜ່ ແລະ ພັດທະນາຄວາມຮັບຮູ້ກ່ຽວກັບບົດບາດການສຶກສາ. ຈາກມຸມມອງຂອງສະຖາບັນໂດຍລວມ, ໂຄງການດັ່ງກ່າວນີ້ຊ່ວຍສ້າງເຄືອຂ່າຍການພົວພັນຮ່ວມມືລະຫວ່າງອາຈານພາຍໃນສະຖາບັນ, ອີງຕາມການສະໜັບສະໜູນ, ແລກປ່ຽນປະສົບການ ແລະ ຄວາມຮູ້ ເຊິ່ງກັນ ແລະ ກັນ. ຫຼາຍກວ່າ 10 ປີ ຫຼັງຈາກການເລີ່ມໂຄງການນີ້, ເຄືອຂ່າຍຮ່ວມມືໄດ້ກາຍເປັນການດູກສັນຫຼັງຂອງຊຸມຊົນນັກວິຊາການທີ່ມີສະມາຊິກຫຼາຍກວ່າ 150 ກວ່າຄົນ, ເຊິ່ງເປີດໂອກາດຫຼາຍໃຫ້ແກ່ການພົວພັນທາງສັງຄົມ ແລະ ແລກປ່ຽນຢ່າງບໍ່ເປັນທາງການ ທີ່ໄດ້ເສີມສ້າງຄວາມຮູ້ສຶກເປັນເຈົ້າຂອງ ແລະ ຄວາມປາຖະໜາທີ່ຈະສືບຕໍ່ເຮັດວຽກຮ່ວມກັນ.

## ສະຫຼຸບ

ສະຫຼຸບແລ້ວ, ວິທີການສິດສອນ ແລະ ການປະຕິບັດທີ່ມີປະສິດຕິພາບແມ່ນມີຄວາມຈຳເປັນໃນການສ້າງຫຼັກສູດໃຫ້ເຂັ້ມແຂງ, ໂດຍສະເພາະແມ່ນຂະແໜງການສຶກສາຊັ້ນສູງທີ່ກຳລັງສຸມໃສ່ການວິທີການສອນທີ່ເນັ້ນຄວາມສາມາດ. ມີການສຶກສາຄົ້ນຄວ້າຈຳນວນໄດ້ຊີໃຫ້ເຫັນວ່າ ການຮຽນ-ການສອນແບບການຮຽນຮູ້ຜ່ານປະສົບການ, ການເອົານັກຮຽນເປັນໃຈກາງ, ການຮ່ວມມືກັນ ແລະ ການຮຽນຮູ້ແບບສະຫະວິຊາ ເຊິ່ງສາມາດເສີມຂະຫຍາຍການພັດທະນາວິຊາຊີບໃນການສຶກສາຊັ້ນສູງຢ່າງຫຼວງຫຼາຍ ໂດຍການໃຫ້ທາງເລືອກທີ່ຫຼາຍກວ່າການຮັບເອົາຄວາມຮູ້ພຽງຢ່າງດຽວເທົ່ານັ້ນ. ສະນັ້ນ, ສະຖາບັນການສຶກສາຊັ້ນສູງ ແລະ ອາຈານ ຕ້ອງກ້າວໄປໄກກວ່າຮູບແບບການສອນແບບດັ້ງເດີມ ເພື່ອສົ່ງເສີມການມີສ່ວນຮ່ວມຂອງຜູ້ຮຽນ ແລະ ບັນລຸຜົນການຮຽນຮູ້ທີ່ມີປະສິດທິຜົນ.

## ກິດຈະກຳແບບມີສ່ວນຮ່ວມ

### ກິດຈະກຳ 1

| ຫົວຂໍ້ກິດຈະກຳ | **ການທ່ອງທ່ຽວແບບຍືນຍົງ: ນິຍາມ, ຄຸນຄ່າ ແລະ ຫຼັກການຜ່ານການຮຽນຮູ້ຜ່ານປະສົບການ ແລະ ການຮ່ວມມື.** |
|---|---|
| **ໄລຍະເວລາ** | 60 ນາທີ |
| **ວິທີການສອນ** | • ແນະນຳຫົວຂໍ້ "ການທ່ອງທ່ຽວແບບຍືນຍົງ" ໃຫ້ແກ່ຜູ້ຮຽນ ໂດຍການອ່ານບາງຂໍ້ຄວາມທີ່ກ່ຽວຂ້ອງກັບຫົວຂໍ້ນີ້. ຈຳນວນຂໍ້ຄວາມອາດຈະແຕກຕ່າງກັນໄປຂຶ້ນກັບຈຳນວນຜູ້ຮຽນ ແລະ ເວລາທີ່ມີ.<br>• ແບ່ງນັກຮຽນອອກເປັນກຸ່ມອີງຕາມຈຳນວນ ແລະ ຂໍ້ຄວາມທີ່ໃຊ້ໃນກິດຈະກຳ. ຢາຍເຈ້ຍແຜ່ນໃຫຍ່ ແລະ ຊຸດເຄື່ອງຂຽນໃຫ້ແຕ່ລະກຸ່ມ.<br>• ໃຫ້ແຕ່ລະກຸ່ມລະດົມສະໝອງ ແລະ ອະທິບາຍຂໍ້ຄວາມໃຫ້ລະອຽດ. ການນຳໃຊ້ຄວາມຮູ້ ແລະ ປະສົບການຂອງສະມາຊິກພາຍໃນກຸ່ມ<br>• ໃຫ້ແຕ່ລະກຸ່ມນຳສະເໜີຜົນການລະດົມສະໝອງໃຫ້ສະມາຊິກໃນຫ້ອງຟັງ. ສະຫຼຸບຜົນຂອງການສົນທະນາໃສ່ເຈ້ຍແຜ່ນພັບຂອງແຕ່ລະກຸ່ມ.<br>• ສະຫຼຸບກິດຈະກຳໂດຍໃຫ້ຜູ້ຮຽນທັງໝົດໄດ້ຖອດຖອນບົດຮຽນ ແລະ ແລກປ່ຽນສິ່ງທີ່ໄດ້ຮຽນຮູ້ຜ່ານກິດຈະກຳນີ້. |

| | |
|---|---|
| | ບາງຂໍ້ຄວາມຕົວຢ່າງທີ່ສາມາດນໍາໃຊ້ໃນກິດຈະກໍາ<br>● ຫຼັກການຄວາມຍືນຍົງໝາຍເຖິງການພັດທະນາການທ່ອງທ່ຽວທີ່ກວມເອົາດ້ານສິ່ງແວດລ້ອມ, ເສດຖະກິດ ແລະ ວັດທະນະທໍາ-ສັງຄົມ. ການດຸ່ນດ່ຽງທີ່ເໝາະສົມຕ້ອງໄດ້ຮັບການສ້າງຂຶ້ນລະຫວ່າງສາມມິຕິເຫຼົ່ານີ້ເພື່ອຮັບປະກັນຄວາມຍືນຍົງໃນໄລຍະຍາວ.<br>● ການທ່ອງທ່ຽວແບບຍືນຍົງຄວນນໍາໃຊ້ຊັບພະຍາກອນທໍາມະຊາດຢ່າງເໝາະສົມ. ຮັກສາຂະບວນການທາງນິເວດວິທະຍາທີ່ສໍາຄັນ ແລະ ອະນຸລັກມໍລະດົກທາງທໍາມະຊາດ ແລະ ຊີວະນາໆພັນ.<br>● ການທ່ອງທ່ຽວແບບຍືນຍົງຄວນເຄົາລົບຄວາມເປັນເອກະລັກທາງດ້ານວັດທະນະທໍາ-ສັງຄົມຂອງຊຸມຊົນເຈົ້າພາບ, ຮັກສາມໍລະດົກວັດທະນະທໍາທີ່ສ້າງຂຶ້ນ ແລະ ດັ້ງເດີມ, ຄຸນຄ່າພື້ນເມືອງ ແລະ ສົ່ງເສີມຄວາມເຂົ້າໃຈທາງວັດທະນະທໍາ ແລະ ຄວາມທົນທານ.<br>● ການທ່ອງທ່ຽວແບບຍືນຍົງຕ້ອງສ້າງເສດຖະກິດທີ່ໝັ້ນຄົງໃນໄລຍະຍາວ, ໂດຍການແຈກຢາຍຜົນປະໂຫຍດຢ່າງຍຸດຕິທໍາ ແລະ ຍືນຍົງໃຫ້ແກ່ທຸກພາກສ່ວນກ່ຽວຂ້ອງ, ລວມທັງການຈ້າງງານທີ່ໝັ້ນຄົງ ແລະ ການຫຼຸດຜ່ອນຄວາມທຸກຍາກ.<br>● ການທ່ອງທ່ຽວແບບຍືນຍົງຮຽກຮ້ອງໃຫ້ມີການມີສ່ວນຮ່ວມຈາກທຸກພາກສ່ວນ ແລະ ການນໍາພາທີ່ເຂັ້ມແຂງຂອງລັດຖະບານເພື່ອສ້າງຄວາມເຫັນດີເຫັນພ້ອມ.<br>● ການບັນລຸການທ່ອງທ່ຽວແບບຍືນຍົງແມ່ນຂະບວນການຢ່າງຕໍ່ເນື່ອງທີ່ຮຽກຮ້ອງໃຫ້ມີການຕິດຕາມຜົນກະທົບຢ່າງຕໍ່ເນື່ອງ ແລະໃຊ້ມາດຕະການປ້ອງກັນ ຫຼື ແກ້ໄຂຕາມຄວາມຈໍາເປັນ.<br>ຫມາຍເຫດ: ຖ້າຈັດກິດຈະກໍາຜ່ານທາງອອນລາຍ, ຂໍແນະນໍາໃຫ້ໃຊ້ເຄື່ອງມືການຮຽນອອນໄລນ໌ທີ່ສາມາດແບ່ງກຸ່ມນັກຮຽນໄດ້. |

## ກິດຈະກໍາ 2

| | |
|---|---|
| **ຊື່ກິດຈະກໍາ** | ຜົນກະທົບດ້ານລົບຂອງການທ່ອງທ່ຽວ: ການຮຽນຮູ້ຜ່ານການແກ້ໄຂບັນຫາ (PBL) |
| **ໄລຍະເວລາ** | ນາທີ |
| **ວິທີການສອນ** | ● ແນະນໍານັກຮຽນດ້ວຍຄໍາຖາມຕໍ່ໄປນີ້: "*ການທ່ອງທ່ຽວສົ່ງຜົນກະທົບດ້ານລົບອັນໃດແດ່ໃນຊຸມຊົນທ້ອງຖິ່ນຂອງເຈົ້າ?*"<br>● ແບ່ງນັກຮຽນອອກເປັນສອງ ຫຼື ຫຼາຍກຸ່ມ. (ອີງຕາມຈໍານວນນັກຮຽນ)<br>● ໃຫ້ແຕ່ລະກຸ່ມລະດົມຄວາມຄິດເພື່ອຕອບຄໍາຖາມ, ວິເຄາະບັນຫາໃຫ້ເລິກເຊິ່ງ, ເກັບກໍາຂໍ້ສະເຫນີແນະຈາກສະມາຊິກທັງຫມົດ ແລະ ກໍານົດຜົນກະທົບທາງລົບທີ່ແທ້ຈິງຕໍ່ຊຸມຊົນຂອງພວກເຂົາ.<br>● ຫຼັງຈາກນັ້ນ, ໃຫ້ແຕ່ລະກຸ່ມຄົ້ນຄວ້າວິທີແກ້ໄຂຈາກມູມມອງ ແລະ ທັດສະນະຕ່າງໆ.<br>● ເມື່ອພົບວິທີແກ້ໄຂທີ່ເປັນໄປໄດ້, ໃຫ້ເຂົາເຈົ້າສ້າງແຜນການທີ່ປະກອບມີການແກ້ໄຂທີ່ສົມບູນແບບເພື່ອຫຼຸດຜ່ອນຜົນກະທົບທາງລົບທີ່ໄດ້ກໍານົດ.<br>● ໃຫ້ແຕ່ລະກຸ່ມນໍາສະເໜີຜົນຂອງການວິເຄາະ ແລະ ສະຫຼຸບການສົນທະນາຂອງຕົນໃສ່ເຈ້ຍແຜ່ນພັບ.<br>● ສະຫຼຸບກິດຈະກໍາໂດຍໃຫ້ຜູ້ຮຽນທັງໝົດໄດ້ຖອດຖອນບົດຮຽນ ແລະ ແບ່ງປັນສິ່ງທີ່ໄດ້ຮຽນຮູ້. |

## ກິດຈະກຳທີ 3

| | |
|---|---|
| ຊື່ກິດຈະກຳ | ການຈັດກຸ່ມໂດຍໃຊ້ 4 ຫຼັກການຂອງການຮຽນຮູ້ແບບເຮັດວຽກເປັນທີມ (**TBL**). |
| ໄລຍະເວລາ | 30 ນາທີ |
| ວິທີການສອນ | ແບ່ງຜູ້ຮຽນອອກເປັນສອງ ຫຼື ຫຼາຍກຸ່ມ (ອີງຕາມຈຳນວນນັກຮຽນ) ໂດຍນຳໃຊ້ 4 ຫຼັກການຂອງການຮຽນຮູ້ແບບເຮັດວຽກເປັນທີມ (TBL):<br>• ສ້າງ ແລະ ບໍລິຫານກຸ່ມຢ່າງຖືກຕ້ອງ: ຮັບປະກັນການຈັດກຸ່ມໃຫ້ມີຄວາມຫຼາກຫຼາຍທາງດ້ານພື້ນຖານ, ປະສົບການ, ຄວາມສົນໃຈ, ແລະ ລັກສະນະສ່ວນບຸກຄົນອື່ນໆ. ຫຼີກເວັ້ນການຈັດກຸ່ມໂດຍອີງໃສ່ເຊື້ອຊາດ, ພາສາ, ຫຼື ຄວາມສຳພັນສ່ວນບຸກຄົນທີ່ອາດຈະສົ່ງຜົນກະທົບຕໍ່ຄວາມສາມັກຄີຂອງທີມງານນັກຮຽນຄວນຢູ່ໃນກຸ່ມດຽວກັນຕະຫຼອດຫຼັກສູດເພື່ອໃຫ້ທີມງານໃຊ້ເວລາໃນການພັດທະນາເປັນທີມທີ່ມີປະສິດທິພາບ.<br>• ຄວາມຮັບຜິດຊອບ: ມັນເປັນສິ່ງສຳຄັນທີ່ເຮັດໃຫ້ນັກຮຽນມີຄວາມຮັບຜິດຊອບຕໍ່ອາຈານ/ຜູ້ອຳນວຍຄວາມສະດວກ ແລະ ເພື່ອນຮ່ວມທີມ. ມອບໝາຍໃຫ້ກຸ່ມແບ່ງປັນຄວາມຮັບຜິດຊອບຕໍ່ວຽກງານ ແລະ ນຳໃຊ້ການປະເມີນເພື່ອນຮ່ວມທີມເປັນສ່ວນໜຶ່ງຂອງຂະບວນການເຮັດວຽກ.<br>• ການຄຳຄິດເຫັນ: ຊຸກຍູ້ໃຫ້ຜູ້ຮຽນແລກປ່ຽນຄຳຄິດເຫັນຕະຫຼອດຂະບວນການຮຽນຮູ້.<br>• ວຽກທີ່ສົ່ງເສີມທັງການຮຽນຮູ້ ແລະ ການພັດທະນາທີມງານ: ການອອກແບບກິດຈະກຳ ແລະ ໜ້າວຽກທີ່ສະມາຊິກໃນທີມຕ້ອງມີສ່ວນຮ່ວມເຮັດວຽກເພື່ອແກ້ໄຂບັນຫາທີ່ຊັບຊ້ອນ.<br><br>ການນຳໃຊ້ຫຼັກການສີ່ຢ່າງນີ້ຈະຊ່ວຍໃຫ້ຜູ້ຮຽນພັດທະນາທັກສະການຮຽນຮູ້ຂອງເຂົາເຈົ້າ, ການແລກປ່ຽນຄວາມຮູ້ ແລະ ເຮັດວຽກເປັນທີມເພື່ອບັນລຸເປົ້າໝາຍທົ່ວໄປຂອງທີມ. |

# ແບບປະເມີນນ້ອຍ

1. ການຮຽນຮູ້ຈາກປະສົບການຕົວຈິງ (Experiential learning) ເປັນຂະບວນການທີ່ອາຈານຕັ້ງໃຈໃຫ້ນັກຮຽນມີສ່ວນຮ່ວມ "ການຮຽນຮູ້ໂດຍການລົງມືເຮັດ" ແລະ ສະທ້ອນໃຫ້ເຫັນປະສົບການ:
   ກ.ຖືກ
   ຂ. ຜິດ
2. ຂໍ້ໃດຕໍ່ໄປນີ້ບໍ່ໄດ້ລວມຢູ່ໃນສີ່ຫຼັກການຂອງການຮຽນຮູ້ແບບເຮັດວຽກເປັນທີມ?
   ກ. ການສອນ
   ຂ. ຄວາມຮັບຜິດຊອບ
   ຄ. ຄຳຕິຊົມ
   ງ. ວຽກງານທີ່ສົ່ງເສີມການພັດທະນາທີມງານ
3. ຂໍ້ໃດຕໍ່ໄປນີ້ບໍ່ສອດຄ່ອງກັບການຮຽນຮູ້ຜ່ານການແກ້ໄຂບັນຫາ (Problem-Based Learning)?
   ກ.ການລະບຸ ແລະ ວິເຄາະບັນຫາທີ່ຊັບຊ້ອນ ແລະ ເປັນບັນຫາໃນໂລກຄວາມເປັນຈິງທີ່ສົ່ງຜົນກະທົບໂດຍກົງຕໍ່ຜູ້ຮຽນ ແລະ ຊຸມຊົນທີ່ພວກເຂົາອາໄສຢູ່

ຂ. ການສະຫນອງທັດສະນະທີ່ສົມບູນແບບຂອງເນື້ອຫາໂດຍຜ່ານວິທີການເທິງລົງລຸ່ມ.

ຄ. ການຄົ້ນຫາວິທີແກ້ໄຂຈາກຄວາມຫຼາກຫຼາຍຂອງທັດສະນະແລະທັດສະນະ.

ງ. ການນໍາແນວທາງແກ້ໄຂບັນຫາທີ່ລະບຸໄດ້ມາໃຊ້ຊໍ້າເປັນຍຸດທະສາດແລະການປະຕິບັດ

4. ການສອນຮ່ວມກັນແມ່ນຜົນມາຈາກການຮ່ວມມືຢ່າງໃກ້ຊິດລະຫວ່າງຄູສອງຄົນຂຶ້ນໄປ. ເຊິ່ງມີຄວາມຮັບຜິດຊອບໃນການສອນນັກຮຽນກຸ່ມດຽວກັນ ຫຼື ວິຊາດຽວກັນ:

ກ. ຖືກ

ຂ. ຜິດ

5. ຮູບແບບການມີສ່ວນຮ່ວມຂອງນັກຮຽນໃນການພັດທະນາຫຼັກສູດປະກອບມີ:

ກ ການໃຫ້ຄໍາປຶກສາການຮັດວຽກຮ່ວມກັນ ແລະການຝຶກອົບຮົມຮ່ວມກັນ

ຂ.ຄວາມຮັບຜິດຊອບຮ່ວມກັນ ແລະການຮ່ວມມື

ຄ ການຮ່ວມມືແລະການຝຶກອົບຮົມຮ່ວມກັນ

ງ. ການໃຫ້ຄໍາປຶກສາເຮັດວຽກຮ່ວມກັນ ແລະການສ້າງຮ່ວມກັນ

## ແຫຼ່ງຂໍ້ມູນເພີ່ມເຕີມ

UNWTO Education Toolkit - EDUCATION TOOLKIT For the incorporation of tourism as a subject in high schools.

SALTO -Tools For Learning in non-formal education

SALTO - Guide.pdf Support Young Women and Professionals in the field of Alternative and Sustainanle Tourism

Council of Europe – Compass: Manual for human rights education

## ເອກະສານອ້າງອີງ


Bacharach, Heck, Dahlberg, (2008). Co-teaching in Higher Education. Tlc 53, 9–16

Buckingham, López-Hernández, Strotmann, (2021). Learning by Comparison: The Benefits of Co-Teaching for University Professors' Professional Development

Caradonna, (2020). Il Progetto "Mentori per la didattica" dell'Università di Palermo dopo sei anni dalla nascita e le iniziative future. Genova University Press, pp. 271-279.

Ciences, Oznan, Oland, Grzeskowiak, Podlewski, Turowska-koska, Drobnik, (2009). The first attempt at initiating problem-based learning as a method of teaching. The

Kaohsiung Journal of Medical Sciences, 25(5), 271–275. Available at http://doi.org/10.1016/S1607-551X(09)70073-7

Council of Europe. Brander, De Witte, Ghanea, Gomes, Keen, Nikitina, Pinkeviciute, (2023). Compass: Manual for Human Rights Education with Young People (2nd edition). Available at https://rm.coe.int/compass-2023-eng-final-web/1680af992c

European Union, (2022). The Future of Digital and Online Learning in Higher Education. Available at https://op.europa.eu/en/publication-detail/-/publication/90c23493-7cc9-11ec-8c40-01aa75ed71a1/language-en

Falconer, (2016). Why Not Try Active Learning? Available at www.wileyonlinelibrary.com

Kibble, Bellew, Asmar, Barkley, (2016). Team-based learning in large enrollment classes. Adv Physiol Educ 40: 435–442

Levintova, Mueller, (2015). Sustainability: Teaching an Interdisciplinary Threshold Concept through Traditional Lecture and Active Learning. Canadian Journal for the Scholarship of Teaching and Learning, 6(1), 20. Available at http://doi.org/10.5206/cjsotl-rcacea.2015.1.3

Lu, J., Bridges, S., & Hmelo-Silver, C. E. (2014). Problem-based learning. In R. K. Sawyer (Ed.), The Cambridge handbook of the learning sciences (2nd ed., pp. 298–318). Cambridge University Press. https://doi.org/10.1017/CBO9781139519526.019

Maggio, Lombardo, Martino, (2015), La formazione e l'aggiornamento dei docenti chimici dell'Università di Palermo: le attività del Progetto Mentore e del TLC-CIMDU. STEBICEF Department – University of Palermo. Available at https://chimicanellascuola.it/index.php/cns/article/view/198/333

Moro, Christian & McLean, (2017). Supporting students' transition to university and problem-based learning. Medical Science Education, 27, 353–361. Available at http://doi.org/10.1007/s40670-017-0384-6

Parmelee, Michaelsen, Cook, Hudes, (2012), Team-based learning: a practical guide: AMEE guide. No. 65. Med Teach 34: e275–e287

Smith, (2010). 'David A. Kolb on experiential learning', The encyclopedia of pedagogy and informal education. Available at https://infed.org/mobi/david-a-kolb-on-experiential-learning/

Sylvester Donkoh, (2024). The Use and Challenges of Learner-Centered Pedagogy: Basic School Teachers' Perspective. Available at https://www.ej-edu.org/index.php/ejedu/article/view/774

Thwin, Phyu Aye & Lwin, (2018). Simple interactive lecturing strategies for fostering students’ engagement and active Participation. Medical Science Education, 28, 203–209

UNESCO, (1996). Education for the 21st century: learning to learn. Available at https://unesdoc.unesco.org/ark:/48223/pf0000102622

UNESCO. (2014). The heart of education: learning to live together; selected papers presented at the 16th UNESCO-APEID International Conference. Available at https://unesdoc.unesco.org/ark:/48223/pf0000227373

UNESCO, (2022). Knowledge-driven actions: transforming higher education for global sustainability. Available at https://unesdoc.unesco.org/ark:/48223/pf0000380519

# ບົດທີ 5: ຫຼັກສູດພັດທະນາວິຊາຊີບກ່ຽວກັບການພັດທະນາການທ່ອງທ່ຽວແບບຍືນຍົງ

## ພາກສະເໜີ

ສິ່ງທ້າທາຍທີ່ມີຢູ່ຕະຫຼອດໃນອຸດສາຫະກຳການທ່ອງທ່ຽວເນັ້ນໃຫ້ຮູ້ວ່າສະຖາບັນການສຶກສາຊັ້ນສູງ ແລະ ຜູ້ມີສ່ວນກ່ຽວຂ້ອງໃນອຸດສາຫະກຳຕ້ອງໄດ້ສອດແຊກຄ່ານິຍົມກ່ຽວກັບຄວາມຍືນຍົງເຂົ້າໃນຫຼັກສູດການທ່ອງທ່ຽວເພື່ອສ້າງກຳລັງແຮງງານທີ່ມີຄວາມຕ້ານທານ ແລະ ມີຄວາມຮັບຜິດຊອບທີ່ສາມາດປະກອບສ່ວນຢ່າງມີຄວາມໝາຍໃນເປົ້າໝາຍການພັດທະນາແບບຍືນຍົງພາຍໃນຂະແໜງການທ່ອງທ່ຽວ. ເພາະສະນັ້ນ, ສະຖາບັນການສຶກສາຊັ້ນສູງຄວນຈະສາມາດສະໜອງຫຼັກສູດການພັດທະນາອາຊີບທີ່ເປັນລະບົບທີ່ປັບປຸງອາຊີບຂອງຜູ້ຮຽນໃນຂະແໜງການທ່ອງທ່ຽວ ແລະ ການບໍລິການໃຫ້ຫຼາຍຂຶ້ນ, ໃນເວລາດຽວກັນຮັກສາການຕອບໂຕ້ຢ່າງມີປະສິດທິຜົນຕໍ່ສິ່ງທ້າທາຍຂອງໂລກໃນຍຸກໃໝ່. ເປັນຜົນມາຈາກການຮ່ວມມື ແລະ ການສ້າງຄວາມເຂັ້ມແຂງໃນຂົງເຂດການສຶກສາຊັ້ນສູງລະຫວ່າງມະຫາວິທະຍາໄລໃນເອີຣົບ ແລະ ອາຊີຢູ່ໃນຂອບຂອງໂຄງ Erasmus+ ນະວັດຕະກາເພື່ອການທ່ອງທ່ຽວ. ບົດນີ້ສະເໜີຕົວຢ່າງຈານວນໜຶ່ງຂອງຫຼັກສູດພັດທະນາວິຊາຊີບກ່ຽວກັບການທ່ອງທ່ຽວແບບຍືນຍົງ ເຊິ່ງພັດທະນາຂຶ້ນໂດຍອີງໃສ່ຂອບ ແລະ ວິທີວົງຈອນຊີວິດຫຼັກສູດເຊິ່ງໄດ້ອະທິບາຍໄວ້ໃນບົດທີ 3.

## ຜົນການຮຽນຫຼັກ

- **ໄດ້ຮັບຄວາມຮູ້ກ່ຽວກັບຫຼັກສູດພັດທະນາວິຊາຊີບກ່ຽວກັບການທ່ອງທ່ຽວແບບຍືນຍົງ:** ເຂົ້າໃຈຂອບ ແລະ ເນື້ອໃນຂອງຫຼັກສູດພັດທະນາວິຊາຊີບທີ່ຖືກອອກແບບເພື່ອໃຫ້ນັກສຶກສາໄດ້ຄວາມຮູ້ ແລະ ທັກສະກ່ຽວກັບການທ່ອງທ່ຽວແບບຍືນຍົງ, ເຊິ່ງແນໃສ່ຄວາມຍືນຍົງ, ການຫັນປ່ຽນເປັນດີຈິຕອລ ແລະ ສີຂຽວ, ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ, ແລະ ການປະຕິບັດທີ່ມີຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

## ຄຳແນະນຳສຳລັບຄູຝຶກ

- **ສຳຫຼວດຕົວຢ່າງຫຼັກສູດການພັດທະນາວິຊາຊີບກ່ຽວກັບການທ່ອງທ່ຽວແບບຍືນຍົງ:** ໄດ້ຄວາມຮູ້ເລິກເຊິ່ງ ແລະ ແບບວິທີປະຕິບັດຂອງຫຼັກສູດການພັດທະນາວິຊາຊີບກ່ຽວກັບການທ່ອງທ່ຽວແບບຍືນຍົງ.
- **ສ້າງແຮງບັນດານໃຈ:** ສ້າງແຮງບັນດານໃຈຈາກຕົວຢ່າງຫຼັກສູດການພັດທະນາວິຊາຊີບເຫຼົ່ານີ້ເພື່ອສ້າງຫຼັກສູດວິຊາການ ແລະ ວິຊາຊີບ ເຊິ່ງສອດແຊກຫຼັກການຄວາມຍືນຍົງໃນການສຶກສາການທ່ອງທ່ຽວ.

## ແນວຄວາມຄິດຫຼັກ

ອີງຕາມຄວາມຕ້ອງການ ແລະ ຊ່ອງຫວ່າງດ້ານທັກສະຂອງກຳລັງແຮງງານໃນອຸດສະຫະກຳການທ່ອງທ່ຽວ ແລະ ການບໍລິການໃນປະເທດໄທ ແລະ ສປປ ລາວ ໂດຍມະຫາວິທະຍາໄລຄູ່ຮ່ວມງານຂອງໂຄງການນະວັດຕະກຳດ້ານການທ່ອງທ່ຽວ, ບົດນີ້ສະເໜີຜົນຂອງການເຮັດວຽກເປັນກຸ່ມໂດຍຜູ້ມີສ່ວນຮ່ວມຈາກ ມະຫາວິທະຍາໄລສົງຂານະຄະລິນ, ມະຫາວິທະຍາໄລຊຽງໃໝ່ ໃນປະເທດໄທ, ແລະ ຜູ້ມີສ່ວນຮ່ວມຈາກມະຫາວິທະຍາໄລສະຫວັນນະເຂດ, ແລະ ມະຫາວິທະຍາໄລແຫ່ງຊາດ ໃນ ສປປ ລາວ. ໂຄງການຝຶກອົບຮົມຄູຝຶກ "ຫຼັກສູດນະວັດຕະກຳເພື່ອການຮຽນຮູ້ຕະຫຼອດຊີວິດຂອງກຳລັງແຮງງານການທ່ອງທ່ຽວແບບຍືນຍົງ", ເຊິ່ງປະສານງານໂດຍມະຫາວິທະຍາໄລປາເລີໂມ ໃນປະເທດອີຕາລີ ແລະ ມະຫາວິທະຍາໄລມາເຊໂດເນຍ ໃນປະເທດເກຼັກ ແລະ ຈັດຕັ້ງປະຕິບັດພາຍໃຕ້ຂອງໂຄງການ Erasmus+. ມະຫາວິທະຍາໄລຄູ່ຮ່ວມງານຈາກ ສປປ ລາວ ແລະ ປະເທດໄທ ໄດ້ເຂົ້າຮ່ວມການຝຶກອົບຮົມແບບມີສ່ວນຮ່ວມ ແລະ ກິດຈະກຳທີ່ເຮັດເປັນກຸ່ມເພື່ອອອກແບບຂອບຫຼັກສູດໃໝ່. ການຝຶກອົບຮົມສົ່ງເສີມໃຫ້ມີການຮຽນຮູ້ລະຫວ່າງຜູ້ເຂົ້າຮ່ວມດ້ວຍກັນ, ການແລກປ່ຽນບົດຮຽນທີ່ດີເລີດ ແລະ ການແກ້ໄຂບັນຫາຮ່ວມກັນ ເຮັດໃຫ້ຜູ້ເຂົ້າຮ່ວມສາມາດເອົາຊະນະສິ່ງທ້າທາຍຮ່ວມກັນ ແລະ ປັບຍຸດທະວິທີທີ່ປະສົບຜົນສຳເລັດຈາກປະເທດໜຶ່ງໄປຍັງອີກປະເທດໜຶ່ງ. ຫຼັກສູດທົດລອງນີ້ເປັນແມ່ແບບ ແລະ ເປັນແຫຼ່ງຂອງຄວາມບັນດານໃຈ ເຊິ່ງສະຖາບັນການສຶກສາອື່ນໆ ສາມາດໃຊ້ເປັນບ່ອນອີງ, ປັບ, ແລະ ພັດທະນາຕື່ມ ເພື່ອຕອບສະໜອງຄວາມຕ້ອງການສະເພາະຂອງທ້ອງຖິ່ນ ແລະ ພາກພື້ນ.

# ບົດທີ 5.1.: ຫຼັກສູດນະວັດຕະກຳເພື່ອການຮຽນຮູ້ຕະຫຼອດຊີວິດກ່ຽວກັບການທ່ອງທ່ຽວແບບຍືນຍົງ

| | |
|---|---|
| **ຊື່ວິຊາ** | **ການຈັດການການທ່ອງທ່ຽວແບບຍືນຍົງແບບເຊື່ອມສານ** |
| **ປະເພດຫຼັກສູດ** | ການພັດທະນາວິຊາຊີບ |
| **ໄລຍະເວລາ** | 90 ຊົ່ວໂມງ (45 ຊົ່ວໂມງ/ໂມດູລ - ລວມທັງໝົດ 2 ໂມດູລ) |
| **ສະຖານທີ່** | ປະເທດໄທ, ພູເກັດ |

**ຄຳອະທິບາຍ**

ວິຊານີ້ອອກແບບເພື່ອໃຫ້ຜູ້ຮຽນມີຄວາມເຂົ້າໃຈຢ່າງກວ້າງຂວາງກ່ຽວກັບຫຼັກການ, ວິທີປະຕິບັດ, ແລະ ຍຸດທະສາດທີ່ຈຳເປັນໃນການຈັດການການທ່ອງທ່ຽວໃນວິທີທີ່ສົ່ງເສີມຄວາມຍືນຍົງ ແລະ ຜົນສຳເລັດໃນໄລຍະຍາວຂອງສິ່ງແວດລ້ອມ ແລະ ຊຸມຊົນທ້ອງຖິ່ນ.

**ປະເມີນຄວາມຕ້ອງການ**

- ຄວາມຕ້ອງການທັກສະໃນອຸດສາຫະກຳການທ່ອງທ່ຽວ: ເຕັກໂນໂລຊີດິຈິຕາລ, ຄວາມສາມາດໃນການປັບຕົວ, ຊຸດຄວາມຄິດທີ່ເອົາການບໍລິການເປັນຫຼັກ, ພາສາ, ທັກສະຄອມພິວເຕີ, ທັກສະສີຂຽວ ແລະ ຄວາມຍືນຍົງ, ທັກສະການເປັນຜູ້ປະກອບການ ແລະ ການບໍລິຫານຈັດການ.
- ການກະທຳທີ່ຮີບດ່ວນຈຳເປັນເພື່ອປະກອບກຳລັງແຮງງານດ້ວຍທັກສະທີ່ສຳຄັນໃນ 3 ຂົງເຂດຕົ້ນຕໍປະກອບດ້ວຍຄວາມຍືນຍົງ ແລະ ສີຂຽວ, ດິຈິຕອນ ແລະ ການເປັນຜູ້ປະກອບການ.
- ຄວາມສຳຄັນຂອງການພັດທະນາທັກສະທັງໃນມະຫາວິທະຍາໄລ ແລະ ຜ່ານຊ່ອງທາງການຮຽນຮູ້ຕະຫຼອດຊີວິດ
- ການປະສານສົມທົບລະຫວ່າງຜູ້ມີສ່ວນກ່ຽວຂ້ອງຫຼັກຄວນເພີ່ມຂຶ້ນ: ລັດຖະບານ, ໜ່ວຍງານຂອງລັດ, ສະມາຄົມທຸລະກິດ, ຜູ້ປະກອບການ, ແລະ ສະຖາບັນການສຶກສາຊັ້ນສູງ.

**ວິໄສທັດຂອງຫຼັກສູດ**

ວິໄສທັດຂອງວິຊານະວັດຕະກຳພັດທະນາວິຊາຊີບແມ່ນເພື່ອ: **"ປະກອບໃຫ້ຜູ້ຮຽນມີສິ່ງເສົາຄ້ຳຂອງທັກສະເຊັ່ນ: ການຈັດການຄວາມຍືນຍົງ, ຄວາມຮູ້ພື້ນຖານດ້ານດິຈິຕອນ, ຄວາມຄິດສ້າງສັນ ແລະ ການຄິດວິເຄາະ, ແລະ ການເປັນຜູ້ປະກອບການໃນສະພາບແວດລ້ອມຂອງອຸດສາຫະກຳການທ່ອງທ່ຽວ ແລະ ການບໍລິການທີ່ມີການປ່ຽນແປງ ສອດຄ່ອງກັບຫຼັກຈັນຍາບັນສຳລັບການທ່ອງທ່ຽວຂອງອົງການທ່ອງທ່ຽວໂລກ."**

**ລັກສະນະຂອງຄຸນະວຸດທິ**

ຫຼັງຈາກຮຽນຈົບວິຊານີ້, ຜູ້ຮຽນສາມາດ:

- ສາທິດຄວາມຮູ້ພື້ນຖານກ່ຽວກັບ: ການຈັດການຄວາມຍືນຍົງ, ພື້ນຖານດິຈິຕອນ, ແນວຄິດສ້າງສັນ ແລະ ການຄິດວິເຄາະ, ແລະ ການເປັນຜູ້ປະກອບການ.
- ສາທິດຄວາມສາມາດໃນການນຳໃຊ້ເຄື່ອງມືທີ່ກ່ຽວຂ້ອງໃນການວິເຄາະເພື່ອພັດທະນາຍຸດທະສາດການທ່ອງທ່ຽວ.
- ຍອມຮັບຄວາມຮູ້ ແລະ ບັນຫາຂ້າມສາຂາວິຊາ ແລະ ນຳໃຊ້ຄວາມຮູ້ດັ່ງກ່າວເພື່ອພັດທະນາຍຸດທະສາດ ແລະ ຈັດຕັ້ງປະຕິບັດໃນທຸລະກິດການທ່ອງທ່ຽວ ແລະ ການບໍລິການ.
- ພັດທະນາແນວຄິດລິເລີ່ມການທ່ອງທ່ຽວແບບຍືນຍົງທີ່ມີຄວາມລະອຽດອ່ອນທາງສັງຄົມ ແລະ ມີຄວາມຍືນຍົງທາງເສດຖະກິດ.
- ສົ່ງເສີມການເຮັດວຽກເປັນໝູ່ຄະນະ, ທັກສະການແກ້ໄຂບັນຫາໃນສະພາບແວດລ້ອມທີ່ມີຄວາມຫຼາກຫຼາຍທາງວັດທະນາທຳ.

**ເງື່ອນໄຂຜູ້ສະໝັກ**

<u>ຄຸນວຸດທິ:</u> ຢ່າງຕ່ຳມີໃບປະກາດຈົບມັດທະຍົມປາຍ, ປະສົບການ: ມີປະສົບການເຮັດວຽກໃນອຸດສາຫະກຳການທ່ອງທ່ຽວ ແລະ ການບໍລິການ ຢ່າງຕ່ຳ

2 ປີ

ທັກສະ: ທັກສະສື່ສານພາສາອັງກິດຂັ້ນພື້ນຖານ (ຢ່າງຕໍ່າຄະແນນ TOEIC 500 ຫຼື ທຽບເທົ່າ), ສາມາດນາໃຊ້ Microsoft Word ແລະ Office.

ບຸກຄະລິກລັກສະນະ: ເຂົ້າຄົນງ່າຍ, ເຮັດວຽກເປັນໝູຄະນະ, ເປີດໃຈຕໍ່ຄົນອື່ນ ແລະ ຄວາມຫຼາກຫຼາຍ.

ຜູ້ສະໝັກທີ່ຜ່ານການຄັດເລືອກຕ້ອງເຂົ້າສໍາພາດ ແລະ ຂຽນບົດສະແດງຈຸດປະສົງໃນການສຶກສາຂອງຕົນເອງ.

## ເປົ້າໝາຍຂອງຫຼັກສູດ

ຫຼັງຈາກຮຽນຈົບຫຼັກສູດນີ້, ນັກຮຽນຈະມີຄຸນລັກສະນະດັ່ງຕໍ່ໄປນີ້:

ເປັນຜູ້ນໍາທີ່ມີຄວາມຮັບຜິດຊອບມີແນວຄວາມຄິດກ່ຽວກັບຄວາມຍືນຍົງ, ມີຄວາມຮູ້ເລິກເຊິ່ງ, ມີຄວາມສາມາດໃນການປັບປຸງຄວາມຮູ້ໃຫ້ທັນກັບສະພາບການໃນສະພາບແວດລ້ອມການທ່ອງທ່ຽວ ແລະ ການບໍລິການທີ່ການແຂ່ງຂັນສູງ.

## ຜົນການຮຽນ

ຫຼັງຈາກສໍາເລັດວິຊານີ້, ນັກຮຽນຈະບັນລຸຜົນການຮຽນດັ່ງຕໍ່ໄປນີ້:

**ຄວາມຮູ້**

- ສະແດງໃຫ້ເຫັນຄວາມຮູ້ກວາງຂວາງ ແລະ ຄວາມຍືນຍົງໃນບໍລິບົດຂອງການທ່ອງທ່ຽວ ແລະ ການບໍລິການ.
- ນໍາໃຊ້ວິທີປະຕິບັດ ແລະ ການຈັດການແບບຍືນຍົງໃນການປະຕິບັດງານໃນທຸລະກິດການທ່ອງທ່ຽວ ແລະ ການບໍລິການ.
- ສະເໜີແຜນທຸລະກິດການທ່ອງທຽວ ແລະ ການບໍລິການໃໝ່ທີ່ມີຄວາມສ້າງສັນ ແລະ ຍືນຍົງ.

**ທັກສະ**

- ສາມາດເຮັດວຽກໄດ້ດີກັບຄົນອື່ນໃນສະພາບແວດລ້ອມທີ່ມີຄວາມຫຼາກຫຼາຍທາງວັດທະນາທໍາ.
- ສະແດງຄວາມເປັນຜູ້ນໍາ ແລະ ທັດສະນະຄະຕິທາງບວກ.

**ທັດສະນະຄະຕິ**

- ຮັບເອົາເຕັກໂນໂລຊີທີ່ທັນສະໄໝໃນອຸດສາຫະກໍາການທ່ອງທ່ຽວ ແລະ ການບໍລິການ.

## ໂມດູລການຮຽນ

ໂມດູລການຮຽນໃນວິຊານີ້ປະກອບມີ:

| ຊື່ | ວິຊາ | ໜ່ວຍກິດ |
|---|---|---|
| **ໂມດູລ 1: ການປະຕິບັດງານ ແລະ ການຈັດການທຸລະກິດການບໍລິການ ແລະ ການທ່ອງທ່ຽວແບບຍືນຍົງ** | - ຫຼັກການການທ່ອງທ່ຽວແບບຍືນຍົງ<br>- ຫຼັກຈັນຍາບັນສາກົນສໍາລັບການທ່ອງທ່ຽວ<br>- ຜົນກະທົບຂອງການທ່ອງທ່ຽວຕໍ່ສິ່ງແວດລ້ອມ<br>- ແນວຄວາມຄິດເສດຖະກິດໝູນວຽນ/ສິ່ງເສດເຫຼືອເປັນສູນ<br>- ການຈັດການຜູ້ມີສ່ວນກ່ຽວຂ້ອງ<br>- ຄວາມຮັບຜິດຊອບຕໍ່ສັງຄົມສໍາລັບທຸລະກິດທ່ອງທ່ຽວ ແລະ ການບໍລິການ<br>- ຄວາມຮູ້ພື້ນຖານການປະຫຍັດພະລັງງານສໍາລັບທຸລະກິດທ່ອງທ່ຽວ ແລະ ການບໍລິການ | 3 ໜ່ວຍກິດ (45 ຊົ່ວໂມງ) |
| **ໂມດູລ 2: ການເປັນຜູ້ປະກອບການທຸລະກິດການທ່ອງທ່ຽວ ແລະ ການບໍລິການ** | - ການຈັດການທຸລະກິດທ່ອງທ່ຽວ ແລະ ການບໍລິການ<br>- ການອອກແບບຮູບແບບທຸລະກິດ<br>- ປະສົບການຂອງລູກຄ້າ ແລະ ການອອກແບບການບໍລິການ<br>- ພື້ນຖານການບັນຊີສໍາລັບທຸລະກິດຂະໜາດນ້ອຍ<br>- ການຕະຫຼາດສໍາລັບທຸລະກິດການບໍລິການ ແລະ ການທ່ອງທ່ຽວ | 3 ໜ່ວຍກິດ (45 ຊົ່ວໂມງ) |

| | | |
|---|---|---|
| | - ການເງິນທຸລະກິດສຳລັບທຸລະກິດຂະໜາດນ້ອຍ<br>- ເຕັກໂນໂລຊີຂໍ້ມູນຂ່າວສານສຳລັບການດຳເນີນງານທຸລະກິດ ການບໍລິການ ແລະ ການທ່ອງທ່ຽວຂະໜາດນ້ອຍ | |

**ໂອກາດໃນການຈ້າງງານ**

ຫຼັງຈາກຈົບຫຼັກສູດພັດທະນາວິຊາຊີບໃນການທ່ອງທ່ຽວແບບຍືນຍົງ, ນັກຮຽນຈະສາມາດປະກອບອາຊີບໃນຫຼາຍຊ່ອງທາງພາຍໃນຂະແໜງການທ່ອງທ່ຽວ ແລະ ການບໍລິການ. ຕົວຢ່າງອາຊີບໃນພາກເອກະຊົນປະກອບດ້ວຍ, ແຕ່ບໍ່ຈຳກັດສະເພາະ: ທີ່ປຶກສາການທ່ອງທ່ຽວແບບຍືນຍົງ, ນັກວິເຄາະ, ພະນັກງານ, ຜູ້ປະສານງານ ແລະ ນັກວິຊາການດ້ານການສຶກສາ.

**ຄຸນຄ່າໜ່ວຍກິດ**

6 ໜ່ວຍກິດ (90 ຊົ່ວໂມງ)

**ຮູບແບບການຮຽນ**

ກັບທີ່ແບບເຊິ່ງໜ້າ ແລະ ຮູບແບບປະສົມ (ແບບເຊິ່ງໜ້າ ແລະ ອອນລາຍ)

**ການວິເຄາະຜູ້ທີ່ມີສ່ວນກ່ຽວຂ້ອງ**

ແມັດທຣິກຜູ້ທີ່ມີສ່ວນກ່ຽວຂ້ອງ: ພາກລັດ ແລະ ພາກເອກະຊົນທີ່ຈະມີສ່ວນຮ່ວມໃນວິໄສທັດ ແລະ ການພັດທະນາຫຼັກສູດ:




| | |
|---|---|
| **ຊື່ວິຊາ** | **ການຈັດການການທ່ອງທ່ຽວແບບຍືນຍົງ** |

| ປະເພດຫຼັກສູດ | ຫຼັກສູດພັດທະນາວິຊາຊີບ |
|---|---|
| **ໄລຍະເວລາ** | 225 ຊົ່ວໂມງ (45 ຊົ່ວໂມງ/ໂມດູລ - ລວມທັງໝົດ 5 ໂມດູລ) |
| **ສະຖານທີ່** | ສປປ ລາວ |

**ຄຳອະທິບາຍ**

ຫຼັກສູດນີ້ກຽມຄວາມພ້ອມໃຫ້ຜູ້ຮຽນເພື່ອສ້າງຄວາມດຸນດ່ຽງໃນການເຕີບໂຕຂອງການທ່ອງທ່ຽວກັບຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ມັນລວມເອົາຫຼັກການຂອງວິທະຍາສາດສິ່ງແວດລ້ອມ, ນະໂຍບາຍ, ແລະ ການມີສ່ວນຮ່ວມຂອງຊຸມຊົນ, ແນ່ໃສ່ການນຳໄປໃຊ້ໃນຊີວິດຈິງ ແລະ ທັກສະທີ່ຈຳເປັນຜ່ານການລົງພາກສະໜາມ ແລະ ການຝຶກງານ. ກັບຄວາມຕ້ອງການໃນການເດີນທາງທີ່ເອົາໃຈໃສ່ຕໍ່ສິ່ງແວດລ້ອມທີ່ເພີ່ມຂຶ້ນ, ນັກຮຽນໄດ້ຮັບຄວາມຮູ້ ແລະ ທັກສະທີ່ມີຄຸນຄ່າໃນການວິເຄາະ, ການນຳໃຊ້ເຕັກໂນໂລຊີ, ແລະ ການສື່ສານທີ່ພາໄປສູ່ການປະຕິບັດທີ່ມີຄວາມຍືນຍົງໃນອຸດສາຫະກຳ. ນັກຮຽນໄດ້ປະກອບຄວາມຮູ້ເພື່ອນຳພາແນວຄິດລິເລີ່ມການທ່ອງທ່ຽວແບບຍືນຍົງ ທີ່ເຄົາລົບມໍລະດົກທາງວັດທະນາທຳ, ການອະນຸລັກຊັບພະຍາກອນ, ແລະ ການສົ່ງເສີມຜົນປະໂຫຍດຍືນຍາວສຳລັບຈຸດໝາຍປາຍທາງ, ຊຸມຊົນ ແລະ ລະບົບນິເວດ.

**ການປະເມີນຄວາມຕ້ອງການ**

-

- ຄວາມຕ້ອງການນັກວິຊາການທີ່ມີຄວາມສຳນານງານໃນການທ່ອງທ່ຽວແບບຍືນຍົງແມ່ນເຕີບໂຕທີ່ມີຄວາມສຳຄັນ ລວມທັງເຕັກໂນໂລຊີດິຈິຕອນ, ຄວາມສາມາດໃນການປັບຕົວ, ຊຸດຄວາມຄິດທີ່ເອົາການບໍລິຫານເປັນຫຼັກ, ພາສາ, ທັກສະຄອມພິວເຕີ, ທັກສະສີຂຽວ ແລະ ຄວາມຍືນຍົງ, ທັກສະການເປັນຜູ້ປະກອບການ ແລະ ການຈັດການ.
- ຄວາມຕ້ອງການຂອງຕະຫຼາດ ແລະ ນັກທ່ອງທ່ຽວໃນການປະຕິບັດການທ່ອງທ່ຽວແບບຍືນຍົງເພີ່ມຂຶ້ນ.
- ຄວາມຮູ້, ຄວາມຮັບຮູ້ ແລະ ການມີສະຕິຕໍ່ລະບຽບ ແລະ ນະໂຍບາຍການພັດທະນາການທ່ອງທ່ຽວແບບຍືນຍົງເພີ່ມຂຶ້ນ.
- ຄວາມມຸ້ງໝັ້ນຂອງບໍລິສັດຕໍ່ຄວາມຍືນຍົງເພີ່ມຂຶ້ນ.

**ວິໄສທັດຂອງຫຼັກສູດ**

ວິໄສທັດຂອງຫຼັກສູດພັດທະນາວິຊາຊີບທີ່ມີນະວັດຕະກຳນີ້ແມ່ນເພື່ອ: **"ຜະລິດບຸກຄະລາກອນໃນສາຂາການທ່ອງທ່ຽວແບບຍືນຍົງເພື່ອສັງຄົມໂລກ. ຫຼັກສູດນີ້ມີເປົ້າໝາຍເພື່ອປະກອບຄວາມຮູ້ກ່ຽວກັບການທ່ອງທ່ຽວແບບຍືນຍົງໃນດ້ານສິ່ງແວດລ້ອມ, ກົດໝາຍ, ແລະ ເສດຖະກິດ-ສັງຄົມໃຫ້ແກ່ນັກສຶກສາ. ຫຼັກສູດນີ້ເນັ້ນຄວາມສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດ, ຄວາມເຂັ້ມແຂງດ້ານວິທະຍາສາດ, ແລະ ວິທີການວິເຄາະເພື່ອສະທ້ອນບັນຫາທີ່ແທ້ຈິງ ແລະ ຄວາມຕ້ອງການຂອງອຸດສາຫະກຳການທ່ອງທ່ຽວທີ່ກຳລັງປ່ຽນແປງ."**

**ລັກສະນະຂອງຄຸນະວຸດທິ**

ຫຼັງຈາກສຳເລັດຫຼັກສູດນີ້, ນັກຮຽນສາມາດ:

- ເຂົ້າໃຈວິທີສ້າງຍຸດທະສາດການທ່ອງທ່ຽວທີ່ສ້າງຜົນປະໂຫຍດໃຫ້ແກ່ຊຸມຊົນໃນດ້ານເສດຖະກິດ ແລະ ສັງຄົມໃນທາງທີ່ຍືນຍົງ.
- ເພື່ອຈັດຕັ້ງປະຕິບັດວິທີທີ່ຊ່ວຍຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມຈາກກິດຈະກຳການທ່ອງທ່ຽວ, ລວມທັງການອະນຸລັກຊັບພະຍາກອນທຳມະຊາດ ແລະ ການຫຼຸດຜ່ອນມົນລະພິດ.
- ເພື່ອເຂົ້າໃຈບັນຫາທາງຈັນຍາບັນໃນການທ່ອງທ່ຽວ, ລວມທັງຈັນຍາບັນດ້ານສິ່ງແວດລ້ອມ ແລະ ຄວາມຮັບຜິດຊອບຕໍ່ສັງຄົມເພື່ອຮັບປະກັນການປະຕິບັດທີ່ຈັນຍາບັນໃນການທ່ອງທ່ຽວ.
- ນຳໃຊ້ເຄື່ອງມື ແລະ ເຕັກໂນໂລຊີດິຈິຕອນເພື່ອປັບປຸງວິທີປະຕິບັດແບບຍືນຍົງເຊັ່ນ: ການນຳໃຊ້ຂໍ້ມູນເພື່ອຕິດຕາມຜົນກະທົບດ້ານສິ່ງແວດລ້ອມ, ການນຳໃຊ້ຊ່ອງທາງດິຈິຕອນເພື່ອການຕະຫຼາດທີ່ເປັນມິດຕໍ່ສິ່ງແວດລ້ອມ, ຫຼື ການຈັດຕັ້ງປະຕິບັດລະບົບການຈັດການພະລັງງານ.
- ເພື່ອສື່ສານວິທີປະຕິບັດຄວາມຍືນຍົງຢ່າງຊັດເຈນ ແລະ ມີປະສິດທິຜົນໃຫ້ຜູ້ທີ່ມີສ່ວນກ່ຽວຂ້ອງທີ່ແຕກຕ່າງກັນ, ລວມທັງນັກທ່ອງທ່ຽວ, ຊຸມຊົນທ້ອງຖິ່ນ, ແລະ ທຸລະກິດ.

**ເງື່ອນໄຂຜູ້ສະໝັກ**

ຄຸນະວຸດທິ: ຢ່າງຕໍ່າມີໃບປະກາດຈົບມັດທະຍົມປາຍ, ປະສົບການ: ມີປະສົບການເຮັດວຽກໃນອຸດສາຫະກຳການບໍລິການ ແລະ ການທ່ອງທ່ຽວ ຢ່າງຕໍ່າ 2 ປີ.
ທັກສະ: ທັກສະສື່ສານພາສາອັງກິດຂັ້ນພື້ນຖານ (ຢ່າງຕໍ່າຄະແນນ TOEIC 500 ຫຼື ທຽບເທົ່າ), ສາມາດນຳໃຊ້ Microsoft Word ແລະ Office.
ບຸກຄະລິກລັກສະນະ: ມີຄວາມຕັ້ງໃຈ, ປະສານກັບໝູ່ຄະນະໄດ້ດີ, ມີແນວຄິດສ້າງສັນ ແລະ ເປີດໃຈ.

**ເປົ້າໝາຍຂອງຫຼັກສູດ**

ວິຊານີ້ມີເປົ້າໝາຍເພື່ອ

- **ພັດທະນາຄວາມຮູ້ພື້ນຖານກ່ຽວກັບການທ່ອງທ່ຽວແບບຍືນຍົງ**
- **ສົ່ງເສີມຄວາມສາມາດຕົ້ນຕໍ່ກ່ຽວກັບຄວາມຍືນຍົງ**
- **ເພີ່ມຄວາມຮັບຮູ້ດ້ານຈັນຍາບັນ, ວັດທະນາທຳ, ແລະ ສັງຄົມສຳລັບການຈັດການການທ່ອງທ່ຽວແບບຍືນຍົງ**
- **ປັບປຸງທັກສະການວິເຄາະ ແລະ ການຄິດວິເຄາະໃນຂະແໜງການທ່ອງທ່ຽວ**
- **ກັບກຽມນັກຮຽນເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດເພື່ອການປະຕິບັດທີ່ຍືນຍົງ**

**ຜົນການຮຽນ**

ຫຼັງຈາກສຳເລັດຫຼັກສູດນີ້, ນັກຮຽນຈະບັນລຸຜົນການຮຽນດັ່ງຕໍ່ໄປນີ້:

**ຄວາມຮູ້**

- ອະທິບາຍທິດສະດີ ແລະ ຫຼັກການການພັດທະນາແບບຍືນຍົງ, ການສົ່ງເສີມ ແລະ ການຈັດການການທ່ອງທ່ຽວ.
- ມີຄວາມຮູ້ເຕັກນິກກ່ຽວກັບວິທະຍາສາດສິ່ງແວດລ້ອມໃນຂັ້ນພື້ນຖານທີ່ກ່ຽວຂ້ອງກັບການທ່ອງທ່ຽວ.

**ທັກສະ**

- ມີຄວາມສາມາດດ້ານການວິເຄາະເພື່ອປະເມີນສິ່ງທ້າທາຍດ້ານສິ່ງແວດລ້ອມ, ສັງຄົມ ແລະ ເສດຖະກິດໃນການທ່ອງທ່ຽວ ແລະ ພັດທະນາວິທີແກ້ໄຂທີ່ມີນະວັດຕະກຳ.
- ມີທັກສະສີຂຽວ (ນຳໃຊ້ແນວຄວາມຄິດແບບຍືນຍົງໃນພາກປະຕິບັດ)
- ສາມາດສື່ສານຢ່າງມີປະສິດທິຜົນ.
- ມີນະວັດຕະກຳ ແລະ ທັກສະການຄິດວິເຄາະ.

**ທັດສະນະຄະຕິ**

- ໃຫ້ການບໍລິການການທ່ອງທ່ຽວຢ່າງມີຈັນຍາບັນ
- ສະແດງຄວາມເປັນມືອາຊີບໃນສະພາບແວດລ້ອມການເຮັດວຽກ

**ໂມດູລການຮຽນ**

ໂມດູລການຮຽນສະເພາະຂອງຫຼັກສູດນີ້ປະກອບດ້ວຍ:

| **ຊື່** | **ວິຊາ** | **ໜ່ວຍກິດ** |
|---|---|---|
| **ໂມດູລ 1: ຄວາມຮູ້ພື້ນຖານກ່ຽວກັບວິທະຍາສາດສິ່ງແວດລ້ອມສຳລັບການທ່ອງທ່ຽວ** | - ຄວາມຮູ້ພື້ນຖານກ່ຽວກັບນິເວດວິທະຍາ ແລະ ລະບົບນິເວດ<br>- ຊີວະນານາພັນ ແລະ ການອະນຸລັກ<br>- ການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບຕໍ່ການທ່ອງທ່ຽວ<br>- ມົນລະພິດ ແລະ ສິ່ງເສດເຫຼືອ<br>- ການຈັດການຈຸດໝາຍປາຍທາງການທ່ອງທ່ຽວ | 3 ໜ່ວຍກິດ (45 ຊົ່ວໂມງ) |

| | | |
|---|---|---|
| | - ການນຳໃຊ້ຊັບພະຍາກອນແບບຍືນຍົງ<br>- ການວິເຄາະຜົນກະທົບດ້ານສິ່ງແວດລ້ອມໃນແຫຼ່ງທ່ອງທ່ຽວ | |
| **ໂມດູລ 2: ກົດໝາຍສິ່ງແວດລ້ອມ ແລະ ນະໂຍບາຍການທ່ອງທ່ຽວແບບຍືນຍົງ** | - ຄວາມຮູ້ພື້ນຖານກ່ຽວກັບກົດໝາຍສິ່ງແວດລ້ອມ ແລະ ກົດລະບຽບ<br>- ສົນທິສັນຍາສາກົນຫຼັກ (ຕົວຢ່າງ ສົນທິສັນຍາປາຣີ, ເປົ້າໝາຍການພັດທະນາແບບຍືນຍົງຂອງ ສປຊ)<br>- ນະໂຍບາຍວ່າດ້ວຍສິ່ງແວດລ້ອມໃນລະດັບຊາດ ແລະ ລະດັບທ້ອງຖິ່ນ<br>- ກົນໄກບັງຄັບໃຊ້ ແລະ ປະຕິບັດລະບຽບກົດໝາຍ<br>- ກໍລະນີສຶກສາຂອງການນຳໃຊ້ກົດໝາຍສິ່ງແວດລ້ອມໃນການທ່ອງທ່ຽວ<br>- ບົດບາດຂອງຜູ້ປະກອບການທ່ອງທ່ຽວ ແລະ ຜູ້ຄຸ້ມຄອງ | 3 credits (45 hours)<br>3 ໜ່ວຍກິດ (45 ຊົ່ວໂມງ) |
| **ໂມດູລ 3: ຄວາມຍືນຍົງ ແລະ ການທ່ອງທ່ຽວໃນສັງຄົມໂລກ** | - ບົດບາດຂອງການທ່ອງທ່ຽວໃນການພັດທະນາແບບຍືນຍົງ<br>- ຜົນກະທົບດ້ານເສດຖະກິດສັງຄົມຂອງການທ່ອງທ່ຽວຕໍ່ຊຸມຊົນທ້ອງຖິ່ນ ແລະ ຊຸມຊົນໂລກ<br>- ການທ່ອງທ່ຽວທີ່ມີຈັນຍາບັນ ແລະ ການມີສ່ວນຮ່ວມຂອງຊຸມຊົນ<br>- ການທ່ອງທ່ຽວແບບຍືນຍົງໃນວັດທະນາທຳທີ່ແຕກຕ່າງກັນ<br>- ການຕະຫຼາດ ແລະ ການສົ່ງເສີມຈຸດໝາຍປາຍທາງການທ່ອງທ່ຽວແບບຍືນຍົງ | 3 credits (45 hours)<br>3 ໜ່ວຍກິດ (45 ຊົ່ວໂມງ) |
| **ໂມດູນ 4: ນະວັດຕະກຳດິຈິຕອນໃນການດຳເນີນການທ່ອງທ່ຽວແບບອະນຸລັກ** | - ຄວາມຮູ້ພື້ນຖານກ່ຽວກັບການທ່ອງທ່ຽວແບບອະນຸລັກ ແລະ ການເຊື່ອມສານເຕັກໂນໂລຊີດິຈິຕາລ<br>- ການນຳໃຊ້ການຈຳລອງສະຖານະການຈິງໃນການທ່ອງທ່ຽວແບບອະນຸລັກ<br>- ການຈຳລອງສະຖານະການຈິ່ງເພື່ອເພີ່ມການມີສ່ວນຮ່ວມຂອງນັກທ່ອງທ່ຽວ<br>- ການເລົ່າເລື່ອງໃນຮູບແບບດິຈິຕາລເພື່ອການສຶກສາສິ່ງແວດລ້ອມ<br>- ການອອກແບບ ແລະ ພັດທະນາປະສົບການທາງດິຈິຕາລທີ່ເປັນມິດຕໍ່ສິ່ງແວດລ້ອມ<br>- ສິ່ງທ້າທາຍ ແລະ ທ່າອຽງໃນອະນາຄົດໃນນະວັດຕະກຳການທ່ອງທ່ຽວແບບອະນຸລັກໃນຮູບແບບດິຈິຕາລ | 3 ໜ່ວຍກິດ (45 ຊົ່ວໂມງ) |
| **ໂມດູລ 5: ການຝຶກງານໃນຂະແໜງການທ່ອງທ່ຽວແບບອະນຸລັກ** | ການຝຶກງານແມ່ນເປີດໂອກາດໃຫ້ນັກສຶກສາໄດ້ສຳປະສົບການຈິງໃນອຸດສາຫະກຳການທ່ອງທ່ຽວແບບອະນຸລັກ, ໃຫ້ນັກສຶກສາໄດ້ນຳໃຊ້ຄວາມຮູ້ກ່ຽວກັບການທ່ອງທ່ຽວແບບຍືນຍົງໃນສະພາບແວດລ້ອມທີ່ແທ້ຈິງ. ນັກຮຽນຈະໄດ້ເຮັດວຽກກັບທຸລະກິດທ່ອງທ່ຽວແບບອະນຸລັກ, ອົງການອະນຸລັກສິ່ງແວດລ້ອມ, ຫຼືສະມາຄົມການທ່ອງທ່ຽວ, ເຂົ້າຮ່ວມໃນໂຄງການທີ່ສົ່ງເສີມຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມ, ການອະນຸລັກວັດທະນາທຳ, ແລະ ການມີສ່ວນຮ່ວມຂອງຊຸມຊົນ. | 3 ໜ່ວຍກິດ (45 ຊົ່ວໂມງ) |

**ໂອກາດໃນການຈ້າງງານ**

ຫຼັງຈາກຈົບຫຼັກສູດພັດທະນາວິຊາຊີບໃນການທ່ອງທ່ຽວແບບຍືນຍົງ, ນັກຮຽນຈະສາມາດປະກອບອາຊີບໃນຫຼາຍຊ່ອງທາງພາຍໃນຂະແໜງການທ່ອງທ່ຽວແບບຍືນຍົງທີ່ກຳລັງເຕີບໂຕຢ່າງໄວວາ, ລວມທັງບົດບາດເປັນຜູ້ຈັດການການທ່ອງທ່ຽວແບບຍືນຍົງ ທີ່ປຶກສາການທ່ອງທ່ຽວແບບອະນຸລັກ, ຊ່ຽວຊານພັດທະນາຈຸດໝາຍປາຍທາງ, ທີ່ປຶກສານະໂຍບາຍສິ່ງແວດລ້ອມສຳລັບການທ່ອງທ່ຽວ, ຜູ້ປະສານງານການມີສ່ວນຮ່ວມຂອງຊຸມຊົນ.

**ຄຸນຄ່າໜ່ວຍກິດ**

15 ໜ່ວຍກິດ (225 ຊົ່ວໂມງ)

| ຮູບແບບການຮຽນ |
| --- |
| ກັບທີ່ແບບເຊິ່ງໜ້າ ແລະ ຮູບແບບປະສົມ (ແບບເຊິ່ງໜ້າ ແລະ ອອນລາຍ) |
| **ການວິເຄາະຜູ້ທີ່ມີສ່ວນກ່ຽວຂ້ອງ** |
| ແມັດທຣິກຜູ້ທີ່ມີສ່ວນກ່ຽວຂ້ອງ: ພາກລັດ ແລະ ພາກເອກະຊົນທີ່ຈະມີສ່ວນຮ່ວມໃນວິໄສທັດ ແລະ ການພັດທະນາຫຼັກສູດ:  |

# ບົດທີ 5.2.: ຫຼັກສູດ INNO4Tourism ສຳລັບພັດທະນາວິຊາຊີບກ່ຽວກັບການທ່ອງທ່ຽວແບບຍືນຍົງ

ເພື່ອໃຫ້ສອດຄ່ອງກັບບົດລາຍງານລະຫວ່າງປະເທດກ່ຽວກັບ "ຄວາມຕ້ອງການ ແລະ ຊ່ອງຫວ່າງທັກສະຂອງແຮງງານໃນອຸດສາຫະກຳການບໍລິການ ແລະ ການທ່ອງທ່ຽວ ແລະ ຄຳແນະນຳສຳລັບການພັດທະນາຫຼັກສູດໃໝ່" ພັດທະນາຂຶ້ນໃນຂອບຂອງໂຄງການນະວັດຕະກຳເພື່ອການທ່ອງທ່ຽວ, ຫຼັກສູດການພັດທະນາວິຊາຊີບໄລຍະສັ້ນກ່ຽວກັບການທ່ອງທ່ຽວແບບຍືນຍົງດັ່ງຕໍ່ໄປນີ້ໄດ້ແນະນຳເພື່ອພັດທະນາ ແລະ ທົດລອງໃນມະຫາວິທະຍາໄລຄູ່ຮ່ວມງານໃນປະເທດໄທ, ມະຫາວິທະຍາໄລສົງຂານະຄະລິນ, ມະຫາວິທະຍາໄລຊຽງໃໝ່, ແລະ ມະຫາວິທະຍາໄລສະຫວັນນະເຂດ ແລະ ມະຫາວິທະຍາໄລແຫ່ງຊາດ, ສປປ ລາວ.

| ຫຼັກສູດພັດທະນາວິຊາຊີບໄລຍະສັ້ນ | ໂມດູລ |
|---|---|
| **ຮູບແບບການການຮຽນ** | ອອນລາຍ |
| **ໄລຍະເວລາ** | 45 ຫາ 90 ຊົ່ວໂມງ |
| **Sustainable Tourism** | - ຫຼັກການຫຼັກ ແລະ ຄ່ານິຍົມການທ່ອງທ່ຽວແບບຍືນຍົງ<br>- ສາມເສົາຄ້ຳຂອງການທ່ອງທ່ຽວແບບຍືນຍົງ: ສິ່ງແວດລ້ອມ, ສັງຄົມ ແລະ ເສດຖະກິດ<br>- ການເຊື່ອມຕໍ່ການທ່ອງທ່ຽວແບບຍືນຍົງ ແລະ ເປົ້າໝາຍການພັດທະນາແບບຍືນຍົງ<br>- ຈັນຍາບັນ ແລະ ຄວາມລະອຽດອ່ອນດ້ານວັດທະນາທຳໃນການທ່ອງທ່ຽວ: ຫຼັກຈັນຍາບັນສາກົນສຳລັບການທ່ອງທ່ຽວ<br>- ການມີສ່ວນຮ່ວມຂອງຊຸມຊົນ ແລະ ການທ່ອງທ່ຽວແບບຍືນຍົງ<br>- ຄວາມຮັບຜິດຊອບຕໍ່ສັງຄົມຂອງທຸລະກິດບໍລະການ ແລະ ການທ່ອງທ່ຽວ<br>- ການວັດແທກຜົນກະທົບຈາກການທ່ອງທ່ຽວ: ເຄື່ອງມື, ແມັດທຣິກ, ແລະ ຂອບທິດສະດີ<br>- ມາດຕະຖານການທ່ອງທ່ຽວແບບຍືນຍົງ ແລະ ການຢັ້ງຢືນ<br>- ກໍລະນີສຶກສາການປະຕິບັດການທ່ອງທ່ຽວແບບຍືນຍົງ |
| **ການຈັດການແບບຍືນຍົງໃນຂະແໜງບໍລິການ ແລະ ການທ່ອງທ່ຽວ** | - ການຈັດການທຸລະກິດການທ່ອງທ່ຽວ ແລະ ການບໍລິການ<br>- ການອອກແບບຮູບແບບທຸລະກິດ<br>- ປະສົບການຂອງລູກຄ້າ ແລະ ການອອກແບບການບໍລິການ<br>- ພື້ນຖານການບັນຊີສຳລັບທຸລະກິດຂະໜາດນ້ອຍ<br>- ການຕະຫຼາດສຳລັບທຸລະກິດການບໍລິການ ແລະ ການທ່ອງທ່ຽວ<br>- ການເງິນທຸລະກິດສຳລັບທຸລະກິດຂະໜາດນ້ອຍ |
| **ການປະຕິບັດສີຂຽວ ແລະ ຍືນຍົງໃນຂະແໜງການບໍລິການ ແລະ ການທ່ອງທ່ຽວ** | - ຄວາມຮູ້ທົ່ວໄປກ່ຽວກັບການທ່ອງທ່ຽວສີຂຽວ ແລະ ຍືນຍົງ<br>- ປະສິດທິພາບ ແລະ ການອະນຸລັກພະລັງງານໃນທຸລະກິດການບໍລິການ<br>- ແຫຼ່ງພະລັງງານທົດແທນ (ແສງຕາເວັນ, ລົມ, ຄວາມຮ້ອນໃຕ້ດິນ)<br>- ເຕັກນິກ ແລະ ເຕັກໂນໂລຊີການຮັກສາແຫຼ່ງນ້ຳ<br>- ການຈັດການສິ່ງເສດເຫຼືອ ແລະ ການຫຼຸດຜ່ອນ ແລະ ແນວຄວາມຄິດເສດຖະກິດໝູນວຽນ/ສິ່ງເສດເຫຼືອເປັນສູນ<br>- ການຈັດການການຈັດຊື້ ແລະ ຕ່ອງໂສ້ອຸປະທານແບບຍືນຍົງ<br>- ການຢັ້ງຢືນ ແລະ ມາດຕະຖານສີຂຽວໃນທຸລະກິດບໍລິການ |

| | |
|---|---|
| | - ກໍລະນີສຶກສາກ່ຽວກັບວິທີປະຕິບັດສີຂຽວ ແລະ ຍືນຍົງ |
| **ການບໍລິການອີເລັກໂຕຣນິກໃນຂະແໜງການບໍລິການ ແລະ ການທ່ອງທ່ຽວ** | - ການບໍລິການອີເລັກໂຕຣນິກ ແລະ ສະພາບແວດລ້ອມທຸລະກິດ<br>- ວິວັດທະນາການ ແລະ ຮູບແບບຂອງນະວັດຕະກຳທຸລະກິດອີເລັກໂຕຣນິກ<br>- ການສ້າງຄວາມສາມາດໃນການແຂ່ງຂັນທາງທຸລະກິດຜ່ານນະວັດຕະກຳ<br>- ຄວາມສາມາດໃນການສ້າງສັນຂອງທຸລະກິດອີເລັກໂຕຣນິກ<br>- ການວາງແຜນ ແລະ ການພັດທະນາການບໍລິການ<br>- ການຫັນເປັນການຄ້າຂອງເຕັກໂນໂລຊີ<br>- ການວິເຄາະ, ການປະເມີນ ແລະ ການແກ້ໄຂບັນຫາສຳລັບນະວັດຕະກຳການບໍລິການອີເລັກໂຕຣນິກ<br>- ກໍລະນີສຶກສາຂອງນະວັດຕະກຳການບໍລິການເພື່ອການປະຕິບັດທີ່ດີເລີດ |
| **ລະບົບຂໍ້ມູນຂ່າວສານສຳລັບຕ່ອງໂສ້ອຸປະທານ ແລະ ການບໍລິຫານຄວາມສຳພັນກັບລູກຄ້າ** | - ຄວາມເຂົ້າໃຈພື້ນຖານຕ່ອງໂສ້ອຸປະທານໃນພາກທຸລະກິດ<br>- ຂອບທິດສະດີສຳລັບການວິເຄາະຕ່ອງໂສ້ອຸປະທານ<br>- ຜົນກະທົບຂອງປັດໄຈສະໜັບສະໜູນ ແລະ ອຸປະສັກຂອງການປະຕິບັດງານຂອງຕ່ອງໂສ້ອຸປະທານ<br>- ອຸປະສົງ, ອຸປະທານ ແລະ ການວາງແຜນຍຸດທະສາດ<br>- ຂໍ້ມູນໂຄງສ້າງ ແລະ ຂໍ້ມູນສຳລັບຕ່ອງໂສ້ອຸປະທານ<br>- ຄວາມເຂົ້າໃຈພື້ນຖານກ່ຽວກັບການບໍລິຫານຄວາມສຳພັນກັບລູກຄ້າ<br>- ໜ້າທີ່ໃນການບໍລິຫານຄວາມສຳພັນກັບລູກຄ້າ ແລະ ລະບົບຂໍ້ມູນຂ່າວສານສຳລັບການບໍລິການຄວາມສຳພັນກັບລູກຄ້າ |
| **ເຕັກໂນໂລຊີຂໍ້ມູນຂ່າວສານສຳລັບທຸລະກິດການທ່ອງທ່ຽວແບບຍືນຍົງ** | - ການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານສຳລັບການດຳເນີນທຸລະກິດການບໍລິການ ແລະ ການທ່ອງທ່ຽວຂະໜາດນ້ອຍ<br>- ການນຳໃຊ້ແອບພລິເຄຊັນການທ່ອງທ່ຽວ<br>- ການຈັດການ ແລະ ການວິເຄາະຂໍ້ມູນການທ່ອງທ່ຽວ |
| **ການຕະຫຼາດດິຈິຕອນສຳລັບການທ່ອງທ່ຽວ** | - ທຸລະກິດການທ່ອງທ່ຽວແບບອັດສະລຸຍະ<br>- ຄວາມຮູ້ທົ່ວໄປກ່ຽວກັບການຕະຫຼາດດິຈິຕາລ<br>- ບົດບາດຂອງເນື້ອໃນໃນການຕະຫຼາດດິຈິຕາລ ແລະ ຍຸດທະສາດການຕະຫຼາດດິຈິຕອນ<br>- ສ່ວນປະສົມການຕະຫຼາດສື່ສັງຄົມ ແລະ ການຕະຫຼາດດິຈິຕອນ<br>- ປະສົບການຂອງລູກຄ້າອອນລາຍ<br>- ຜົນກະທົບຂອງການຕະຫຼາດສື່ສັງຄົມຕໍ່ການຈັດງານ ແລະ ຈຸດໝາຍປາຍທາງ<br>- ອົງປະກອບທີ່ຈຳເປັນຂອງການຕະຫຼາດດິຈິຕອນສຳລັບຜູ້ປະກອບການທຸລະກິດການທ່ອງທ່ຽວ<br>- ວິທີເພີ່ມການທ່ອງທ່ຽວຜ່ານການຕະຫຼາດດິຈິຕອນ |
| **ຫຼັກຈັນຍາບັນ** | - ຫຼັກຈັນຍາບັນໃນການທ່ອງທ່ຽວແບບຍືນຍົງ<br>- ຄວາມລະອຽດອ່ອນທາງວັດທະນາທຳ<br>- ຄວາມເປັນເຈົ້າຂອງ ແລະ ການເສີມພະລັງຊຸມຊົນທ້ອງຖິ່ນ<br>- ການຈັດການອົງການຈັດຕັ້ງ ແລະ ນະໂຍບາຍ |

# ສະຫຼຸບ

ບົດນີ້ໄດ້ອະທິບາຍການອອກແບບ ແລະ ຈຸດປະສົງຂອງໂຄງສາງຫຼັກສູດການພັດທະນາວິຊາຊີບໃນການທ່ອງທ່ຽວແບບຍືນຍົງ ເຊິ່ງພັດທະນາພາຍໃຕ້ໂຄງການນະວັດຕະກໍາເພື່ອການທ່ອງທ່ຽວ. ເນື່ອງຈາກວ່າຄວາມຍືນຍົງໄດ້ກາຍເປັນສ່ວນສໍາຄັນຂອງອຸດສາຫະກໍາການທ່ອງທ່ຽວ, ຫຼັກສູດນີ້ຕອບສະໜອງໂດຍກົງຕໍ່ຄວາມຕ້ອງການທີ່ກໍານົດໄວ້ໃນບົດປະເມີນຄວາມຕ້ອງການລະຫວ່າງປະເທດ, ເຊິ່ງໄດ້ຊີ້ໃຫ້ເຫັນຊ່ອງຫວ່າງສໍາຄັນໃນສະໝັດຕະພາບດ້ານຄວາມຍືນຍົງ ແລະ ດິຈິຕາລພາຍໃນກໍາລັງແຮງງານໃນອຸດສາຫະກໍາການບໍລິການ ແລະ ການທ່ອງທ່ຽວ, ໂດຍສະເພາະໃນປະເທດໄທ ແລະ ສປປ ລາວ. ມັນມີຄວາມສໍາຄັນທີ່ຈະເນັ້ນ ຮູບແບບທີ່ເປັນທາງເລືອກທີ່ສາມາດພັດທະນາ ແລະ ປັບໃຫ້ແທດເໝາະກັບລັກສະນະສະເພາະຂອງແຕ່ລະປະເທດ, ຄວາມຕ້ອງການຂອງຜູ້ຮຽນ ແລະ ລັກສະນະຂອງສະຖາບັນການສຶກສາຊັ້ນສູງທີ່ມີສ່ວນຮ່ວມ.

# ກິດຈະກໍາແບບມີສ່ວນຮ່ວມ

## ກິດຈະກໍາ 1

| **ຫົວຂໍ້ກິດຈະກໍາ** | **ການວິເຄາະ SWOT** |
|---|---|
| ເວລາ | 60 ນາທີ |
| **ວິທີສິດສອນ** | • ແບ່ງນັກຮຽນເປັນ 2 ຫຼື ຫຼາຍກຸ່ມ (ຂຶ້ນກັບຈໍານວນນັກຮຽນ)<br>• ຢາຍເຈ້ຍແຜ່ນໃຫຍ່, ເຈ້ຍແຜ່ນນ້ອຍ, ແລະ ບິກໃຫ້ແຕ່ລະກຸ່ມ<br>• ອະທິບາຍໃຫ້ນັກຮຽນຮູ້ກ່ຽວກັບການວິເຄາະ SWOT ເຊິ່ງເປັນຂອບທີ່ທາມະດາ ແລະ ນໍາໃຊ້ຫຼາຍ ເພື່ອປຽບທຽບຈຸດແຂງ ແລະ ຈຸດອ່ອນຂອງໂຄງການ, ໂອກາດ ແລະ ຂໍ້ຈໍາກັດຈາກສະພາບແວດລ້ອມພາຍນອກ.<br>• ກໍານົດຈຸດແຂງ: ແນະນໍາໃຫ້ຜູ້ເຂົ້າຮ່ວມສະທ້ອນຄືນລັກສະນະສະເພາະຂອງຫຼັກສູດ (ປັດໄຈພາຍໃນ). ສິ່ງທີ່ພົ້ນເດັ່ນແມ່ນຫຍັງ? ອັນໃດທີ່ເຮັດໃຫ້ມັນພົ້ນເດັ່ນ? ເອກະລັກຂອງຊັບພະຍາກອນ, ຄວາມອາດສາມາດ ແລະ ທັກສະມີຄືແນວໃດ ເຊິ່ງເຮັດໃຫ້ມີຄວາມໄດ້ປຽບໃນການແຂ່ງຂັນ? ມີນະວັດຕະກໍາຄືແນວໃດ? ມັນມີຄວາມສອດຄ່ອງກັບຄວາມຕ້ອງການ ແລະ ທ່າອ່ຽງຂອງອຸດສາຫະກໍາການທ່ອງທ່ຽວໃນປັດຈຸບັນຫຼືບໍ່? ຕົວຢ່າງຂອງຈຸດແຂງປະກອບດ້ວຍຊັບພະຍາກອນ, ສະມັດຕະພາບ ແລະ ວັດທະນາທໍາຂອງອົງກອນ ຕະຫຼອດເຖິງປັດໄຈທີ່ຊ່ວຍປັບປຸງປະສິດທິຜົນ ແລະ ສິ່ງທີ່ພົ້ນເດັ່ນເຊັ່ນ: ວິໄສທັດ, ນະວັດຕະກໍາ, ວິທີສະຫະວິຊາການ, ວິທີການເອົານັກຮຽນເປັນໃຈກາງ, ການນໍາໃຊ້ເຕັກໂນໂລຊີ, ການປະຕິບັດທີ່ມີຈັນຍາບັນ , ທັກສະ ແລະ ຄວາມຮູ້ທີ່ກວາງຂວາງເຊິ່ງມີຄວາມຈາເປັນໃນການນາພາແນວຄິດລິເລີ່ມກ່ຽວກັບຄວາມຍືນຍົງໃນອຸດສາຫະກໍາການທ່ອງທ່ຽວ, ແລະ ອື່ນໆ ...<br>• ກໍານົດຈຸດອ່ອນ: ແນະນໍາໃຫ້ຜູ້ເຂົ້າຮ່ວມເພື່ອພິຈາລະນາຈຸດອ່ອນຂອງຫຼັກສູດ (ປັດໄຈພາຍໃນ). ຈຸດອ່ອນຂອງຫຼັກສູດແມ່ນຫຍັງ? ຈຸດອ່ອນເຫຼົ່ານີ້ສາມາດປັບປຸງໄດ້ຫຼືບໍ່? ໄດ້ເຊື່ອມສານທັດສະນະຈາກຫຼາຍວິຊາການຫຼືບໍ່? ມັນສອດຄ່ອງກັບຄວາມການ ແລະ ທ່າອ່ຽງໃນປັດຈຸບັນຂອງອຸດສາຫະກໍາການທ່ອງທ່ຽວຫຼືບໍ່? ມັນໄດ້ສະທ້ອນສິ່ງທ້າທາຍການພັດທະນາແບບຍືນຍົງໃນສະພາບຄວາມເປັນຈິງໃນຂະແໜງການທ່ອງທ່ຽວ ຫຼື ບໍ່? ຕົວຢ່າງຂອງຈຸດອ່ອນປະກອບດ້ວຍເນື້ອໃນຫຼັກສູດລ້າສະໄໝ, ຂາດຊັບພະຍາກອນ, ຂະບວນການຈັດການບໍ່ມີປະສິດທິພາບ, ຂາດນະວັດຕະກໍາ, ຂາດການນໍາໃຊ້ວິທີສະຫະວິຊາການ ແລະ ການນໍາໃຊ້ເຕັກໂນໂລຊີ.<br>• ກໍານົດໂອກາດ: ແນະນໍາໃຫ້ຜູ້ເຂົ້າຮ່ວມຊອກຫາໂອກາດທີ່ຫຼັກສູດອາດຈະມີ (ປັດໄຈພາຍນອກ). ສິ່ງເຫຼົ່ານີ້ |

| | |
|---|---|
| | ອາດຈະລວມທັງການປ່ຽນແປງ ແລະ/ຫຼື ໂອກາດທາງການຕະຫຼາດໃນຂະແໜງການທ່ອງທ່ຽວ, ການນຳໃຊ້ເຕັກໂນໂລຊີ, ຄວາມຕ້ອງການຂອງລູກຄ້າ, ຄູ່ຮ່ວມງານໃໝ່, ແລະ ອື່ນໆ...<br>• ກຳນົດຂໍ້ຈຳກັດ: ສຸດທ້າຍແນະນຳໃຫ້ຜູ້ເຂົ້າຮ່ວມພິຈາລະນາຂໍ້ຈຳກັດທີ່ອາດຈະມີຜົນເສຍຕໍ່ຫຼັກສູດ. ສິ່ງເຫຼົ່ານີ້ອາດຈະລວມທັງການປ່ຽນແປງ ແລະ/ຫຼື ໂອກາດທາງການຕະຫຼາດ ແລະ ຄວາມຕ້ອງການໃນຂະແໜງການທ່ອງທ່ຽວທີ່ຫຼັກສູດບໍ່ໄດ້ພິຈາລະນາເຖິງ, ການປ່ຽນແປງໃນລະບຽບ, ບັນຫາທາງເສດຖະກິດ ແລະ ອື່ນໆ.<br>• ວິເຄາະ ແລະ ກຳນົດບູລິມະສິດ: ເມື່ອວິເຄາະຈຸດແຂງ, ຈຸດອ່ອນ, ໂອກາດ ແລະ ຂໍ້ຈຳກັດແລ້ວ, ແນະນຳຜູ້ເຂົ້າຮ່ວມໃຫ້ວິເຄາະ ແລະ ກຳນົດບູລິມະສິດ ໃນຫຼັກສູດຂອງພວກເຂົາ ໂດຍການນຳໃຊ້ຈຸດແຂງ ແລະ ໂອກາດ, ໃນເວລາດຽວກັນພະຍາຍາມແກ້ໄຂຈຸດອ່ອນ ແລະ ຫຼຸດຜ່ອນຂໍ້ຈຳກັດ.<br>• ສະຫຼຸບການຝຶກອົບຮົມໂດຍໃຫ້ຜູ້ເຂົ້າຮ່ວມທັງໝົດສະທ້ອນຄືນ ແລະ ແລກປ່ຽນສິ່ງທີ່ພວກເຂົາໄດ້ຮຽນ. |

# ແຫຼ່ງຂໍ້ມູນເພີ່ມເຕີມ

EU Tourism Platform | EU Tourism Platform (europa.eu)

Sustainable EU Tourism – Shaping the Tourism of Tomorrow - European Commission (europa.eu)

UNWTO - Sustainable development (unwto.org)

IBE-UNESCO - Glossary of Curriculum Terminology

# ເອກະສານອ້າງອີງ

Busby, (2003). The concept of sustainable tourism within the higher education curriculum: A British case study. Journal of Hospitality, Leisure, Sport and Tourism Education. Available at https://doi.org/https://doi.org/10.3794/johlste.22.57

Ioanna Farsari, (2021). Pedagogy for sustainable tourism: reflections on the curriculum space of a master programme in Sweden. Available at https://www.tandfonline.com/doi/full/10.1080/15313220.2021.1978127#abstract

Higgins Desbiolles, (2020). Diversity in tourism: A perspective article. Tourism Review. Available at https://doi.org/https://doi.org/10.1108/TR-06-2019-0226

Ring, Dickinger, & Wöber (2008). Designing the ideal undergraduate program in tourism: expectations from industry and educators. Journal of Travel Research, https://doi.org/https://doi.org/10.1177/0047287508328789

Wilson, & Von der Heidt (2013). Business as usual? Barriers to education for sustainability in the tourism curriculum. Journal of Teaching in Travel & Tourism, https://doi.org/https://doi.org/10.1080/15313220.2013.786337

UNESCO, (1996). Education for the 21st century: learning to learn. Available at https://unesdoc.unesco.org/ark:/48223/pf0000102622

UNESCO, (2017). Developing and implementing curriculum frameworks. Available at https://unesdoc.unesco.org/ark:/48223/pf0000250052

UNESCO, (2013). Glossary of Curriculum Terminology. Available at https://openlearning.unesco.org/assets/courseware/v1/111c351f93f6c17c82675935a739f317/asset-v1:UNESCO+UNESCO-04+2021_01+type@asset+block/IBE_GlossaryCurriculumTerminology2013_eng.pdf

UNWTO, (1999). Sustainable Development of Tourism - An Annotated Bibliography. Available at https://www.e-unwto.org/doi/epdf/10.18111/9789284403127

# ສະຫຼຸບ

ສະຫຼຸບລວມແລ້ວ, ຄູ່ມືຝຶກອົບຮົມສະບັບນີ້ແມ່ນຄູ່ມືທີ່ກວ້າງຂວາງ ແລະ ແບບວິທີປະຕິບັດ ທີ່ອອກແບບມາສໍາລັບ ພະນັກງານ-ອາຈານ ຂອງສະຖາບັນການສຶກສາຊັ້ນສູງ, ຜູ້ຊ່ຽວຊານວິຊາຊີບ, ນັກຄົ້ນຄວ້າ ແລະ ຜູ້ບໍລິຫານສະຖາບັນການສຶກສາ, ເພື່ອເສີມຂະຫຍາຍຂີດຄວາມສາມາດຂອງເຂົາເຈົ້າໃນການພັດທະນາຫຼັກສູດການທ່ອງທ່ຽວແບບຍືນຍົງ ທີ່ສອດຄ່ອງກັບຄວາມຕ້ອງການຂອງພາກອຸດສະຫະກໍາໃນປັດຈຸບັນ ແລະ ເປົ້າໝາຍຄວາມຍືນຍົງຂອງໂລກ. ຄູ່ມືດັ່ງກ່າວນີ້ຍັງສາມາດນໍາໃຊ້ໄດ້ນອກສະຖາບັນການສຶກສາຊັ້ນສູງອີກດວ້ຍ, ເຊິ່ງເປັນແຫຼ່ງຊັບພະຍາກອນເພື່ອການຮຽນຮູ້ທີ່ມີຄ່າສໍາລັບນັກວິຊາການດ້ານການສຶກສາ ແລະ ຜູ້ຊ່ຽວຊານວິຊາຊີບໃນໂຮງຮຽນ, ວິທະຍາໄລ ແລະ ສູນຝຶກອົບຮົມວິຊາຊີບຕ່າງໆ ທີ່ມີຄວາມສົນໃຈຈະພັດທະນາຫຼັກສູດກ່ຽວກັບການທ່ອງທ່ຽວແບບຍືນຍົງ. ວິທີການຮຽນຮູ້ແບບກວມລວມນີ້ສະທ້ອນໃຫ້ເຫັນເຖິງການນໍາໃຊ້ຢ່າງກວ້າງຂວາງຂອງຫຼັກການ ແລະ ວິທີປະຕິບັດ, ຮັບປະກັນວ່າຜູ້ຊົມໃຊ້ທີ່ຫຼາກຫຼາຍໄດ້ຮັບຜົນປະໂຫຍດຈ້າກຄວາມຮູ້ ຢ່າງເລິກນີ້ ແລະ ຊ່ວຍປະກອບສ່ວນຕໍ່ການສ້າງຫຼັກສູດທີ່ມີນະວັດຕະກໍາ ແລະ ມີຜົນດີຫຼາຍທີ່ສຸດຕໍ່ຂະແໜງການທ່ອງທ່ຽວແບບຍືນຍົງ. ຫຼັກສູດຄວນຖືກອອກໃຫ້ມີລັກສະນະເປັນຂະບວນເຮັດວຽກເປັນລະບົບ, ເປັນວົງຈອນ, ຄ່ອງຕົວ ແລະ ມີຜົນກະທົບໃນທາງບວກ ທີ່ສະໜັບສະໜູນການພັດທະນາການສຶກສາ ແລະ ວິຊາຊີບຂອງຜູ້ຮຽນ, ສິ່ງເສີມນະວັດຕະກໍາຂອງຂະແໜງການ, ແລະ ປະກອບສ່ວນຕໍ່ການພັດທະນາແບບຍືນຍົງຂອງສັງຄົມໂດຍລວມ. ເຖິງຢ່າງໃດກໍຕາມ, ມັນມີຄວາມຈໍາເປັນທີ່ຕ້ອງຍອມຮັບວ່າຄວາມພະຍາຍາມທີ່ສໍາຄັນທີ່ຈະອອກແບບ ແລະ ຈັດຕັ້ງປະຕິບັດຫຼັກສູດໃດໜຶ່ງນັ້ນຄວນເຮັດໂດຍ ໂດຍຜູ້ນໍາ (ສະຖາບັນການສຶກສາ), ນັກວິຊາການດ້ານການສຶກສາ, ນັກຮຽນ, ຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ລະບົບການສຶກສາໂດຍລວມີສ່ວນຮ່ວມ.

# ຄຳຈາລຶກບຸນຄຸນ

ພວກເຮົາຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈເປັນຢ່າງສູງມາຍັງບັນດານັກວິຊາການ, ສະຖາບັນການສຶກສາ ແລະ ອົງກອນທັງໝົດ ທີ່ມີສ່ວນຮ່ວມໃນຂອບໂຄງການ INNO4Tourism ທີ່ໄດ້ສະໜັບສະໜູນ ແລະ ປະກອບສ່ວນໃນການສ້າງຄູ່ມືສະບັບນີ້ໃຫ້ສຳເລັດສົມບູນ.

ພວກເຮົາຂໍສະແດງຄວາມຂອບໃຈເປັນພິເສດມາຍັງ:
ທ່ານ ສາດສະດາຈານ ຈອນ ບູສ໌ແມນ (John Buschman), ໂຮງຮຽນບໍລິຫານການທ່ອງທ່ຽວ ແລະ ການບໍລິການ ຊາບລິນ, ມະຫາວິທະຍາໄລນາໆຊາດຟໍຣິດາ
ທ່ານ ຜູ້ຊ່ວຍສາດສະດາຈານ ຊູຊານ ແບັກເນຣາ (Suzanne Bagnera), ໂຮງຮຽນບໍລິຫານການທ່ອງທ່ຽວ ແລະ ການບໍລິການ ຊາບລິນ, ພະແນກວິຊາການ, ມະຫາວິທະຍາໄລນາໆຊາດຟໍຣິດາ

ສຸດທ້າຍນີ້, ພວກເຮົາຂໍສະແດງຄວາມຮູ້ບຸນຄຸນມາຍັງຜູ້ເຂົ້າຮ່ວມທຸກທ່ານ ແລະ ຄະນະຜູ້ຕາງໜ້າ ຈາກ ປະເທດໄທ ແລະ ສປປ ລາວ ທີ່ໄດ້ປະກອບຄວາມຄິດເຫັນຢ່າງກົງໄປກົງມາ ແລະ ຂໍ້ສະເໜີແນະທີ່ມີປະໂຫຍດ ໃນໄລຍະເຂົ້າຮ່ວມຝຶກອົບຮົມເປັນຄູຝຶກກ່ຽວກັບການທ່ອງທ່ຽວແບບຍືນຍົງ ທີ່ຈັດຂຶ້ນຢູ່ເມືອງປາເລີໂມ, ປະເທດອີຕາລີ, ແລະ ເມືອງເທັດສະໂລນນິກິ, ປະເທດເກຣັກ, ໃນຂອບໂຄງການ INNO4Tourism, ການປະກອບສ່ວນດັ່ງກ່າວນັ້ນໄດ້ຍົກລະດັບຄຸນະພາບຂອງຄູ່ມືສະບັບນີ້.

# ເອກະສານຊ້ອນທ້າຍ

## ພາກທີ I

## ແມ່ແບບທີ 1 – "ຂອບການພັດທະນາຫຼັກສູດ - ແຜນການສອນລາຍວິຊາ"

ແມ່ແບບດັ່ງກ່າວນີ້ເປັນຮ່າງທີ່ປະກອບມີຊຸດຫົວຂໍ້, ຫົວຂໍ້ຫຍ່ອຍ ແລະ ດໍາລັບສໍາລັບຂໍ້ມູນຕ່າງໆ ທີ່ຖືກອອກແບບມາເພື່ອອໍານວຍຄວາມສະດວກໃນການພັດທະນາ, ການນໍາສະເໜີ ແລະ ການກວດຄວາມຖືກຕ້ອງຂອງຂອບຫຼັກສູດ. ຜູ້ຊົມໃຊ້ທີ່ສົນໃຈອາດຈະເພີ່ມຫົວຂໍ້ໃດໜຶ່ງເຂົ້າຕື່ມອີກທີ່ເຂົາເຈົ້າເຫັນວ່າກ່ຽວຂ້ອງ.

| ຮ່າງແມ່ແບບ 1<br>ຂອບການພັດທະນາຫຼັກສູດ | |
|---|---|
| ຊື່ຫຼັກສູດ | ຂຽນຊື່ເຕັມຂອງຫຼັກສູດ |
| ປະເພດຫຼັກສູດ | ປະລິນຍາຕີ, ໂທ, ຝຶກອົບຮົມວິຊາຊີບໄລຍະສັ້ນ/ໄລຍະຍາວ, ອື່ນໆ (ລະບຸລະອຽດ) |
| **1.** | **ແນະນໍາ/ອະທິບາຍວິຊາສອນໃນຫຼັກສູດ** |
| | ຄວນປະກອບດ້ວຍການແນະນໍາໂດຍຫຍໍ້ກ່ຽວກັບວິຊາທີ່ຈະສອນ ໂດຍສະຫຼຸບລັກສະນະທີ່ໂດດເດັ່ນທີ່ສຸດ, ຄຸນລັກສະນະຫຼັກຂອງວິຊາ ແລະ ຈຸດທີ່ເປັນເອກະລັກສະເພາະ ທີ່ກໍານົດຄຸນສົມບັດສະເພາະ, ລວມມີຂໍ້ມູນທີ່ວ່າວິຊານັ້ນກ່ຽວຂ້ອງກັບການຈ້າງງານແນວໃດ ແລະ ຄວາມເປັນໄປໄດ້ສໍາລັບການສຶກສາຄົ້ນຄວ້າຕໍ່ໄປໃນບໍລິບົດອ້ອມຮອບສະຖາບັນ, ລະດັບທ້ອງຖິ່ນ, ລະດັບພາກພື້ນ ແລະ ລະດັບຊາດ ຫຼື ສາກົນ. |
| **2.** | **ການປະເມີນຄວາມຕ້ອງການ** |
| | ຄວນປະກອບດ້ວຍຂໍ້ມູນທີ່ໄດ້ຈາກການປະເມີນຄວາມຕ້ອງການຮຽນຮູ້ຈາກຊຸມຊົນ, ທ້ອງຖິ່ນ ຫຼື ປະເທດ ທີ່ເປັນກຸ່ມເປົ້າໝາຍ, ລວມທັງຄວາມຕ້ອງການ ແລະ ຄຸນລັກສະນະຂອງນັກສຶກສາ, ຄວາມຕ້ອງການທີ່ເກີດຂຶ້ນໃໝ່ໃນຂະແໜງການໃດໜຶ່ງ, ແລະ ແນວໂນ້ມ ແລະ ໂອກາດທາງວິຊາຊີບໃໝ່ ທີ່ມີຄວາມສໍາຄັນຕໍ່ການເຮັດໃຫ້ຫຼັກສູດສອດຄ່ອງກັບຕະຫຼາດແຮງງານທີ່ກໍາລັງຂະຫຍາຍຕົວ. |
| **3.** | **ວິໄສທັດຂອງຫຼັກສູດ** |
| | ຄວນປະກອບດ້ວຍຂໍ້ຄວາມທີ່ສ້າງແຮງບັນດານໃຈ, ກວມລວມ ແລະ ກະທັດຮັດ ທີ່ສະແດງເຖິງວິໄສທັດໄລຍະໄກ ແລະ ຄຸນຄ່າທີ່ສໍາຄັນຂອງຫຼັກສູດ ແລະ ຊຸກຍູ້ໃຫ້ຜູ້ຊົມໃຊ້ຫຼັກສູດທຸກຄົນ ແລະ ຜູ້ມີສ່ວນກ່ຽວຂ້ອງໃນຂະແໜງການສຶກສາ. ວິໄສທັດຂອງຫຼັກສູດຄວນສົ່ງເສີມຄວາມເປັນໜຶ່ງດຽວຂອງເປົ້າໝາຍ ແລະ ຄວາມຮູ້ສຶກເຖິງທິດທາງໄລຍະຍາວ, ວິໄສທັດດັ່ງກ່າວຄວນຕັ້ງຢູ່ບົນພື້ນຖານການຄົ້ນຄວ້າ ແລະ ຄວາມກ່ຽວຂ້ອງ ທີ່ສ້າງຄວາມທະເຍີທະຍານ ແລະ ແຮງບັນດານໃຈ ໃນເວລາດຽວກັນ. ວິໄສທັດຂອງຫຼັກສູດຄວນເປັນຜົນຮັບຂອງການປຶກສາຫາລືໃນວົງກວ້າງ ແລະ ມີສ່ວນຮ່ວມຢ່າງເປັນຂະບວນຂອງພາກສ່ວນທີ່ກ່ຽວຂ້ອງ, ນັກສຶກສາ ແລະ ກຸ່ມ/ຊຸມຊົນທີ່ເຮັດວຽກກ່ຽວກັບການສຶກສາ ເພື່ອແບ່ງປັນ ແລະ ເສີມສ້າງຄວາມເປັນເຈົ້າຂອງໃນຫຼັກສູດ. |
| **4.** | **ລັກສະນະຂອງຄຸນະວຸດທິ** |
| | ຄວນລະບຸກ່ຽວກັບຄວາມຮູ້ ແລະ ທັກສະທີ່ຈໍາເປັນທີ່ຜູ້ຮຽນຄວນຈະໄດ້ຮັບຫຼັງຈາກຮຽນຈົບວິຊາ ແລະ/ຫຼື ຫຼັກສູດການສຶກສາ ແລະ ອະທິບາຍເຖິງຄວາມສອດຄ່ອງກັບຄວາມຕ້ອງການຂອງພາກອຸດສະຫະກໍາ ແລະ ຄວາມຄາດຫວັງຂອງສັງຄົມ. |
| **5.** | **ເງື່ອນໄຂຜູ້ສະໝັກ** |

| | |
|---|---|
| | ຄວນສະຫຼຸບບັນດາຄວາມຮູ້ ແລະ ທັກສະຕ່າງໆທີ່ຈຳເປັນຕ້ອງມີເພື່ອພິຈາລະນາຄັດເລືອກເຂົ້າຮຽນ ແລະ ລົງທະບຽນເຂົ້າຮຽນໃນລາຍວິຊາ/ຫຼັກສູດນີ້, ເຊິ່ງລວມມີຄຸນະວຸດທິ, ຄວາມຮູ້ ແລະ ທັກສະ ທີ່ມີຢູ່, ແລະ ຄຸນລັກສະນະສ່ວນບຸກຄົນ ທີ່ຜູ້ຮຽນຄວນຈະມີກ່ອນເຂົ້າຮຽນ. ລະບຸເກນການປະເມີນທົ່ວໄປເຊັ່ນ: ລະດັບປະລິນຍາ, ອະນຸປະລິນຍາ, ຫຼື ການຢັ້ງຢືນຕ່າງໆ ທີ່ກ່ຽວຂ້ອງກັບລາຍວິຊາ/ຫຼັກສູດ. |
| **6.** | **ເປົ້າໝາຍຂອງຫຼັກສູດ** |
| | ຄວນປະກອບມີຂໍ້ຄວາມສັ້ນ, ກະທັດຮັດ ແລະ ຊັດເຈນ ທີ່ອະທິບາຍເປົ້າໝາຍສະເພາະຂອງຫຼັກສູດ, ໂດຍສະເພາະສິ່ງທີ່ເຮົາຕ້ອງການໃຫ້ນັກຮຽນໄດ້ຮັບຈາກການເຂົ້າຮຽນໃນຫຼັກສູດ. ຫຼັກສູດດັ່ງກ່າວມີເປົ້າໝາຍກ່ຽວກັບຈຸດປະສົງ, ຄ່ານິຍົມ ແລະ ປັດສະຍາການສຶກສາໃດໜຶ່ງສະເພາະ. |
| **7.** | **ຜົນການຮຽນ** |
| | ຄວນອະທິບາຍຜົນຮັບການຮຽນສະເພາະທີ່ສະແດງໃຫ້ເຫັນວ່າຜູ້ຮຽນສາມາດເຮັດສິ່ງໃດໜຶ່ງໄດ້ຫຼັງຈາກຮຽນຈົບລາຍວິຊາ/ຫຼັກສູດນີ້, ໂດຍໃຫ້ລາຍລະອຽດກ່ຽວກັບທັກສະ, ຄວາມຮູ້ ຫຼື ຄວາມສາມາດ ທີ່ຜູ້ຮຽນຄວນໄດ້ຮັບ. ອະທິບາຍຂໍ້ມູນດັ່ງກ່າວໃນຮູບແບບຜົນການຮຽນ (ສິ່ງທີ່ຜູ້ຮຽນຄາດວ່າຈະໄດ້ຮຽນຮູ້), ຜະລິດຕະພັນ ຫຼື ຜົນການປະຕິບັດ (ສິ່ງທີ່ຜູ້ຮຽນຈະຜະລິດ ຫຼື ສ້າງຂຶ້ນ ທີ່ເປັນຜົນຈາກການເຮັດ/ເຂົ້າຮ່ວມກິດຈະກຳຮຽນຮູ້ຕ່າງໆ) ຫຼື ຂະບວນການຕ່າງໆ (ອະທິບາຍເຖິງຈຸດສຸມຂອງກິດຈະກຳການຮຽນຮູ້ຕ່າງໆ) |
| **8.** | **ໂມດູນການຮຽນ** |
| | ອະທິບາຍບົດຮຽນສະເພາະທີ່ເປັນແກນຫຼັກຂອງຫຼັກສູດ. ແຕ່ລະບົດຮຽນ, ຕ້ອງໄດ້ອະທິບາຍຂອບເຂດ (ຄວາມກວ້າງຂອງຄວາມຮູ້, ທັກສະ, ທັດສະນະຄະຕິ ແລະ ພຶດຕິກຳ) ແລະ ລຳດັບຂັ້ນຕອນ (ລຳດັບ ແລະ ຄວາມກ່ຽວພັນກັນຂອງລຳດັບຂັ້ນ) ຂອງບົດຮຽນ. ອະທິບາຍຕາມຄວາມເໝາະສົມກ່ຽວກັບລະດັບ, ເງື່ອນໄຂເບື້ອງຕົ້ນກ່ອນເຂົ້າຮຽນ, ເງື່ອນໄຂເຂົ້າຮຽນ, ແລະ ຄຸນຄ່າໜ່ວຍກິດຂອງໂມດູນພາຍໃນຫຼັກສູດ. ໃຊ້ແຜນວາດເພື່ອສະແດງໃຫ້ເຫັນໂຄງສ້າງຂອງຊຸດບົດຮຽນ ແລະ ຄວາມສຳພັນກັນຂອງແຕ່ລະບົດຮຽນ. |
| **9.** | **ແນວທາງການສຶກສາ (ການຮຽນ-ການສອນ)** |
| | ອະທິບາຍວິທີການຮຽນ-ການສອນ ແລະ ແນວທາງປະຕິບັດດ້ານການສຶກສາທີ່ກ່ຽວຂ້ອງ ແລະ ມີປະສິດຕິພາບສູງສຸດ ທີ່ຈະນຳໃຊ້ໃນຫຼັກສູດ ແລະ ເຫັນວ່າມີຄວາມເໝາະສົມກວ່າວິທີການອື່ນໆ ທີ່ຈະຊ່ວຍໃຫ້ຜູ້ຮຽນສາມາດບັນລຸເປົ້າໝາຍຜົນການຮຽນ ແລະ ລາຍວິຊາ/ໂມດູນການຮຽນໃດໜຶ່ງສະເພາະໄດ້. |
| **10.** | **ສື່ການຮຽນຮູ້** |
| | ໃຫ້ຂໍ້ມູນກ່ຽວກັບເອກະສານປະກອບການຮຽນທີ່ຈະມີໃຫ້ຜູ້ຮຽນ. ນອກຈາກນີ້, ຍັງແຈ້ງໃຫ້ຜູ້ຮຽນຮູ້ເຖິງແຫຼ່ງຂໍ້ມູນພາຍໃນສະຖາບັນທີ່ຜູ້ຮຽນສາມາດເຂົ້າເຖິງໄດ້. |
| **11.** | **ການຕິດຕາມ ແລະ ປະເມີນຜົນ** |
| | ໃຫ້ຂໍ້ມູນກ່ຽວກັບຍຸດທະສາດການປະເມີນຜົນ ແລະ ເຄື່ອງມືສຳລັບການປະເມີນຜົນການຮຽນ ແລະ ວັດແທກບັນດາທັກສະ ແລະ ຄວາມຮູ້ຕ່າງໆທີ່ຜູ້ຮຽນຄາດວ່າຈະໄດ້ຮັບ. |
| **12.** | **ໂອກາດການຈ້າງງານ** |
| | ຄວນໃຫ້ຂໍ້ມູນພາບລວມຂອງການພັດທະນາອາຊີບ ແລະ ໂອກາດການຈ້າງງານໃນຂະແໜງການທີ່ກ່ຽວຂ້ອງ ຫຼັງຈາກຮຽນຈົບຫຼັກສູດ ແລະ/ຫຼື ລາຍວິຊາ. |
| **13** | **ທີມງານຮັບຜິດຊອບດ້ານວິຊາການ ແລະ ເຕັກນິກ** |
| | ຄວນປະກອບຂໍ້ມູນຂອງນັກວິຊາການດ້ານການສຶກສາ, ຜູ້ຊ່ຽວຊານ ແລະ ນັກວິຊາການ ເພື່ອສ້າງທີມງານຮັບຜິດຊອບຫຼັກສູດທີ່ມີຄຸນວຸດທິ ແລະ ລະດັບວິຊາການຕາມຂໍ້ກຳນົດ ທີ່ຖືກຕ້ອງກັບຜົນການຮຽນ ແລະ ລາຍວິຊາໃນຫຼັກສູດການສຶກສາ. |
| **14.** | **ໄລຍະເວລາ** |
| | ຄວນໃຫ້ຂໍ້ມູນກ່ຽວກັບຄວາມຍາວ ແລະ ໄລຍະເວລາຂອງຫຼັກສູດ ແລະ/ຫຼື ລາຍວິຊາ (ເຊັ່ນ: ເປັນຊົ່ວໂມງ, ເດືອນ, ອື່ນໆ) |

| | |
|---|---|
| **15.** | **ຄຸນຄ່າໜ່ວຍກິດ** |
| | ລະບຸກ່ຽວກັບຄຸນຄ່າໜ່ວຍກິດທີ່ກຳນົດໃຫ້ກັບຫຼັກສູດ ແລະ/ຫຼື ລາຍວິຊາ ທີ່ສອດຄ່ອງກັບລະບົບໜ່ວຍກິດໃນສະຫະພາບເອີຣົບ ແລະ/ຫຼື ລະບົບການຮັບຮອງຄຸນວຸດທິຫຼັກສູດໃນລະດັບຊາດ ແລະ/ຫຼື ລະດັບນາໆຊາດ. |
| **16.** | **ການຢັ້ງຢືນຫຼັງຮຽນຈົບຫຼັກສູດ** |
| | ຄວນໃຫ້ຂໍ້ມູນລະອຽດກ່ຽວກັບປະເພດຂອງການຢັ້ງຢືນທີ່ຜູ້ຮຽນຈະໄດ້ຮັບຫຼັກຮຽນຈົບຫຼັກສູດ ແລະ/ຫຼື ລາຍວິຊາ |
| **17.** | **ຮູບແບບການຮຽນ-ການສອນ** |
| | ແບບກັບທີ່ເຊິ່ງໜ້າ, ແບບອອນລາຍ ຫຼື ປະສົມປະສານ (ແບບເຊິ່ງໜ້າ ແລະ ອອນລາຍ) |
| **18.** | **ຄະນະວິຊາ/ໂຮງຮຽນ/ພາກວິຊາ** |
| | ໃຫ້ຂໍ້ມູນຕິດຕໍ່ຕາມຄວາມເໝາະສົມ ເຊັ່ນ: ອີເມວ, ເບີໂທລະສັບ, ທີ່ຢູ່ຫ້ອງການ/ໜ່ວຍງານຮັບຜິດຊອບ |
| | |

# ເອກະສານຊ້ອນທ້າຍ II

# ແມ່ແບບທີ 2 – "ອອກແບບໂມດູນການຮຽນ - ແຜນການສອນລາຍວິຊາ"

ແມ່ແບບດັ່ງກ່າວນີ້ເປັນຮ່າງປະກອບມີຊຸດຫົວຂໍ້, ຫົວຂໍ້ຫຍ່ອຍ ແລະ ດຳລັບສຳລັບຂໍ້ມູນຕ່າງໆ ທີ່ຖືກອອກແບບມາເພື່ອອຳນວຍຄວາມສະດວກໃນການການພັດທະນາ, ການນຳສະເໜີ ແລະ ການກວດຄວາມຖືກຕ້ອງຂອງໂມດູນການຮຽນ. ຜູ້ຊົມໃຊ້ທີ່ສົນໃຈອາດຈະເພີ່ມຫົວຂໍ້ໃດໜຶ່ງເຂົ້າຕື່ມອີກທີ່ເຂົາເຈົ້າເຫັນວ່າກ່ຽວຂ້ອງ.

| | ໂມດູນ 1 |
|---|---|
| | |
| 1. | **ຊື່ໂມດູນ** |
| | ຂຽນຊື່ເຕັມຂອງໂມດູນ |
| 2. | **ເນື້ອໃນແຜນການສອນລາຍວິຊາ** |
| | ຄວນປະກອບດ້ວຍຄຳອະທິບາຍໂດຍຫຍໍ້ກ່ຽວກັບເນື້ອໃນຂອງໂມດູນ - ແຜນການສອນລາຍວິຊາ, ລວມມີອົງປະກອບ ແລະ ຄຸນລັກສະນະພິເສດຂອງໂມດູນ |
| 3. | **ເງື່ອນໄຂເຂົ້າຮຽນເບື້ອງຕົ້ນ** |
| | ຄວນໃຫ້ຂໍ້ມູນເງື່ອນໄຂຜູ້ສະໝັກເຂົ້າຮຽນ ແລະ/ຫຼື ໂມດູນສະເພາະໃດໜຶ່ງທີ່ຜູ້ຮຽນຕ້ອງໄດ້ຮຽນກ່ອນເຂົ້າຮຽນໃນໂມດູນນີ້ |
| 4. | **ເປົ້າໝາຍຂອງໂມດູນ** |
| | ຄວນປະກອບມີການອະທິບາຍໂດຍຫຍໍ້, ກະທັດຮັດ ແລະ ຊັດເຈນ ກ່ຽວກັບເປົ້າໝາຍສະເພາະຂອງໂມດູນ, ໂດຍສະເພາະແມ່ນສິ່ງທີ່ເຮົາຕ້ອງການໃຫ້ຜູ້ຮຽນທີ່ເປັນກຸ່ມເປົ້າໝາຍສາມາດບັນລຸໄດ້ຜົນການຮຽນຂອງໂມດູນ. |
| 5. | **ຜົນການຮຽນ** |
| | ຄວນອະທິບາຍຜົນການຮຽນສະເພາະທີ່ສະຫຼຸບໃຫ້ເຫັນວ່າຜູ້ຮຽນຈະສາມາດເຮັດສິ່ງໃດໜຶ່ງໄດ້ຫຼັງຈາກຮຽນຈົບໂມດູນນີ້. ກຳນົດ 2-3 ຜົນການຮຽນ ໂດຍເລີ່ມຕົ້ນປະໂຫຍກວ່າ - ຫຼັງຈາກຮຽນຈົບໂມດູນນີ້, ຜູ້ຮຽນຈະສາມາດ...) |
| 6. | **ແນວທາງການສຶກສາ (ການຮຽນ-ການສອນ)** |
| | ອະທິບາຍວິທີການຮຽນ-ການສອນ ແລະ ແນວທາງປະຕິບັດດ້ານການສຶກສາ ທີ່ກ່ຽວຂ້ອງ ແລະ ມີປະສິດຕິພາບທີ່ສຸດ ທີ່ຈະນຳໃຊ້ເພື່ອເຮັດໃຫ້ຜູ້ຮຽນສາມາດບັນລຸເປົ້າໝາຍຜົນການຮຽນໃນໂມດູນດັ່ງກ່າວນີ້. |
| 7. | **ສື່ການຮຽນຮູ້** |
| | ໃຫ້ຂໍ້ມູນກ່ຽວກັບເອກະສານປະກອບການຮຽນທີ່ກ່ຽວຂ້ອງກັບໂມດູນ ແລະ ມີໃຫ້ຜູ້ຮຽນ. |
| 8. | **ການປະເມີນຜົນ** |
| | ອະທິບາຍຍຸດທະສາດການປະເມີນຜົນ ແລະ ເຄື່ອງມືສຳລັບການປະເມີນຜົນການຮຽນ ແລະ ວັດແທກບັນດາທັກສະ ແລະ ຄວາມຮູ້ຕ່າງໆທີ່ຜູ້ຮຽນຄາດວ່າຈະໄດ້ຮັບ. |
| 9. | **ສະຖານະຂອງໂມດູນ** |
| | ສະຫຼຸບບົດບາດຂອງໂມດູນວ່າເປັນໂມດູນຫຼັກ ຫຼື ໂມດູນເລືອກຂອງຫຼັກສູດ |
| 10. | **ທີມງານຮັບຜິດຊອບ** |
| | ຄວນປະກອບມີຂໍ້ມູນຂອງນັກວິຊາການດ້ານການສຶກສາ, ຜູ້ຊ່ຽວຊານ ແລະ ນັກວິຊາການ ເພື່ອສ້າງທີມງານຮັບຜິດຊອບຫຼັກສູດທີ່ມີຄຸນວຸດທິ ແລະ ລະດັບວິຊາການຕາມຂໍ້ກຳນົດ ທີ່ຖືຕ້ອງກັບຜົນການຮຽນ ແລະ ໂມດູນໃນຫຼັກສູດການສຶກສາ. |
| 11. | **ໄລຍະເວລາ** |
| | ພາກນີ້ຄວນໃຫ້ຂໍ້ມູນກ່ຽວກັບຄວາມຍາວ ແລະ ໄລຍະເວລາຂອງຫຼັກສູດ ແລະ/ຫຼື ລາຍວິຊາ (ເຊັ່ນ: ເປັນຊົ່ວໂມງ, ເດືອນ, |

| | |
|---|---|
| | ອື່ນໆ) |
| **12.** | **ຄຸນຄ່າໜ່ວຍກິດ** |
| | ລະບຸກ່ຽວກັບຄຸນຄ່າໜ່ວຍກິດທີ່ກຳນົດໃຫ້ກັບຫຼັກສູດ ແລະ/ຫຼື ລາຍວິຊາ ທີ່ສອດຄ່ອງກັບລະບົບໜ່ວຍກິດໃນສະຫະພາບເອີຣົບ ແລະ/ຫຼື ລະບົບການຮັບຮອງຄຸນວຸດທິຫຼັກສູດໃນລະດັບຊາດ ແລະ/ຫຼື ລະດັບນາໆຊາດ. |
| **13.** | **ຮູບແບບການຮຽນ-ການສອນ** |
| | ແບບກັບທີ່ເຊິ່ງໜ້າ, ແບບອອນລາຍ ຫຼື ປະສົມປະສານ (ແບບເຊິ່ງໜ້າ ແລະ ອອນລາຍ) |
| **14.** | **ຄະນະວິຊາ/ໂຮງຮຽນ/ພາກວິຊາ** |
| | ໃຫ້ຂໍ້ມູນຕິດຕໍ່ຕາມຄວາມເໝາະສົມ ເຊັ່ນ: ອີເມວ, ເບີໂທລະສັບ, ທີ່ຢູ່ຫ້ອງການ/ໜ່ວຍງານຮັບຜິດຊອບ |
| | |

**Prince of Songkla University (PSU)**
en.psu.ac.th

**Chiang Mai University (CMU)**
cmu.ac.th

**National University Of Laos**
nuol.edu.la/index.php/en

**Savannakhet University**
sku.edu.la

**University Of Macedonia**
www.uom.gr/en

**Symplexis**
symplexis.eu

**Università degli Studi di Palermo**
www.unipa.it/mobilita/en

**CESIE**
cesie.org/en

**Phuket Tourist Association**
www.phukettourist.com

Funded by the European Union. Views and opinions expressed are however those of the author(s) only and do not necessarily reflect those of the European Union or the European Education and Culture Executive Agency (EACEA). Neither the European Union nor EACEA can be held responsible for them.

Project Number: 101129247

Co-funded by the European Union